ຕອນນັ້ນຍັງບໍ່ມີຫຫາຣໄທຽມາປະຈຳກາຣຢູ່ທີ່ທ່າບ່-ໝອງຄາຍ ຝຣັ່ງເສສ ຈຶ່ງນຳກຳລັງລັກຂ້ວາມນ້ຳຂອງມາບ້ານນ້ຳໂມງ ແລ້ວໄຊ້ປືນຄົກຍິງຖລົ່ມໝູ່ບ້ານ ຄົນລາວທີ່ທ່າບ່ຢ່າງໜັກ ເປັນເຫຕຸໃຫ້ພວກອຽຕມິນຫ໌ຖືກຣະເບີດຕາຍເຖິງ 18 ຄົນ ໄດ້ຣັບບາດເຈັບອີກຈຳນວນມາກ ຣັຖບາລໄທຽຈຶ່ງທຳກາຣຍົກຍ້າຽພວກ ຄນະຜູ້ນຳລາວອິສຣະທັງຫຼາຽໃຫ້ເຂ້ົາຢູ່ໃນບ້ານກອກ ແລະໃນພາຄອື່ນໆຂອງໄທຍ ທັງນີ້ກໍເພື່ອເວັ້ນຫຼີກຈາກກາຣເກາະຜິດຂອງຝຣັ່ງເສສອີກ ກາຣທຳມາຫາກິນທີ່ບ້ານກອກຂອງພວກຜູ້ນຳລາວອິສຣະໃນເວລາຕ່ໍມາກໍເຣີ່ມຂຶ້ນຕາມສພາພກາຣນ໌ເຊັ່ນເຈົ້າ ສຸວັນນາພູມາ ກໍໄດ້ອຽກຽ່ອກັບກາຣໄຟຟ້າ ນາຍແພທຍ໌ຄຳໂກ້ ວິລັຍຫ້ວສ໌ກໍເປີດ ຄລີນິຄຣັກສາຄົນປ່ວຍ ອຸ່ນ ຊຸນະນິກອຣກໍໄດ້ເປັນພະນັກງານໃນໂຮງງານຕ່ໍາໄໝ ສຸພານຸວົງສ໌ເມື່ອຫາຍດີແລ້ວກໍໄດ້ເຮັດກາຣໃນ ໂຮງແຮມຊັ້ນດີ ສວ່ນພັນຕຣີພູ ມີ ນໍ່ສວັຣຄ໌ກັບພູວົງຜູ້ນ້ອງຊາຍກໍໄປເປັນລູກຈ້າງໃນເຕົ້າເຜົ້າຖ່ານແຫ່ງຫນຶ່ງ ຢູ່ທາງພາຄເໜືອກໍມີລາວອົພຍົບຈາກຫລວງພຣະບາງຈຳນວນມາກເຊັ່ນທ່ານ ແກ້ວ ວິພາກອຣ+ອຸ່ນເຮືອນ ນໍຣະສີງຫ໌+ພູມີ ວົງສ໌ວິຈິຕ+ສີບເອກອ້ັນ ຣາທິກູລ ກໍສີບເອກອ້ັນຣາທິກູລຜູ້ນີ້ແຫລະ ທີ່ເປັນຄຣູຝຶກຫຫາຣລາວອິສຣະຜັດຖິ່ນກໍຈຶ່ງມີ ກຳລັງມາສົມທົບກັບກຳລັງອຽຕມິນຫ໌ທີ່ພັນຕຣີພູມີແລະສີງຫ໌ກະໂປ ໄປຣັບເອົາ ມາຈາກເມືອງມະໃນແຂວງຊຽງຂວາງ ເພາະເຂົ້າສເນີຊວ່ຍລາວອິສຣະຜັດ ຖິ່ນໃນໄທຍ ກາຣເມືອງຂອງພວກລາວອິສະເຣີ່ມປຣ່ນໂສມໜ້າມັນແລ້ວໃນ ຕອນນີ້ ເພາະກາຣແຊກຊຶມຂອງຂບວນກາຣນ໌ອຽຕມິນຫ໌ ແລະມີຫຫາຣອຽຕ ມິນຫ໌ພາຄສວ່ນໜຶ່ງຖືກສົ່ງໄປຢູ່ກັບສຸພານຸວົງສ໌ທີ່ບ້ານກອກ ໃນນັ້ນໄດ້ປາກົຖມີ

ໝຸ່ມຟ່າມອັນດັ່ງປ໋ນຢູ່ ຊຶ່ງໄດ້ເປັນນາຍົກຣັຖມົນຕຣີຂອງວຽຕນາມເໝືອໃນ ກາລຕໍ່ມາ ສອນເຈົ້າສົມນິຕຍ໌ ນໍ່ຄຳໄດ້ພາຄອບຄົວປັກຫລັກຢູ່ທີ່ນະຄອຣພຣະນົມ.

ຝຣັ່ງເສສທີ່ປົກຄອງລາວສິ້ນຫວ່ງເມື່ອພວກລາວອິສຣະຖືກຂັບໄລ່ໄປຍັງແຜ່ນ ດິນໄທຍແລ້ວ ແລະເຈົ້າຊີວິຕສີສວ່າງວົງສ໌ ຜູ້ປະສົງຄ໌ຢາກຢູ່ໄຕ້ການປົກຄອງຂອງ ຝຣັ່ງເສສກໍໄດ້ມອບຣາຊອານາຈັກຣ໌ລາວຄືນໃຫ້ຝຣັ່ງເສສ ນາຍົກຣັຖມົນຕຣີໄທຍ ສມັຍນັ້ນແມ່ນມອ່ມຫລວງທຳຣົງຄ໌ ນາຣາສວັສດ໌ ຊຶ່ງໄດ້ໃຫ້ຄວາມຊ່ວຍເຫລືອແກ່ ຂບວນການຣ໌ລາວອິສຣະພັດຖິ່ນຢ່າງດີ ເພາະໄທຍເອງກໍ່ບ່ຊື່ນຊອບຍິນດີກັບຝຣັ່ງ ເສສຢູ່ເປັນທຶນແລ້ວທີ່ມາແບ່ງເອົາລາວຝັ່ງຊ້າຍ ຊຶ່ງເຄີຍເປັນເມືອງຂຶ້ນຂອງໄທຍ ນານກວ່າສອງຮ້ອຍປີໄປເປັນຂອງຕົນ ດັ່ງຈະເຫັນໄດ້ວ່າເມື່ອຂບວນແຕກທັພຂອງ ເຈົ້າເພັຊຣາຊ ຣັຕນະວົງສາ 44 ຄົນໄປເຖິງບາງກອກໃນວັນທີ 28 ພຶສພາ 1946 ນັ້ນ ຣັຖບາລໄທຍໄດ້ໃຫ້ການຕ້ອນຮັບເປັນຢ່າງດີ ໃຫ້ທີ່ພັກອາສັຍໂດຍຈັດໃຫ້ທ່ານ ອຸ່ນ ຊຸນະນິກອຣກັບເຈົ້າສຸພານຸວົງສ໌ໄດ້ຢູ່ໃກ້ກັນ.

ຂ່າວການໄປເຖິງບາງກອກຂອງເຈົ້າເພັຊຣາຊນັ້ນ ໄດ້ຍິນໄປເຖິງພວກລາວ ອິສຣະແຕກທັພທ່ອປະເທສໄທຍຢ່າງວວ່ງໄວ ຈຶ່ງໄດ້ສົ່ງຕົວແທນເຂົ້າມາຕິດຕໍ່ເປັນ ຂບວນຕ໋ວຢ່າງເຊັ່ນເຈົ້າສົມສນິຕຍ໌ ນໍ່ຄຳ+ເຈົ້າຄຳຕັນ+ເຈົ້າສຸວັນນາພູມາ+ພຣະຍາ ຄຳມ້າວ ວິລັຍ+ກະຕ່າຽ ໂດນສະໂສຣິທທ໌ +ທັມະສິທທ໌ ເສນາ+ສີງຫ໌ ຣັຕນະສມັຍ+ ສີງຫ໌ກະໂປ ສີໂລຕຣ໌ຈູນນະມາລີ+ສີທົນ ກົມມາດຳ+ພູມມີ ນໍ່ສວັຣຄ໌+ຕຸລັນ+ ອຸ່ນ ເຮືອນ ນໍຣະສີງຫ໌+ເສີ່ມ ມະໂນວຽງ+ພູມີ ວົງສ໌ວິຈິຕ ແລະຍັງມີອີກຫຼາຽໆຄົນ ຜູ້ ນຳລາວອິສຣະຈຳນວນ 50 ຄອບຄົວໄດ້ມາຢູ່ໄກ້ໆກັນທີ່ບາງກອກ ພິເສສແມ່ນເຊື້ອ ກະສັຕຣຍ໌ 3 ພີ່ນ້ອງຄືເຈົ້າເພັຊຣາຊ+ສຸວັນນາພູມາ+ສຸພານຸວົງສ໌ ເຖິງຖືກຕ້ອນຮັບ ຢ່າງດີຈາກນາຍົກໄທຍກໍຕາມ ແຕ່ພວກລາວອິສຣະພັດຖິ່ນກໍຫມີບ່ມ້ີນຄວາມຂັດສົລ ໄປໄດ້ ເຈົ້າເພັຊຣາຊ ຣັຕນະວົງສາຊຶ່ງເປັນຫົວໜ້າຣັຖບາລ ໄດ້ຕັດສິນໃຈເອົາ ດາບນໍຣະດົກຜັກໂອບທອງຄຳທີ່ອົດສາທ໌ນຳຕິດຕ໋ວມາແຕ່ຫລວງພຣະບາງນັ້ນ ໄປຂາຍໃນຣາຄາພຽງ 2 ໝື່ນບາທ ເພື່ອເອົາເງິນມາຊື້ອາຫາຣລ້ຽງພັລພວກ ແລະລູກເລັກເດັກແດງພາຍໃນຂບວນ.

ພວກວຽຕນົມທ໌ກໍ່ເອົາທຸກຢ່າງເພື່ອໃຫ້ໄດ້ເງິນມາລ້ຽງກັນ ທ່ານອຸ່ນ ຊຸນະ ຊຸນະນິກອຣມີພາລະໜັກຕື່ມເພາະຕ້ອງເດີນທາງໄປພາຄເໝືອເພື່ອສົມທົບກັບພູ ມີ ວົງສ໌ວິຈິຕຈັດຕັ້ງກຳລັງລາວອິສຣະຫ້ວງຖິ່ນ ທັ້ງພ໋ວພັນທ໌ກັບພວກເສຣີໄທຍ ໃນພາຄອິສານຂອງນາຽ ຕຽງ ສີຣິຂັນຕ໌+ຈຳຣອງ ດາວເຮືອງ+ອິນທຣ໌ ພູຣິພັຕນ໌

ແລະນາຍຖວິລ ອຸດົລ+ນາຍທອງເປລວ ຊົລພູມ ສ່ວນເຈົ້າເພັຊຣາຊແລະສຸພານຸວົງສ໌ ນັ້ນຖືກຝຣັ່ງເສສໝາຽຫົວໃຫ້ເປັນສັຕຣູຕົວເອກ ແຕ່ສຸພານຸວົງສ໌-ເພັຊຣາຊ ກໍບໍ່ເຄີຍລົດລະຕໍ່ກາຣກົດດັນ ໃຫ້ຝຣັ່ງເສສຍອມມອບເອກຣາຊໃຫ້ແກ່ຊາຕລາວ.

ຫຼັງສົງຄາມໂລກຄັ້ງທີ່ສອງສງົບລົງແລ້ວ ອາວຸທເຖື່ອນເສສສົງຄາມກໍຊ້ໍໄດ້ບໍ່ຍາກຫັ ງຣາຄາກໍຖືກຕົວຢ່າງປືນ "ມັຕ 36" ທີ່ຍິງໄດ້ເທື່ອລະລູກນັ້ນຣາຄາກະບອກລະພຽງ 80-100 ບາທເທ່ານັ້ນ ແຕ່ສຸພານຸວົງສ໌ກໍ່ບໍ່ມີເງິນພຽງພໍທີ່ຈະຫາຊື້ມາໄດ້ ຈຶ່ງຄິດອາສັຍຫົວຄິດເຈົ້າເພັຊຣາຊ ຣັຕນະວົງສາຜູ້ອ້າຽໄປຣອ້ງຂໍໃຫ້ນາງສາວ ອະພິນພອຣ ທີ່ທາງຣັຖບາລໄທຽສົ່ງມາເປັນແມ່ບ້ານພິເສສແກ່ເຈົ້າເພັຊຣາຊ ໃຫ້ຊ່ວຍຫາຍືມເງິນຈາກຍາຕພີ່ນ້ອງຂອງນາງ ໃນທີ່ສຸດກໍ່ມີຍາຕຜູ້ໃຫ່ຍຂອງນາງທ່ານໜຶ່ງ ຄືນ່ອ່ມຫລວງເສຣີ ເຣືອງຣິທທ໌ ໄດ້ມອບເງິນໃຫ້ນາງອະພິນພອຣເຖິງ 5 ລ້ານບາທ ໂດຍບ່ຍອມຖາມຫລານສາວແມ່ນແຕ່ຄຳດຽວ່ວ່າ ມາຍືມເງິນໄປໃຫ້ເຈົ້າເພັຊຣາຊເພື່ອໄຊ້ໃນກິຈກາຣອັນໃດ ຄົງເພາະຄຸນຄວາມດີຂອງນາງອະພິນພອຣທີ່ເປັນພຽງສາວຣັບໄຊ້ເທ່ານັ້ນນີ້ເອງ ຈຶ່ງເຮັດໃຫ້ເຈົ້າເພັຊຣາຊ ຣັຕນະວົງສາຮັກໄຄ່ແລ້ວຕັດສິນໃຈແຕ່ງງານເອົາເປັນຄູ່ຊີວິຕໃນເວລາຕໍ່ມາ ນ່ອ່ມອະພິນພອຣຈຶ່ງມີສ່ວນຊ່ວຍເຫລືອພວກຂບວນກາຣນ໌ລາວອິສຣະພັດຖິ່ນອີກຫລາຍຕໍ່ຫລາຍຢ່າງຕໍ່ຈາກນັ້ນ.

ເມື່ອມີອາວຸທຕົດມືແລ້ວ ຂບວນກາຣນ໌ລາວອິສຣະພັດຖິ່ນໃນໄທຍກໍເຣີ່ມຄຶກຄັກຈັດຕັ້ງຣັຖບາລຂຶ້ນມາໃໝ່ ໂດຍເຈົ້າເພັຊຣາຊເອງໄດ້ເປັນນາຍົກ ພຍາລຳມ້າວ ວິລັຍໄດ້ເປັນຣອງນາຍົກ ສຸວັນນາພູມາເປັນຣັຖມົນຕຣີວ່າກາຣກະຊວງໂຍທາ ແລະຂົນສົ່ງ ສຸພານຸວົງສ໌ເປັນຣັຖມົນຕຣີຕ່າງປະເທສ ເຈົ້າສົມສນິຕຍໂດ້ກະຊວງມຫາດໄທຍ ສົງທ໌ ຣັຕນະສນັຍໄດ້ກະຊວງປ້ອງກັນປະເທສ ອຸ່ນເຮືອນ ນໍຣະສົງທ໌ເອົາກະຊວງຍຸຕິທັມ ກະຕ່າຍ ໂດນສາໂສຣິທທ໌ວ່າກາຣກະຊວງກາຣຄັງ ທຍູຍ ອະໄພຍໄດ້ກະຊວງສຶກສາ ທັມ ຊັຍສິທທ໌ເສນາເປັນຣັຖມົນຕຣີຊ່ວຍກະຊວງຕ່າງປະເທສ ເກື່ອງ ປະທຸມມະຊາຕເປັນ ຣມຕ ຊ່ວຍກະຊວງເສຖກິຈ ກໍ ຫາກມີແຕ່ຂມະເກົ່າທີ່ເຄີຍຕົ້ງກັນມາແລ້ວທີ່ນະຄອຣຣາຊສີມາໃນວັນທ໌ເມື່ອວັນທີ 12 ຕຸລາ 1945 ພຸ້ນ ແຕ່ຫາກສົງເກຕໃຫ້ດີກໍຈະພົບວ່າ ອຸ່ນ ຊຸນະນິກອຣນັ້ນໄດ້ຂາດຫາຍໄປຈາກຄນະຣັຖບາລລາວອິສຣະພັດຖິ່ນ ອາຈເປັນເພາະຄົນສຳຄັນຜູ້ນີ້ມີພາລະລົ້ນມືໃນກາຣພົວພັນທ໌ກັບພວກເສຣີໄທຍຂອງນາຍຕຽງສິຣິຂັນຕ໌ກໍ່ເປັນໄດ້.

ໃນຂນະທີ່ດຳຣົງຊີວິຕຢູ່ທີ່ບາງກອກນັ້ນ ສຸພານຸວົງສ໌ກັບພັຄພວກບໍ່ໄດ້ຢຸດຄິດທີ່ຈະຫາທາງກອບກູ້ເອົາເອກຣາຊມາໃຫ້ຊາຕລາວ ເຈົ້າເພັຊຣາຊ ຣັຕນະວົງສາ ກໍ

ໄຊ້ລີ້ນຂອງຕົນໃຫ້ເປັນປໂຍຊນ໌ໃນທາງການທູຕແທນອາວຸທສົງຄາມ ໂດຍແຕ່ງໃຫ້ເຈົ້າສຸວັນນາພູມາເຂົ້າພົບນາຍສແຕນຕັນ ເອກອັຄຣາຊທູຕອາເມຣິກາໃນບາງກອກ ເພື່ອໃຫ້ຫາວິທີທາງດ້ານການທູຕກົດດັນໃຫ້ຣັຖບາລ ຂອງຝຣັ່ງເສສຍອມມອບເອກຣາຊໃຫ້ແກ່ລາວ ໂດຽອ້າງອີງໃສ່ເງື່ອນໄຂຂໍ້ຕົກລົງຂອງກຸ່ມປະເທສພັນທະມິຕຣຊຶ່ງມີຝຣັ່ງເສສເອງຮ່ວມຢູ່ດ້ວຽ ກໍຄືຕ້ອງມອບເອກຣາຊໃຫ້ປະເທສທີ່ເຄີຍເປັນເມືອງຂຶ້ນຂອງຕົນພາຽຫຼັງທີ່ສົງຄາມໂລກສິ້ນສຸດລົງແລ້ວ ເອກອັຄຣາຊທູຕສແຕນຕັນກໍຮັບວ່າວ່າຈະຣາຽງານເຣື່ອງນີ້ໄປຍັງຣັຖບາລທີ່ວໍຊິງຕັນ ແຕ່ຈົນນາຽສແຕນຕັນເອງໝົດໜ້າທີ່ຂອງຕົນໃນອີກຫລາຍເດືອນຕໍ່ມາ ກໍຍັງບໍ່ມີຄຳຕອບໃດໆໃຫ້ແກ່ລາວອີສຣະເລີຍ ເມື່ອນັກການທູຕອາເມນິກັນຄົນໃໝ່ຄືນາຽໂດໂນແວນມາແທນ ເຈົ້າສຸວັນນາພູມາກໍເຂົ້າໄປພົບອີກ ກໍໄດ້ຮັບສັຈະວາຈາແບບດຽວກັນກັບທູຕຄົນກ່ອນ ແລ້ວເຣື່ອງຂອງເຣື່ອງກໍມິດງຽບຫາຽໄປເລີຍ ສ່ວນເຈົ້າສຸພານຸວົງສ໌ເອງກໍໄດ້ເຂົ້າພົບພັນເອກທອມສັນ ທີ່ເປັນທູຕທຫາຣຂອງອາເມຣິກາອີກຕ່າງຫາກ ເພື່ອຢ້ຳໃຫ້ຝຣັ່ງເສສຖອນຕົວອອກຈາກລາວ ແຕ່ຜົລທີ່ໄດ້ຮັບກໍເໝືອນເດີມຄືງຽບຫາຍໄປເລີຍ.

ພວກລາວອີສຣະຕ້ອງຢູ່ໃນແຜ່ນດິນໄທຽຕໍ່ໄປຢ່າງຄົນຜິດຫວັງ ແຕ່ບໍ່ໄດ້ທໍ້ຖອຍຄອຽໃຫ້ຣອດວັນໜຶ່ງທັງໆທີ່ບໍ່ຮູ້ວ່າວັນໃດ ຈຶ່ງຈະຫວນຍ້ອນກັບໄປຂັບໄລ່ຝຣັ່ງໃຫ້ອອກຈາກລາວຢ່າງສົມສັກດ໌ສີ ຈົນອີກສອງປີຜ່ານໄປກໍໄດ້ມີເຫຕຸການ໌ອັນໃໝ່ເກີດຂຶ້ນໃນປະເທສໄທຍ ກໍຄືກຸ່ມນາຽທຫາຣຂອງກອງທັພນໍາໂດຽຈອມພົລ ປ.ພິບູລສົງຄາມ (ແປກ ພິບູລສົງຄາມ) ທໍາການກໍ່ຣັຖປະຫານ ໂຄ່ນລົ້ມຣັຖບາລພົລເຮືອນ ຂອງຫຼວງທໍາຣົງ ນາຣາສວັສດ໌ໃນຣະຫວ່າງຕົ້ນປີ ຄສ.1948 ແລ້ວຖານະຂອງ ຂບວນການ໌ລາວອີສຣະພັດຖຸ່ນຕ້ອງພົບກັບບັຣຫາໜັກ ເພາະຣັຖບາລທຫາຣຂອງຈອມພົລປ. ພິບູລສົງຄາມບໍ່ຍອມໃຫ້ການຊ່ວຽເຫຼືອອີກ ຊ້ຳບໍ່ພໍຈອມພົລ ປ.ຍັງມີການຣະແວງວ່າດິນແດນພາຄອີສານທີ່ເຄີຽເປັນຂອງຄົນລາວມາກ່ອນນັ້ນ ຈະຖືກຍາດແຍ່ງເອົາຄືນໄປ ເພາະການເຄື່ອນໄຫວທີ່ກ້ວ້າງຂວ້າງຂອງພວກເສຣີໄທຍ ເພື່ອແຍກເອົາພາຄອີສານອອກໄປຈາກການປົກຄອງຂອງຣັຖບາລບາງກອກນັ້ນ ກໍາລັງປາກົຖການ໌ເດັ່ນໃຫ້ເຫັນຢູ່.

ກໍເພາະນາຍຕຽງ ສີຣິຍັນ໌ກັບພັລພວກເປັນຄົນເຊື້ອສາຍລາວນີ້ເອງຈຶ່ງເປັນສາເຫຕຸໃຫ້ຈອມພົລ ປ.ພິບູລສົຖຄາມຄິດກໍາຈັດຂັ້ນເດັດຂາດ ດ້ວຍການວາງແຜນເຊີນຕົວນາຍ ຕຽງ ສີຣິຍັນ໌+ນາຍທອງອິນທ໌ ຜູຣິພັຕຣ໌+ນາຽຖວິລ ຍຸດົລ+ນາຽທອງເປอ ຊົລພູມ ກັບພັລພວກອີກຈໍານວນໜຶ່ງເຂົ້າມາປະຊຸມທີ່ບາງກອກ ໂດຍສົ່ງ

ธົຖໄປຮັບເອົາພວກກ່ຽວມາຈາກພາຄອິສານດ້ວຍດີ ແຕ່ພໍມາເຖິງຕົນດົງພຍາໄພຍ ທີ່ໄທຍປ່ຽນຊື່ມາເປັນດົງພຍາເຢັນຈົນເທົ່າທຸກວັນນີ້ ກໍຖືກທາຣປະກອບອາວຸທຂອງ ຈອມພົລ ປ.ພິບູລສົງຄາມບັງຄັບໃຫ້ລົງຈາກຣົຖ ແລ້ວທຳການຍິງຖິ້ມເສັຽຢ່າງໂຫດ ຫັຽມຈົນຕາຽຣຽບ.

ຫຼັງຈາກນັ້ນມາ ຈອມພົລ ປ. ພິບູລສົງຄາມກໍສັ່ງຕິດຕາມຈັບຄຸມບັຣດາ ພົລ ພັຄຂອງເສຣີໄທຽພາຄອິສານຂອງນາຽຕຽງ ສີຣິຍັນຕ໌ເປັນການໃຫ່ຍ ພາໃຫ້ພວກ ຂບວນການຣົ້ລາວອິສຣະທີ່ເຄີຽເປັນມິຕຣ໊ກັບພວກເສຣີໄທຽຕ້ອງພອຍເດືອດຣ້ອນໄປ ດ້ວຍ ທີ່ຮ້າຍແຣງໄປກວ່ານີ້ກໍຄືຈອມພົລ ປ. ພິບູລສົງຄາມໄດ້ປະກາສຮັບຮູ້ຣັຖບາລ ຣາຊອານາຈັກຣ໊ລາວຂອງເຈົ້າບຸນອູ້ມ ນະຈຳປາສັກ ທີ່ຝຣັ່ງເສສເອົາຂຶ້ນມາເປັນ ນາຍົກຂອງຣັຖບາລລາວວ່າເປັນຣັຖບາລທີ່ຖືກຕ້ອງຂອງລາວ ກໍຄືການບໍ່ຮັບຮູ້ຖາ ນະຣັຖບາລຜັດຖິ່ນຂອງລາວອິສຣະໃນໄທຍນັ້ນເອງ ຫລັງຈາກນັ້ນກໍສັ່ງໃຫ້ທຫາຣທຳ ການກວາດລ້າງປົດອາວຸທຂອງກອງກຳລັງລາວອິສຣະ ທີ່ພາກັນເຄື່ອນໄຫວຢູ່ຕາມ ເຂຕແຄມຝັ່ງແມ່ນ້ຳຂອງໆໄທຍ ຕັ້ງແຕ່ເຂຕເມືອງຣ້ອຍເອັດ ຈົນເຖິງໝອງຄາຽ ນະຄອຣພຣະນົມ-ອຸບົລຣາຊທານີ ພ້ອມນີ້ຈອມພົລ ປ. ພິບູລສົງຄາມກໍອອກຄຳສັ່ງ ດ່ວນໃຫ້ຍຸບຂບວນການຣົ້ລາວອິສຣະພັດຖິ່ນ ຂອງເຈົ້າເພັຊຣາຊຸໃນວັນທີ 24 ກໍຣະ ກະດາ 1949 ຄືຫຼັງຈາກທີ່ຝຣັ່ງເສສປະກາສມອບເອກຣາຊເຄິ່ງເມືອງຂຶ້ນໃຫ້ລາວ ແລ້ວພຽງ 5 ວັນເທົ່ານັ້ນ.(19 ກໍຣະກະດາ 1949 ລາວໄດ້ຮັບເອກຣາຊໃນເຄືອ ສຫະພັນທະຣັຖຂອງຝຣັ່ງເສສ) ເຫຕຸການ໌ໃນໄທຍການ໌ເປັນປັຈຈັຍຕັດສິນອະນາ ຄົຕທາງການເມືອງຂອງພວກລາວອິສຣະລົງ ແຜນການ໌ຂອງຈອມພົລ ປ.ແມ່ນບໍ່ ໃຫ້ຝຣັ່ງເສສເຂົ້າໃຈຜິດວ່າຣັຖບາລໄທຍໃຫ້ການສນັບສນູນຂບວນການ໌ລາວອິສຣະ ພາກັນຂ້າມໄປຕໍ່ຕ້ານກັບຝຣັ່ງເສສໃນຝັ່ງລາວ.

ຂบวนการ์ลาวอิสระแตกกับจ๊กได้...!

ຂบວນການ໌ລາວອິສຣະແຕກກັນຈົນໄດ້ ແລະກໍແຕກກັນຈິງໆໃນເວລາຕໍ່ມາ ເມື່ອຝຣັ່ງເສສຄິດໄດ້ກົລອຸບາຽໃໝ່ເພື່ອຫຼອກກຸ່ມພັນທະມິຕຣ໊ຄູ່ສົງຄາມໂລກວ່າຝຣັ່ງ ເສສໄດ້ປະຕິບັຕ໌ຕົກລົງ ກ່ຽວກັບການມອບເອກຣາຊໃຫ້ປະເທສຫ໊ອເມືອງຂຶ້ນຂອງ ຕົນທັນທີພາຽຫຼັງທີ່ສົງຄາມໂລກສິ້ນສຸດລົງແລ້ວ ຝຣັ່ງເສສໄດ້ທຳການປະກາສເປັນ ທາງການໃນວັນທີ 19 ກໍຣະກະດາ ຄສ. 1949 ວ່າ...

" ຣັຖບາລຝຣັ່ງເສສຍອມມອບເອກຣາຊໃຫ້ແກ່ຊາຕລາວ ແບບຍັງຢູ່ໃນເຄືອສຫະ ພັນ ຫ໊ຝຣັ່ງເສສອີກຕໍ່ໄປ"

ເຖິງເປັນພຽງສຳນວນສັ້ນໆ ແຕ່ຄົນລາວທັງປະເທສພູມໃຈຢາກໄດ້ຍິນໄດ້ຟັງມາແຕ່ດົນນານແລ້ວ ແຕ່ເພາະມີຄຳວ່າ " ແບບຍັງຢູ່ໃນເຂືອສຫະພັນທ໌ຝຣັ່ງເສສອີກຕໍ່ໄປ " ນັ້ນເຮັດໃຫ້ພວກລາວອິສຣະຕ້ອງຖຽງກັນຍາວຈົນຂັດໃຈກັນໃນທີ່ສຸດ ເຈົ້າສຸວັນນາພູມາໄດ້ລັກໄປຕິດຕໍ່ກັບຝຣັ່ງເສສ ໃນສຖານທູຕທີ່ບາງກອກແບບລັບໆ ສ່ວນສຸພານຸວົງສ໌ ທີ່ມີເມັຽເປັນຄົນອຽຕນາມ ກໍຕິດຕໍ່ໄປຍັງອຽຕມິນຫ໌ທີ່ຮາໂນ້ຍ ໂດຍຜ່ານທາງສາຽລັບຄົນກາງຂອງວຽຕມິນຫ໌ໃນບາງກອກ.

ເມື່ອເຫັນເປັນເຊັ່ນນີ້ ກໍຍິ່ງພາໃຫ້ພວກຜູ້ນ້ຳຄົນອື່ນໆຄິດເຖິງເຣື່ອງເກົ່າໆຕອນເຈົ້າສຸພານຸວົງສ໌ເຂົ້າມາລາວໃໝ່ໆໃນເດືອນຕຸລາປີ 1945 ຕາມສາຍທາງເລຂ 9 ຊຶ່ງເອົ້າທີ່ປຶກສາທາງທຫາຣວຽຕມິນຫ໌ມານຳເຖິງ 9 ຄົນນັ້ນ ບໍ່ມີໃຜລ່ວງຮູ້ວ່າສຸພານຸວົງສ໌ໄດ້ນຳເອົາແຜນການອັນໃດແດ່ຂອງໂຮຈິມິນຫ໌ເຂົ້າມາພ້ອມ ພວກຜູ້ນຳລາວອິສຣະພາກັນເຊື່ອວ່າຍັງມີຫຼາຽອັນທີ່ສຸພານຸວົງສ໌ປິດບັງຜັຄພວກເອົ້າໄວ້ຢູ່.

ສນັ້ນເມື່ອໄດ້ຜ່ານການແລກປ່ຽນຄວາມຄິດເຫັນ ຂອງກັນແລະກັນຢູ່ຕັ້ງຫຼາຽຫຼົບຫຼາຽເທື່ອຈົນເບື່ອຖຽງກັນແລ້ວ ຈົນເກືອບຢ່າງເຂົ້າວັນທີ 90 ແລ້ວ ພວກຜູ້ນຳລາວອິສຣະກໍຍັງຖົກຖຽງກັນແຕ່ເຣື່ອເກົ່າໃນປະເດັນທີ່ວ່າຈະຍອມຮັບເອົ້າເອກຣາຊແບບເຄິ່ງເມືອງຂຶ້ນຈາກຝຣັ່ງເສສຫຼືບໍ່ ພວກທີ່ມີທິສດີວ່າຄວຣຮັບເອົ້າແລ້ວຈຶ່ງຫາວິທີທາງຕໍ່ສູ້ເອົ້າເອກຣາຊໂດຽສົມບູຣນ໌ໃນຂັ້ນຕໍ່ໄປນັ້ນ ກໍມີເຈົ້າສຸວັນນາພູມາ+ພຍາຄຳມ້າວ ວິລັຍ+ສີງຫ໌ ຣັຕນະສັຍ+ກະຕ່າຽ ໂດນສະໂສຣິຫຫ໌+ອຸ່ນ ຊຸນະນິກອນ ແລະມີອີກຫລາຍສິບຄົນ ສ່ວນສຸພານຸວົງສ໌ໄດ້ປະຕິເສທຢ່າງແຂງຂັນ.

ຂບວນການລາວອິສຣະຈຶ່ງແຕກອອກເປັນສອງຝ່າຍກະທັນຫັນ ເມື່ອເຈົ້າສຸວັນນາພູມາຢ້ຳວ່າ...

ຕອງຍອມຮັບເອົ້າ

ແຕ່ຄຳເວົ້າແທບບໍ່ທັນສຸດຄວາມຊ້ຳກໍຖືກສຸພານຸວົງສ໌ຜູ້ນ້ອງຍົ່ນຄຳຂາດຕື່ມວ່າ...

"ບໍ່ຍອມແລະບໍ່ເອົ້າ ພວກເຮົ້າຈະສືບຕໍ່ທຳການຕໍ່ສູ້ເອົ້າເອກຣາຊທີ່ສົມບູຣນ໌"

ການປະທະຄາຽົມນ໌ກັນຣະຫວ່າງເຈົ້ານ້ອງເຈົ້າອ້າຽນັ້ນ ເຮັດໃຫ້ເຈົ້າເພັຊຣາຊ ຣັຕນະວົງສາປະກາສຕື່ມວ່າ...

"ຖ້າໄດ້ມາກໍຂໍໃຫ້ມັນສົມບູຣນ໌ດີ"

ພູມມີ ນໍ່ສວັຣຄ໌ທັນໄປເຂົ້າຂ້າງສຸພານຸວົງສ໌ທັນທີໂດຍຍືນຍັນຕື່ມວ່າ...

"ຈະຂໍຕໍ່ສູ້ເອົ້າເອກຣາຊທີ່ສົມບູຣນ໌ຮ່ວມກັບເຈົ້າເພັຊຣາຊແລະສຸພານຸວົງສ໌"

ເຖິງວັນທີ 24 ຕຸລາ 1949 ເຫຕຸການ໌ທາງການເມືອງຂອງລາວອິສຣະໃນໄທຍກໍ

ປ່ຽນໂສມໜ້າໃໝ່ຢ່າງສິ້ນເຊີງເມື່ອເຈົ້າສຸວັນນາພູມາກັບຄຳມ້າວ ວິລັຍແລະລາວ ອິສຣະຜັດຖິ່ນຈຳນວນ 25 ຄົນ (ຍົກເວັ້ນເຈົ້າເພັຊຣາຊ+ເຈົ້າສຸພານຸວົງສ+ພັນຕຣີພູ ມີ ນໍ່ສວັຣຄ) ໄດ້ເຂົ້າໄປພົບເອກອັຄຣາຊທູຕຝຣັ່ງເສສໃນບ່າວກອກແລ້ວບອກເຈຕະ ນາຍິນດີທີ່ຈະກັບຄືນໄປຮ່ວມໃນຣັຖບາລເຈົ້າບຸນອຸ້ມ ນະຈຳປາສັກດ໌ທີ່ນະຄອນຣວງ ຈັນທນ໌ ແຕ່ຣັຖບາລຝຣັ່ງເສສຕ້ອງໃຫ້ອະພັຍແກພວກຕົນ ເຈົ້າສຸວັນນາພູມາໄດ້ ຮັບເງິນ 8 ແສນກີບຈາກເອກອັຄຣາຊທູຕຝຣັ່ງເສສ ເພື່ອໄຊ້ຈ່າຍເປັນຄ່າເດີນທາງ ກັບໄປຍັງວຽງຈັນທນ໌ ໃນວັນທີ 29 ຕຸລາ 1949 ສຸພານຸວົງສ໌ປະນາມການຕັດສິນ ໃຈຂອງເຈົ້າສຸວັນນາພູມາວ່າຍກັບພັຄພວກຢ່າງຮຸນແຮງແວ່ວ...

"ພາກັນກັບໄປຍອມຝຣັ່ງເສສຢ່າງຄົນໄຮ້ປັນຍາ"

ແຜ່ນດິນໄທຍທີ່ໄຮ້ຂບວນການຮົ່ລາວອິສຣະຜັດຖິ່ນແລ້ວ ແຕ່ຄວາມຜິດຫວັງຍັງ ເປັນຂອງພວກທີ່ເຫຼືອຢູ່ ຈອມພົລ ປ. ພິບູລສົງຄາມກໍກວາດລ້າງຄົນລາວອິສຣະ ຜັດຖິ່ນໃນແຜ່ນດິນໄທຍ ພວກນາຍທະຫາຣລາວອິສຣະທີ່ຢູ່ແຖວແຄມຝັ່ງນ້ຳຂອງຜັດ ພາກັນເຂົ້າໃຈຜິດໄປວ່າເຈົ້າເພັຊຣາຊກັບສຸພານຸວົງສ໌ ໄດ້ອະນຸຍາຕໃຫ້ທະຫາຣໄທຍ ໄປທຳການປົດອາວຸທພວກຕົນ ພວກນາຍທະຫາຣລາວອິສຣະຄົນສຳຄັນອັນມີ ສີງຫ໌ ກະໂປ ສີໂລຕຣ໌ຈູນນະມາລີ+ສີທົນ ກົມມາດຳ+ໝື່ນ ສົມວິຈິຕ+ເສີມ ມະໂນວຽງ ແລະທ້າວຕຸລັນ ກໍພາກັນປະກາສບ່ຍອມຢູ່ໄຕ້ບັງຄັບບັນຊາຂອງສຸພານຸວົງສ໌ ແລະ ເຈົ້າເພັຊຣາຊ ຣັຕນະວົງສາອີກຕໍ່ໄປ.

ໃນຂນະທີ່ຂບວນລາວອິສຣະຜັດຖິ່ນແຕກແຍກກັນຢູ່ນີ້ ກໍມີນາຍທ້ວຽນຣົ້ງ ສາຍລັບໄຕ້ດິນຂອງວຽຕມິນຫ໌ໃນບ່າວກອກມາພົບສຸພານຸວົງສ໌ຢ່າງລັບໆ ໂດຍຍື່ນຂໍ້ ສເນີຈະໃຫ້ການຊ່ວຍເຫລືອຢ່າງເຕັມທີ່ວ່າພວກຕົນມີມີອາວຸທພຽງພໍເພື່ອຕໍ່ສູ້ກັບຝຣັ່ງ ເສສໃນປະເທສລາວ ຂບວນການວຽຕມິນຫ໌ມີເຄື່ອງນຸ່ງຫົ່ມ+ມີຢາປ້ອພຍາທ+ມີ ເງິນໄຊ້ຈ່າຍໃນພາຣະກິຈກູ້ຊາຕລາວ ແລະເຊີນໄປເບິ່ງດ້ວຍຕາຕົນເອງ.

ເຈົ້າເພັຊຣາຊ ຣັຕນະວົງສາຮູ້ຈັກນິສັຍໃຈຄິດຂອງວຽຕນາມເໜືອດີເກີນພໍທີ່ ຕ້ອງຣະມັດຣະວັງໄວ້ກ່ອນຈຶ່ງໄດ້ສົ່ງຄົນຂອງຕົນຄືທ້າວລຳເຜື່ອນຕຸນາຣົມນ໌ກັບ ເຈົ້າສຸຂ ວົງສັກດ໌ເດີນທາງໄປຍັງເມືອງເງອານຂອງວຽຕນາມເໜືອໃນຕົ້ນເດືອນ ພຶສພາຂອງປີ 1949 ກໍຈຶ່ງໄດ້ພົບກັບໝູຣັກ ພູມສວັຣຄ໌ຊຶ່ງເປັນຫົວໜ້າລາວ ຕໍ່ຕ້ານພາຄຕາເວັນອອກທີ່ໂດເລື່ອງ-ກອນກວາງ ດ້ວຍການຜ່ານທາງໝູຣັກ ພູມສວັຣຄ໌ ຈຶ່ງໄດ້ພົບກັບຜູ້ຕາງໜ້າຂບວນການວຽຕມິນຫ໌ປະຈຳເຂຕ ກໍໄດ້ ພົບວ່າເປັນຄວາມຈິງດັ່ງທີ່ນາຍທ້ວຽນຣົ້ງຢືນຢັນເອົາໄວ້ໃນບ່າວກອກ ທັນທີ

ທີ່ທ່ານຄຳເຜື່ອນ ຕຸນາຣົມນ໌ກັບຄືນມາເຖິງເມືອງໄທຍ ສຸພານຸວົງສ໌ກໍເອີ້ນພູມີ ນໍ່ສວັຣຄ໌ມາປຶກສາໂດຍດວ່ນ ເພື່ອໃຫ້ພູມີ ນໍ່ສວັຣຄ໌ນຳເອົາໜໜາຣລາວອິສຣະໄປຝຶກວິຊາໜໜາຣໃນເຂຕຄວບຄຸມຂອງຂບວນກາຣອຽຕມິນໜ໌ທີ່ແຂວງເວ່ອານ ແຕ່ພູມີ ນໍ່ ນໍ່ສວັຣຄ໌ກໍເປັນຄົນເຈົ້າຄວາມຄິດຈຶ່ງບໍ່ເຫັນດີ ພ້ອມບອກກັບສຸພານຸວົງສ໌ວ່າ ບໍ່ຄວຣ ຕາຽໃຈເຊື່ອນາຽຫງວຽນຮົງທັນທີ ສນັ້ນເພື່ອພິສູຈນ໌ຄວາມຄິດເຫັນຂອງຕົນ ພູມີ ນໍ່ສວັຣຄ໌ຈຶ່ງຂໍສົ່ງນາຽໜໜາຣລາວອິສຣະຈຳນວນໜຶ່ງເດີນທາງໄປເບິ່ງກ່ອນ.

ສຸພານຸວົງສ໌ກໍເຫັນດີ ພູມີ ນໍ່ສວັຣຄ໌ຈຶ່ງສົ່ງໃຫ້ ທ້າວພູວົງ ນໍ່ສວັຣຄ໌ ທີ່ເປັນນ້ອງຊາຽຂອງຕົນເອງກັບທ້າວສົມຣິທ ຣາຊພົງສ໌+ທ້າວສູນຍ໌ທອນ ທ້າວຈເຣີນ ກັບອີກ 16 ຄົນເດີນທາງໄປຍັງວຽຕນາມເໜືອ ໃນຣະເດືອນກໍຣະກະດາ ປີ 1949 ໄປເຖິງເວ່ອານກໍຖືກຕ້ອນຮັບຈາກນາຍພົລຫງວຽນເຊີນ ຜູ້ບັນຊາກາຣໜໜາຣເຂຕ ສີ່ຂອງຂບວນກາຣອຽຕມິນໜ໌ຢ່າງດີ ໃນອັນຕໍ່ມານາຽພົລຜູ້ນັ້ນກໍໄດ້ພານາຍໜໜາຣ ລາວອິສຣະຈາກເມືອງໄທຍໄປເລາະເບິ່ງສາງອາວຸທຍຸຕທະພັນທ໌ ຂອງວຽຕມິນໜ໌ ຈຶ່ງໄດ້ພົບວ່າເປັນຄວາມຈິງ ນາຽພົລຫງວຽນເຊີນຍັງກ່າວວ່າ ມີອາວຸທອີກຫລາຍ ສາງເພື່ອຕຽມເອົາໄວ້ຕ້ອນຮັບຂບວນກາຣນ໌ລາວອິສຣະ.

ເມື່ອຄນະລາວອິສຣະ 20 ຄົນກັບມາເຖິງບາງກອກ ພູມີ ນໍ່ສວັຣຄ໌ບອກສຸພານຸວົງສ໌ວ່າ ຈະຂໍໄປພິສູຈນ໌ດ້ວຍຕົນເອງອີກຄັ້ງສຸດທ້າຍ ແລ້ວພູມີ ນໍ່ສວັຣຄ໌ພ້ອມພັຄພວກຣວມທັງໜໜາຣລາວອິສຣະ 150 ຄົນ ເດີນທາງໄປຍັງພາຄເໜືອຂອງລາວ ໃນຕົ້ນເດືອນກັນຍາປີ ຄສ.1949.

ພໍ່ໄປເຖິງເມືອງໂມ້ໃນແຂວງຊຽງຂວາງແໜນທີ່ພູມີ ນໍ່ສວັຣຄ໌ຈະພາພັຄພວກເຂົ້າໄປພົບພວກອຽຕມິນໜ໌ທັນທີ ແຕ່ກັບໄປແວ່ພົບທ່ານໂອຄຳ ອະນຸຣັກສ໌ ຜູ້ບັນຊາ ກາຣໜໜາຣລາວອິສຣະໃນເຂຕນັ້ນເພື່ອໃຫ້ທຳກາຣຕິດຕໍ່ໄປຍັງນາຽພົລຫງວຽນເຊີນ ຫົວໜ້າອຽຕມິນໜ໌ທີ່ເຂຕເມືອງໂດເລືອງກ່ອນ ແມ່ນໄດ້ຮັບຕອບຈາກນາຽພົລເຊີນ ແລ້ວກໍດີ ພູມີ ນໍ່ສວັຣຄ໌ກໍຍັງບໍ່ຍອມເຊື່ອໃຈພວກອຽຕມິນໜ໌ຢູ່ອີກ ຈຶ່ງຂໍໄປເບິ່ງດ້ວຍຕົນເອງກ່ອນໂດຽປະໜໜາຣລາວອິສຣະທັງໝົດໄວ້ທີ່ຄ່າຍເມືອງໂມ້ ແລ້ວກໍເລືອກເອົາຄົນສນິດຕິດຕາມໄປນຳຄື ພູເຂົ້າ ນໍ່ສວັຣຄ໌+ສິງໜ໌ ຣັຕນະສມັຍ+ເຈົ້າສຸຂ ວົງ ສັກດ໌+ສຳຣິທທິ ຣາຊພົງສ໌+ສິງໜ໌ກະໂປ ສີໂລຕຣ໌ຈຸນນະມາລີ+ສີຊຸນະ ສີສາຣ ກັບ ໂຊຕ ເພັຊຣາສີ+ແລະສູນຍ໌ທອນ ປະຖັມະວົງສ໌.

ນາຽພົລຫງວຽນເຊີນໄດ້ສົ່ງຣົຖບັຣທຸກໜໜາຣມາຮັບເອົາພູມີ ນໍ່ສວັຣຄ໌ກັບພັຄ ພວກທີ່ເມືອງແສນໃນດິນແດນຂອງລາວ ແລ້ວເດີນທາງຕໍ່ໄປຍັງເມືອງກອນກວາງ

ໃນອຽຕນາມ ແຕ່ກອ່ນເຖິງເມືອງກອນກອາງຣ໌ຖບັຣທຸກກໍພາແອ່ພັກແຣມທີ່ໝູ່ບ້ານ ນ້ອຍແຫ່ງຫນຶ່ງຊື່ວ່າໂດນດ່ຽນຊຶ່ງເປັນກອງບັນຊາການຂອງຄນະລາວຕ່ໍຕ້ານຜາຄ ຕາເວັນອອກ ຢູ່ຫ່າງຈາກເມືອງກອນກອາງພຽງ 2 ກິໂລແມຕຣ໌ ກໍໃນທີ່ນີ້ເອງທີ່ພູມ ນ່ໍສວັຣຄ໌ໄດ້ພົບເພື່ອນເກ່ໍາລູກເມືອງສວັຣຄ໌ດຽວກັນຄື ໝູຣັກ ພູມສວັຣຄ໌ ຜູ້ເປັນ ຫົວໜ້ໍາຂບວນການຣ໌ ພູມີ ນ່ໍສວັຣຄ໌ຕື່ນຕຣົງເພາະບ່ໍເຄີຍຄິດວ່ໍາຈະມີຂບວນ ການຣ໌ລາວອິສຣະມາຢູ່ເລີກເຂ້ໍາໄປໃນດິນແດນອຽຕນາມເຫນືອກອ່ນແລ້ວ ພູມີ ແລະໝູຣັກເຄີຍຮຽນໜັງຮ່ວມກັນໃນ ໂຮງຮຽນປະຖົມທີ່ເມືອງສວັຣຄ໌ນະເຂຕ ແລະ ບ່ໍເຄີຽຄິດວ່ໍາ "ພ່ໍຄ້ໍາປົ້ນເຖ່ືອນ" ເພື່ອນເກ່ໍາຈະໄດ້ມາເປັນຄົນໃຫ່ຍຄົນ ໂຕຢູ່ຫ່ໍາມກາງ ຂບວນການ໌ອຽຕມິນຫ໌ເຊ່ັນນີ້.

ຂ້ໍາວ່ໍາຍອ້ນຄືນຫຼັງໄປອີກເມ່ືອປະມາຣ 2 ປີກອ່ນໜ້ໍານີ້ ເພື່ອໃຫ້ຜູ້ອ່ານສາ ມາຣຖ໌ທົບທວນເຫຕຸການ ໄດ້ວ່ໍາຽ ຂ້ຶ້ນກ່ໍຄື ເມ່ືອຄາວກອງທັພຝຣັ່ງເສສກັບເຂ້ົ້າມາຍ ຶດ ຄອງລາວທ່ືອປະເທສຄ້ັ້ງໃໝ່ໃນເດ ືອນ ມິນາ-ເມສາ-ພ ຶສພາ 1946 ນ ັ້ນ ພວກລາວ ອິສຣະໄດ້ແຕກໝ ີໄປຄົນລະທ ິສທາງເຊ ັ່ນວ່ໍາ ພວກທ ີ່ຢູ່ໄກ້ລ ໍານ ້ໍາຂອງກ ໍພາກ ັນໝ ີໄປ ເມ ືອງໄທຍ ພວກລາວອ ິສຣະທ ີ່ຢູ່ໄກ້ສ ໍາຽແດນຕາເວ ັນອອກ ກ ໍພາກ ັນໝ ີເຂ ົ້ໍາອຽຕ ນາມ ດ ັ່ງກອງກ ໍາລ ັງລາວອ ິສຣະຂອງທ ່ານໂອຄ ໍາ ອະນ ຸຣ ັກສ ົ໌ເຂຕເມ ືອງເຊ ຸໂປນ ກ ໍ ພາກ ັນຖອຽໝ ີຕ າມສ າຍທ າງເລ ຂ 9 ໄປເຖ ິງຊ ຸ ອ ່ງແຄບລ ່ໍາບ ່ໍາວ ເຂ ົ້ໍາສ ູ ່ ອຽຕນາມ ພ ໍາຄ ນ ໍາງແລ ້ ອກ ໍ ໄ ດ ້ ນ ໍ ໍ ໍ

ນ້ອຽກ 2-3 ອັນ ເພາະເດີນທາງໄດ້ແຕ່ຕອນກາງຄືນເທົ່ານັ້ນ ໃນຕອນກາງເວັນ ຈະມີເຄື່ອງບິນສອດແນມ ແລະເຄື່ອງບິນຣົບຂອງຝຣັ່ງເສສບິນກວດກາຣຢູ່ຕລອດເວລາ ໝູຣັກ ພູມສວັຣຄ໌ໄດ້ໃຫ້ກາຣຕ້ອນຮັບພູມີ ນໍ່ສວັຣຄ໌ກັບພັລພວກຢ່າງດີໃນຂນະທີ່ຣໍຄອຍຣົຖມາຈາກວຽຕບັ໋ກ.

ໃນອີກສາມວັນຕໍ່ມາແທນທີ່ຈະເຫັນຫົວໜ້າຂບວນກາຣວຽຕມິນຫ໌ມາພົບ ດັ່ງທີ່ເວົ້າກັນໄວ້ ແຕ່ກັບມີພຽງນາງຽຣ້ຽຕິດຕໍ່ກັບທທາຣວຽຕມິນຫ໌ອີກສອງຄົນຂີ່ຣົຖເຂົ້າມາແຈ້ງບອກກັບພູມີ ນໍ່ສວັຣຄ໌ວ່າ...

"ຫົວໜ້າຂອງພວກເຂົາອະນຸຍາຕໃຫ້ພູມີໄປພົບໄດ້ແຕ່ໃຫ້ໄປພຽງ 4-5 ຄົນເທົ່ານັ້ນ ພູມີ ນໍ່ສວັຣຄ໌ກໍເຣີ່ມປລາດໃຈຂຶ້ນມາອີກໃໝ່ ເພາະໃນຕົ້ນທາງເວົ້າກັນວ່າຽງ ແຕ່ພໍມາເຖິງປາຽທາງກັບຍິ່ງເຂົ້າໃຈຍາກ ແຕ່ເຖິງຈະບໍ່ໝັ້ນໃຈເຕັມຣ້ອຍ ພູມີ ນໍ່ສວັຣຄ໌ທີ່ມັກຢີ່ນ້ຳພະຍົສຢູ່ແລ້ວຈຶ່ງໄດ້ເລືອກເອົາທ່ານພູເຂົາ ນໍ່ສວັຣຄ໌ ທີ່ເປັນນ້ອງຊາຽ+ກັບພັນຕຣີສີງຫ໌ ຣັຕນະສໄມຍ+ເຈົ້າສຸຂ ວົງສັກດ+ສຳຣິທທ໌ ຣາຊຜົງສ໌ ຮ່ວມຕິດຕາມໄປນຳ ພວກທີ່ເຫລືອຊຶ່ງຈຳເປັນຕ້ອງຣໍຖ້າຢູ່ກັບໜູຣັກ ພູມສວັຣຄ໌ ກໍຄື ສີງຫ໌ກະໂປ ສີໂຄຕຣ໌ຈຸນນະມາລີ+ສີຊນະ ສີສາຣ+ໂຊຕ ເພັຊຣາສີ+ສອູນທອນ ປະຖຸມມະວົງວ໌ ເຈົ້າສຳນັກໜູຣັກ ພູມສວັຣຄ໌ເພື່ອນເກົ່າຫວັ່ນໃຈໄວ້ກອ່ນວ່າ ພວກວຽຕມິນຫ໌ອາຈເວົ້າພາສາຝຣັ່ງເສສບໍ່ເກ່ງຄືພູມີກັບຄນະ ທາງຝ່າຍພູມີ ນໍ່ສວັຣຄ໌ເອງກໍອາຈບໍ່ເກ່ງໃນພາສາວຽຕນາມ ກົວ່າຈະມີບັຣຫາໃນກາຣສົນທະນາກັບຜູ້ຕາງໜ້າວຽຕມິນຫ໌ ຈຶ່ງໄດ້ສົ່ງໜຸ່ມບຸນຍົງ ວໍຣະສາຣທີ່ເປັນລູກຊາຽຂອງນາຍຄຣູກີ່ງ ວໍຣະສາຣຕິດຕາມໄປເປັນນາຍພາສາ ພູມີ ນໍ່ສວັຣຄ໌ຈຶ່ງຫັນໄປຖາມຫຍອກວ່າ

"ທ້າວຊື່ຫຍັງ?"

"ຊື່ບຸນຍົງ ຂນ້ອຍ"

"ອາຍທ້າວຈັກປີແລ້ວ"?

"16 ປີ ຂນ້ອຍ"

ພູມີ ນໍ່ສວັຣຄ໌ກໍຫົວຂວັນ ແລະເອີ່ຍວ່າ

"ນາຽພາສາຄືມານ້ອຽແທ້...ທ້າວເວົ້າພາສາວຽຕນາມໄດ້ດີບໍ?"

ໝູຣັກ ພູມສວັຣຄ໌ຍາດຕອບເສັຍເອງວ່າ

"ມັນນ້ອຽໆກໍຈິງ ແຕ່ເຣື່ອງສອງພາສາລາວ-ວຽຕແລ້ວບໍ່ຕ້ອງຫວ່ງ ແລະກໍເກ່ງພໍໆກັນກັບເຮົາພຸ້ນແຫຼະ"

ພູມີ ນໍສວັຣຄ໌ຈຶ່ງດອດອອກໄປອີກວ່າ

" ກໍໂຕມີເມັຍອຽຕນາມນີ"

" ແຕ"ຫ້າວນ້ອຍບຸນຍົງ ກໍເກ່ງພາສາວຽຕນາມ ສບາຍໃຈໄດ້"

ພໍຮອດທ່ຽງຄືນກໍມີຣົຖຈີບສີ່ຂຽວ 2 ຄັນແລ່ນມາຈອດຢູ່ທີ່ສໍານັກ ຈົນເຖິງ 04 ໂມງ ເຊົ້າຣົຖຈີບທັງສອງຄັນຈຶ່ງໄດ້ນໍາເອົາພູມີ ນໍ່ສວັຣຄ"ພ້ອມຜູ້ຕິດຕາມສີ່ຄົນ ແລ່ນອອກ ຖນົນດິນໝາຍເລຂທີ 07 ແລະເດີນໜ້າຕໍ່ໄປເຮື່ອຍໆຢ່າງຊ້າໆ ໃນທີ່ສຸດກໍມາເຖິງ ແມ່ນ້ໍາລໍາຫນຶ່ງຊຶ່ງຕ້ອງເອົາຣົຖເຂົ້າເຮືອບັກເພື່ອຈະຂ້ວາມໄປຍັງຝາກຝັ່ງເມືອງໂດ ເລືອງ ແລ້ວກໍເດີນທາງຕໍ່ໄປຈົນເຖິງວັດຮ້າງນ້ອຽໆທີ່ໄກຈາກຕົວເມືອງປະມາຣ 6 ກິໂລແມຕຣ"ແລ້ວກໍຢຸດພັກ ຫຼັງຈາກອາບນ້ໍາປ່ຽນເຄື່ອງນຸ່ງຫົ່ມແລ້ວ ພູມີ ນໍ່ສັວຣຄ" ພ້ອມພັລພວກກໍຖືກເຊີນໃຫ້ອອກມານັ່ງອ້ອມໂຕະອາຫາຣ ທີ່ທາງວຽຕໜົມຫ"ຽມໄວ້ ຕ້ອນຮັບຢ່າງດີ ປະມາຣ 5 ນາທີຕໍ່ມາກໍມີວຽຕນົມຫ"ຈໍານວນ 5 ຄົນ ຢ່າງຫ້ອກະ ເປົ໋າເອກສາຣອອກມາຈາກຫ້ອງໄກ້ຄຽງ ຄົນທີ່ສູງອາຍຸກວ່າເພື່ອນໄດ້ຢ່າງຕຣົງ ມາຫາພູມີ ນໍ່ສວັຣຄ"ດ້ວຍໃບໜ້າຍິ້ມແຍ້ມດີ ແທນທີ່ຜູ້ກ່ຽວຈະທັກທາຽເປັນພາສາ ວຽຕນາມຫລືພາສາຝຣັ່ງເສສຕາມທີ່ຄິດເອົາໄວ້ ແຕ່ກັບເອີ່ຽເປັນພາສາລາວສໍາ ນຽງໄທຽອີສາຣຊັດແຈ້ງອອກມາວ່າ....

" ຂໍໂທສ...ຂໍໂທສທີ່ມາຊ້າແດ່ ເພາະຕິດປະຊຸມ"

ເຂົາຄືນາຽທ່ານວຽນຕ່າຽທີ່ອດີຕເຄີຽເປັນຫ"ໜ້າຂບວນການຣ"ວຽຕນົມຫ"ເຄື່ອນໄຫວ ໄຕ້ດິນຢູ່ໃນປະເທສລາວແລະປະເທສໄທຽໃນປີ 1937-1948 ພູມີ ນໍ່ສວັຣຄ"ຍັງ ຕື່ນເຕັ້ນຕື່ນອີກທີ່ໄດ້ເຫັນນາຽທ່ານວຽນຣົງ ຜູ້ຊຶ່ງເຂົາພົບທີ່ບາງກອກກ່ອນເດີນທາງ ມາວຽຕນາມ ພູມີ ນໍ່ສວັຣຄ"ຈຶ່ງເຂົ້າໃຈຄັກແນ່ວ່າພວກວຽຕນົມຫ"ຕັ້ງໃຈທີ່ຈະສ້າງ ຈິນຕະນາການ"ຂອງຕົນໃຫ້ກາຽເປັນຈິງຂຶ້ນມາໃຫ້ໄດ້ ທີ່ນາຽທ່ານວຽນຣົງຕັດສິນໃຈ ມາຈາກບາງກອກເທື່ອນີ້ນັ້ນກໍຄົງເພື່ອຢາກບອກກົກໃຫ້ລາວອິສຣະຮູ້ວ່າ ເຂົາເອງ ບໍ່ໄດ້ຫຼອກພວກລາວອິສຣະແຕ່ປະການໃດ ວຽຕນົມຫ"ຄົນຕໍ່ໄປທີ່ໜຸ່ມກວ່າເພື່ອນແດ່ ກໍຄືນາຽທ່ານວຽນລອງ ແລະວຽຕນົມຫ"ຄົນທີ 3-4-5 ນັ້ນ ກໍຖືກແນະນໍາຊື່ທັງໝົດ ຕາມມາຣະຍາຕທີ່ດີ.

ກາຣພົບປະສົນທະນາກັນໄດ້ເຣີ່ມຂຶ້ນພາຍຫຼັງອາຫາຣທ່ຽງຂອງວັນນັ້ນ ນາຽ ທ່ານວຽນຕ່າຽອາຣັມພະບົທຕາມແບບສບັບຂອງຜູ້ຮູ້ຈິຕະສາຕຣ" ແລະຢ້ໍາວ່າວຽຕ ນາມມີເຈຕນາຊ່ວຽພວກລາວອິສຣະຢ່າງຈິງໃຈໃນກາຣປົດປ່ອຽປະເທສລາວ ເພື່ອ ຮ່ວມກັນຕີຝຣັ່ງເສສທີ່ເປັນສັຕຣູຕົວດຽວກັນກັບປະຊາຊົນຊາວວຽຕນາມ ພູມີ ນໍ່ ສວັຣຄ"ກໍກ່າວອ້າງຕາມຄໍາສັນຍາປາກເປົ໋າຂອງນາຽທ່ານວຽນຣົງທີ່ບາງກອກ ດ້ວຍ

ຄວາມຮະມັດຮະວັງວ່າ....

"ແມ່ນແທ້ພວກເຮົາຄນະລາວອິສຮະມາຂໍຄວາມຊ່ວຍເຫຼືອຈາກພວກທ່ານ ແຕ່ກ່ອນອື່ນພວກວຽຕນິນຫ໌ຕ້ອງໃຫ້ຄວາມຊ່ວຍເຫຼືອດ້ວຍໃຈຈິງ ຕ້ອງເຄົາຣົພອະທິປະຕັຍຂອງກັນແລະກັນ ເມື່ອພວກວຽຕນິນຫ໌ສົ່ງພະນັກງານໄປຊ່ວຍລາວອິສຮະ ຢູ່ໃນປະເທສລາວນັ້ນຕ້ອງຢູ່ໄຕ້ການບັນຊາຂອງນາຍທະຫານລາວອິສຮະ ຫລືບັນຊາການຮ່ວມກັນ ເມື່ອຍຶດອາວຸທຈາກສັຕຮູຕາມສນາມຮົບມາໄດ້ ຕ້ອງມອບໃຫ້ກຳລັງລາວອິສຮະທັງໝົດ ໂດຽບໍ່ມີເງື່ອນໄຂ"

ນາຽທ່ວຍນຕ່າຽນັ່ງຟັງຢ່າງເອົາໃຈໃສ່ ແລະກໍເອີ່ຽຖາມພູມີ ນໍ່ສວັຣຄ໌ຕື່ນວ່າ...

"ພວກຂບວນການນ໌ລາວອິສຮະຕ້ອງການໃຫ້ພວກເຮົາຊ່ວຍຫຍັງແດ່?"

ພູມີ ນໍ່ສວັຣຄ໌ກໍຕອບຕຮົງໆວ່າ

"ພວກລາວອິສຮະມີທະຫານແລ້ວເຖິງ 5 ກອງພັນ ແຕ່ຂາດອາວຸທຂາດກະສຸນ ປືນຂາດເຄື່ອງນຸ່ງຫົ່ມແລະຢາປົວພຍາທ ຢາກໃຫ້ຂບວນການນ໌ວຽຕນິນຫ໌ຈັດຫາມາຊ່ວຍ ເພື່ອຈະໄດ້ຈັດຕັ້ງກອງທັພລາວອິສຮະຂຶ້ນໃນຕົ້ນປີ 1950 ນີ້ເລີຽ"

ພູມີ ນໍ່ສວັຣຄ໌ຈຶ່ງສົ່ງບັນຊີອຸປກອຣທ໌ຕ້ອງການໃຫ້ນາຽທ່ວຍນຕ່າຽ ທີ່ນັ່ງຢູ່ຕໍ່ໜ້າຂອງຕົນ ເມື່ອອ່ານຈົບນາຍທ່ວຍນຕ່າຍກໍຕອບມາວ່າ...

"ຈະໃຫ້ຄຳຕອບໃນຕອນບ່າຽ ຂໍນຳໄປປຶກສາກັນກ່ອນ"

ການປະຊຸມກັນຕອນເຊົ້າເສັຈສິ້ນລົງແລ້ວ ຫຼັງພັກຜ່ອນກໍມາເຣີ່ມກັນໃໝ່ອີກໃນຕອນບ່າຽ ນາຽທ່ວຍນຕ່າຽໄດ້ຄຳຕອບມາບອກວ່າ...

"ອາວຸທທີ່ພວກທ່ານຕ້ອງການນີ້ມັນມາກມາຽ ແຕ່ລົງທ້າໄດ້ບ່ຍາກສຳຣັບປະເທສທີ່ຮັ່ງມີແລະຜລິດອາວຸທເອົ້າເອງໄດ້ ແຕ່ພວກວຽຕນິນຫ໌ຄືພວກເຮົານີ້ຕ້ອງເອົ້າເລືອດແລະຊີວິຕເຂົ້າແລກເອົ້າຈຶ່ງໄດ້ມັນມາ ຖ້າພວກເຮົາຈະຕັດສິນໃຈໃຫ້ໃຜແລ້ວກໍຕ້ອງເຊື່ອວ່າປືນຂອງຕົນເອງຈະບ່ປິ່ນປາກກະບອກຄືນມາຫາຕົນເອງຈຶ່ງຈະໃຫ້"

"ມັນກໍທັມມະດາດີ ທ່ານລາວອິສຮະກໍເຊັ່ນດຽວກັນ ກ່ອນທີ່ຈະຮັບເອົ້າອາວຸທຈາກພວກທ່ານກໍຕ້ອງແນ່ໃຈເສັຽກ່ອນວ່າ ທ່ານໃຫ້ດ້ວຍໃຈຈິງຫລືບ່?

ພູມີ ນໍ່ສວັຣຄ໌ເປັນໜຸ່ມສກັນສຸຂຸມມັກໃຊ້ຄວາມຄິດສມີ ເຂົ້າບ່ເຄີຍຄິດເຊື່ອໃນມາຣຍາຂອງພວກວຽຕນິນຫ໌ຈັກເທື່ອ ເຂົ້າຮ້ສຶກຜິດຫວັງຢ່າງແຮງຕໍ່ຄຳຕອບທີ່ທ່ານໍ ຫາກໍຫລຸດອອກຈາກປາກຂອງນາຍທ່ວຍນຕ່າຍຊຶ່ງມັນບ່ຕຮົງກັນກັບສັນຍາທີ່ນາຍທ່ວຍນຮົງບອກແຕ່ຍັງຢູ່ບ່າງກອກ ພູມີຈຶ່ງຕອບນາຍທ່ວຍນຕ່າຍໄປວ່າ...

"ຫາກທ່ານເວົ້າແບບນີ້ກໍດີແລ ຂ້ານ້ອຍເຈົ້າຈະກັບໄປສຳນັກໂດມດ່ຽນເພື່ອຮັບ

ເອົາພັຄພວກທີ່ຖ້າຢູ່ທີ່ນັ້ນ ກອ່ນກັບໄປເອົາກຳລັງທຫາຣລາວອິສຣະທີ່ເມືອງໂມ້ ໃນ ແຂວງຊຽງຂວາງມາມອບໃຫ້ພວກທ່ານຝຶກແອບວິຊາທຫາຣກອ່ນ ຈຶ່ງປະກອບອາ ວຸທໃຫ້ພວກເຂົ້າພາຍຫລັງກໍໄດ້ ຕາມແຕ່ພວກທ່ານເຫັນສົມຄວຣ"

ຫາກຜູ້ອ່ານມີແນວໂນ້ມຄິດໄປໃນທາງກາຣເມືອງໄລຍະຍາວ ຂອງພວກວຽຕ ວຽຕມິນຫ໌ແລ້ວກໍອາຈເປັນໄປໄດ້ສູງທີ່ນາຽຫງວຽນຕ່າຽ ຜູ້ຕາງໜ້າຂບວນກາຣນ໌ ວຽຕມິນຫ໌ແກ້ງທິດຮອງເບິ່ງທ່າທີຂອງພູມີ ນໍ່ສວັຣຄ໌ວ່າຈະຈິງໃຈຂນາດໃດ ກາຣ ສເນີໜ້າຂອງນາຍຫງວຽນຮຶງ ທີ່ເປັນສາຽລັບໄຕ້ດິນຂອງຂບວນກາຣນ໌ພວກວຽຕ ມິນຫ໌ປະຈຳບາງກອກເທື່ອນີ້ ກໍເປັນເຣື່ອງທີ່ຄວຣທົບທວນຄືນອີກເທື່ອໜຶ່ງວ່າດວ້ຽ ເຫຕຸໃດຈຶ່ງໄດ້ເດີນທາງລວ່ງໜ້າມາກອ່ນພູມີ ນໍ່ສວັຣຄ໌ ? ອາຈເປັນໄປໄດ້ທີ່ສຸດວ່າ ເພື່ອນາແນະນຳເຖິງບຸຄລິລັກສນະຂອງ ພູມີ ນໍ່ສວັຣຄ໌ໃຫ້ນາຽຫງວຽນຕ່າຽຮູ້ລວ່ງ ໜ້ານັ້ນເອງ ໃນກໍຣະນີທີ່ຈະສູນຍ໌ເສັຽພູມີ ນໍ່ສວັຣຄ໌ກັບທຫາຣລາວອິສຣະ ຈຳນວນ 150 ຄົນໄປຄົງບໍ່ສຳຄັນນັກສຳຣັບພວກວຽຕມິນຫ໌ ເພາະພວກທີ່ຂບວນກາຣນ໌ວຽຕ ມິນຫ໌ຕ້ອງກາຣຕົວທີ່ສຸດໃນເວລານີ້ນັ້ນບໍ່ແມ່ນພູມີ ນໍ່ສວັຣຄ໌ ຫຼືພວກຜູ້ນຳລາວອິສຣະ ຄົນອື່ນໆເລີຽ ແຕ່ຫາກແມ່ນຕົວສຸພານຸວົງສ໌ກັບເຈົ້າເພັຊຣາຊ ຣັຕນະວົງສາ ພຸ້ນ ຕ່າງຫາກ.

ຫງວຽນຕ່າຽກໍຈັດຣົຖຈຸເດີນໃຫ້ນຳສິ່ງ ພູມີ ນໍ່ສວັຣຄ໌ແລະພັຄພວກກັບຄືນມາ ຍັງໂດນດ່ຽນໃນເຂຕເມືອງກອນກວາງ ທີ່ເປັນສຳນັກລາວອິສຣະພາຄຕາເວັນອອກ ຂອງໝູຣັກ ພູມສວັຣຄ໌ໃນຄ່ຳຂອງວັນນັ້ນເລີຍ ພູມີ ນໍ່ສວັຣຄ໌ຄິດວ່າ ແມ່ນສຸພານຸ ວົງສ໌ເປັນຕົ້ນເຫຕຸໃຫ້ນາຕິດແຮ້ວຂອງພວກວຽຕມິນຫ໌ ຈຶ່ງຕັດສິນໃຈຈະບໍ່ກັບໄປຫາ ສຸພານຸວົງສ໌ທີ່ເມືອງໄທຽ ທັງຈະບໍ່ໄປແອ່ແມ່ນກະທັ້ງສຳນັກລາວຕໍ່ຕ້ານຂອງໝູ ຣັກ ພູມສວັຣຄ໌ທີ່ໂດນດ່ຽນໄກ້ໆກັບກອນກວາງຕາມ ທີ່ໄດ້ບອກກັບຫງວຽນຕ່າຽໄວ້ ແລ້ວ ພູມີ ນໍ່ສວັຣຄ໌ຕັດສິນໃຈປະຖິ້ມພັຄພວກ 4 ຄົນໄວ້ກັບໝູຣັກ ພູມສວັຣຄ໌ ຢູ່ທີ່ ໂດນດ່ຽນຢ່າງຄົນເຫັນແກ່ຕົວ ແລ້ວກໍສັ່ງໃຫ້ຄົນຂັບຣົຖຂອງວຽຕມິນຫ໌ແລ່ນໄປ ຈົນເຖິງເມືອງແສນແລະແລ່ນຕໍ່ໄປຈົນເຖິງເມືອງໂມ້ໃນແຂວງຊຽງຂວາງ ໂດຍຄົນ ຂັບຣົຖວຽຕມິນຫ໌ບໍ່ກ້າປະຕິເສທທັງໆທີ່ຮູ້ວ່າຖືກສັ່ງໃຫ້ໄປຜິດທາງ.

ພໍກັບເມືອເຖິງເມືອງໂມ້ແລ້ວ ພູມີ ນໍ່ສວັຣຄ໌ກໍຫຼອກທ່ານໂອລຳ ອະນຸລັກສ໌ ວ່າ ຕົນຈະຝ່າວນຳເອົາທຫາຣຂອງຕົນໄປໃຫ້ພວກວຽຕມິນຫ໌ທຳກາຣຝຶກອາວຸທ ທີ່ ໂດເລື່ອງ ແຕ່ກອ່ນນຳທຫາຣລາວອອກຈາກເມືອງໂມ້ ພູມີ ນໍ່ສວັຣຄ໌ ໄດ້ຽນຈົດ ໝາຍສັບໜຶ່ງໃຫ້ແກ່ທ້າວໂສວັຕ ຜູ້ບັນຊາກາຣກອງຣ້ອຍທາຣທຫາຣລາວອິສຣະ

ທີ່ຄ້າຽເມືອງໂນ້ ເພື່ອສົ່ງຕໍ່ໄປຫາພັຄພວກຊຶ່ງຄ້າງຢູ່ທີ່ສຳນັກລາວຕໍ່ຕ້ານຂອງ ໝູ ຮັກ ພູມສວັຣຄ໌ທີ່ໂດນດ່ຽນ ພວກວຽຕມິນຫ໌ກໍໄຫວຕົວທັນຮົບພາກັນຫຼົ້ນລູກໄມ້ສົກະ ປົກທັນທີທີ່ຮູ້ຂ່າວວ່າພູມີ ນໍ່ສວັຣຄ໌ກັບພັຄພວກບໍ່ຍອມແວ່ໄປໂດນດ່ຽນ ນາຽຫງວຽນ ຕ່າຽທີ່ໃຜໆກໍເຂົ້າໃຈວ່າເປັນນັກບຸນຍໃນຂບວນການວ໌ວຽຕມິນຫ໌ນີ້ນ ກໍແສດງຫົວໃຈ ແສນບາບອອກມາໃຫ້ເຫັນ ໂດຽສົ່ງໂທຣະເລຂດວ່ນໄປບອກທ່ານເກ ປາມມາລັຍ ທອງ ນາຍທຫາຣລາວອິສຣະປະຈຳຄ່າຍເມືອງໂນ້ໃຫ້ຈັບຕົວພູມີ ນໍ່ສວັຣຄ໌ ກັບພັຄ ພວກໄວ້ໃຫ້ໄດ້ ແຕ່ເມື່ອທ່ານເກ ປາມມາລັຍທອງໄດ້ອ່ານເນື້ອຄວາມໃນໂທຣເລຂ ແລ້ວກໍຈົກຖິ້ມທັນທີ ນອກຈາກບໍ່ຍອມປະຕິບັຕຄຳສົ່ງຂອງວຽຕມິນຫ໌ແລ້ວ ຍັງຜາ ທຫາຣຂອງຕົນຈັດແຈງເຂົ້າປາອາຫາຣໃຫ້ແກ່ພູມີ ນໍ່ສວັຣຄ໌ ກັບທຫາຣລາວອິສຣະ ຈຳນວນຮ້ຽກວ່າຄົນນັ້ນຕື່ມອີກ ແຖມຈັດກຳລັງທຫາຣຂອງຕົນຈຳນວນໜຶ່ງໄປ ສົ່ງໃຫ້ເດີນທາງກັບເມືອງໄທຽຈົນພົ້ນເຂຕຮັກສາການຂອງຕົນ.

ພູມີ ນໍ່ສວັຣຄ໌ ບໍ່ສົນໃຈໃນການຂວ່ຽເຫຼືອແບບສົກະປົກຂອງວຽຕມິນຫ໌ ຈຶ່ງ ພາທຫາຣຂອງຕົນເດີນມຸ່ງໜ້າສູ່ທີ່ສຕາເວັນຕົກຂ້າມສັນພູຫຼວງ ທີ່ກ່ອນມູຍາໃນເຂຕ ເມືອງມຫາໄຊ-ຍົມມະຣາຊ ແລ້ວເຂົ້າສູ່ຖນົນຫມາຍເລຂ 8 ຫລົບຫລີກທຫາຣຝຣັ່ງ ເສສເຂົ້າມາເຖິງເຂຕທ່ີ່ແຂກລົງສູ່ແມ່ນ້ຳຂອງ ຂ້າມຝັ່ງໄທຽໄປເຖິງບ້ານບ໊ຶງການ ປະເທສໄທຍຫຼັງຈາກໃຊ້ເວລາເດີນທາງເກືອບສອງເດືອນ ທັນທີທີ່ເຖິງເມືອງໄທຍກໍ ຕິດຕ່ໍຫາທ່ານອຸ່ນ ຂຸນະນິກອຣເພື່ອນອິສຣະເກ່ົາ ທີ່ໄດ້ກັບໄປຮັບເອົາເອກຣາຊເຄ່ືອງ ເມືອງຂຶ້ນຈາກຝຣັ່ງເສສໃນວຽງຈັນຫມ໌ແຕ່ວັນທີ 09 ພຶສຈິກາ 1949 ຜ່ານມາ ຈຶ່ງ ນຳກຳລັງທຫາຣລາວອິສຣະທັ້ງໝົດຂອງຕົນຂ້າມກັບຄືນມາຝັ່ງປະເທສລາວເຂົ້າ ສວາມິພັກດ໌ກັບຣັຖບາລເຄ່ືອງເມືອງຂຶ້ນ ແທນທ່ີຈະຢູ່ເປັນລາວອິສຣະພັດຖິ່ນໃນດິນ ໄທຍຮ່ວມກັບສຸພານຸວົງສ໌ແລະເຈົ້າເພັຊຣາຊ ຣັຕນະວົງສາອີກຕ່ໍໄປ ໂດຍພັນຕຣີພູ ມີ ນໍ່ສວຣັຄ໌ໃນຂບວນການລາວອິສຣະຍອມຮັບເອົາຊັ້ນນາຍຮ້ອຍໂທ ຢູ່ໃນກອງທັພ ລາວເຄ່ືອງເມືອງຂຶ້ນຂອງຝຣັ່ງເສສທ່ີນະຄອຣວຽງຈັທນ໌.

ຈົດໝາຽນ້ອຍສບັບນັ້ນຂອງພູມີ ນໍ່ສວັຣຄ໌ໄປເຖິງມືສົງຫ໌ກະໂປ ສີໂລຕຣ໌ຈຸນ ນະມາລີທ່ີສຳນັກລາວຕໍ່ຕ້ານຂອງໝູຮັກໂດນດ່ຽນໃນຫລາຍວັນຕ່ໍມາ ສົງຫ໌ກະ ໂປໂກຫແລ້ນເປັນໄຟລາມປ່າເມ່ືອອ່ານຂ້ໍຄວາມທ່ີພູມີ ນໍ່ສວັຣຄ໌ຂຽນບອກວ່າ

"ແສດງຄວາມເສັຍໃຈທ່ີຕ້ອງເດີນທາງກັບ ໂດຍດ່ວນເພາະຖືກສຣ່ອຫລອກ ຈ່ຶງພຍາຍາມຊ່ວຍຕົນເອງໃຫ້ໄດ້...!"

ມັນເປັນສຳນວນທ່ີອ່ານງ່າຍໆແຕ່ກໍຝ້ັຍຍາກ ເພ່ືອນລາວອິສຣະທັ້ງ 4 ຄົນນັ້ນ

ແນມໜ້າກັນລຶກແລ້ກດ້ວຍຄວາມຜິດຫວັງຢ່າງແຮງຕໍ່ການປະພຶຕຂອງ ພູມີ ນໍ່ສວັຣຄ ແລະເມື່ອເຣີ່ມຄິດຫາທາງອອກໄດ້ນັ້ນກໍສວາຽເກີນແກ້ແລ້ວ ເພາະ ນາຽຫວອຽນຕ່າຽໄດ້ສັ່ງຍ້າຽສໍານັກລາວອິສຣະຕໍ່ຕ້ານພາຄຕາເວັນອອກ ຂອງໝູ ຮັກ ພູມສວັຣຄໃຫ້ເລີກເຂ້ົ້າໄປໃນດິນແດນຂອງວຽຕນາມຕື່ມອີກ ສນັ້ນເພື່ອນລາວ ອິສຣະທັງ 4 ຄົນຈຶ່ງຕິດໄປນໍາກໍາລັງຂອງໝູຮັກ ພູມສວັຣຄ໌ຢ່າງບໍ່ມີໃຜຊ່ວຍໄດ້ອີກ.

ບັດນີ້ເສັ້ນທາງທີ່ເຄີຽຫຽວໄປມາປະຈໍາຣະຫວ່າງ ກອນກວາງ-ເມືອງແສນ-ເມືອງໂນ້-ຮວມທັງເສັ້ນທາງສາຽອື່ນໆທີ່ຕິດຕໍ່ກັບດິນລາວໃນແຂວງຊຽງຂວາງ-ເວ ອານນັ້ນ ນາຽຫວອຽນຕ່າຽໄດ້ສັ່ງໃຫ້ວຽຕນິນຫ໌ກົມທີ 81 ທໍາການກວດໜັງສືເດີນ ທາງຂອງຄົນລາວທີ່ຫຽວຫວ່ໄປມາຢ່າງເຄັ່ງຄັດ ແລະໜັງສືອານຸຍາຕໃຫ້ເດີນ ທາງນັ້ນກໍຕ້ອງແມ່ນເສນາທິການຂອງກົມທີ 81 ເປັນຜູ້ອອກໃຫ້ເອງ ຈຶ່ງມີສິທທີ່ໄປ ມາຣະຫວ່າງສາຍແດນລາວ-ວຽຕໄດ້ສະດວກ ຣ້າຍແຮງໄປກວ່ານີ້ນາຍຫວອຽນ ຕ່າຍຣິບສວຍໂອກາສຂຽນຈົດໝາຍສບັບຫນຶ່ງຂຶ້ນ ແລ້ວສົ່ງໄປໃຫ້ ໂຣຈິມິນຫ໌ລົ່ວ ຣາຍເຊັນກອ່ນຈະໃຫ້ນາຍຫວອຽນຮົ່ງຖືກັບໄປໃຫ້ເຈົ້າເພັຊຣາຊກັບເຈົ້າສຸພານຸ ວົ່ງສ໌ທີ່ບ້ານກອກ ໂດຍຈົດໝາຍສບັບນັ້ນຂຽນເສກສັຣຄ໌ຂຶ້ນວ່າ...

" ພວກເຮົາຮັບລ່ວງໜ້າແລ້ວວ່າ ພູມີ ນໍ່ສວັຣຄ໌ໄດ້ທໍາການຕິດຕໍ່ກັບຝຣັ່ງເສສ ເອົ້ໄວ້ແລ້ວຈຶ່ງມາພົບພວກເຮົ້ າ ກໍເພາະເຫຕຸນີ້ວຽຕນິນຫ໌ຈຶ່ງບ່ຍອມມອບອາວຸທ ໃຫ້ແກ່ພູມີ ນໍ່ສວັຣຄ໌ ແຕ່ຂອບການຮ໌ວຽຕນິນຫ໌ຍັ້ງພ້ອມທີ່ຈະຊ່ວຽພວກສເດັຈທຸກ ຢ່າງ ເພື່ອທໍາການຕໍ່ສູ້ກັບສັຕຣູຕ໊ວດຽວກັນ ເພື່ອໃຫ້ລາວໄດ້ມີເອກຣາຊສົມບູຣນ໌ ຈຶ່ງຂໍທູລເຊີນສເດັຈທັ້ງສອງໃຫ້ໄປຮ່ວມປະຊຸມຫາຣືກັນໃນເຂຕຂອງວຽຕນິນຫ໌ ".

(08) ສຸພານຸວົ່ງສ໌ກົ້ມໜ້າໄປຫາໂຣ່ຈິມິນຫ໌....

ສຸພານຸວົ່ງສ໌ປະນາມການປະພຶຕຂອງພູມີ ນໍ່ສວັຣຄ໌ວ່າ ໄປຍອມຈໍານອນ ແກ່ສັຕຣູ ເມື່ອນາຽຫວອຽນຮົ່ງກັບມາເຖິງເມືອງໄທຍແລ້ວກໍຮີບຟ້າວເຊີນເອົ້າເຈົ້ າ ເພັຊຣາຊ ຣັຕນະວົ່ງສາກັບສຸພານຸວົ່ງສ໌ໄປປຶກສາກັນທັນທີ ໃນການສົນທະນາກັນນັ້ນ ນາຍຫວອຽນຮົ່ງຍັ້ງຍົກເອົ້າຄໍາໝັ້ນສັນຍາຂອງ ໂຣຈິມິນຫ໌ມາເລ່ົ້າຫລໍາຄືນ ໃຫ້ຟັ້ງ ອີກວ່າ ວຽຕນິນຫ໌ຈະໃຫ້ຄວາມຊ່ວຽເຫຼ ືອຢ່າງເຕັມທີ່ແກ່ຂອບການຮ໌ລາວອິສຣະ ເພື່ອຂັບໄລ່ກໍາລັງຝຣັ່ງເສສອອກຈາກແຜ່ນດິນລາວ ".

ສຸພານຸວົ່ງສ໌ກໍາລັງສນຍ໌ເສັຽເພື່ອນຮ່ວມຮົບໄປເທ່ ືອລະຫຼ ານ ໆຄົນແຕ່ສິ່ງທີ່ຍັ ງ ຫຼົ ງເຫຼ ືອຢ່ ູ ພ ໍ ຈະໃຫ້ ຄ ໍ າປຶ ກ ສ າ ກ ໍ ຄ ື ເ ຈ ົ ້ າ ເ ພ ັ ຊ ຣ າ ຊ ຜ ູ ້ ອ ານ ຽ ເ ທ ່ ໍ ານ ັ ້ ນ ອ າ ສ ັ ຍ ຕ ໍ ່ ອ ຸ ນ ຊ ຸ ນ ະ ນ ິ

ກອຣ ເພື່ອນຕາຍທີ່ເຄີຽຣ່ວມສນາມຣົບທ່າແຂກມາດ້ວຍກັນນັ້ນ ກໍກັບໄປເອົາເອກ ຣາຊເຄື່ອງເມືອງຂຶ້ນທີ່ວຽງຈັນຫມົ໌ພ້ອມດຽວກັນກັບສຸວັນນາພູມາແລ້ວ.

ເຈົ້າເພັຊຣາຊ ຣັຕນະວົງສາຜູ້ອ້າຽແນະນໍາວ່າ ໃຫ້ສຸພານຸວົງສ໌ໄປພົບໂຣ ຈີມິນຫ໌ດ້ວຽຕົນເອງກ່ອນ ສ່ວນເຈົ້າເພັຊຣາຊອ້າຍນັ້ນຈະຂໍຢູ່ໃນບ້ານກອກອີກຕໍ່ໄປ ແລ້ວເຈົ້າສຸພານຸວົງສ໌ ພ້ອມພັຄພວກທີ່ເຫຼືອຢູ່ບໍ່ເທົ່າໃດຄົນ ກໍເດີນທາງຈາກແຜ່ນດິນ ໄທຍໃນວັນທີ 16 ພຶສຈິກາ 1949 ໂດຽຜ່ານປະຄອບຄົວຂອງພວກຕົນທັງໝົດໄວ້ ທີ່ບ້ານກອກ ສຸພານຸວົງສ໌ບອກກັບເຈົ້າເພັຊຣາຊຜູ້ອ້າຽກ່ອນອອກເດີນທາງວ່າ ຕາບ ໃດທີ່ຝຣັ່ງເສສບໍ່ຍອມມອບເອກຣາຊແບບສົມບູຣນ໌ໃຫ້ແກ່ລາວ ຈະທໍາການຕໍ່ສູ້ຕໍ່ໄປ ຖ້າອີງເອົາຕາມບົດບັນທຶກຄວາມຊົງຈໍາທີ່ເປັນພາສາວຽຕນາມຂອງນາຽຫວ່ວຽນທີ ກູຍ ຜູ້ທໍາໜ້າທີ່ນາຽໝວດທຫາຣວຽຕມິນຫ໌ຢູ່ກັບສຸພານຸວົງສ໌ທີ່ບ້ານກອກເລົ່າວ່າ..

ພວກເຮົາພາເຈົ້າສຸພານຸວົງສ໌ອອກຈາກບ້ານກອກມາເຖິງແຄມນ້ໍາຂອງ ໃນຝັ່ງ ໄທຽຕອນກາງຄືນ ແລ້ວແວ່ພັກນອນໃນເຮືອນຂອງເຈົ້າສຸຂ ວົງສ໌ສັກດ໌ທີ່ບ້ານບຶງ ກາຣ ຈົນເຖິງຄືນວັນທີ 18 ພຶສຈິກາ ຈຶ່ງໄດ້ພາກັນຂີ່ເຮືອພາຽຂ້າມນ້ໍາຂອງໄປຍັງ ຝັ່ງລາວໃນເຂຕບ້ານບຸ່ງກວ້າງເມືອງບໍຣິຄັນ ໂດຽໃຊ້ຄໍາຣະຫັສຕິດຕໍ່ກັນດ້ວຽພາສາ ຝຣັ່ງເສສວ່າ **O-A** ".

ນາຽຫວ່ວຽນທີກູຽຂຽນຣໍາພັນເຖິງຄວາມຫຼັງຂອງຕົນຕໍ່ໄປວ່າ...

"ໃນຄືນທີ່ຂ້ອຽຢູ່ກັບເຈົ້າສຸພານຸວົງສ໌ ມັນໄດ້ເຮັດໃຫ້ຂ້ອຽຄິດຫວນຍ້ອນໄປເຖິງ ສນາມຣົບທ່າແຂກຕອນສູ້ຣົບຕ້ານກໍາລັງຝຣັ່ງເສສ ຂ້ອຽເອງສັ່ງກັດຢູ່ໃນກໍາລັງປະ ສົມລາວອິສຣະ-ວຽຕມິນຫ໌ ແຕ່ບັດນີ້ພັດໄດ້ມາເປັນຜູ້ປ້ອງກັນໃຫ້ສເດັຈໃນການເດີນ ທາງໄປຍັງເຂຕອິສຣະຂອງວຽຕນາມເພື່ອພົບກັບໂຣຈີມິນຫ໌ ກຽຣຕ໌ອັນນີ້ຂ້ອຽຄົງ ຫາບໍ່ໄດ້ອີກແລ້ວໃນຊີວິຕຂອງຂ້ອຽ ".

ນາຽຫວ່ວຽນທີກູຽຍັງເອີ້ນການເດີນທາງຂອງສຸພານຸວົງສ໌ເທື່ອນີ້ວ່າ ແມ່ນ ການເດີນທາງຄັ້ງປະວັຕິສາສຕຣ໌ ແລ້ວເລົ່າຕໍ່ວ່າ...

"ສຸພານຸວົງສ໌ປົນຂຶ້ນຂັ້ນພູຊັນດ້ວຽການໃຊ້ໄມ້ເທົ້າທີ່ເກັບເອົາຕາມທາງ ຕົນຫັວ ສອງໃສ່ເກີບໂບກສີດໍາເກົ່າໆແລະໃຫ່ຍກວ່າຕົນ ເປັນກຕຸໃຫ້ເກີບກັດຕົນຈົນໂພວ ແດງໄປໝົດ ແຕ່ສຸພານຸວົງສ໌ບໍ່ຍອມຈົ່ມຈາຫັວໆທີ່ເຈັບປວດ ແລະກ້າວເດີນຕໍ່ໄປ ເຣື່ອຽໆ ສຸພານຸວົງສ໌ມົ່ນພລາດຕົນປຽກຈົນເກືອບລົ້ມຫຼາຽເທື່ອ ແຕ່ຍັງຫັນໜ້າກັບ ຄືນມາກ່າວກັບຕົນຜູ້ຢ່າງຕາມຫຼັງໄກ້ໆວ່າ ຖ້າວ່າມີໄມ້ຣາວໃຫ້ຈັບກໍຄົງດີ. ເວລາ ພັກຜ່ອນສຸພານຸວົງສ໌ຈະຟັງວິທຍຸທີ່ຖືຕິດຕົວມາ ຫລືກໍທໍາການຈັດແຈງຖົງເປ້ທີ່ເຕັ້ມ

ແຕ່ເອກສາຣ ເມື່ອຂອ້ຍຂໍໃຫ້ສຸພານຸວົງສ໌ແບ່ງເຄື່ອງໃນຖົງອອກໃຫ້ຜູ້ອື່ນຖືຊ່ອ້ຽ ກໍ ປະຕິເສທ ແລະຕອບຢັ້ນແຢ້ນວ່າ " ນ້ຳໜັກຂນາດນີ້ພໍດີກັບແຮງຂອ້ຽເອງແລ້ວ ".

ເຈົ້າສຸພານຸວົງສ໌ພ້ອມຜູ້ຕິດຕາມ ໄດ້ພາກັນລັກລອບເດີນລັດຜູຜາປ່າເຂົ້າຜ່ານ ທ່ຽນາກາຽ-ຄຳເກີດ ໂດຍໄດ້ຮັບການອາຮັກສ໌ຂາຈາກກຳລັງທຫາຣລາວອິສຣະ ທ້ອງຖິ່ນໜຶ່ງກອງຮ້ອຍຂອງທ່ານບຸນຍົງ ວໍຣະສາຣ ນຳສິ່ງຈົນເຖິງສາຽພູທລວງ ອັນເປັນສາຽແດນລາວ-ວຽຕ, ຜ່ານເຂົ້າຊ່ອງແຄບມູຍາ ມຸ່ງໜ້າລົງສູ່ລຳນ້ຳເອວ ແລ້ວ ໂດຍສາຣທາງເຮືອພາຍອີກຕໍ່ໜຶ່ງ ຈຶ່ງຂຶ້ນຝັ່ງເດີນທາງເຂົ້າເຂຕເມືອງວິນຫ໌ ເພື່ອໄປໃຫ້ເຖິງ ໂດເລື່ອງອັນເປັນທີ່ຕັ້ງລັບກຣົມທີ 81 ຂອງພວກວຽຕມິນຫ໌ ເມື່ອໄດ້ ຢຽບດິນວຽຕນາມເໜືອແລ້ວ ສຸພານຸວົງສ໌ກໍ່ສິ້ນກັງວົນວ່າຕົນຈະຫລົງທາງໄປອີກ ຽວດເສັ້ນທາງເດີນສຸພານຸວົງສ໌ຄົງຄິດສເມືອ່ າ ຫາກພວກວຽຕມິນຫ໌ສາມາຣຖ໌ປົດ ປ່ອ້ຽຊາຕຂອງເຂົ້າໄດ້ ດ້ວ້ຽເຫຕຸໃດປະຊາຊົນລາວຈຶ່ງຈະຂັບໄລ່ຝຣັ່ງເສສໃຫ້ໜີ ອອກຈາກດິນລາວບ່ໄດ້ ເພາະສນັ້ນສຸພານຸວົງສ໌ຈຶ່ງຝາກຄວາມຫວັງໄວ້ກັບຂບວນ ການ ນ ວ ຽ ຕ ມິ ນ ຫ ໌ ໃ ຫ ້ ເ ປ ັ ນ ທ ີ ່ ເ ພ ິ ່ ງ ສ ຸ ດ ທ ້ າ ຽ ຂ ອ ງ ຕ ົ ນ ເ ພ ື ່ ອ ຂ ໍ ຄ ວ າ ມ ຊ ວ ຍ ເ ຫ ຼ ື ອ ໃ ຫ ້ ຊ ວ ຍ ປ ະ ກ ອ ບ ອ າ ວ ຸ ທ ແ ກ ່ ກ ອ ງ ກ ຳ ລ ັ ງ ລ າ ວ ອ ິ ສ ຣ ະ ດ ັ ່ ງ ທ ີ ່ ນ າ ຽ ທ ວ ວ ຽ ນ ຮ ຶ ງ ໄ ດ ້ ໃ ຫ ້ ຄ ຳ ໝ ັ ້ ນ ສ ັ ນ ຍ າ ເ ອ ົ າ ໄ ວ ້ ແ ລ ້ ວ ກ ວ ່ ນ ໜ ້ າ ນ ີ ້ ໂ ດ ຽ ບ ່ ເ ຄ ີ ຽ ດ ຄ ິ ດ ສ ົ ງ ສ ັ ຍ ວ ່ າ ຈ ະ ມ ີ ເ ຫ ຕ ຸ ກ າ ຣ ນ ์ ອ ັ ນ ໃ ດ ເ ກ ີ ດ ຂ ຶ ້ ນ ກ ັ ບ ຊ າ ຕ ລ າ ວ ໃ ນ ພ າ ຽ ຫ ຼ ັ ງ ດ ັ ່ ງ ດ ຽ ວ ກ ັ ບ ທ ີ ່ ພ ູ ມ ີ ນ ່ ໍ ສ ວ ັ ຣ ຄ ์ ເ ຄ ີ ຽ ດ ຄ ິ ດ ເ ອ ົ າ ໄ ວ ້ ຈ ົ ນ ໃ ນ ข ั ้ น ป า ย ຫ ລ າ ຍ ສ ິ ບ ປ ີ ອ ີ ກ ຕ ่ ໍ ມ າ ສ ຸ ພ ານ ຸ ວ ົ ງ ສ ์ ຕ ້ ອ ງ ລ ຳ ຄ ວ ຣ ເ ຖ ິ ງ ຄ ວ າ ມ ຜ ິ ດ ພ າ ດ ຂ ອ ງ ຕ ົ ນ ກ ່ ອ ນ ສ ິ ້ ນ ລ ົ ມ ຫ າ ຍ ໃ ຈ ດ ັ ່ ງ ທ ່ ານ ຈ ະ ໄ ດ ້ ອ ່ ານ ໃ ນ ຕ ອ ນ ຕ ່ ໍ ໄ ປ .

ພວກຜູ້ນຳອິສຣະພຽງບ່ເທ່ຳໃດຄົນທີ່ຕິດຕາມສຸພານຸວົງສ໌ໄປໃນເທ່ືອນັ້ນ ກໍມີຄື ເຈົ້າສຸທທີສາຣ ອະນຸວົງສ໌ ຊຶ່ງຮູ້ກັນທ່ົວໄປວ່າເປັນເຫລັນຫລ້າຂອງເຈົ້າອະນຸວົງສ໌ ພູມີ ວົງວິຈິຕ+ຄຳຜາຽ ບຸບຜາ+ມຫາຄຳພັນຫ໌ ພິຣະຈິຕ ແລະອື່ນໆອີກຈຳນວນ ໜຶ່ງ ແຕ່ກ່ອນເດີນທາງໄປເຖິງສຳນັກງານລາວຕ່ໍຕ້ານຜາຄຕາເວັນອອກຂອງໝູ ຮັກ ພູມສວັຣຄ໌ ຊຶ່ງຕອນນ້ໄີ ດ້ຖືກຍ້າຍຈາກໂດນດ່ຽນ-ກອນກອາງເລິກເຂ້ົາໄປໃນ ດິນວຽຕນາມເໜືອເຖິງແຂວງ **THAÏ NGUYEN** ຫຼັງຈາກທ່ີພູມີ ນ່ໍສວັຣຄ໌ທຳແສບ ພາທຫາຣຂອງຕົນໜ້ກັບຄືນມາຍັງລາວແລ້ວນັ້ນ ກໍປາກົຖວ່າເຈ້ົາສຸທທີສາຣ ອະນຸ ວົງສ໌ ເຫລັນຫລ້າຂອງເຈ້ົາອະນຸອະນຸວົງສ໌ກັບພັຄພວກຈຳນວນໜຶ່ງໄດ້ພາກັນເອົາ ຕ໋ວຫລ໊ບໜ້ກັບຄືນໄປຍັງປະເທສໄທຍ ໄລ່ຮວມເວລາການເດີນທາງຈາກເມືອງ ໄທຍຂອງສຸພານຸວົງສ໌-ຮອດວຽຕນາມພາຄເໜືອກ໋ 45 ວັນພໍດີ.

ພໍສຸພານຸວົງສ໌ມາເຖິງສຳນັກງານຕ່ໍຕ້ານຂອງ ໝູຮັກ ພູມສວັຣຄ໌ພຽງຊ່ໍ ໂມງ

ດຽວ ກໍມີຄົນຂອງວຽຕມິນຫຂັບຮົຖມາຮັບເອົາຕົວອອກໄປທັນທີ ໂດຍບອກສັ້ນໆວ່າ ໂຮຈິມິນຫ໌ຕ້ອງການພົບສຸພານຸວົງສ໌ເປັນການດວ່ນ ແລ້ວຫລັງນັ້ນກໍບໍ່ມີໃຜໄດ້ເຫັນ ສຸພານຸວົງສ໌ອີກ ແລະບໍ່ມີເພື່ອນລາວອິສຣະຄົນໃດລວ່ງຮູ້ວ່າ ສຸພານຸວົງສ໌ໄປໃສ?ຢູ່ ກັບໃຜ?ແລະກຳລັງເຮັດຫຍັງຢູ່? ແຕ່ສິ່ງທີ່ແນ່ນອນກໍຄືສຸພານຸວົງສ໌ຍັງຈະກັບມາອີກ ເພາະພວກວຽຕມິນຫ໌ໄດ້ສັ່ງໃຫ້ປຸກເຮືອນຕຽມໄວ້ໃຫ້ສຸພານຸວົງສ໌ເປັນພິເສສແລ້ວ.

ແລະແລ້ວຈົນເຖິງກາງເດືອນສິງຫາ 1950 ຄືປະມານອີກ 8 ເດືອນຕໍ່ມາ ກໍ ຈ່ຶງເຫັນສຸພານຸວົງສ໌ນັ່ງຮົຖຈີບຄັນໃໝ່ອ່ຽມ ແຕ່ງຕົວເຕັມຍົສດ້ວຽເຄື່ອງແບບລາວ ອິສຣະກັບມາ ແຕ່ເທື່ອນີ້ບໍ່ແມ່ນສຳນັກງານລາວຕ່ຕ້ານຂອງໝູຮັກ ພູມສວັຣຄ໌ແຕ່ ທີ່ແຂວງຕວຽນກວາງ ໃນພາຄເໜືອສຸດຂອງວຽຕນາມ ຜ໌ລົ້ງຈາກຮົຖກໍມີໜ້າຮ ວຽຕມິນຫທີ່ອກະເປົ໋າເອກສາຮສີດ໋ຳຢ່າງຕາມຫຼັງເຂ້ົ້າໄປໃນເຮືອນນອນ ການກັບ ມາຂອງສຸພານຸວົງສ໌ເທື່ອນີ້ມີກຳລັງໃຈດີ ເພາະຂບວນການຮນ໌ລາວອິສຣະກຳລັງຈະ ຄືນຊີພຂ້ຶ້ນມາໃໝ່ອີກແລ້ວ ລາວອິສຣະທີ່ມາຈາກພາຄຕ່າງໆເຊ່ັ່ນເຂຕເມືອງສ້ົງຫ ຫຼວງນ້ຳທາ+ຈາກເຂຕເມືອງສະ+ເມືອງລອງ+ເມືອງກາງ+ ເມືອງນ້ງ+ ລວ່ງຕ້ນ ສາມໜ່ືນເມືອງເຟືອງ ນອກຈາກນ້ີກໍມາຈາກເຂຕວຽງຈັນຫນ໌+ຄຳມວ່ນ+ສວັຣ ນະເຂຕ+ອັຕະປື+ສາຮະວັນແລະຈຳປາສັກ ໄດ້ຜ່ານັ່ງຮ໌ຄອຍສຸພານຸວົງສ໌ຢູ່.

ມັນຕຣົງກັນກັບວັນທີ 13 ສິງຫາ 1950 ພ໌ດີ ເຖິງເປັນຮະດູຝົນທີ່ກຳລັງຕົກ ໜັກ ແຕ່ກອງປະຊຸມໃຫ່ຽຄ້ັ້ງແຮກຂອງກຸ່ມປະເທສອິນດູຈີນກໍເຣ່ີມຂ້ຶ້ນແລ້ວທີ່ປ່າໄມ້ ນ້ອຍລ້ີລັບແຫ່ງໜ່ຶ້ງຕິດຕີນພູ ທີ່ຢູ່ຄົນລະຝາກຫ່ົ້ງກັບໝູ່ບ້ານຊາວວຽຕນາມ ຊ່ືຟູ ລ່ັນຂອງແຂວງຕວຽນກວາງ (Tuyen Quang) ຢູ່ແຄມແມ່ນ້ຳຊ໊ົງໂລ ຫ່າງ ຈາກແມ່ນ້ຳຊ໊ົງໃຈປະມານ 15 ກລມ. ແລະຢູ່ໄກຈາກເມືອງຕວຽນກວາງເຖິງ 50 ກລມ. ມີຜູ້ຕາງໜ້າສາມປະເທສອິນດູຈີນມາຮ່ວມປະຊຸມຈຳນວນໜ່ຶ້ງ ແຕ່ ມີລາວອິສຣະທີ່ມາຈາກທ່ົ້ວປະເທສຈຳນວນ 150 ຄົນ ຝ່າຍວຽຕມິນຫ໌ໄດ້ສ່ົ້ງນາຍ ຮ່ວ້ງກວກ່ວຽຕ ແລະຄົນສຳຄ້ັນຈາກພ້ັຄຄອມມ໊ວນ໌ິສຕ໌ອິນດູຈີນອີກ 20 ຄົນເຂ້ົ້າຮ່ວມ ແລະມາຈາກພ້ັຄຄອມມ໊ວນ໌ິສຕ໌ຂເມຣອີກ 2 ຄົນ.

ການປະຊຸມກຳໜ໊ົດໃຫ້ແລ້ວເສ້ັຈພາຽໃນສາມວັນ ໂດຽໃນນ້ັນຕ້ອງມີການຄ້ົ້ນ ຄ້ວ້າສັມມະນາເຣ່ືອງການເມືອງ ແລະສພາພການຮ໌ເຄ່ືອນໄຫວຂອງຫ້ົວທ່ົ້ງໃນປະ ເທສແລະນອກປະເທສຕາມແບບສ໊ັບຂອງຄອມມ໊ວນ໌ິສຕ໌ສສມ້ັຍນ້ັນ ໂດຽມີຜູ້ອ່ານ ແລະບ້ັຍຍາຽເອກສາຮໃຫ້ຟ້ັງ ໃນຣາຍການນ້ີເຈ້ົ້າສຸພານຸວົງສ໌ກໍໄດ້ນ໊ຳເອົ້ົາເອກ ສາຮສ໊ັບໃໝ່ອ່ຽມ ກ່ຽວກ໊ັບການກ່ໍ່ຕ້ັ້ງຣ໊ັຖບາລຂອງຂບວນການຮ໌ລາວອິສຣະ

ຂຶ້ນມາບັຣຍາຍຍືດຍາວ ພວກລາວອິສສຣະທີ່ມາຈາກທ່ອປະເທສ ຕົກລົງກັນໄວ້ວ່າ ຫາກມີການປ່ອນບັຕຣ໌ເລືອກຕັ້ງກໍ່ໃຫ້ພາກັນປ່ອນເອົາແຕ່ລາວອິສຣະເກົ່າ ແຕ່ພໍເຖິງ ຕອນບ່າຍຂອງວັນທີ 15 ສິງຫາ ແທນທີ່ຈະມີການເລືອກຕັ້ງຢ່າງປະຊາທິປະຕັຍກໍ ເຫັນເຈົ້າສຸພານຸວົງສ໌ຈົກເອົາເອກສານການແຕ່ງຕັ້ງຄນະຣັຖບາລໃໝ່ ຂອງຂບວນ ການ໌ລາວອິສຣະອອກມາອ່ານຣາຍຊື່ຄນະຣັຖບາລ ແລ້ວປະກາສໃຫ້ກອງປະຊຸມ ຕົບມືລົງມະຕິຮັບເອົາແບບງ່າຍໆ ໂດຍບໍ່ມີພິທີປ່ອນບັຕຣ໌ເລືອກຕັ້ງ.

ໃນບົທບັນທຶກຂອງອິສຣະເກົ່າເຈົ້າຂອງປຶ້ມ "ຊາຍສາມຣະບອບ" ທ່ານບຸນຍົງ ວໍຣະສານ ກັບປຶ້ມຊຸ"16 ປີໃນແດນມັຈຸຣາຊ"ຂອງທ່ານນະຄອຣຄຳ ບຸບຜານຸວົງສ໌ ທີ່ຢູ່ໃນເຫຕຸການ໌ແລະປະສົບການ໌ມາດ້ວຍຕົນເອງ ໄດ້ຂຽນເລົ່າເອົາໄວ້ທີ່ເປັນ ຕາອ່ານຄືກັນວ່າ ເມື່ອເຈົ້າສຸພານຸວົງສ໌ອ່ານເອກສານການແຕ່ງຕັ້ງຄນະຣັຖບາລ ຈົບລົງ ເອກສານັ້ນກໍກາຍເປັນພິສຂຶ້ນມາທັນທີເພາະບໍ່ມີຊື່ຄົນສຳຄັນໆຂອງລາວ ອິສຣະຫລາຍຄົນເຊັ່ນ ສິງຫ໌ກະໂປ ສີໂຄຕຣ໌ຈູນນະມາລີ+ສີຊຸນະ ສີສານ+ເພົ້າ ພົມ ພະຈັນທຣ໌+ເສີມ ມະໂນວົງ+ໂອຄຳ ອະນຸຣັກສ໌+ຕຸລັນ+ໂຊຕ ເພັຊຣາສີ+ ໄຊຍ໌ ເພັຊຣາສີ+ອຸ່ນເຮືອນ ພູນສວັສດ໌+ຄຳໄຕ ສີພັນດອຣ+ຄຳເຜື່ອນ ຕຸນາຣົມນ໌+ບຸນຍ໌ ພຣົ້ມມະຫາຊັຍ ສອນພວກນາຍທຫານຄົນສຳຄັນທີ່ບໍ່ມີຕຳແໜ່ນງກໍຄື ໝູແດງ ຊັຍະສານ ແມ່ນແຕ່ທ່ານພູນ ສີປຣະເສີຖກໍຖືກລືມ ຈຶ່ງເປັນເຫຕຸໃຫ້ເກີດມີສຽງ ວິຈານ໌ກັນຝົດສນັ່ນຫ້ອງປະຊຸມ.

ຄຳເຜື່ອນ ຕຸນາຣົມນ໌ກັບບຸນຍ໌ ພຣົ້ມມະຫາຊັຍ ເຂົ້າຄືອກັນຖາມເຣື່ອງທີ່ສຸ ພານຸວົງສ໌ກັບຄົນອື່ນເອົາສອງຕຳແໜ່ງ ທັງໆທີ່ຍັງມີລາວອິສຣະຄົນສຳຄັນໆຢູ່ ອີກຫລາຍຄົນ ຕ່ຈາກນັ້ນແມ່ນຜູ້ບັນຊາການທຫານຄື ນາຍໝູແດງ ຊັຍະສານ ລຸກຢືນຂຶ້ນຊັກຟອກຖາມເຈົ້າສຸພານຸວົງສ໌ແຮງໆວ່າ...

"ນາຍໄກສອຣ ພຣົ້ມວິຫານຄົນນີ້ແມ່ນໃຜ.? ມາຈາກໃສ.? ບໍ່ປາກົຖໄດ້ ຍິນໄດ້ເຫັນໃນຂບວນການ໌ລາວອິສຣະມາກ່ອນເລີຍ ຜູ້ບໍ່ເຄີຍມີປະສົບການ໌ ທາງທຫານກໍ່ບໍ່ສົມຄວນທີ່ຈະເອົາຕຳແໜ່ງຣັຖມົນຕຣີປ້ອງກັນປະເທສ" ຄຳຖາມຂອງນາຍໝູແດງໄດ້ຮັກສຽງຕົບມືສນັ່ນຫ້ອງປະຊຸມ ແຕ່ໄກສອຣກໍ່ ນັ່ງຟັງຢູ່ເສີຍໆ.

ລາວອິສຣະຄົນຕ່ມາທີ່ລຸກຂຶ້ນແສດງຄວາມຄິດເຫັນຢ່າງປະຊາທິປະໄຕຍ ແລະເຜັດມັນກໍຄືໂຊຕ ເພັຊຣາສີ ໂດຍກ່າວວ່າ...

"ການ໌ແຕ່ງຕັ້ງຣັຖບາລແບບບໍ່ມີການ໌ເລືອກຕັ້ງນນັ້ນ ບໍ່ແມ່ນປະຊາທິປະໄຕຍ

ຄືເອກສານທີ່ກ່າວໄວ້ ການແຕ່ງຕົນຜູ້ດຽວຮັບ 2-3 ຕຳແໜ່ງນັ້ນກໍບໍ່ຖືກຕ້ອງໃນ ເມື່ອຍັງລາວອີສຣະອີກຫຼາຍຄົນທີ່ເໝາະສົມມາເປັນຣັຖມົນຕຣີ ວິທີດັ່ງກ່າວແມ່ນ ຜດິຈການ ສນັ້ນເມື່ອສຸພານຸວົງສ໌ເອົາຕຳແໜ່ງປະທານແລ້ວກໍບໍ່ຄວຣເປັນນາຍົກ" ສຳນວນສເນີແນະແກມຕຳນິທີ່ຍືດຍາວຂອງໂຊຕ ເພັຊຣາສີນັ້ນ ເປັນຕາຟັງດີ ແຕ່ ມັນຜັດຈັງໄຮໄປແກະຂີ້ຫູຂອງຄົນທີ່ຢູ່ຫັ້ງສາກຂອງແຜນການ ທັນທີກໍມີສຽງອຶງ ຄະນຶງໂຈທຈາກັນຝົດສນັ່ນຫ້ອງປະຊຸມ ສຸພານຸວົງສ໌ເປັນເດືອດເປັນແຄ້ນກວ່າໃຜໆ ໄດ້ລຸກຂຶ້ນຢືນ ແລ້ວກໍຮ້ອງສຽງດັງໆຕອບໄປວ່າ....

"ກອງປະຊຸມຕົບມືລົງມະຕິຮັບເອົາແລ້ວນ່ໆ ຢຸດດຽວນີ້ ຢ່າເວົ້າຄືນມາອີກ!" ສຽງສົນທະນາອຸ້ນອາຽເມື່ອກີ້ນີ້ຫາຽງຽບໄປທັນທີ ພວກເພື່ອນໃນຂບວນການ ໄດ້ພົບເຫັນເປັນຄັ້ງແຣກວ່າສຸພານຸວົງສ໌ກຳລັງອວດອຳນາຈຂອງຕົນ ທັ້ງໆທີ່ຫາກໍ ມາໃໝ່ ມັນກໍທັມະດາດີທີ່ພວກເພື່ອນລາວອີສຣະພາກັນຄິດໆວ່າການສ້າງຕັ້ງຣັຖ ບາລໜຶ່ງນັ້ນຄວຣໃຫ້ມີການອອກສຽງແບບປະຊາທິປະໄຕຍ ເພາະພວກເພື່ອນໆບໍ ທັນຮູ້ວ່າປະຊາທິປະໄຕຍໃນຣັຖບາລໃຫ່ມລາວອີສຣະນັ້ນແປກຕ່າງກັນກັບຣະບົບປະ ຊາທິປະໄຕຍທີ່ພວກຕົນຄຸ້ນເຄີຍມາກອ່ນ ກໍເປັນທີ່ແນ່ນອນວ່າຕ່ຳຈາກນີ້ໄປພວກລາວ ອີສຣະຕ້ອງໄດ້ຮຽນລັທທິຄອມມິວນິສມ໌ຕື່ມອີກເປັນການໃຫ່ຍ.

ບັນຊີຣາຽຊື່ພ້ອມຕຳແໜ່ງທີ່ສຸພານຸວົງສ໌ອ່ານຜ່ານໄປເມື່ອກີ້ນີ້ນັ້ນ ຕົວສຸພາ ນຸວົງສ໌ເອງເປັນຫັ້ວນາຍົກຣັຖມົນຕຣີ+ປະທານແນວລາວອີສຣະ ໃຫ້ພູມີ ວົງສ໌ວີຈິຕ ເປັນຫັ້ວຄນະປະຈຳສູນຍ໌ກາງ+ຮອງນາຍົກ+ແລະຣັຖມົນຕຣີມຫາດໄທຍ ໃຫ້ໝູຮັກ ພູມສວັຣຄ໌ ເປັນຫັ້ວຄນະປະຈຳສູນຍ໌ກາງ+ຣັຖມົນຕຣີວ່າການກະຊວງເສຖກິຈ ໄກ ສອຣ ພຣົຫົມວິຫານເປັນຣັຖມົນຕຣີປ້ອງກັນປະເທສ+ຄນະປະຈຳສູນຍ໌ກາງ ແຕ່ໃນ ປັ້ນທ້ຽນໂດຍລຳມ ນາວຕົວຢ່າງ ກ່ຽວກັບພາຣະກິຈປະຕິວັຕຂອງໄກສອຣນັ້ນເວົ້າ ວ່າ ໄກສອຣໄດ້ເປັນຜູ້ບັນຊາການທຫານສູງສຸດຕື່ມອີກ ເຈົ້າສຸຂ ວົງສັກດ໌ເປັນຣັຖ ມົນຕຣີວ່າການກະຊວງສຶກສາ ແລະຄນະປະຈຳສູນຍ໌ກາງ ສ່ວນຜູ້ຕາງໜ້າເຜົ່າ ລາວສູງແມ່ນໄພດ່າງ ລໍເບັຣຽຢາວ ແລະຕາງໜ້າຊົນເຜົ່າລາວເທິງແມ່ນ ສີຫົນ ກົມມາດຳ ຫັ້ງສອງເປັນຣັຖມົນຕຣີບ່ໍມີກະຊວງສັງກັດ ຫາກກະຊວງໃດຕ້ອງການກໍ ເອີ້ນເອົາໄປໃຊ້ຕາມສດວກ ສຽງວິຈານຍັງຝົດສນັ່ນຫ້ອງຢູ່ຕໍ່ນ່ໆ ເຮັດໃຫ້ພໍ້ລ້ຳປົນ ເຖ່ືອນໝູຮັກ ພູມສວັຣຄ໌ຕັດສິນໃຈຢ່າງອອກໄປຈັບເອົາໄມໂຄຣໂຟນ ແລ້ວປະກາສ ເສັຽເອງວ່າ....

"ມະຕິໄດ້ຜ່ານໄປແລ້ວ ຈ່ຶງພາກັນຕົບມືຮັບເອົາຄນະຣັຖບາລໃໝ່ອີກ"

ແຕ່ສຽຕົບມືເທື່ອໃໝ ນີ້ມັນຄອ່ຽກວ່າທີ່ຜ່ານມາ ເພາະເຂົາຕົບດວ້ຍຄວາມຈຳເປັນ ສນັ້ນເພື່ອຕັດບັຣຫາທັ້ງຫລາຍ ນາຍໝູຣັກ ພູມສວັຣຄ໌ຈຶ່ງຣຮ້ອງຂໍໃຫ້ສຸພານຸວົງສ໌ຣີບ ຟ້າວປະກາສປິດກອງປະຊຸມເສັຽທັນທີ ໃນເຫຕຸການ໌ນີ້ກ໋ອາຈເປັນໄປໄດ້ທີ່ໂຊຕ ເພັຊ ຣາສີ ບ່ຄອ່ຽພໃຈເພາະຕົນເອງບ່ໄດ້ເປັນຣັຖມົນຕຣີ ຄນະຣັຖບາລທີ່ມີຜູ້ນຳພຽງ 5 ຄົນເອົາທຸກຕຳແໜ່ງນັ້ນ ມັນເຣັດໃຫ້ສົງສັຍຢູ່.

ພວກສມາຊິກຂາປະຊຸມກັບໄປໝົດແລ້ວ ຍັງເຫຼືອແຕ່ພວກທີ່ຖືກເລືອກໃຫ້ຢູ່ ປະຈຳສຳນັກຣັຖບາລ ເພື່ອຣຽມການ໌ເມືອງແນວໃໝ່ຕ່ໍໄປກອ່ນຖືກສົ່ງລົງສນາມ ແຕ່ສຸພານຸວົງສ໌ຍັງບ່ຍອມລືມເຣື່ອງທີ່ໂຊຕ ເພັຊ ຣາສີກ່າວອຸທອຣໃນກອງປະຊຸມ ຈຶ່ງ ທັນມາຄິດບັຣຊີກັບຜູ້ກ່ຽວ ໂດຍອາສັຍອຳນາຈທີ່ຕົນມີອອກຄຳສັ່ງເປັນທາງການ ອັປ ເປຫ໌ໄລ ໂຊຕ ເພັຊ ຣາສີ ໃຫ້ໜີອອກຈາກສູນ໌ກາງໃນບ່ເທ່ົາໃດວັນອີກຕ່ໍມາ ຈົນ ໂຊຕ ເພັຊ ຣາສີ ຕ້ອງຫອບເມັຽແລະລູກນ້ອ ຽຂອງຕົນກົ້ມໜ້າພາ ຽນ້ຳຕາໜີໄປຍັງ ຖິ່ນທີ່ສຸພານຸວົງສ໌ກຳໜົດໃຫ້ດວ້ຍຄວາມອົ່ມອຶ່ນໃຈ ເພາະຈຳຕ້ອງໄປຫາກິນຕາມ ມີຕາມເກີດທີ່ໝູ່ບ້ານນ້ອ ຽໆແຫ່ງໜຶ່ງໃນແຂວງທັນຫ໌ວຂອງວ ອ ຽຕນາມເໜືອ ແລະ ຈົນເວລາຜ່ານໄປເກືອບ 4 ປີ ໂຊຕ ເພັຊ ຣາສີຈຶ່ງຖືກເອີ້ນໃຫ້ກັບເຂ້ົາມາຍັງເຂຕເຕ້ົາ ໂຮມສອງແຂວງຊ ຳເໜືອ-ຜົ້ງສາລີ ຫລັງຈາກສົງຄາມອິນດູຈີນໄດ້ສິ້ນສຸດລົງແລ້ວ ໃນຊ ວ່ງປີ ຄສ.1954 ນັບວ່າເປັນການ໌ລົງໂທສທີ່ຮຸນແຣງເພື່ອປະກາສກ໋ກໃຫ້ລາວ ອິສຣະຄົນອື່ນເຂ້ົາໃຈໄວ ວ່າ ຫາກຣັກທີ່ຈະເປັນຄອມມິວນິສ ຕ໌ແລ້ວຕ້ອງປະຕິບັຕມະ ຕິຄຳສັ່ງຢ່າງດຽວ ໂຊຕ ເພັຊ ຣາສີຖືກແຕ່ງຕັ້ງໃຫ້ນ ຳເອົາທຫາຣລາວອິສຣະຈ ຳ ນວນໜຶ່ງກອງຣຮ້ອ ຽເຂ້ົາມາປະຈ ຳຢູ່ວ ຽງຈັນທນ໌ ໃນສມັຍການ໌ຮວມລາວຄັ້ງແຣກ ເມື່ອປີ ຄສ.1957 ຢູ່ທີ່ເຮືອນກ໋ຊັ້ນດຽວໄມ້ກັບຕລາດເຊ້ົາຂອງເມືອງວ ຽງຈັນທນ໌.

ເຫຕຸຜົລທີ່ ໂຊຕ ເພັຊ ຣາສີກ່າວຂຶ້ນມານັ້ນກ໋ມີນ ້ຳໜັກດີໃນເວທີຂອງຄວາມຜ໌ດ ແລະປະສົບການ໌ຂອງໄກສອ ຣ ພ ຣົໜ໌ມວິຫານ ແຕ່ຢູ່ໃນວັຕຕະຈັກ ຣ໌ແວດວົງສ໌ ຂອງການ໌ເມືອງອັນຫຍຸ້ງໆສັບສົນໃນ ຣະບອບຜ ດັຈາການ໌ນັ້ນ ມັນມັກແນມເຫັນຖືກ ກາຍເປັນຜ ດໄດ້ງ່າຍດາຍ ຫລາຍອັນທີ່ມັນເປັນຂອງຈິງກັບຊ ງກັນທ ວ້ງມັນວ່າເປັນ ຂອງປອມກ ຳມາກມາຍ ເພື່ອນລາວອິສຣະຫລາຍຄົນພາກັນວິຈານ ວ ່ວ່າ ສຸພານຸວົງສ໌ ນັ້ນເຫັນແກ່ຕົວ ແລະຫລົ້ນພົ້ນພວກຫລືກ ຳລັງຖືກອິທທິພົນຈາກຄົນອື່ນກົດດັນໃຫ້ປະ ປະຕິບັຕຕາມຄຳສັ່ງນັ້ນໆ ທັ ງໆທີ່ຕົນເອງກ ຣູ້ວ່າໄກສອນ ພ ຣົໜ໌ມວິຫານ ບ່ເຄີຽໄດ້ ເປັນນັກ ຣິບໃນກຸ່ມຂອງລາວອິສຣະມາກ ອ່ນເລີຽ ສຸພານຸວົງສ໌ກ ອາຈຄັນປາກຢາກ ຕອບພົ້ນພວກຢູ່ເຕັມທ ວ່າ ບ່ແມ່ນຕົນເອງເປັນຜູ້ໃຫ້ຕຳແໜ່ງນີ້ແກ່ໄກສອ ຣ ພ ຣົໜ໌ມວິ

ທາຣ ແຕ່ກໍ່ບໍ່ສາມາຣຖ້ຳປາກເອີ່ຽອອກມາໄດ້.

ທາງສູນຍ໌ກາງພັຄຄອມມິວນິສຕ໌ວຽຕນິນຫ໌ໄດ້ສົ່ງນາຍທະຫຼຽນຈັນກັບນາຍຕຣັນ ວັນຮຶງມາເປັນຄຣູບັຣຍາຍເອກສາຣກາຣເມືອງແກ່ພວກລາວອິສສຣະທີ່ເຫລືອຢູ່ ໃນ ຣາຍກາຣນີ້ກໍເຊັ່ນດຽວກັນ ພວກລາວອິສຣະຜູ້ຮັກຊາຕແທ້ນັ້ນບໍ່ພໍໃຈໃນເອກສາຣທີ່ ຣະບຸເອົ້າໄວ້ວ່າ ໃຫ້ຮັບເອົ້າຣະບອບແລະຍຸທວິທີຂອງຄອມມິວນິສຕ໌ໂຊວຽຕໃນກາຣ ຂັບໄລ່ຝຣັ່ງເສສອອກຈາກອິນດູຈີນ ລາວອິສຣະບໍ່ພໍໃຈທີ່ໃຫ້ກຳລັງທທາຣວຽຕນາມ ເໜືອເຂ້ົ້າໄປປະຈຳຢູ່ໃນດິນລາວ ເມື່ອເອກສາຣເວ້ົ້າເຖິງສາມປະເທສອິນດູ ຈີນ ກາຣຖ້ກຖຽງກັນກໍຣະເບີດຂ້ຶ້ນມາໃໝ່ໃນຫ້ອງຣຽນອີກ ພວກລາວອິສຣະ ພາກັນເວ້ົ້າວ່າ ກຳລັງສາມຊາຕລາວ-ວຽຕ-ຂແມຣ໌ ຈະຕ້ອງເຄົ້າຣ໌ພສິທທ໌ ເສຣີພາພແລະອະທິປະໄຕຍທັ່ງເຂຕນ້ຳແດນດິນຂອງກັນແລະກັນ ເມື່ອຂັບໄລ່ ຝຣັ່ງເສສອອກໄປຈາກອິນດູຈີນໄດ້ແລ້ວ ກໍຕ້ອງກັບຄືນເອ້ົ້າປະເທສໃຜມັນທັນ ທີ ເມື່ອເຣື່ອງມັນເປັນເຊັ່ນນີ້ ໂຣຈິມິນຫ໌ຮີບປ່ຽນແຜນກາຣນ໌ຣຽນໃໝ່ ໂດຍ ເລີກບັຣຍາຍເຣື່ອງລັທທິຄອມມິວນິສ ແຕ່ມາເວ້ົ້າເຣື່ອງທີ່ສດີກາຣປົດປ່ອຍປະ ເທສໃຫ້ພົ້ນຈາກກາຣເປັນທ໊ອເມືອງຂ້ຶ້ນຂອງຝຣັ່ງເສສແທນ ເມື່ອກາຣຣຽນ ກາຣເມືອງສິ້ນສຸດລົງໃນອີກຫ້ົກເດືອນຕໍ່ມາ ວຽຕມິນຫ໌ຈ່ຶ່ງກຳຊັບໃຫ້ພວກນັກ ກາຣເມືອງລາວທີ່ຈະກັບຄືນທ້ອງຖິ່ນຂອງຕົນນັ້ນ ບໍ່ໃຫ້ເຜີຍແຜ່ເຣື່ອງຣະບອບ ຄອມມິວນິສມ໌ເດັດຂາດ ເພາະວຽຕມິນຫ໌ຮູ້ດີວ່າປະຊາຊົນລາວຍັງບໍ່ພ້ອມທີ່ຈະ ຮັບຮູ້ເອົ້າລັທທິນີ້ ມັນແສດງໃຫ້ເຫັນວ່າພວກວຽຕມິນຫ໌ໄດ້ຕັ້ງໃຈຫລອກພວກ ລາວອິສຣະເພື່ອຜົລປໂຍຊນ໌ທາງກາຣເມືອງໄລຍະຍາວຂອງພວກເຂ້ົ້າ ຕັ້ງແຕ່ ຊ່ວງປີ ຄສ.1950 ເປັນຕົ້ນມາ.

ຜູ້ຂຽນໄດ້ຄົ້ນພົບເອກສາຣສຳຄັນທີ່ກ່າວເຖິງຊີວິຕທາງກາຣເມືອງຂອງ ໄກ ສອຣ ພຣົ້ມວິຫາຣວ່າ ແມ່ນແທ້ທີ່ຜູ້ກ່ຽວບໍ່ເຄີຽປ່ອນຕົນເຂ້ົ້າມາຢຽບສນາມເລືອດ ໃນແຜ່ນດິນລາວເໝືອນສຸພານຸວົງສ໌ ແຕ່ໄກສອຣ ພຣົ້ມວິຫາຣໄດ້ເຂ້ົ້າເປັນ ສມາຊິກຂບວນກາຣນ໌ຕໍ້ສູ້ແລະສິທທິ໌ເສຣີພາພປະຊາທິປະໄຕຍຂອງວຽຕມິນຫ໌ ຊຶ່ງ ເປັນແຂນງໜຶ່ງຂອງພັຄຄອມມິວນິສມ໌ອິນດູຈີນ ແຕ່ຕອນທີ່ຜູ້ກ່ຽວຍັງເປັນນັກຣຽນຢູ່ ທີ່ຣາໂນ່ຽໃນຊ່ວງປີ ຄສ.1936-1939 ຊຶ່ງຕອນນັ້ນໄກສອຣມີອາຍຸພຽງ 19 ປີພໍ່ດີ ນອກຈາກນີ້ໄກສອນຍັງເປັນສມາຊິກຂອງຂບວນກາຣນ "ລາວໜຸ່ມກຸ້ຊາຕ" ຮ່ວມກັບ ຄົນລາວທີ່ຣາໂໝ່ຽໃນປີ 1944 ເພື່ອຕ໋ານກາຣປົກຄອງລາວຂອງຝຣັ່ງເສສ ແລະ ໄກສອຣກໍເຣີ່ມຕິດຕໍ່ພົວພັນທ໌ກັບໂຣຈິມິນຫ໌ແລ້ວແຕ່ບັດນັ້ນເປັນຕົ້ນມາ.

ໄກສອນ ພຣົ້ມວິຫານບໍ່ເຄີຍຈັບປືນຍິງກັບຝຣັ່ງ ໃນເຂດແຂວງຮັບຜິດຊອບ ຂອງຣັຖບານຣາຊອານາຈັກຣ໊ລາວ ແຕ່ໝິ່ນາຈາກຣາໂໝ່ຍຈັດຕັ້ງກອງທະຫານ ຊື່ວ່າ "ກອງຣາຊວົງສ" ຂຶ້ນທີ່ບ້ານລາວຮຸ່ງໃນແຂວງຫົວພັນ ເຄື່ອນໄຫວໃນເຂດ ນ້ຳນ້ຳ-ຫາເມືອງຊຽງຄໍ້ ໄດ້ເຂົ້າເປັນສະມາຊິກສຳຮອງຂອງພັຄຄອມມິວນິສ ອິນດູຈີນກ່ອນສຸພານຸວົງສ ກ່ອນພວກລາວອິສຣະອີກຫຼາຍໆຄົນ ເມື່ອວັນທີ 06 ມີກຣາ 1946 ແລະຕໍ່ມາບໍ່ນານກໍໄດ້ຖືກບັຣຈຸໃຫ້ເປັນສມາຊິກຖາວອນຂອງພັຄໃນວັນທີ 28 ກໍຣະກະດາປີດຽວກັນ ສນັ້ນເມື່ອມາສົບທຽບໃສ່ປວັຕກາຣຕໍ່ສູ້ແລະຄວາມໄວ້ເນື້ອ ເຊື່ອໃຈຈາກພວກວຽຕມິນຫ໌ຣະຫວ່າງໄກສອຣກັບສຸພານຸວົງສ໌ແລ້ວ ເຮົາຈະເຫັນໄດ້ ວ່ານັນຄົນລະຊັ້ນແທ້ໆ ສເພາະຕົວສຸພານຸວົງສ໌ເອງແລ້ວ ແມ່ນຖືກຫລອກໃຊ້ຜຽງ ໃຫ້ເປັນສາກບັງໜ້າໃນນາມຕົວແທນປະຊາຊົນລາວທັງປະເທສ ແຕ່ໄກສອຣ ພຣົ້ມວິຫານນັ້ນ ແມ່ນຖືກກຳໜົດໃຫ້ກຳອຳນາຈໃນປະເທສລາວໃນອະນາຄົຕ ແມ່ນວ່າສຸພານຸວົງສ໌ເຄີຍນຳທະຫານລາວອິສຣະຕໍ່ຕ້ານກາຣໂຈມຕີ ຂອງຝຣັ່ງເສສ ຢ່າງໂຊກໂຊນແທບຕາຍມາແລ້ວທີ່ສນາມເລືອດທ່າແຂກ ເມື່ອເດືອນມິນາ 1946 ພຸ້ນກໍຕາມ ແຕ່ສຸພານຸວົງສ໌ໄດ້ຣັບກຽຣຕ໌ຈາກພວກວຽຕມິນຫ໌ນ້ອຽກວ່າ ແລະຊ້ຳ ກວ່າໄກສອນ ພຣົ້ມວິຫານ ເພາະກວ່າສຸພານຸວົງສ໌ຈະຖືກບັຣຈຸເຂົ້າເປັນສມາຊິກ ຖາວອນຂອງພັຄປະຊາຊົນປະຕິວັຕລາວເມື່ອວັນທີ 24 ພຶສຈິກາ 1960 ນັ້ນ ກໍ ຫຼັງຈາກທີ່ສຸພານຸວົງສ໌ລອດຕາຍອອກມາຈາກຄຸກຄອກນ້ຳສມັຍຝຣັ່ງເສສທີ່ໂພນເຄັງ ໃນຕອນຕົ້ນໆຂອງເດືອນມີກຣາປີ 1960 ແລ້ວ ເຮົາຈະເຫັນໄດ້ວ່າໂຮຈິມິນຫ໌ໃຫ້ສຳ ຄັນແກ່ໄກສອຣ ພຣົ້ມວິຫານກ່ອນແລະກວ່າສຸພານຸວົງສ໌ເກືອບ 14 ປີທີດຽວ.

ຫລັງຈາກກອງປະຊຸມວັນທີ 13-15 ສິງຫາ 1950 ແລ້ວ ໄກສອຣ ພຣົ້ມວິ ຫານກໍຖືກວຽຕມິນຫ໌ສ້າງໃຫ້ມີອິທທິພົນທາງທະຫານໂລດທັນທີ ຈຶ່ງໄດ້ເກີດກາຣຂັດ ແຍ່ງກັນຂຶ້ນຣະຫວ່າງກອງທັພລາວອິສຣະກັບທະຫານວຽຕມິນຫ໌ ໃນອີກປະມານ 3 ເດືອນຕໍ່ມາ ຈົນກຳລັງທະຫານກອງພັນທີໜຶ່ງຂອງນາຍພົລພົມມາ ດວງມາ ລາ ເຂົ້າລ້ອມກຣົມພລາທິກາຣຂອງວຽຕມິນຫ໌ທີ່ເມືອງເປີນ ໄກສອຣ ພຣົ້ມ ວິຫານຕ້ອງໄປແກ້ໄຂດ້ວຍຕົນເອງ ກອງບັນຊາກາຣໃຫ່ຍວຽຕມິນຫ໌ແຄ້ນໃຈ ໝັກທີ່ກຳລັງທະຫານຂອງນາຍພົລພົມມາ ດວງມາລາ ບັງອາຈໄຊ້ອາວຸທເຂົ້າ ປິດລ້ອມກຣົມພະລາທິກາຣຂອງຕົນເຊັ່ນນີ້ ແລ້ວແຜນກາຣນ໌ທຳລາຍພວກ ລາວອິສຣະຂອງພວກວຽຕມິນຫ໌ ກໍໄດ້ເຣີ່ມຂຶ້ນແຕ່ບັດນັ້ນເປັນຕົ້ນມາ ໂດຍ ທຳກາຣສັ່ງຍ້າຍຫລືປົດຕຳແໜ່ງນາຍທະຫານລາວອິສຣະຄົນສຳຄັນໆ ແລ້ວກໍ

ຫາເອົາຄົນລາວທີ່ບໍ່ມີຄວາມຮູ້ຫາງຫຫາຣຂຶ້ນມາບັນຊາການແທນ ແລະກອງ ທັພລາວອິສຣະ ກໍຄອ່ຍໆເຣີ່ມມີທີ່ປຶກສາຫາງຫຫານອຣຕມິນຫ໌ມາປະຈຳຢູ່ຕາມ ກອງພັນ+ກອງຣ້ອຍທົ່ວໄປ ເມື່ອຍິ່ງພວກຜຸ້ນຳລາວອິສຣະມີປະຕິກິຣິຍາໂຕ້ ຕອບເທົ່າໃດ ກໍຍິ່ງຖືກພວກອຣຕມິນຫ໌ໃຊ້ຫລາຍວິທີເຂົ້າຂົ່ມຂູ່ດ້ວຍການ "ຕີໃຫ້ ຂນາບ-ບໍ່ຫລາບໃຫ້ຂ້າເສັຍ" ແລ້ວກໍມີການລອບຂ້ານາຍຫຫານລາວອິສຣະທີ່ ຮັກຊາຕຈຳນວນມາກມາຍໃນເວລາຕໍ່ມາ ແຕ່ສຸພານຸວົງສ໌ຖືກອຣຕມິນຫ໌ຫລອກ ວ່າເປັນແຜນການ໌ຂອງພວກCIA ສຸພານຸວົງສ໌ກໍເຊື່ອຫັງໆທີ່ຮູ້ວ່າໃນຖິ່ນນັ້ນບໍ່ ມີສາຍລັບຂອງ CIA ສວ່ນສຸພານຸວົງສ໌ເອງກໍຮູ້ດີວ່າຕົນຖືກພວກອຣຕມິນຫ໌ຕິດ ຕາມຈອບຊຸ້ມຢ່າງບໍ່ຍອມລົດລະ ແຕ່ເມື່ອບາກໜ້າມາເຜິ່ງພາບາຣະມີເຂົ້າ ແລ້ວ ແລະຍິນຍອມຢູ່ພາຍໄຕ້ຣະບອບການ ບໍຣິຫາຣຂອງສຫະພັນຫະຣັຖອິນດູ ຈີນກັບເຂົ້າແລ້ວ ກໍຈຳຕ້ອງກົ້ມໜ້າຍິນຍອມຕໍ່ໄປໂດຍບໍ່ຮູ້ວັນສິ້ນສຸດ.

ການສືບຕໍ່ບົ່ມປູກແນວຄິດຕ້ານຣະບອບສັກດິນາເຊື້ອກະສັຕຣຍ໌ ກໍເຣີ່ມ ຂຶ້ນຢ່າງວອ່ງໄວ ໂດຍໄກສອຣ ພຣົໜົມວິຫາຣແລະໝູຣັກ ພູມສວັຣຄ໌ ທົ່ວອຣຕ ມິນຫ໌ເຊື່ອໃຈໄດ້ນຳເອົາເອກສາຣອັນໃໝ່ມາລ້າງສມອງພວກລາວອິສຣະ ໃຫ້ ເຊື່ອວ່າ ຊົນຊັ້ນກັມມະກອຣນັ້ນເປັນຊົນຊັ້ນທີ່ມີຄວາມເປັນທັມແລະສາມາຣຖ໌ ເປັນຜູ້ນຳໄດ້ ການກ່າວປະນາມຣະບອບສັກດິນາເຣີ່ມປາກົຖໃນເອກສາຣ ນັບ ມື້ຫນັກຂຶ້ນທຸກວັນ ການຄົ້ນຄວ້າເມື້ອໃນເອກສາຣຕາມພຸ່ມໄມ້ໃບດົກ ລ້ວນແຕ່ ຖືກຖຽງກັນເຣື່ອງຣະບອບກະສັຕຣຍ໌ກັນຊວ່າແຊວ ວ່າເປັນຣະບອບທີ່ລ້າຫລັງ ແລະຈຳແນກຊັ້ນຄົນ ທັງຖວ່ງດຶງຄວາມກ້າວຫນ້າຂອງສັງຄົມ.

ເພາະຄວາມຝັກໃຝ່ໃນລັທທິຄອມມິວນິສ໌ຂອງສຸພານຸວົງສ໌ເອງແທ້ໆ ຈຶ່ງ ລືມຄິດເຖິງແຮ້ວກົລລວງຂອງພວກອຣຕມິນຫ໌ທີ່ຫ້າງເອົາໄວ້ "ຍັກຄໍ" ຂອງສຸພາ ນຸວົງສ໌ເອງໃນການຕໍ່ມາອີກຫລາຍສິບປີ ເພື່ອປິດແກ້ວຕາໃສຂອງພວກຄນະ ຜຸ້ນຳແນວລາວອິສຣະທີ່ຮັກຊາຕແທ້ນັ້ນ ພວກອຣຕມິນຫ໌ກໍແກ້ງເອົາໃຈສຸພານຸ ວົງສ໌+ພູມີ ວົງສ໌ວິຈິຕ+ເຈົ້າສຸຂ ວົງສັກດ໌+ພູນ ສີປຣະເສີຖ+ຄຳໄຕ ສີພັນດອນ ແລະອື່ນໆອີກຈຳນວນໜຶ່ງ ໂດຍນຳເອົາເມັຍ+ລູກໆຂອງຄນະລາວອິສຣະດັ່ງ ກ່າວຫນີຈາກຕູບຫຍ້າຄາຝາໄມ້ເຮ້ຍໄປໄວ້ໃນເຮືອນກໍ່ທີ່ຫ່າງໄກ ແລະຈະປອດ ພັຍຈາກການໂຈມຕີຂອງຫຫານຝຣັ່ງເສສ ດວ້ຍການຖະນຸບຳຣຸງໃຫ້ໄດ້ຢູ່ດີ ກິນດີກວ່າພວກລູກເມັຍຂອງລາວອິສຣະອື່ນໆ ຈັດສົ່ງພວກລູກໆໃຫ້ໄດ້ຮຽນ ໜັງ ໃນທຸກໆວັນສຸດສັປດາວອຣຕມິນຫ໌ຈະສົ່ງຣົຖມາຮັບເອົາພ້ອທີ່ຢູ່ແຕ່ຕາມຕູບ

ຫຍ້າຄາປ່າໃຫ້ໄປພັກຜ່ອນຢູ່ນອນກັບຄອບຄົວບໍ່ໄດ້ຂາດ ເປັນພຍາທອີກສນິດ ໜຶ່ງທີ່ສ້າງຄວາມແຕກແຍກທາງແນວຄິດໃຫ້ເພື່ອນລາວອິສຣະຄົນອື່ນ ທີ່ມີແຕ່ ອິສາຣິສຍາຢູ່ພາຍໃນໃຈ ສົງຄາມຈິຕຕະສາສຕ໌ສນິດນີ້ ຂອງວຽຕມິນຫ໌ໄດ້ຜົລ ດີເກີນຄາດໝາຍ ເພາະພວກລາວອິສຣະເຣີ່ມແຕກແຍກກັນເອງແລ້ວ.

ວຽຕມິນຫ໌ພຽຣສ້າງຊື່ສຽງ ໃຫ້ໄກສອຣ ພຣົຫ໌ມວິຫາຣຢູ່ນານເຖິງ 5 ປີ ຈຶ່ງມີແຜນການອັນໃໝ່ອອກມາ ໃຫ້ແຍກຕົວຈາກພັລລອມມີວນິສ໌ອິນດູຈີນ ປ່ຽນເປັນ"ພັລປະຊາຊົນປະຕິວັຕລາວ" ເພື່ອຊີ້ຄວຂບວນການ໌ລາວອິສຣະ ໂດຍໄກສອຣ ພຣົຫ໌ມວິຫາຣ ເປັນເລຂາທິການໃຫ່ຍໃນວັນທີ 22 ມີນາ 1955 ອັນມີໝູ່ຣັກ ພູມສວັຣ+ຄຳໄຕ ສີພັນ+ດອຣ+ເສີມ ມະໂນວຽງເປັນຜູ້ສນັບສນູນ ຢູ່ຄຽງຂ້າງ ຂັ້ນແຣກມີສມາຊິກເກັບເທ່ຍກີກໜ້ງສີຈຳນວນບໍ່ເຖິງ 40 ຄົນຊ້ຳ ໄກສອຣ ພຣົຫ໌ມວິຫາຣໄດ້ຫລັກຕາສຸພານຸວົງສ໌ ຫາລັກຈັດປະຊຸມລັບຂຶ້ນຢູ່ຕາມ ເຂຕເມືອງໂສ້ຍໃນແຂວງຫົວພັນ ແຕ່ເມື່ອຄວາມລັບແຕກກໍ່ຍິ່ງເກີດຄວາມ ຂັດແຍ່ງກັບລາວອິສຣະຍິ່ງຂຶ້ນ ມີນາຍທຫາຣລາວອິສຣະຈຳນວນໜ້ງໜີໄປຢູ່ ໃນພັລໃໝ່ນີ້ ເວລາມີການຊຸມປະໄກສອຣ ພຣົຫ໌ມວິຫາຣກໍ່ສ່ັງໃຫ້ຕັດຄຳຂວັນ ຂອງລາວອິສຣະທ່ີວ່າ "ນ້ຳໃຈ 12 ຕຸລາໝັ້ນຢືນ"ອອກຖິ້ມ ຢູ່ຕາມເອກສາຣກໍ່ບໍ່ ໃຫ້ມີ ວຽຕມິນຫ໌ສ່ັງເຜົ້າເອກສາຣສຳຄັນຂອງຂບວນການ໌ລາວອິສຣະຖິ້ມໃຫ້ ໝົດ ຈົນພວກລາວອິສຣະຮັກຊາຕພາກັນເຊ່ືອງເອກສາຣສຳຄັນຂອງພວກຕົນ ເອົ້າໄວ້ ຕ່ໍຈາກນັ້ນກໍ່ມີການ໌ລອບສັງຫາຣຄົນສຳຄັນຂອງລາວອິສຣະແທບບໍ່ ເວັ້ນໃນແຕ່ລະອາທິຕຍ໌ ສຸພານຸວົງສ໌ກໍ່ຮູ້ດີ ແຕ່ຖືກອິທທິພົນວຽຕມິນຫ໌ຄອບງຳ ຈົນບໍ່ສາມາຣຖ໌ປົກປ້ອງເອົ້າພັລພວກໄວ້ໄດ້.

ກ່ອນສ້ິນປ ີ 1955 ໄກສອຣ ພຣົຫ໌ມວິຫາຣ ກໍ່ທຳການ໌ຈັດກອງປະຊຸມຂຶ້ນ ມາອີກເພ່ືອສ້າງບັຣຫາແນວໃໝ່ຢູ່ໃນເມືອງນ້ອຍໆແຫ່ງໜ້ງ ທ່ີແຂວງຫົວພັນ ຕ່ໍໜ້າກອງປະຊຸມທ່ີມີຄົນບໍ່ເຖິງ 200 ຄົນນ້ັນ ໄກສອຣ ພຣົຫ໌ມວິຫາຣກໍ່ສ່ັງ ໃຫ້ເອົ້າດາວສີເຫ ຼືອງໝ ວ່ ຍໃຫ ່ຍເຂ ້ົ້າໄປໃສ ່ທ ່ີ ວ ງກ ່ ງ ວ ຂ ອ ງ ທ ຸ ວ ົ ງ ສ ໌ ເ ດ ືອ ນ ແ ຕ ່ ຖ ືກ ສຸພານຸວົງສ໌ລຸກຂຶ້ນຄັດຄ້ານແລະຖຽງກັນຢ່າງຝືດສນ່ັນດຸເດືອດ ສຸພານຸວົງສ໌ ອ້າງວ່າ ທຸງກາວົງສ໌ເດືອນນ້ີເປັນທຸງດ້ັ ງ ເ ດ ິ ມ ຂ ອ ງ ຂ ບ ວ ນ ກ າ ຣ ນ ໌ ລ າ ວ ອ ິ ສ ຣ ะ ท ่ ี เจ ้ົ້ າ ເ ພ ັ ຊ ຣ າ ຊ ຸ ໄ ດ ້ ก ่ ໍ ต ั ้ ง ข ึ ้ ม ม า ເ ม ื ่ อ ว ั น ท ี 12 ตุล 1945 ท ่ ี ม ะ ล อ ຣ ວ ຽ ง จ ั น ท ม ์ ขบวนการ์ลาวอิสระลอรสืบต่ให้ลวามสำลัญมันต่ไป และกไดรับ ສນັບສນູນຈາກລາວອິສຣະທ່ີມາຣວ່ມປະຊຸມຢ່າງຖ້ວນທ ັ ້ ນ ໄກສອຣຈ ຶ ່ ງ ຖ ອ ນ ຂ ໍ ้

ສເນີຂອງຕົນອອກຈາກທີ່ປະຊຸມໃນທັນທີ.

ໄກສອຣ ພຣົຫົມວິຫາຣຍັງບ່ຍອມເທື່ອ ເມື່ອສເນີຕົ່ນຮູບດາວທັບໃນຮູປ ວົງສ໌ເດືອນບ່ໄດ້ ກໍທັນໄປສເນີປ່ຽນຊື່ຂບວນກາຣນ໌ແນວລາວອິສຣະ ມາເປັນ ແນວລາວຮັກຊາຕ ແລະໃຫ້ເຈົ້າສຸພານຸວົງສ໌ຂຶ້ນເປັນປະທານ ແທນເຈົ້າເພັຊ ຣາຊ ໂດຍອ້າງເຫຕຸຜົລວ່າເອົາຕາມສພາພກາຣນໃໝ່ ໃນທັນທີກໍມີສຽງຟົດ ສນັ່ນຫອ້ງປະຊຸມຂຶ້ນມາອີກ ເທື່ອນີ້ຍິ່ງຖຽງກັນດຸເດືອດເພັດມັນລື່ນຄໍາສເນີຕົ່ນ ດາວໃສ່ທຸງຊາຕ ຄົນສລາດທີ່ນັ່ງອົມລື້ນມາຕລອດເຊັ່ນສີຊນະ ສີສາຣ ລຸກຂຶ້ນ ກ່າວວ່າ...

"ຂບວນກາຣນ໌ລາວອິສຣະແມ່ນເຈົ້າເພັຊຣາຊເປັນຜູ້ກໍ່ຕັ້ງຂຶ້ນມາ ສນັ້ນປະ ມຸກຂ໌ຂອງຂບວນກາຣນ໌ລາວອິສຣະຈະບ່ແມ່ນສຸພານຸວົງສ໌ ຫລືໃຜໆຫັ້ງນັ້ນ" ພໍສີຊນະ ສີສາຣນັ່ງລົງ ບຸນຍ໌ ພຣົຫົມມະຫາໄຊຍ ກໍລຸກຂຶ້ນຄັດຄ້ານຕົ່ນອີກວ່າ

"ພວກເຮົາລາວອິສຣະບ່ຄວຣທະນົງເກີນໄປວ່າ ຮັກຊາຕຫລາຍກວ່າຜູ້ອື່ນ ຄົນລາວທີ່ຮັກຊາຕລາວຄືພວກເຮົານັ້ນມີເຕັມປະເທສ ຄໍາວ່າລາວອິສຣະນັ້ນ ມັນດີຢູ່ແລ້ວ ບ່ເຫັນຈໍາເປັນປ່ຽນໄປໃສ່ຊື່ໃໝ່ອີກເລີຍ"

ຄົນໃນພັລປະຊາຊົນປະຕິວັດລາວຂອງໄກສອຣ ພຣົຫົມວິຫາຣ ທີ່ມີ ໝຸຣັກ ພູມ ສວັຣຄ໌ກັບພູມີ ວົງສ໌ວິຈິຕ ໄດ້ປ່ຽນຄືອກັນຖົກຖຽງກັບພວກລາວອິສຣະພາຍ ຕັ້ງແຕ່ເຊົ້າຈົນທ່ຽງກໍຍັງຕົກລົງກັນບ່ໄດ້ ຕ່ຈາກນັ້ນໝຸຣັກ ພູມສວັຣກໍລຸກຂຶ້ນ ສເນີໃຫ້ມີກາຣປອ່ນບັຕຣ໌ລົງຄະແນນເລືອກຕັ້ງແຕ່ພໍ່ປອ່ນບັຕຣ໌ເສັຈແລ້ວແທນ ທີ່ຈະທໍາກາຣນັບບັຕຣ໌ ໝຸຣັກ ພູມສວັຣຄ໌ກໍປະກາສພັກຜອ່ນຊົ່ວຄາວຢູ່ນອກ ຫອ້ງປະຊຸມ ຕອນກັບເຂົ້າມາຈົ່ງນັບບັຕຣ໌ ເຣື່ອງນີ້ທ່ານນະຄອຣຄໍາ ບຸບຜາ ນຸວົງສ໌ ລາວອິສຣະເກົ່າຜູ້ຢູ່ໃນເຫຕຸກາຣນ໌ໄດ້ຂຽນໄວ້ໃນປຶ້ມຊຸ"ຂບວນກາຣນ໌ ລາວອິສຣະ" ໜ້າທີ 116 ຂອງເພິ່ນເອົາໄວ້ວ່າ...

"ພໍເພື່ອນໆລາວອິສຣະອອກໄປຈາກຫອ້ງປະຊຸມແລ້ວ ໄກສອຣ ພຣົຫົມວິ ຫາຣກໍຫລົ້ນລູກໄມ້"ສົກກະປົກ"ທັນທີ ກໍຄືສັ່ງໃຫ້ລູກນອ້ງຂອງຕົນອູ້ມເອົາຫີບ ບັຕຣ໌ເຂົ້າໄປໃນຫອ້ງໜຶ່ງ ແລ້ວກໍປ່ຽນເອົາຫີບບັຕຣ໌ໜ່ວຍໃໝ່ອອກມາໄວ້ແທນ ເມື່ອໝົດເວລາພັກຜອ່ນ ກໍເຂົ້າມາທໍາກາຣນັບກວດບັຕຣ໌ໂດຍໝູຣັກເອງເປັນ ຜູ້ສເນີໃຫ້ຄໍາໄຕ ສີພັນທ໌ດອຣ+ສີຊນະ ສີສາຣ+ແລະຄໍາເຜື່ອນ ຕຸນາຣົມຍ໌ ພາ ກັນເປີດຫີບບັຕຣ໌ແລ້ວຖອກລົງເຕັມໜ້າໂຕ໊ະ ແຕ່ເຮ້ຍຍ້າ.!ປາກົຖວ່າມີບັຕຣ໌ ທີ່ເຫັນດີໃຫ້ປ່ຽນຊື່ຂບວນກາຣລາວອິສຣະມາເປັນແນວລາວຮັກຊາຕ ຫລາຍ

ກວ່າຈຳນວນຄົນມາປະຊຸມເສັຍອຸ້ຳ"
ມັນກໍເໝືອນຝ້າແຕກເດືອນ 5 ອີກບໍ່ມີຜິດ ເພາະລາວນີ້ຍິ່ງປະທະກັນໜັກປານໃດ ກໍຍິ່ງຂຶ້ນ ຝ່າຍແນວລາວອິສຣະທັງໝົດບໍ່ພໍໃຈສເນີໃຫ້ທຳການເລືອກໃໝ່ແບບຍົກມືເຫັນດີ ຖ້າບໍ່ດັ່ງນັ້ນລາວອິສຣະທັງໝົດຈະປະທ້ວງໂດຍຢ່າງອອກຈາກຫ້ອງປະຊຸມ ໄກສອນ ພຣົໝວິຫານລະອາຍຈົນໜ້າຖອດສີຈຶ່ງຍິນດີແກ້ອາຍດ້ວຍວິທີຍົກມືເຫັນດີຢ່າງເປີດເຜີຍ ເມື່ອສເລີຍຜົລການນັບພ້ອມກໍປາກົດວ່າ "ບໍ່ເຫັນດີ" ມີຈົນເຕັມຫ້ອງປະຊຸມຫລາຍກວ່າທີ່ພ້ອມ "ເຫັນດີ" ແລ້ວຂໍ້ສເນີຂອງໄກສອນທັງສອງຂໍ້ກໍເປັນໂມຄະໄປໂດຍອັຕະໂນມັຕ.

ເມື່ອເຫັນໄກສອນ ພຣົໝວິຫານເສັຍປຽບໃນທຸກດ້ານແກ່ພວກລາວອິສຣະ ວຽຕມິນຫ໌ກໍຍິ່ງເພີ່ມຄວາມຮຸນແຮງປາບປາມ ໂດຍທຳການນຳເອົາພວກລູກປະສົມວຽຕນາມ-ລາວແລະໄທຍ ມາສັບຊ້ອນຢູ່ໃນຖັນແຖວຂອງພວກລາວອິສຣະແຕ່ຂັ້ນຜູ້ນຳລົງເຖິງພະນັກງານທັມມະດາ ຫາທີ່ຢູ່ໃໝ່ໃຫ້ນາຍທະຫານລາວອິສຣະໂດຍໃສ່ຊື່ວ່າກຳລັງສຳຮອງ ຈາກນັ້ນມາພວກລາວອິສຣະເກີດກໍມີປະຕິກິຣິຍາຕໍ່ພວກວຽຕມິນຫ໌ແຮງຂຶ້ນ ແລະກໍຍິ່ງຖືກປາບປາມໜັກຂຶ້ນ ໂດຍພວກລາວອິສຣະຖືກກ່າວຫາວ່າຕ້ານພັຄແລ້ວຖືກຈັບກຸມຫາຍຕົວໄປໃນແຕ່ລະວັນ ນອກຈາກນັ້ນກໍຖືກລອບສັງຫານເປັນເນື່ອງນິດ ແຕ່ສຸພານຸວົງສ໌ກໍເສັຍສງົບນິດຢູ່ ເໝືອນບໍ່ຮູ້ບໍ່ເຫັນເຫຕຸການ໌ທີ່ມັນເກີດຂຶ້ນອ້ອມຂ້າງຂອງຕົນເອງ ແຖມຕຳນິຕົນເກ່ງໆຂອງຕົນວ່າຫລົງເລ່ຫ໌ກົລຈັກກະພັຕຣ໌ ພາກັນຜ່າຝືນວິນັຍສຸພານຸວົງສ໌ບໍ່ໄດ້ຄິດຈັກເທື່ອວ່າ ພັຄໃໝ່ຂອງໄກສອນ ພຣົໝວິຫານນີ້ເປັນອັນຕຣາຍຕໍ່ຂບວນການ໌ລາວອິສຣະຂອງຕົນ ບໍ່ເຄັຍສົງສັຍຊ້ຳວ່າເປັນແຜນການ໌ໂລຍະຍາວທີ່ເລິກແລບຂອງວຽຕນາມ ສົງຄາມເຢັນຣະຫວ່າງພັຄປະຊາຊົນປະຕິວັຕລາວກັບຂບວນການ໌ລາວອິສຣະກໍຣະເບີດຂຶ້ນ ການ໌ແບ່ງພັຄພວກໃຫ້ຣະແວງສົງສັຍກັນບໍ່ເຊື່ອໃຈກັນ ກໍລຸກລາມຂຶ້ນເໝືອນກັບໄຟກອງໃຫ່ຍ ອິສຣະລາວໃດແສດງທິສດີລົ່ນພວກລູກຊອດວຽຕນາມມາໃໝ່ຈະຖືກເອົາໃຈໃສ່ຕິດຕາມແລະແຍກອອກໄປໄວ້ທີ່ອື່ນທັນທີ ສຸພານຸວົງສ໌ກຳລັງເຫັນແກ່ຕົວ ກົ້ວເກືອກຢູ່ກັບເລ່ຫ໌ກົລຂອງພວກວຽຕມິນຫ໌ ເມື່ອມັນສິ້ນອົດທົນນາຍຜົລພົມມາດວງມາລາ ຈຶ່ງກ່າວເຕືອນສຸພານຸວົງສ໌ວ່າ...

"ນັບແຕ່ຕັ້ງພັຄປະຊາຊົນປະຕິວັຕລາວຂຶ້ນມານີ້ ມີນາຍທະຫານລາວອິສຣະຜູ້ຮັກຊາຕລົ້ນຕາຍແລະຫາຍຕົວໄປເປັນຈຳນວນມາກແລ້ວ ການ໌ຈັບກຸມລົງ

ໂທສຫລືລອບຂ້າພວກລາວອິສຣະດຽວກັນນັ້ນ ບໍ່ແມ່ນທີ່ສດີເດີມຂອງລາວອິສ
ຣະເລີຍ ແຕ່ມັນແມ່ນການຫລົງເລ່ຫ໌ກົນຂອງສັຕຣູ"
ສຸພານຸວົງສ໌ໂກຫເຄືອງເປັນໄຟລາມປ່າ ແລະກ່າວຫາວ່າ...
"ນາຍພົລພົມມາກຳລັງເສັຍສຕິ ແລະຄວຣເຂ້ົາປິ່ນປົວໃນໂຮງພຍາບາລ"
ຕ່ຈາກອັນນັ້ນມານາຍພົລພົມມາ ດວງມາລາກໍຖືກຕິດຕາມຈາກຄົນຂອງວຣຕ
ມິນຫ໌ ແລະຖືກສັງຫາຣດວ້ຍການສີດຢາເບ່ືອເຂ້ົາໃນເສັ້ນເລືອດໃນເວລາຕ່ມາ
ຕ່ຈາກນັ້ນຍັງມີການລອບຂ້າລາວອິສຣະຢູ່ອີກ ກໍມີນາຍພົລລາວອິສຣະອີກຄົນ
ໃໝ່ຊ່ືສິລປ໌ໄຊຍ ມະໂຫຣເສີກເຂ້ົາໄປພົບສຸພານຸວົງສ໌ ແລະອຸທອຣວ່າ...
"ນາຍທຫາຣລາວອິສຣະຖືກກ່າວຫາ+ຖືກຈ້າຖືກຈັບກຸມຫລາຍຄົນແລ້ວ"
ສຸພານຸວົງສ໌ກໍຖາມຄືນວ່າ...
"ເພາະເຫຕຸໃດນາຍພົລຈ່ຶງຮູ້ວ່າພວກເຂົ້າຖືກກ່າວຫາ?"
"ກໍເຫັນກັນຢູ່ເປັນປະຈຳນ້ີນາ"
ເມ່ືອມີນາຍທຫາຣລາວອິສຣະມາເວ້ົາເຣ່ືອງເກ່ົາ ສຸພານຸວົງສ໌ບ່ໍພໃຈ ເພາະສຸ
ພານຸວົງສ໌ບ່ໍຍອມເຊ່ືອ ຈ່ຶງຕອບແບບສັ່ງສອຣວ່າ...
"ເຈ້ົາເປັນເຖ້ົານາຍພົລ ແລະກໍຮູ້ດີວ່ານັກຕ່ໍສູ້ກູ້ຊາຕນ້ັນຕ້ອງຊ່ືສັຕຍ໌ນັກດີຕ່ໍ
ພັຄຢ່າງເຄ່ັງຄັດ ໃຜເຮັດຜິດກໍຕ້ອງມີໂທສ ໃຜດີກໍຄວຣຍົກຍ້ອງ"
ນາຍພົລສິລປ໌ໄຊຍ ມະໂຫຣເສີກບອກຕ່ໍມ່ອີກວ່າ
"ທ່ີຮ້ົາຍແຣງອີກອັນໜ່ຶງກໍຄ ທຫາຣອາສາສມັຄຣ໌ຂອງວຣຕມິນຫ໌ທ່ຳການ
ຈູດເລ້ົາເຜ່ົາບ້ານເຮ ອນ ຂອງປະຊາຊ ນໃນເວລາທ່ີໂຈມຕ່ກຳລັງຣັຖບາລຝ່າຍ
ຂວາ ແລ້ວກໍລັກເອ ຊັພຍ໌ສ ນບັຕຣ໌ແລະສັຕວ໌ລ້ຽງຂອງຊາວບ້ານໄປ"
ສຸພານຸວົງສ໌ຈ່ຶງຮ້ົາຍນາຍພົລສິລປ໌ໄຊຍ໌ແຣງໆວ່າ...
"ນາຍພົລກຳລັງຖລຳໃຫ່ຍແລ້ວ ຂາດຄຸນສ ນບັຕຣ໌ທ້ັສນະເໝ ອນຄົນເສັຍ
ເສ້ັນ ຂ້ັຍເຫັນວ່າເຈ້ົາບ່ໍສ ມຄວຣເປັນນັກປະຕິວັຕອີກຕ່ໍໄປແລ້ວ"
ເມ່ືອເຫັນວ່າສຸພານຸວົງສ໌ບ່ໍສ ລໃຈໃນຄວາມເປັນຢ່ ແລະຖານະຂອງລາວອິສຣະ
ດັ່ງທ່ີກ່າວແລ້ວ ກໍມີນາຍພົລລາວອິສຣະອີກຄົນໜ່ຶງຊ່ືບຸນຍ໌ ພຣ໌ຫ໌ມມຫາໄຊຍ໌
ບອກເຕ ອນພັຄພວກລາວອິສຣະວ່າ ວຣຕມິນຫ໌ຕ້ົ້ງພັຄປະຊາຊ ນປະຕິວັຕລາວ
ເພ່ືອໃຊ້ເປັນເຄ່ືອງມ ເຂ່ັນຂ້າລາວອິສຣະ ຈ່ຶງເພ່ີມຄວາມມ ສຕິຣະວັງຕ ວ ໃນ
ຄວາມເປັນຈ ງແລ້ວວຣຕມິນຫ໌ລົງທ ນສ້ົາງສພາພການ ໃຫ້ນາຍທຫາຣລາວ
ອິສຣະຂັດໃຈກັນກັບສຸພານຸວົງສ໌ ເພ່ືອຈະໄດ້ຢ ມມ ຂອງກະສັຕຣຍ໌ນອກຣາຊວັງ

ໃຫ້ຮັບໄຊ້ແຜນການຂອງພວກຕົນຕໍ່ໄປ ເພາະເມື່ອເຫຕຸການຮ້າຍແຮງຂຶ້ນ ມາແລ້ວ ອຽຕມິນຫ໌ກໍແກ້ງເຂົ້າມາໄຊ້ສົງຄາມຈິຕສາຕຣໂກ່ເກ້ຍໃຫ້ຄືນດີກັນ ແລະຫລັງຈາກນັ້ນມາ ນາຍພົລລາວອິສຣະທັງສອງຄົນກໍລຽມຄືອຖືກຄາຕກັມ ຢ່າງໂຫດຫ້ຽມ ເພາະວ່າເມື່ອມັນເຫລືອທົນແລ້ວກໍຮ່ວມກັນຄົບຄິດຈັດຕັ້ງ ກຸ່ມໄຕ້ດິນຂຶ້ນມາຢ່າງລັ້ລັບ ເພື່ອແຍກຕົວອອກຈາກຂອບການອຽຕມິນຫ໌ຈະ ບໍ່ຍິນຍອມໃຫ້ເຂົ້າເຂັ່ນຂ້າຄົນລາວອິສຣະຄືສຸພານຸວົງສ໌ອີກຕໍ່ໄປ ໂດຍໃສ່ຊື່ ໝວ່ຍໄຕ້ດິນເປັນອັກສອຣຫຍ້ວ່າ "3 ຕດ" (3 ໄຕ້ດິນ) ອັນມີອະທິຍະ ສຸພາ ນຸວົງສ໌+ນາຍພົລສົງຄຳ ກົມມາດຳ ລູກຊາຍຂອງສີທົນ ກົມມາດຳ+ນາຍພົລ ບຸນຍ໌ ພຣົຫ໌ມມະຫາໄຊຍ+ນາຍພົລພົມມາ ດວງມາລາເປັນຫ໋ວໜ້າ.

ຈົນເຖິງປີ 1968 ນາຍພົລພົມມາ ດວງມາລາ ກັບນາຍພົລສົງຄຳ ກົມ ມາດຳກຳລັງວາງແຜນການຍົ່ງມືຍຶດອຳນາຈ ຈາກໄກສອຣ ຫຣົ໌ມວິຫາຣ ແລະໝູຣັກ ພູມສວັຣຄ໌ ແຕ່ອະທິຍະ ສຸພານຸວົງສ໌ ເຂົ້າມາຂັດຂວາງເອົາໄວ້ ເສັຍກ່ອນ ໂດຍໃຫ້ເຫຕຸຜົລວ່າມັນຮີບດ່ວນເກີນໄປ ໃຫ້ຣໍຖ້າຈັງຫວະເໝາະສົມ ເສັຍກ່ອນ ແຜນການຍົ່ງເລີຍຫລົ້ມກາງອ່າວ ລາວອິສຣະ 3ຕດ ກໍເຣີ່ມມີປາກ ສຽງກັນເອງຂຶ້ນ ຈົນໃນທີ່ສຸດຄວາມລັບກໍແຕກ ຄົນແຣກທີ່ຕື່ນສະເດີດແມ່ນ ພວກອຽຕມິນຫ໌ ຈຶ່ງລ້ົມຈັບຕົວນາຍພົລສົງຄຳ ກົມມາດຳແລະນາຍພົລບຸນຍ໌ ພຣົຫ໌ມມະຫາໄຊຍໄປກັກຂັງແລ້ວທຳການທໍຣະມານຢ່າງໂຫດຫ້ຽມ ເພື່ອຄົ້ນ ເອົາຄວາມລັບຕື່ມອີກ ເມື່ອສອງນາຍພົລລາວອິສຣະບໍ່ຍອມໃຫ້ການໃດໆ ກໍ່ ຖືກທໍຣະມານດ້ວຍການອົດຫິວ ບໍ່ຍອມໃຫ້ກິນເຂົ້າກິນນ້ຳເປັນອາທິຕຍ໌ ປານ ນີ້ກໍຕາມນາຍພົລສົງຄຳ ກົມມາດຳຍອມຕາຍຈຶ່ງຂໍອະນຸຍາດພົບກັນສີທົນ ກົມ ມາດຳຜູ້ເປັນພໍ່ເສັຍກ່ອນ ແຕ່ທຫາຣຍາມຄຸກຄົນອຽຕນາມບໍ່ຍອມ ນາຍພົລ ສົງຄຳຈຶ່ງຟ້າວຈັບເອົາກ້ອນຫີນໝວ່ຍເທົ່າແຂ້ງແລ້ວແກວ່ງໃສ່ຫ໋ວທຫາຣຍາມ ຈົນລົ້ມລົງ ຫລັງຈາກນັ້ນກໍມີການກະໂດດເຂົ້າຍາດເອົາປືນທຫາຣຍາມສົລວົມ ພໍດີບັງເອີນນາຍຣ້ອຍທຫາຣອຽຕນາມຄົນໜຶ່ງແນມມາເຫັນ ກໍຕັດສິນໃຈຍົກ ປືນອາກາລ໋ອກະສູນຂ້າທັງສອງເສັຍເລີຍ.

ນາຍພົລບຸນຍ໌ ພົມມະຫາໄຊຍຖືກທໍຣະມານໜັກຂຶ້ນຈົນຜູ້ກ່ຽວທົນຄວາມ ເຈັບປວດບໍ່ໄຫວແລ້ວກໍສາຣະພາບບອກຊື່ພັລພວກໃນໝວ່ຍໄຕ້ດິນ 3ຕດ ເສັຍ ຈົນໝົດ ພວກອຽຕມິນຫ໌ກໍກຳນົດອັນຕາຍໃຫ້ແກ່ນາຍພົລພົມມາ ດວງມາລາ ດ້ວຍການສົດຢ່າເບ່ືອເຂົ້າເສັ້ນເລືອດໃຫ້ຕາຍກະທັນຫັນ ຕໍ່ມາກໍແມ່ນລູກຊາຍ

ສຸພານຸວົງສ໌ ໂດຍອະສີຍະທັມມະສິລຖືກອຽຕມິນຫ໌ສັ່ງຫຫາຮກອງຫລອນລອບ ຂ້າດ້ວຍປືນໃນໝູ່ບ້ານນາລວງ ຫລັງຈາກອຽຕມິນຫ໌ຂ້າສມາຊິກ 3ຕດ ຕາຍ ແລ້ວກໍແກ້ງປ່ອຍນາຍພົລບຸນຍ໌ ພຣ໌ທົມມະຫາໄຊຍອອກມາຈາກຄຸກ ແຕ່ກໍຖືກ ອຽຕມິນຫ໌ສັ່ງຫາຮຕາຍໃນກາລຕໍ່ມາ ສຸພານຸວົງສ໌ຮູ້ຄັກແນ່ວ່າອຽຕມິນຫ໌ຂ້າ ລູກຊາຍຂອງຕົນເອງ ແຕ່ກະສັຕຣຍ໌ນອກວັງຄົນເກ່ງກໍ່ບ່ຍອມອຸທອຣ ແຕ່ກັບ ແສດງລະຄອຣລິງໃນຄອບຄົວຂອງຕົນເອງວ່າພວກ CIA ສົ່ງສາຍລັບຂອງວັງ ປາວໄປສັ່ງຫາຮອະຣິຍະທັມມະສິລ ເຖິງເລືອດຕາໄຫລຣິນແຕ່ບ່ຍອມເອີ່ຍໃຫ້ ໃຜໄດ້ຍິນເພາະຢ້ານອຽຕມິນຫ໌ມາຂ້າຕົນເອງອີກ.

ແຕ່ປະກາຮໃດກໍຕາມ ຫາກອີງເອົາຕາມຮອຽລ້ແຫ່ງປະວັຕສາສຕ໌ຂອງຊາຕ ລາວຕັ້ງແຕ່ ຄສ. 1945-1975 ແລ້ວກໍ່ສລູປໄດ້ວ່າສຸພານຸວົງສ໌ຖືກຫຼອກເຊີ້ດໃຫ້ ເປັນຫຸ່ນໄລ່ກາເພື່ອຮັບໃຊ້ນະໂຍບາຽກາຮເມືອງຂອງອຽຕນາມເໜືອ ຫຼາຽກວ່າທີ່ ຖືກໃຫ້ກຽຣຕ໌ເປັນກະສັຕຣຍ໌ຕາມທີ່ຄົນລາວທ່ວໄປພາກັນເຂ້ົາໃຈໃນຍຸຄທີ່ກ່າວມານັ້ນ ຜູ້ຂຽນຈະພາຜູ້ອ່ານຍ້ອນກັບໄປໃນອດີຕ ຕອນທີ່ສຸພານຸວົງສ໌ຖິ້ມຫລັກກ້ອງເລ່ົາແທກ ຖນົນໃນອຽກງານໂຍທາທິກາຮທ່ອຽຕນາມ ແລ້ວຂ້າມສັນພູຫລວງມາຍັງສວັຣຄ໌ ນະເຂຕໃນທ້າຽຣະດູຝົນຂອງປ ີ 1945 ນັ້ນ ສຸພານຸວົງສ໌ໄດ້ປະກາສກ້ອງປະເທສ ວ່າ " ຕົນກັບຄືນມລາວເພື່ອຂັບໄລ່ຝຣັ່ງເສສ+ເພື່ອຕໍ່ສູ້ເອົາເອກຣາຊອັນສົມບູຮນ໌ໃຫ້ ຊາຕລາວ ຕາບໃດທີ່ຝຣັ່ງເສສຍັງຢຶດຄອງລາວ ແລະບ່ຍອມມອບເອກຣາຊທີ່ສົມ ບູຮນ໌ໃຫ້ແກ່ລາວແລ້ວຕົນກໍຈະທໍາກາຮສູ້ຕໍ່ໄປ" ແຕ່ເມື່ອຝຣັ່ງເສສຍອມມອບເອກ ຣາຊທີ່ສົມບູຮນ໌ໃຫ້ລາວເມື່ອວັນທ ີ 22 ຕຸລາ 1953 ແລ້ວ ທັງກອງທັພຂອງຝຣັ່ງ ເສສກໍຕຽມຖອນໜີອອກຈາກແຜ່ນດິນລາວແລ້ວ ແຕ່ສຸພານຸວົງສ໌ນີ້ນຢູ່ໃສ? ຢູ່ກັບ ໃຜ..? ຢູ່ເຮັດຫຍັງ..? ຢູ່ເພື່ອໃຜ..?ເພື່ອຫຍັງ.? ດ້ວຽເຫຕຸໃດຈ ຶ່ງບ່ຍອມກັບເຂ ົ້າ ມາຊຸ່ນຊຸ່ມກັບເອກຣາຊສົມບູຮນ໌ທີ່ຕົນເອງພຽຮຍັນຕໍ່ສູ້ເອົາມັນມາຈົນລອດຕາຽ ດັ່ງ ກ່າວ? ເຣ ື່ອງນ ີ້ບ ່ມ ີໃຜຕອບໄດ ້ຖ ືກຄ ັກແນ ່ເທ ່າກ ັນກ ັບຮອຽລ ້ຂອງປ ວ ັຕສ າສຕ ຣ ์ຊ າຕ ລາວ ຊ ຶ ່ງສ ຸພ ານ ຸວ ົງສ ์ກ ໍເປ ັນຜ ູ ້ຫ ນ ຶ ່ງທ ີ ່ຮ ່ວ ມກ ັບອ ີກ ຫ ຼ າຽຄ ົນແ ຕ ້ມແ ຕ ່ງເ ອ ົ ້າໄ ວ ້ ໂ ດ ຍ ທ ່ານຈ ະໄ ດ ້ອ ່ານ ໃ ນ ຕ ອ ນ ຕ ່ ໆ ໄ ປ .

ຢູ່ພາຽໃນພັຄຂອງພວກຄອມມິວນິສຕ ์ນ ີ ້ນ ໄ ດ ້ມ ີ ກ ົ ດ ຂ ້ ໍ ບ ັ ງ ຄ ັ ບ ອ ັ ນ ຫ ນ ຶ ່ ງ ວ ່ າ ໃ ຜ ໆ ກ ໍ ຕ ານ ຖ ້ າ ຫ າ ກ ເ ປ ັ ນ ເ ຊ ື ້ ອ ກ ະ ສ ັ ຕ ຣ ย ์ ແ ລ ້ ວ ກ ໍ ່ ຈ ະ ບ ໍ ່ ມ ີ ສ ິ ທ ທ ิ ท ี ่ จ ะ เ ข ้ ้ า เ ป ็ น ส ะ ม า ช ิ ก พ ั ค ไ ด ้ ส ั น ้ ส ุ พ า ม ุ อ ็ ว ง ส ์ จ ึ ่ ง เ ป ็ น ก ะ ส ั ต ร ย ์ ท ี ่ อ ู ่ น อ ก พ ั ค เ ป ็ น ส ิ บ ๆ ป ี แ ม ่ น ว ่ า ส ุ พ า ม ุ อ ็ ว ง ส ์ ถ ิ ก แ ย บ ย ้ า ง อ ู ่ ต ล อ ด เ ว ล า ว ่ า เ ป ็ น ผ ู ้ น ำ ใ น ข บ ว น ก า ร ม ล า ว อ ิ ส ร ะ ก ็ ต า ม แ ต ่ ส ุ

ພານຸວົງສ໌ບໍ່ເຄີຍສັ່ງການໃດໆທັ້ງສິ້ນພາຍໃນຂອບການລາວອິສຣະ ຫຼັງຈາກທີ່ໄດ້ກໍ່ຕັ້ງຣັຖບາລແລ້ວກໍດີ ມີແຕ່ໂຮຈິມິນຫ໌ທີ່ເປັນຫົວໜ້າພັຄຄອມມິວນິສຕ໌ອິນດູຈີນເປັນຜູ້ບົ່ງການຜ່ານມຫາຄໍາແສນ ຜູ້ເປັນເລຂາພັຄທັ້ງເປັນຫົວໜ້າຄວບຄຸມຝ່າຍຂອບການລາວອິສຣະຂອງສຸພານຸວົງສ໌ ແລະຈອບຈົນເມື່ອມຫາຄໍາແສນໝົດອອກໄປຮັບໜ້າທີ່ອື່ນແລ້ວໃນປີ 1955 ກໍດີ ແທນທີ່ສຸພານຸວົງສ໌ຈະຖືກຊັ້ໃຫ້ຮັບຕໍາແໜ່ງນີ້ແທນ ແຕ່ກັບແມ່ນໄກສອຣ ພຣົຫ໌ມວິຫານ ຜູ້ທີ່ໃຜໆກ່າວວ່າຂາດປະສົບການນຳພຸ້ນຖືກບົ່ງຕົວໃຫ້ເຂົ້າໄປຮັບຕໍາແໜ່ງເລຂາພັຄແທນ ສນັ້ນພວກເຮົາຈະຮູ້ຢ່າງແຈ້ງຂາວ່າ ຢູ່ພາຍໃນຂອງຂບວນການລາວອິສຣະທີ່ສຸພານຸວົງສ໌ເປັນນາຍົກນັ້ນແມ່ນໄກສອຣ ພຣົຫ໌ມວິຫານ ທີ່ເປັນຣັຖມັນຕຣີປ້ອງກັນປະເທສພຸ້ນມີອໍານາຈເໜືອກວ່າສຸພານຸວົງສ໌ຜູ້ເປັນປະທານ.

ການປະຊຸມສ້າງຕັ້ງຣັຖບາລລາວອິສຣະ ຂອງສຸພານຸວົງສ໌ກໍຜ່ານພົ້ນຮຽບຮ້ອຍໄປແລ້ວໂດຍດີ ພວກລາວອິສຣະທີ່ມາຈາກຕ່າງເຂຕຕ່າງແຂວງ ກໍພາກັນກັບເມືອແລ້ວ ແລະໃນສັປດາຕ໌ມາ ຄນະຣັຖບາລໃໝ່ອ່ຽມຂອງສຸພານຸວົງສ໌ກໍຖືກພວກອຽຕມິນຫ໌ສັ່ງໃຫ້ຢ້າຍຈາກທີ່ຕັ້ງເກົ່າໄກ້ໆແຄມນ້ຳໂຂ ໃຫ້ໜີເລີກໄກເຂົ້າໄປເຖິງ 10 ກລມ.ໄກ້ໆກັບຕີນພູສູງບ່ອນມີໝູ່ບ້ານນ້ອຍໆຂອງພວກເຜ່ົ່າມ່ານ ຊຶ່ງເປັນເຂຕດົງດິບແລະຣົກເຣື້ອ ປອດຈາກການສັງເກຕທາງອາກາສຂອງເຄື່ອງບິນລາຕເວນຝຣັ່ງເສສ ທັ້ງເປັນທີ່ຫ່າງໄກຈາກສາຍທາງຄົມນາຄົມພາຄພື້ນດິນດວ້ຍ.

ເມື່ອໄປເຖິງທີ່ໃໝ່ ກໍໄດ້ພົບວ່າພວກອຽຕມິນຫ໌ໄດ້ປຸກເຮືອນຍາວທີ່ແອ້ມດວ້ຍຝາໄມ້ເຣື້ຍ ຫຼັງມຸງດວ້ຍຫ້ຳຄາປ່າໄວ້ກອ່ນແລ້ວຢ່າງດີຈໍານວນ 4 ຫຼັງ ເພື່ອໃຊ້ສໍາຣັບຢູ່ນອນຮວມກັນຂອງຄນະຣັຖບາລ ແຕ່ສ່ວນຕົວສຸພານຸວົງສ໌ເອງນັ້ນ ເຂົ້າໄປນອນໃນຕູບຫຼັງນ້ອຍຢຽງຄົນດຽວໄກ້ກັບຫ້ວຍນ້ຳໄຫຼ ແລະທັນທີທີ່ສຸພານຸວົງສ໌ເຂົ້າປະຈໍາຕູບໃນຕອນເຊົ້າ ອຽຕມິນຫ໌ກໍສົ່ງພໍ່ຄົວອຽຕນາມຜູ້ໜຶ່ງເຂົ້າມາປະຈໍາທັ້ງນີ້ເພື່ອແຕ່ງກິນໃຫ້ສເພາະແຕ່ຄນະຣັຖມົນຕຣີກັບສຸພານຸວົງສ໌ເທ່ົານັ້ນ ສ່ວນພວກອື່ນຕ້ອງຫາອາຫາຣກິນເອງ ອຽຕມິນຫ໌ຊ່ວຍແຕ່ເຂົ້າແລະເກືອເທ່ົານັ້ນ ທຸກໆວັນສຸພານຸວົງສ໌ຈະຖືກພໍ່ຄົວແຕ່ງໃຫ້ກິນຄົນດຽວພາຽໃນຕູບນອນສ່ວນຕົວສເມີ ແມ່ນແຕ່ເວລາຮ່ໍາຮຽນເອກສາຣການເມືອງ ສຸພານຸວົງສ໌ ກໍບ່ໍໄດ້ເຂົ້າຮ່ວມຫ້ອງຮຽນກັບພວກຄນະຣັຖບາລຂອງຕົນ ແຕ່ສຸພານຸວົງສ໌ອ່ານຮຽນຢູ່ຄົນດຽວພາຽໃນຕູບຊຶ່ງພວກອຽຕມິນຫ໌ສົ່ງມາໃຫ້ ປຶ້ມຫລືເອກສາຣການເມືອງທີ່ຂຽນແຕ່ງໂດຍນັກຂຽນຄອມມິວນິສຕ໌ນັ້ນເປັນພາສາຝຣັ່ງເສສ ເພາະສຸພານຸວົງສ໌ອ່ານພາສາອຽຕນາມບ່ໍເກ່ງ.

ປະມານອີກ 4 ເດືອນຕໍ່ມາຄືໃນຣະຫວ່າງຕົ້ນປີ 1951 ອຽຕມິນຫ໌ກໍໄດ້ສັ່ງຍົກ ຍ້າຍຣັຖບາລລາວອິສຣະຂອງສຸພານຸວົງສ໌ອີກ ໂດຽໝີຈາກແຂວງຕວຽນກວາງ ເດີນທາງໄປສູ່ເຂຕເມືອງບ່າຽເຫືອງໃນແຂວງທັນຫົວ ຊຶ່ງເປັນເຂຕຮັກສາການ ຂອງກຳລັງທຫາຣພາຄ 4 ອຽຕມິນຫ໌ ແລະຫຼັງຈາກນັ້ນອີກປະມານ 3 ເດືອນຄຶຣະ ຫວ່າງທ້າຽເດືອນມິນາ ອຽຕມິນຫ໌ກໍສັ່ງໃຫ້ພວກຜູ້ນຳລາວອິສຣະປ່ຽນຊື່ໃໝ່ ໂດຍ ຖືຊື່ປອມຄົນລະສອງຊື່ຄືຊື່ອຽຕນາມແລະຊື່ລາວ ທີ່ທາງອຽຕມິນຫ໌ກຳໝົດມາໃຫ້ ຣຽບຣ້ອຽແລ້ວ ສຸພານຸວົງສ໌ມີຊື່ລາວວ່າລຸງພາ ແລະຊື່ວົງຄ໌ຣາເປັນຊື່ອຽຕນາມ ສ່ວນພູມີ ວົງວິຈິຕປ່ຽນເປັນທ້າວຊຽງພິນແລະມີຊື່ອຽຕນາມວ່າວົງຄ໌ຝຸກ ໝູຣັກ ພູມສວັຣຄ໌ເປັນທ້າວຊຽງທອງແລະຖືຊື່ອຽຕນາມວ່າວົງຄ໌ຈູ ສ່ວນໄກສອຣ ພຣົຫ໌ມ ວິຫາຣນັ້ນໃຫ້ຮັກສາຊື່ເກົ່າ ແຕ່ໃຫ້ຖືຊື່ອຽຕນາມວ່າວົງຄ໌ກວັກ ແຜນການປ່ຽນຊື່ ໃໝ່ໃຫ້ສຸພານຸວົງສ໌ ແຕ່ບ່ຍອມປ່ຽນຊື່ລາວຂອງໄກສອຣ ພຣົຫ໌ມວິຫາຣນັ້ນແມ່ນເພື່ອ ສ້າງໄກສອຣ ພຣົຫ໌ມວິຫາຣໃຫ້ເປັນທີ່ຮູ້ຈັກໃນຂບວນການ໌ລາວອິສຣະ ຕັດໜ້າສຸ ພານຸວົງສ໌ນັ້ນເອງ.

ທ່ານຜູ້ອ່ານຈະເຫັນໄດ້ໃນຕອນນີ້ວ່າ ອຽຕມິນຫ໌ໄດ້ມີອິທທິພົນເດັດຂາດເໜືອ ຣັຖບາລລາວອິສຣະແລ້ວຮອບດ້ານ ໂດຍສັ່ງໃຫ້ໄປຢູ່ໃສກໍໄດ້ ສຸພານຸວົງສ໌ກັບພັຄ ພວກກໍມີໜ້າທີ່ປະຕິບັຕຢ່າງດຽວ ສ່ວນຂໍ້ອ້າງທີ່ວ່າກຳລັງລາວອິສຣະມີຢູ່ທົ່ວປະ ເທສນັ້ນເປັນພຽງຄຳໂຄສນາ ເພາະໃນຄວາມເປັນຈິງແລ້ວແມ່ນທຫາຣອຽຕນາມ ເໜືອເອງທີ່ນຸ່ງຫົ່ມເຄື່ອງລາວອິສຣະຕະເວນໄປໃນທຸກສນາມຣົບ ທົ່ວແຜ່ນດິນລາວ ລຳພັງກຳລັງຍິບມືດຽວຂອງລາວອິສຣະແລ້ວກໍບ່ໜາວ ທີ່ຈະຂັບໄລ່ກຳລັງທັພຝຣັ່ງ ເສສຊຶ່ງມີອາວຸທທັນສມັຍກວ່າໃຫ້ຖອນໜີຈາກທີ່ໜັ້ນໄດ້ ເພາະໃນທຸກສນາມຣົບນີ້ ແຕ່ພວກອຽຕມິນຫ໌ເຂົ້າຣົບແທນທັງໝົດ ສ່ວນກອງກຳລັງ "ຣາຊວົງສ໌" ທີ່ໄກ ສອຣ ພຣົຫ໌ມວິຫາຣເອງເປັນຜູ້ຕັ້ງຂຶ້ນມານັ້ນ ກໍມີທຫາຣລາວອິສຣະທີ່ຣົບແລ້ວຟ້າວ ແລ່ນໜີພຽງ 32 ຄົນ ແຕ່ໃນເອກສາຣໂຄສນາທາງການເມືອງຂອງພວກລາວ ອິສຣະຂຽນສດຸດີວ່າເປັນກອງ "ຣາຊວົງສ໌" ທີ່ເກ່ງກ້າສາມາຣຖ໌.

ພົວໄພ...ເມັ່ງມັນ...

ສຸພານຸວົງສ໌ກັບພັຄພວກອື່ນໆໃນຣັຖບາລລາວອິສຣະ ບັດນີ້ມີຕ໊ວຕົນທັ້ງຮູບ ຮ່າງສີສັຣທ໌ຂອງມັນຂຶ້ນມາຄັກແນ່ ແຕ່ຢູ່ພາຽໄຕ້ກັນບັງຄັບບັນຊາຂອງອຽຕມິນຫ໌ ທຸກຢ່າງ ຕໍ່ຈາກນີ້ຂບວນການ໌ອຽຕມິນຫ໌ກໍເຣີ່ມສ້າງພາພທີ່ສອງງາມທາງສັງຄົມ ໃຫ້ແກ່ຣັຖບາລອິສຣະຕື່ມອີກ ເພື່ອໃຫ້ເປັນໂຄງຮ່າງທີ່ສົມບູຣນ໌ແບບ ໃຫ້ສອດຄ່ອງ

ກັບຂົບປະເທດລາວ ແລະເພື່ອໃຫ້ສຸພານຸວົງສ໌ກັບພັຄພວກພາກັນຕິດໜີ້ຄຸນຄວາມ ດີຂອງໂຮຈິມິນຫ໌ແລະຊາວວຽຕນາມ ກໍຄືໂຮຈິມິນຫ໌ໄດ້ຕັດສິນໃຈລົງຫຶນມຫາສາຣ ນຳເອົາຄອບຄົວຂອງຜູ້ນຳອິສຣະ ທີ່ຍັງຄ້າງຢູ່ໃນບາງກອກແຕ່ຕອນແຕກເສີກທ່ຳ ແຂກເມື່ອທ້າຍເດືອນມີນາ 1946 ພຸ້ນມາສົ່ງໃຫ້ຈົນເຖິງຕູບນອນຂອງຜູ້ເປັນພົ່ອ.

ໃນຕອນໄກ້ທ່ຽງວັນໜຶ່ງຂອງເດືອນມິຖຸນາ ຄສ.1951 ທຸກຄົນໄດ້ແນມເຫັນ ຣົຖຈີບສີຂຽວໜາຣຄັນໜຶ່ງແລ່ນເຂົ້າມາໃນສູນຍ໌ກາງ ແລ້ວກໍແລ່ນເລີຽໄປຍັງຕູບ ເຮືອນນ້ອຽຂອງສຸພານຸວົງສ໌ ຕໍ່ມາກໍມີຣົຖບັຣທຸກໜາຣສີຂຽວໃບໄມ້ຂນາດຫົກລ້ອອີກ ຄັນໜຶ່ງແລ່ນຕິດຕາມເຂົ້າມາ ຫຼັງຄາຜ້າໃບຖືກລ່ານລົງທັງສອງຂ້າງເພາະຝົນກຳ ລັງເຣີ່ມຝອຍເລັກນ້ອຍ ບໍ່ມີໃຜຕື່ນເຕັ້ນກວ່າທັມມະດາເພາະໃນແຕ່ລະວັນຈະມີຣົຖ ແລ່ນເຂົ້າອອກຢ່ເປັນປະຈຳ.

ເມື່ອຣົຖບັຣທຸກ 6×6 ຄັນນັ້ນຈອດຣຽບຣ້ອຽຢູ່ກາງເດີ່ນແລ້ວ ກໍມີໜາຣອຽຕ ມິນຫ໌ສອງຄົນພາກັນໂຕນລົງມາໄຂຝາອັດທ້າຽຣົຖ ແລ້ວພາກັນຍ້ີ້ໂຈມເອົາແຂນ ເດັກນ້ອຽທີ່ຢູ່ພາຽໃນໃຫ້ລົງມາກ່ອນເທື່ອລະຄົນ ໃນພ້ອມດຽວກັນນັ້ນຣົຖຈີບຄັນທີ່ ແລ່ນເລີຽໄປຍັງຕູບນອນຂອງສຸພານຸວົງສ໌ເມື່ອກີ້ນີ້ກໍແລ່ນກັບຄືນມາຈອດໄກ້ໆກັບຣົຖ 6×6 ສຸພານຸວົງສ໌ທີ່ນັ່ງມາໃນຣົຖຈີບ ກໍຝ້າວກະໂດດລົງມາແລ້ວຣ້ອງສຽງດັງໆຕື່ນ ເຕັ້ນສຸດຂນາດວ່າ...

"ອະນຸວົງສ໌..!"

ແລ້ວກໍຜວາເຂົ້າໄປອູ້ມເອົາລູກຊາຽຂອງຕົນມາໄວ້ໃນອ້ອມແຂນພ້ອມກັບສ່ວງເຂົ້າ ໄປໃນຣົຖດ້ວຽຄວາມຕື່ນເຕັ້ນດີໃຈ.

ໃນສພາພກາຣນ໌ເຊ່ັ່ນນີ້ ກໍບ່ມີນັກຂຽນຄົນໃດທີ່ສາມາຣຖພັລນາໃຫ້ຖືກຕ້ອງໄດ້ ຄັກແມ່ເຖິງຄວາມດີໃຈຕື່ນເຕັ້ນຂອງຄົນທີ່ເປັນພ່ໍ່ຕ່ໍ່ລູກໆ ຊຶ່ງຈາກກັນໄກແລ້ວໄດ້ຫວນ ຍ້ອນມາພົບກັນອີກນັ້ນວ່າ ມັນໃຫ່ຽຍິ່ງຂນາດໃດ..? ມ່ອນ້ອຽງຄຳກຳລັງປ່ອນລູກ ຄົນຕ່ໍ່ໄປລົງໃຫ້ສຸພານຸວົງສ໌ຮັບເອົາອີກ ຜູ້ຕ່ໍ່ໄປກໍມີນາງເພັຽຄຳສຸຂ ເມັຽຂອງພູມີ ວົງສ໌ວິຈິຕ ກັບນາງຄຳແພງ ບຸບຜາທີ່ເປັນເມັຽຂອງຄຳຜາຽ ບຸບຜາ.

ຜູ້ນຳແນວລາວອິສຣະທັງສາມຄົນຕື່ນເຕັ້ນດີໃຈສຸດຂນາດ ເພາະກາຣເດີນ ທາງຈາກບາງກອກຫາວຽຕນາມພາຄເໜືອນັ້ນ ບ່ແມ່ນເຣື່ອງງ່າຽດາຽສຳຣັບແມ່ ຍິງພ້ອມລູກເລັກເດັກແດງ ນາຽຣ້ອຽຫຫາຣວຽຕມິນຫ໌ບອກໃຫ້ຮູ້ວ່າຍ້ອນກາຣເອົາ ໃຈໃສ່ຂອງນາຽທ່ວນຽົ່ງສາຽລັບວຽຕມິນຫ໌ໃນບາງກອກໂດຽໄດ້ທຸ່ມເທເງິນຫລວ ຫລາຍລ້ານບາຫ ເພື່ອຊື້ຈາງເຈົ້າໜ້າທ່ີ່ຫຼາຽແຂນງ-ຫຼາຽແທ່ງ-ຫຼາຽຕອນ-ຫຼາຽ

ຣະດັບຂອງໄທຽ ທັງໃນບາງກອກແລະຕາມສາຽທາງທີ່ຜ່ານໄປ ຊື້ຈ້າງເອົາໜັງ
ສືເດີນທາງທີ່ເປັນຊື່ແລະນາມສະກຸລປອມເພື່ອໃຫ້ພົ້ນຈາກການກວດຄົ້ນ ຂອງເຈົ້າ
ໜ້າທີ່ໄທຽໃນຣັຖບາລຂອງຈອມພົລ ປ. ພິບູລສົງຄ໌ຄາມ ທີ່ກຳລັງປາບປາມຂບວນ
ການນົລາວອິສຣະພັດຖິ່ນຕົກຄ້າງຢູ່ໃນແຜ່ນດິນໄທຽໃນຂນະນັ້ນ.

ຕ້ອງຊື້ໜັງສືຜ່ານແດນດ້ວຽຣາຄາແພງໆ ເພື່ອໃຫ້ສາມາຣຖ໌ໂດຽສາຣໄດ້
ດ້ວຽເຄື່ອງບິນອອກຈາກບາງກອກໄປຍັງຢ່າງກຸ້ງເມືອງເອກຂອງພະມ້າ ເມື່ອອອກ
ຈາກພະມ້າກໍຕ້ອງລົງເຮືອເດີນທາງໆທະເລໄປຍັງສົງຫ໌ກະໂປ ແລ້ວຕໍ່ໄປຍັງຮ່ອງ
ກົ້ງ ຈຶ່ງເດີນທາງຕໍ່ດ້ວຽຣົຖຍົນຕ໌ເຂົ້າໄປຍັງເມືອງມົກເຈົ໋າໃນແຜ່ນດິນຈີນຕອນໄຕ້
ທີ່ຕິດກັບພາຄເໜືອສຸດຂອງວຽຕນາມ ແລ້ວເຂົ້າສູ່ສາຍແດນວຽຕນາມເຂຕ
ແຂວງທັນທ໋ອມາຍັງເມືອບ່າຽເຫືອງ ຜ່ານຕໍ່ມາທາງບ້ານຈຽງຈຶ່ງສາມາຣຖ໌ເຂົ້າ
ມາຍັງທີ່ຕັ້ງລັບຂອງຣັຖບາລລາວອິສຣະດັ່ງກ່າວ.

ການມາເຖິງຂອງສາມຄອບຄົວຜູ້ນຳລາວອິສຣະໃນວັນແຣກ ກໍມີບັຽຫາເລັກ
ນ້ວຽ ເພາະພູມີ ວົງວິຈິຕກັບຄຳຜາຽ ບຸບຜານັ້ນ ນອນຮ່ວມກັນຢູ່ໃນເຮືອນຍາວ
ແຕ່ສຳຣັບສຸພານຸວົງສ໌ນັ້ນພາລູກເມັຽນອນອຸ່ນອຸຕຸດີ ເພາະມີເຮືອນຕູບນອນສ່ວນຕົວ
ຢູ່ກ່ອນແລ້ວ ສນັ້ນໃນວັນຕໍ່ມາຈຶ່ງໄດ້ສັ່ງຢຸດການຣຽນໄວ້ຊົ່ວຄາວ ແລ້ວຟ້າວພາກັນ
ໄປປຸກເຮືອນນອນຫຼັງໃໝ່ ໃຫ້ຄອບຄົວຂອງພູມີວົງວິຈິຕ ແລະຄອບຄົວຂອງຄຳຜາຽ
ບຸບຜາ ແລະຕື່ມຕໍ່ເຮືອນນອນຄອບຄົວສຸພານຸວົງສ໌ໃຫ້ກ້ວ້າງອອກ.

ເອກຣາຊທີ່ຂາດສຸພານຸວົງສ໌....

ຣັຖບາລຝຣັ່ງເສສໄດ້ຍອມມອບເອກຣາຊອັນສົມບູຣນ໌ໃຫ້ແກ່ຊາຕລາວ ໃນວັນທີ 22
ຕຸລາ 1953 ຊຶ່ງແມ່ນເຈົ້າຊີວິຕສີສວ່າງວົງສ໌ໄປເຊັນຣັບເອົາດ້ວຽຕົນເອງຈາກປະ
ທານາທິບໍດີ **Vincent AURIOL** ຂອງຝຣັ່ງເສສທີ່ນະຄອຽປາຣີສ ຄົນລາວທັງປະ
ເທສຕ່າງກໍຊື່ນຊົມທີ່ໄດ້ຣັບເອກຣາຊສົມບູຣນ໌ແບບແລ້ວ ປວັຕສາສຕຣ໌ຊາຕລາວທີ່
ເປັນເມືອງຂຶ້ນຂອງຊາຕອື່ນນານເຖິງ 200 ກວ່າປີນັ້ນກຳລັງຈົບສິ້ນລົງ ແຕ່ຕ໊ອສຸ
ພານຸວົງສ໌ຢູ່ໃສ.? ກຳລັງເຣັດຫຍັງຢູ່..? ດ້ວຽເຫຕຸໃດຈຶ່ງບ່ຽອມເຂົ້ານາຣ່ວມຊົມ
ຊື່ນກັບເອົາເອກຣາຊທີ່ສົມບູຣນ໌ຂອງຊາຕລາວ ຊຶ່ງສຸພານຸວົງສ໌ເອງເຄີຽກ່າວອ້າງ
ໄວ້ວ່າຈະທຳການຕໍ່ສູ້ຕໍ່ໄປຈົນໄດ້ເອກຣາຊມາໃຫ້ຊາຕລາວ ແຕ່ເມື່ອຊາຕລາວຄົນ
ລາວ ມີເອກຣາຊເປັນຂອງຕົນເອງແລ້ວ ດ້ວຽເຫຕຸຜົລໃດອີກສຸພານຸວົງສ໌ຈຶ່ງບ່ມາ?
ສຸພານຸວົງສ໌ຢາກໄດ້ຫຍັງຕື່ມ? ສຸພານຸວົງສ໌ຄຽດໃຫ້ໃຜ.? ແລະກຳລັງຫຼົງກົລຈິຕະ
ສາສ໌ການເມືອງຂອງຂອງໃຜ.? ຈຶ່ງບ່ຽອມເຂົ້ານາຣ່ວມສລອງສເລີມວັນເອກ

ຣາຊຂອງຊາຕຕົນເອງກັບເຜື່ອນຮ່ວມສາຽເລືອດດຽວກັນ..?.

ໃຫ້ຜູ້ອ່ານທົບທວນຄຳສັນຍາສັຈຈະທັມຂອງສຸພານຸວົງສ໌ທີ່ຮັບປາກໄວ້ກັບເຈົ້າ ເພ້ຊຣາຊ ຮັຕນະວົງສາຜູ້ອ້ານ ຽທີ່ບ້ານກອກໃນທ້ານ ຽເດືອນພຶສຈິກາ 1949 ກ່ອນຈະ ເດີນທ້ານຂ້ານແມ່ນ້ຳຂອງລັດເລາະຫຼີກກຳລັງທຫ້ານຝຣັ່ງເສສ ໄປຈົນເຖິງເຂຕ ນ້ານ້ານ ໂດຽພ້ານັ້ຄພວກທີ່ມີຢູ່ບ່ເທ່ົ້ານໃດຄົນປົນປ່ານ ຽຂ້ານສັນຜູ້ຫວ້ງໄປຂໍຄ້ານ ຊ່ວ ຽເຫຼືອຈ້ານກພວກວ ຽຕມິນຫ ຈ້ານກສຳນວນຣາຊ້ານສັພທ໌ທີ່ເປັນຖ້ອ ຽຄຳອ່ອນນ້ອ ຕ້ານປະເພນີປໂຍກທ່ົ້ານ "ຕ້ານໃດທ່ົ້ານຝຣັ່ງເສສຍັງບ່ຍອມມອບເອກຣາຊທ່ົ້ານສົມບູຣນ໌ ໃຫ້ແກ່ຊ້ານຕລ້ານແລ້ວ ຂນ່ອມກ້ານະທ້ານກ້ານຕ່ໍ້ສູ້ອີກຕ່ໍ້ໄປຈົນກ່ານ້ານະໄດ້ມັນມ້ານມອບ ໃຫ້ແກ່ຊົນຊ້ານຕລ້ານ" ຂອງສຸພານຸວົງສ໌ນັ້ນມັນຍັງກ້ອງເກ່ືອນເຕືອນໂກນຫູຂອງເຈົ້າ ເພ້ຊຣາຊ ຮັຕນະວົງສ໌ຢູ່ຕ່ໍ້ມ້ານ ເມ່ືອເຫັນເປັນເຊ່ັ້ນນັ້ນເຈົ້າເພ້ຊຣາຊກ້ານ້ານ້ານ ຄິດ້ໆໄດ ວ່ານ້ານຕົນເອງຖືກສຸພານຸວົງສ໌ນ້ອ້ວ້ານ ຫຼືວ່ານ້ານຕົນເອງກ້ານລ້ວ້ານ ຫ້ານ ສຸນ້ານຸວົງສ໌ກັ້ນແ ເຈົ້ານ້ານເພ້ຊຣາຊ ນ້ານ ນ້ານ ນ້ານ

ໃນຄນະທີ່ເຜື່ອນຮ່ວມຊາຕ ກຳລັງພາກັນຊື່ນຊ້ອງຍິນດີຕໍ່ເອກຣາຊທີ່ສົມບູຣນ ນັບແຕ່ວັນທີ 22 ຕຸລາ 1953 ນັ້ນສຸພານຸວົງສ໌ກໍໄດ້ນຳເອົາຂບວນການລາວອິສຣະ ຂອງຕົນເຂົ້າໄປເປັນສະມາຊິກຖາວອນຂອງສຫະພັນທ໌ 3 ຊາຕອິນດູຈີນ ອັນມີລາວ ອຽຕນາມແລະຂເມຣ ນັບແຕ່ມີການປະຊຸມໃຫ່ຽຄັ້ງວັນທີ 13 ສິງຫາ 1950 ທີ່ ເຂຕເມືອງຊົງບາຽໃນແຂວງຕວຽນກວາງພາຄເໜືອສຸດຂອງວຽຕນາມເທື່ອນັ້ນ ກໍ ໄດ້ກ່ວ່ເຖິງຊາຕາກັມຂອງສາມຊາຕອິນດູຈີນຊຶ່ງມີຝຣັ່ງເສສຍຶດຄອງຢູ່ ຫາກຈະ ທຳການຂັບໄລ່ຝຣັ່ງເສສກໍຕ້ອງຊ່ວຍກັນ ຍ້ອນຄຳສັຈຈະສາບານທີ່ຂໍຮ່ວມເປັນຮ່ວມ ຕາຽແທນກັນໄດ້ເໝືອນອ້າຍນ້ອງທີ່ເກີດຈາກທ້ອງແມ່ດຽວກັນນີ້ເອງ ຈຶ່ງເຮັດໃຫ້ ສຸພານຸວົງສ໌ຫລົງລືມຄຳສັຈຈະທັນທີ່ຕົນເອງເຄີຍໃຫ້ໄວ້ແກ່ເຈົ້າເຜືຊຣາຊອ້າຍ ແລະ ຈຳໃຈຢູ່ຮັບໄຊ້ຂບວນການວ໌ອຽຕມິນທ໌ຕໍ່ໄປ ເພາະຝຣັ່ງເສສບໍ່ທັນມອບເອກຣາຊໃຫ້ ວຽຕນາມ.

ພວກວຽຕມິນທ໌ບໍ່ພໍໃຈໃນເອກຣາຊລາວ ຈຶ່ງຟ້າວວາງແຜນການໃໝ່ໂດຍ ທຳການຄວບຄຸມກຳລັງລາວອິສຣະໃຫ້ແໜ້ນເຂົ້າຕື່ມອີກ ເພື່ອປ້ອງກັນການທຳ ຣະຍ໌ສຄຳສາບາລຈາກສຸພານຸວົງສ໌ ຈຶ່ງທຳການຍ໌ກຍ້າຽສູນຍ໌ກາງຂອງສຸພານຸ ວົງສ໌ໄປຍັງເຂຕເມືອງກຳທູຽໃນແຂວງທັນຫ໊ວຄືນອີກໃນຕົ້ນຣະດູໜາວຂອງ1953 ນັ້ນເລີຽ ໂດຽອ້າງເຫຕຸຜົລວ່າຽໆວ່າເຖິງຝຣັ່ງເສສຈະມອບເອກຣາຊທີ່ສົມບູຣນໃຫ້ ແກ່ລາວແລ້ວກໍຕາມ ແຕ່ຝຣັ່ງເສສກໍກຳລັງເສີມກຳລັງຣົບທັງທາງພາຄພື້ນດິນກັບ ທາງອາກາສຢ່າງຜິດສັງເກຕ ສນັ້ນເພື່ອຄວາມປອດພັຍກໍຕ້ອງໝີເລີກເຂົ້າໄປໃຫ້ ໄກໃນດົງດິບຂອງດິນວຽຕນາມຕື່ມອີກ.

ກ່ອນຈະສິ້ນປີ ຄສ.1953 ພວກວຽຕມິນທ໌ກໍຟ້າວແຈກຢາຽເອກສາຣ ການ ເມືອງແນວໃໝ່ໃຫ້ສຸພານຸວົງສ໌ແລະທ່ວກອງທັພລາວອິສຣະ ໂດຍແມ່ນຄຳສັ່ງ ຂອງໂຮຈິມິນທ໌ປະທານສຫະພັນທ໌ສາມຊາຕອິນດູຈີນວ່າ...

" ກອງກຳລັງທຫາຣອາສາສມັຄຣ໌ຂອງວຽຕມິນທ໌ທີ່ເຂົ້າໄປສູ້ຣົບກັບທຫາຣຝຣັ່ງ ເສສໃນລາວນັ້ນ ໃຫ້ພາກັນເອີ້ນວ່າກອງກຳລັງທຫາຣລາວອິສຣະຂອງສຸພານຸວົງສ໌ ແຕ່ບໍ່ໃຫ້ເວົ້າວ່າທຫານວຽຕນາມເໜືອເດັດຂາດ....ວຽຕມິນທ໌ຊ່ວຍຣົບໃນລາວຟຣີ ບໍ່ມີມູລຄ່າໃດໆ, ສນັ້ນຈຶ່ງໃຫ້ຄົນລາວຮັກແພງແລະຊ່ວຽເຫຼືອທຸກພາຣະກິຈ ທຸກຫົນ ແຫ່ງທີ່ທຫາຣວຽຕມິນທ໌ຜ່ານໄປໃນດິນແດນລາວ "

ແລະໃນເວລາຕໍ່ມາບໍ່ນານ ກອງກຳລັງທຫາຣວຽຕນາມເໜືອຈຳນວນຫຼາຽກອງພົລ ກໍຖືກສົ່ງເຂົ້າມາເພີ່ມໃນປະເທສລາວຕື່ມອີກ ໂດຍອາສັຍສັນຍາແນວຮ່ວມປົດປ່ອຍ

ສາມຊາຕອິນດູຈີນເປັນເງື່ອນໄຂສຳຄັນ ຫລັງຈາກນັ້ນມາຂ່າວການປະທະກັນແບບນອງເລືອດກັບກຳລັງທະຫານຝຣັ່ງເສສ ຢູ່ຕາມແນວສາກແດນພາຄເໜືອຂອງລາວກໍຣະເບີດຂຶ້ນຢ່າງດຸເດືອດຮຸນແຮງ ແຕ່ຝຣັ່ງເສສກໍຮູ້ວ່າພວກວຽຕມິນຫ໌ໄດ້ເຣີ່ມເສີມສ້າງກຳລັງທະຫານຂອງພວກຕົນຢ່າງຂນານໃຫ່ຍແຕ່ຕົ້ນປີ ຄສ. 1952 ພຸ້ນ.

ທະຫານວຽຕມິນຫ໌ ໃນດິນລາວ....

ຫົວເຣື່ອງຂ້າງເທິງນີ້ ຜູ້ຂຽນບໍ່ໄດ້ແຕ່ງຫຼືສັຣຄ໌ເສກມັນຂຶ້ນມາເອງ ແຕ່ໄດ້ລອກກ່າຽອອກມາຈາກເອກສາຣປວັຕສາສຕຣ໌ລາວຫຼາຽສບັບ ທີ່ເວົ້າແບບດຽວກັນ ເພື່ອບໍ່ໃຫ້ເປັນການກ່າວຫາພວກວຽຕມິນຫ໌ແຕ່ຝ່າຍດຽວ ຜູ້ຂຽນຈຶ່ງຍຶດອາສັຍຄຸນສົມບັຕຣ໌ຂອງນັກຂຽນທີ່ບໍ່ເຫັນແກ່ຕົວມາເວົ້າຂ້າງຕົນເອງ ຈຶ່ງຂອນເຊີນໃຫ້ຜູ້ອ່ານຕິດຕາມເຣື່ອງການຣົບສນິດເລືອດໄຫລຜ່ນດິນຣະຫວ່າງທະຫານຂອງຝຣັ່ງເສສ ປະສົມທະຫານກອງທັພແຫ່ງຊາຕລາວກັບກຳລັງວຽຕມິນຫ໌ໃນດິນຂອງລາວຕໍ່ໄປ.

ວຽຕມິນຫ໌ບຸກໜ້າເຂົ້າມາຕີຝຣັ່ງເສສເຖິງດິນລາວ ດ້ວຍກຳລັງເຖິງ 125 ພັນຄົນ ແປຽບເປັນໄດ້ເຖິງ 7 ກອງພົລໃຫ່ຍກັບ 6 ກອງພົລນ້ອຍ ຫາກໄລ່ຮວມຈຳນວນທະຫານລາດກອງຫຼວນອີກ 150 ພັນຄົນເຂົ້າ ໂຮຈິມິນຫ໌ກໍຈະມີກຳລັງພົລເຖິງ 275 ພັນຄົນ ວຽຕມິນຫ໌ມີ 4 ກອງພົລໃຫ່ຽຄື (ທີ 304+312+316+325) ປະມານ 36-48 ພັນຄົນສເພາະໃນເຂຕພາຄເໜືອຂອງລາວ ຣະຫວ່າງຕົ້ນປີ 1953 ພໍເຖິງຕົ້ນຣະດູໃບໄມ້ປົ່ງປິດຽວກັນກອງພົລທີ 312 ກໍບຸກຕີລ່າຽທະຫານຂອງຣາຊອານາຈັກຣ໌ລາວປະສົມຝຣັ່ງເສສທ່ວແຂວງຊຳເໜືອສວ່ນກອງພົລ 304 ກໍບຸກຕລູຽມາເຖິງເຂຕໜອງແຣດແລ້ວຍຶດເອົາຖນົນເລຂທີ 7 ເພື່ອເດີນທັພຕໍ່ເຂົ້າສູ່ຊຽງຂວາງ ຈຶ່ງເກີດປະທະກັບທະຫານຝຣັ່ງປະສົມທະຫານກອງທັພຢ່າງດຸເດືອດ ທັງສອງຝ່າຍໄດ້ຮັບຄວາມເສັຍຫນັກ ທະຫານວຽຕມິນຫ໌ຖືກຂ້າຕາຽມາກກວ່າທະຫານຝຣັ່ງເສສເພາະຖືກເຄື່ອງບິນຣົບຖິ້ມຣະເບີດ.

ສວ່ນກອງພົລທີ 316 ກໍໄປແສດງກຳລັງຂົ່ມຂູ່ທະຫານຝຣັ່ງທີ່ດຽນບຽນຟູ ເຮັດໃຫ້ທະຫານຝຣັ່ງເສສຕ້ອງຖອນຈາກທີ່ໜັ້ນໄປ ຫລັງຈາກສົ່ງໜຶ່ງກອງພັນເຂົ້າຍຶດຄ່າຍເປົ່າດຽນບຽນຟູໄວ້ແລ້ວ ວຽຕມິນຫ໌ອີກໜຶ່ງກອງພັນກໍຖືກແຍກລົ້ງຕາມລອ່ງນ້ຳຊູເຜື່ອນາບຂູ່ເມືອງຫລວງພຣະບາງ ອີກກອງພັນໜຶ່ງມຸ່ງໜ້າໄປຍັງຜົ້ງສາລີນາບຂູ່ຫ້ວຍນ້ຳທາ ເສນາທິການທະຫານຝຣັ່ງເສສກໍສົ່ງທະຫານອາກາສ 2 ກອງພັນຈາກຮາໂໜ່ຍມາໂດດຈ້ອງລົ້ງໄກ້ໆກັບດຽນບຽນຟູ ແລ້ວກໍຍຶດເອົາທີ່ໜັ້ນເດີມຄືນມາໄດ້ຫລັງຈາກຍິງຕໍ່ສູ້ກັນເຖິງ 3 ຊົ່ວໂມງ ທັນທີທີ່ໄດ້ທີ່ໜັ້ນຄືນມາກໍມີທະຫານຮາບ

ອາກາສຝຣັ່ງເສສ ອີກ 3 ກອງພັນແລະທະຫານປືນໃຫຍ່ໜຶ່ງກອງພັນ ເຂົ້າມາຕັ້ງທີ່ໝັ້ນຖາວອນຢູ່ໃນຄ່າຍດອນບອນຟູ.

ກຳລັງອຸຕມິນຫ໌ຈຳນວນໜຶ່ງ ກໍເດີນລັດປ່າຮົກແຄມນ້ຳເມີນໄປເມືອງລານ ທະຫານຝຣັ່ງເສສຕົກໃຈຕື່ນເພາະປຸບປັບກໍມີອຸຕມິນຫ໌ມາໂປໂລຂຶ້ນໄກໆຄ່ານ ຂອງຕົນຄື ຖ້ຳລາ-ຫົວເມືອງ-ບ້ານບານ ທີ່ຕັ້ງຢູ່ຣະຫວ່າງທ່ຽງໄທຫົນ-ຊຸຽງຂວາງ-ເມືອງເປີນ-ຊຳເໜືອ ອຸຕມິນຫ໌ 2 ກອງຮ້ອຍເຂົ້າຕີຄ່ານທະຫານກອງປາບທີ່ປາກເລົາ ຣົບກັນນານເຖິງ 3 ຊົ່ວໂມງອຸຕມິນຫ໌ຈຶ່ງຍຶດຄ່ານປາກເລົາໄວ້ໄດ້ ທະຫານອຸຕມິນຫ໌ຖືກຂ້າຕາ 18 ຄົນແລະໄດ້ຮັບບາດເຈັບອີກ 24 ຄົນ ສ່ວນທະຫານກອງປາບລາວຕາຍ 1 ຄົນ ຖືກຈັບໄດ້ 1 ຄົນແຕ່ຖືກອຸຕມິນຫ໌ສັ່ງທານໃນເວລາຕໍ່ມາ.

ຕໍ່ຈາກນັ້ນກຳລັງທັພຂອງອຸຕມິນຫ໌ກໍຕລຸຍລົງມາເຖິງນ້ຳບາກ ຈົນເຖິງເມືອງອຍ ຊຶ່ງບັດນີ້ຢູ່ຫ່າງຈາກຫຼວງພຣະບາງພຽງ 20 ກລມ. ເທົ່ານັ້ນສ່ວນກະອົບກະອາຍໃຫ້ແກ່ກອງທະຫານຝຣັ່ງ-ລາວ ທີ່ຮັກສານະຄອນຫຼວງພຣະບາງບໍ່ນ້ອຍເລີຍ ເພາະກະສັດຣຍ໌ລາວບໍ່ຍອມອົພຍົບອອກໜີ ສນັ້ນຝຣັ່ງເສສຈຶ່ງຮີບຮະດົມທັ້ງກຳລັງທະຫານມາເພີ່ມໃນລາວ ໃນບໍ່ເທົ່າໃດວັນອີກຕໍ່ມາອຸຕມິນຫ໌ກອງພົລທີ 316 ກໍບຸກຕີນະຄອນຫຼວງພຣະບາງຢ່າງດຸເດືອດ ກອງທັພອາກາສຝຣັ່ງເສສສົ່ງເຄື່ອງບິນຮົບຂຶ້ນຖລົ່ມຈົນລ່າຖອຍໄປໃນທີ່ສຸດ ອຸຕມິນຫ໌ໄດ້ຮັບຜົລເສັຍຫາຍຫລາຍກວ່າຝຣັ່ງເສສແລະຖືມຊາກສົພຜູ້ຕາຍໄວ້ຈຳນວນມາກ ໃນການຮົບເທື່ອນີ້ໄດ້ມີກຳລັງທະຫານລາວອິສຣະກອງຮ້ອຍຣາຊວົງສ໌ຂອງສີສວາທ ແກ້ວບຸນຍັນ ທ໌ 30 ຄົນ ກັບໝ່ວຍໂຄສນາຊວນເຊື່ອຂອງສົງຫ໌ກະໂປ ສີໂຄຕຣ໌ຈຸນນະມາລີ+ສີຊຸນະ ສີສາຣ+ບຸນຍົງ ວໍຣະສາຣສົບກວ່າຄົນຕິດຕາມມານຳ ແລະຈົນເຖິງທ້າຽເດືອນພຶສພາຈຶ່ງໄດ້ຂ່າວວ່າກອງພົລທີ 304+312+316 ໄດ້ຖືກສັ່ງໃຫ້ຖອນອອກໄປຈາກແຂວງອຸຽ ຈັນທ໌ ຈາກທ່ຽງໄທຫົນແລະຈາກຫຼວງພຣະບາງໄປ.

ກ່ອນສິ້ນປີ 1953 ພວກອຸຕມິນຫ໌ ຍັງສົ່ງກອງພົລທີ 325 ຂອງຕົນກັບເຂົ້າມາຍັງພາຄກາງຂອງລາວອີກ ໂດຽທຳການຸກໂຈມຕີກຳລັງຣັຖບາລທ່ວເຂຕທ່າແຂກແລ້ວກໍຍຶດເອົາໄວ້ໃນທ້າຍເດືອນທັນວາ ພໍມາເຖິງວັນທີ 28 ເດືອນດຽວກັນ ອຸຕມິນຫ໌ກໍຍຶດເອົາບໍ່ໂພນຕ້ວ ແລ້ວກໍເດີນທັພຕໍ່ໄປຕາມເສັ້ນທາງເລຂ 9 ເຜົ້າເມືອງເຊໂປນແລະທ່າໂຂ່ງຈົນຮຽບຮາບເປັນເຖົ້າຖ່ານໃນວັນທີ 15 ກຸມພາ 1954.

ແມ່ນມີຂ່າວຖອນອອກໄປແລ້ວກໍຕາມ ແຕ່ພວກອຸຕມິນຫ໌ບໍ່ໄດ້ລືມທີ່ທີ່ຈະກັບຄືນມາລາວອີກ ສນັ້ນພໍປີເກົ່າຜ່ານໄປທະຫານອຸຕມິນຫ໌ກອງພົລທີ 304 ກໍຍ້ອນກັບ

ເຂົ້າມາໃໝ່ໃນທ້າຍເດືອນກຸມພາຂອງປີ 1954 ແລ້ວກໍຕີຕ່ານຽທຫາຣຝຣັ່ງເສສລົງ ມາຕາມລອ່ງຢູແລະປິດລ້ອມຄ່າຍເມືອງຊຸຍ ຝຣັ່ງເສສໄຊ້ເຄື່ອງບິນຖິ້ມຣະເບີດຢູ່ ບານຫລາຍຊົ່ວໂມງ ອຽຕມິນຫ໌ຈຶ່ງແຕກຖອຍກັບໄປ ບໍ່ເທົ່າໃດວັນຕໍ່ມາກໍໄປຊຸມນຸມ ກັນທີ່ເຂຕນ້ຳບາກແລະເມືອງວອຽ ຊຶ່ງຫ່າງຈາກເມືອງຫຼວງພຣະບາງປະມານ 50 ກລມ ເທ່ານັ້ນ.

ກຳລັງວອຽຕມິນຫ໌ພສອ່ນໜຶ່ງຂອງກອງພົລທີ 304 ກໍມານາບຂູ່ ປາກເຊືອງ ດອນຈ໋ແລະຜາໂອ ຊຶ່ງຕອນນີ້ກໍຍິ່ງໄກ້ນະຄອຣຫຼວງພຣະບາງພຽງ 10 ກລມ. ມີ ກາຣສູ້ຣົບກັນທີ່ປາກເຊືອງ ຝ່າຽຝຣັ່ງເສສອາສັຍເຄື່ອງບິນຣົບເຂົ້າຊ່ອຽທ້ວງກາງ ເວັນກາງຄືນ ທຫາຣວຽຕມິນຫ໌ລົ້ມຕາຽແລະຖືກຈັບເປັນສເລີຍຈຳນວນມາກ ກອ່ນ ພວກທີ່ເຫຼືອພາກັນຖອນອອກໄປ ທຫາຣຝຣັ່ງເສສປະສົມກຳລັງກອງທັພລາວກວາດ ລ້າງທຫາຣແຕກທັພຂອງວອຽຕມິນຫ໌ແລ້ວກໍຍຶດທີ່ໝັ້ນນ້ຳບາກຄືນມາໄດ້ ຈາກນັ້ນກໍ ໄລ່ຕີວອຽຕມິນຫ໌ ຈົນເຖິງເມືອງວອຽ-ເມືອງຊຸຍ-ໄປຫຼວງນ້ຳທາ-ໄປນາງາ+ນາຊອມ ຊຶ່ງເປັນຕົ້ນທາງເຂົ້າສູ່ຽຽມບຽມຝູ ວຽຕມິນຫ໌ກໍຖອນຄືນເຂົ້າດິນວຽຕນາມ.

ກຳລັງລາວອິສຣະຂອງສຸພານຸວົງສ໌ເລືອກຣົບກອນກຳລັງກອງທັພ ໃນແຂວງ ວຽງຈັນຫນ໌ກອ່ນແທ່ງອື່ນໂດຽກາຣລັດຍິງຣົຖໂດຽສາຣຣະຫວ່າງເມືອງຊຸນະຄາມ-ໂພນໂຮງ-ປາກຊັນ ນອກນີ້ກໍຈັບກຸມພວກນາຽບ້ານ+ຕາແສງຂອງຝ່າຽຣັຖບາລ ຫຼອນໂຈມຕີຄ່າຍປາກຊັນ-ປາກທວາຽ-ບໍຣິຄັນ ທຳກາຣຣະເບີດຂົວເມືອງທຸຣະຄົມ ໂພນໂຮງແລະຈູດເຮືອບັ໊ກທີ່ທ່າງອ່ນ ຫຼອນຈູດຄ່າຽກົກແທ່ໄກ້ໆວຽງຈັນຫນ໌ ໂຈມ ຕີຄ່າຽບ້ານເກິນ ແລະຈັບຕົວເຈົ້າເມືອງທຸຣະຄົມໄປ.

ທຫາຣລາດກອງຫຼອນຂອງສຸພານຸວົງສ໌ປະສົມວຽຕມິນຫ໌ ພາກັນເຄື່ອນໄຫວ ໃນເຂຕເມືອງດົງເຫັນ-ຫົນສ່ອ-ນາໝາກເກືອແລະເມືອງສອງຄອນໃນທ້ອງເດືອນ ຽຽອກັນນີ້ພວກວຽຕມິນຫ໌ຽຽກອງພົລຖືກສົ່ງລົງໄປຍັງເຂຕສາຣະວັນ-ອັຕະປື ຍຶດ ຄ່າຽທ້ວຽກອງໃນວັນທີ 7 ກຸມພາ ຕີຄ່າຍເລ່ຽງາມແຕກໃນວັນທີ 10 ກຸມພາ ເຖິງ ວັນທີ 15 ກໍມຸ່ງໜ້າມາຍັງຄົງເຊໂດນຈູດຂົວເຊບັ້ງນອນ ແລ້ວຍຶດເອົາເມືອງສຸວັນ ນະຄີລີໃນທ້າຽເດືອນກຸມພາ 1954.

ໃນຂນະທີ່ສພາພກາຣນ໌ທາງທຫາຣເລ່ັ່ງຕ໊ຽງຢູ່ນີ້ ຝຣັ່ງເສສໄດ້ຕິດຕ່ໍຂ່ໍຄວາມ ຊ່ວຽເຫຼືອຈາກພັນທະມິຕຣ໌ອາເມຣິກາແລະອັ໊ງກລິສ ແຕ່ທ້ັ໊ງສອງພັນທະມິຕຣ໌ບ໊ໍ່ຍອມ ສນອງເພາະກ໊ໍ່ອ່າຈະເປັນກາຣຍ໊ໍ່ວະຍຸສຫະພາບໂຊວຽຕກັບຈີນແຜ່ນດິນໃຫ່ຍ ເມ໊ື່ອ ເປັນເຊ່ັ່ນນ໊ີ ໂຣຈີມິນຫ໌ຈ໊ຶ່ງສວຍໂອກາສສ໊ົ່ງກອງພົລທີ 304 ເດີນທັພເຂ໊ົ້າປະຊ໊ິດ

ເມືອງດຽນບຽນຟູເປັນການດວ່ນ ເພື່ອໄປສົມທົບກັບກອງພົລທີ 308+312+316+325+351 ທີ່ໄດ້ທຳການປິດລ້ອມຄ່າຍຝຣັ່ງເສສໃນບຽນຟູເອົ້າໄວ້ແລ້ວ.

ນາຽພົລນາວາຣ ຜູ້ບັນຊາການທະຫານຄົນໃໝ່ຂອງຝຣັ່ງເສສສົ່ງທະຫານເຖິງ 15 ກອງພັນ ບຸກຕີມິນທຕັ້ງແຕ່ເຂຕເມືອງດານັງ-ຕູຽຫ໋ອໄປຈົນ ເຖິງເມືອງກົງຕູມ ແລະປເລກູຢ່າງວ່ອງໄວ ພວກວຽຕມິນທກໍ່ແກ້ເຜັດຝຣັ່ງເສສດ້ວຽການສົ່ງກົມທີ 103 ແລະ 803ເຂົ້າປິດລ້ອມເມືອງກົງຕູມ+ດັກໂຖ+ດັກດໍ່ເອົ້າໄວ້ໝາແໜ້ນກວ່າ ຝຣັ່ງຈະຖອນຕົວອອກມາໄດ້ກໍ່ອີ່ລາກອີ່ເລືອເລືອດປຽກຮ່າງການໄປເລີຍ ນາຍພົລ ນາວາຣສູນຍ໌ເສັຽຊີວິຕນັກຮົບຝຣັ່ງເສສໃນແຜນການນີ້ຈຳນວນມາກພໍສົມຄວຣ.

ໂຮຈິມິນທຮູ້ດີວ່າຕົນເອງກຳລັງຕີເສີກຫຼາຽໜ້າ ແຕ່ພ້ອມດຽວກັນຝຣັ່ງເສສ ເສສກໍກຳລັງທຳສົງຄາມຫຼາຽດ້ານເໝືອນກັນ ໂຮຈິມິນທກໍ່ມີຂວັນກຳລັງໃຈດີແລະ ໄດ້ປຽບທີ່ຮົບຢູ່ໃນແຜ່ນດິນຂອງຕົນເອງ ແຕ່ທະຫານຝຣັ່ງເສສນັ້ນຢູ່ໄກໃນທະວີບຢູຣົບ ກັບມາຮົບລ້ານ້ຳຝັ່ນກັບເຈົ້າຂອງບ້ານທີ່ຫ່າງໄກເຊັ່ນນີ້ ພວກເຂົ້າຈະທົນໄດ້ອີກຈັກ ປີກໍ່ໃຫ້ມັນຮູ້ແລ້ວຮູ້ຮອດໄປ.

ຍ້ອນການເຮັດເສີກຫຼາຽດ້ານນີ້ເອງ ຈຶ່ງທຳໃຫ້ການຂົນສົ່ງລຳລຽງບໍ່ສະດວກ ທັນກັບເວລາທີ່ຕ້ອງການສຳຮັບກອງທັພຝຣັ່ງເສສ ເພາະພວກວຽຕມິນທຢູ່ໃນດິນ ລາວທຳການຮົບກວນຝຣັ່ງຢູ່ຕລອດ ເພື່ອຫຼອກໃຫ້ຝຣັ່ງຄິດວ່າພວກຕົນຈະຍຶດເອົ້າ ນະຄອນຫຼວງພຣະບາງ ທັ້ງຂັດຂວາງບໍ່ໃຫ້ຝຣັ່ງສົ່ງກຳລັງທະຫານມາເພີ່ມໃນຄ່າຍ ດຽນບຽນຟູໄດ້ສະດວກ.

ການສູ້ຮົບກັນຣະຫວ່າງກຳລັງທະຫານຝຣັ່ງຈຳນວນເກືອບ 20.000 ຄົນທີ່ຢູ່ ເທິງໂນນຫລັງເຕ່າດຽນບຽນຟູກັບທະຫານວຽຕມິນທທີ່ມີກຳລັງທະຫານເຖິງ 50.000 ຄົນທີ່ຫຸ້ມລ້ອມຢູ່ຂ້າງລຸ່ມນັ້ນເປັນໄປຢ່າງດຸເດືອດທີ່ສຸດ ນັກຮົບວຽຕມິນທໄດ້ຜ່ານລາກແກ່ເອົ້າປືນໃຫ່ຽເຖິງ 200 ກະບອກ ປືນຕ່ຳງພູຂຶ້ນມາຍິງຖລົ່ມໃສ່ຄ່າຽຕິດຕໍ່ກັນທັ້ງກາງເວັນກາງຄືນນານເກືອບສອງເດືອນ ໂດຽທະຫານຝຣັ່ງເສສບໍ່ມີທາງໜີຈາກຄ່າຽທາງພື້ນດິນນອກຈາກທາງເຄື່ອງບິນຢ່າງດຽວ ສອງຝ່າຍຮົບກັນແຕ່ວັນທີ 13 ມີນາຈົນເຖິງວັນທີ 07 ພຶສພາ 1954 ພວກວຽຕມິນທຈຶ່ງສາມາຣຖ໋ເຂົ້າຍຶດຄ່າຽດຽນບຽນຟູຈາກຝຣັ່ງເສສໄດ້ສຳເຣັຈ ທະຫານຝຣັ່ງເສສຖືກຂ້າຕາຽແລະບາດເຈັບເຖິງ 13 ພັນ ຄົນ ຖືກຈັບເປັນສເລີຽເສີກອີກ 6.500 ຄົນ ຝ່າຽວຽຕມິນທຖືກຂ້າຕາຽແລະໄດ້ຮັບບາດເຈັບມາກກວ່າຝຣັ່ງເສສເຖິງ 2 ເທ່າຄື 23 ພັນຄົນ.

ເມື່ອສົງຄາມເລືອດດຽນບຽນຟູສຸດສິ້ນລົງແລ້ວ ຜູ້ຂຽນກໍ່ຈະຢຸດເວົ້າເຖິງການ

ສັ ຣ ົ ບ ຂ ອ ງ ອ ຽ ຕ ນ າ ມ ໃ ນ ແ ຜ ່ ນ ດ ິ ນ ອ ຽ ຕ ນ າ ມ ໄ ວ ້ ກ ່ ອ ນ ແ ຕ ່ ຕ ອ ນ ຕ ່ ໆ ໄ ປ ກ ໍ ຈ ະ ຂ ຽ ນ ເ ຮ ື ່ ອ ງ ອ ຽ ຕ ນ າ ມ ຫ ົ ເ ຂ ົ ້ າ ມ າ ຣ ົ ບ ໃ ນ ແ ຜ ່ ນ ດ ິ ນ ລ າ ວ ຕ ື ່ ມ ອ ີ ກ ຕ ອ ນ ນ ີ ້ ສ ົ ງ ຄ າ ມ ອ ິ ນ ດ ູ ຈ ີ ນ ໄ ດ ້ ຍ ຸ ຕ ິ ລ ົ ງ ແ ລ ້ ວ ໂ ດ ຽ ນ ມ ີ ກ າ ຣ ເ ຊ ັ ນ ສ ັ ນ ຍ า ກ ັ ນ ທ ີ ่ ນ ะ ຄ ອ ຣ ເ ຈ ນ ີ ວ า ແ ห ่ ง ป ะ ເ ท ส ส ว ิ ต ເ ซ ີ ຣ ์ แ ล ນ ด ์ ใ ນ ว ั ນ ท ี 20 ก ໍ ร ะ ก ะ ด า ค ส. 1954 ซ ึ ่ ง ก ำ ห ม ด ใ ห ้ ฝ ร ั ่ ง เ ส ส ก ั บ อ ฽ ต ม ิ น ห ์ ย ุ ด ย ิ ง ป ื น ป ล ่ อ ย ป ื น ใ ห ่ ฽ ใ ส ่ ก ั น ใ น ว ั ນ ท ี 06 ส ิ ง ห า ป ิ ด ฽ อ ก ั น ใ น เ อ ล า 08.00 โ ม ง ต ร ์ ง ใ ห ้ ท ห า ร ฝ ร ั ่ ง เ ส ส แ ล ะ อ ฽ ต ม ิ น ห ์ ถ อ ย ก ำ ล ั ง อ อ ก จ า ก ด ิ น ล า ว ผ า ฽ ใ น 120 อ ั น ต ่ ำ จ า ก น ั ้ น ใ ห ้ ท ห า ร ฝ ร ั ่ ง เ ส ส ถ อ ย อ อ ก จ า ก ส ม า ม ร ์ บ เ ข ้ ำ ม า ท ้ อ ม โ ร ม ก ั น อ ู ่ ท ี ่ อ ฽ ว จ ั บ ท ม ์ แ ล ะ เ ข ุ โ ม เ พ ื ่ อ ค อ ฽ ถ ้ ำ ห ่ ฽ อ บ ิ น ก ั บ เ ม ื อ ง เ ม ื อ ง ฝ ร ั ่ ง ส อ ่ ม ก ำ ล ั ง อ ฽ ต ม ิ น ห ์ ใ น ด ิ น ล า ว ก ็ ใ ห ้ ต ฽ ม ก ั บ ไ ป ย ั ง อ ฽ ต น า ม เ พ ื ่ อ ข อ ง ต ั น เ พ ื ่ อ ม ก ั น ส ำ ร ั บ แ ม อ ล า อ ธ ิ ส ะ ข อ ง ส ุ พ า น ุ ว ง ส ์ ท ี ่ บ ่ ย อ ม เ ข ้ ำ ร ่ อ ม ก ั บ ร ั ฐ บ า ล ฝ ่ า ฽ ข อ า น ั ้ น ใ ห ้ พ า ก ั น ข ึ ้ น ไ ป ท ้ อ ม โ ร ม ก ั น อ ู ่ ท ี ่ ส อ ง แ ข ว ง พ า ค เ พ ื ่ อ ค ื ผ ั ว ส า ล ิ แ ล ะ ช ำ เ พ ื ่ อ เ พ ื ่ อ ข อ ก ท า ท ิ น ท า ง เ จ ร ะ จ า เ ข ้ ำ โ ร ม เ ป ็ น ล า ว ด ฽ อ ก ั น ก ั บ ร ั ฐ บ า ล ฝ ่ า ย ข อ า ต ่ ไ ป .

(9) ເ ม ื ອ ง ข ้ ำ ก ั ม ก ໍ ท ั ม ม า เ จ ร ะ จ า ...

ห ล ั ง จ า ก ม ี ส ั ນ ย า ส ง ็ บ เ ส ึ ก อ ิ ນ ด ู จ ี ນ ร ะ ห ว ่ า ง ฝ ร ั ่ ง เ ส ส - อ ฽ ต น า ม เ พ ื ่ อ เ ก ิ ด ข ึ ้ น แ ล ้ ว ก ็ ม ี ก า ร ผ ั ก ร ์ บ ก ำ ม ิ ล ะ ก ั ม ะ ท ิ ก า ร ก อ ด ก า ส า ก ็ ล เ ก ิ ด ข ึ ้ น ค ื อ ิ ນ ด ู จ ี ນ + แ ค ນ า ด า + แ ล ะ โ ป แ ล ນ ด ์ ใ ນ ก า ร ต ก ล ง เ ซ ็ ນ ส ั ນ ย า ย ่ า เ ส ึ ก ก ั ນ เ ม ื ่ อ ว ั ນ ท ี 20 ก ໍ ร ะ ก ะ ด า ນ ั ้ น ม ี 9 ป ะ เ ท ส ร ่ อ ม เ ซ ็ ນ ร ั บ ร ู ้ ค ื อ ั ง ก ิ ด + อ า เ ม ร ิ ก า + จ ี ນ แ ผ ่ ນ ด ิ ນ ใ ห ่ ย + ส ห ะ พ า พ โ ซ อ ฽ ต + ฝ ร ั ่ ง เ ส ส + อ ฽ ต น า ม เ พ ื อ + อ ฽ ต น า ม ไ ต ้ + ล า ว แ ล ะ ข เ ม ร ก ส ั ນ ย า ก ำ ห ม ด ใ ห ้ ท ั ง ฝ ร ั ่ ง เ ส ส แ ล ะ อ ฽ ต ม ิ น ห ์ ถ อ ย ก อ ง ก ำ ล ั ง ข อ ง พ อ ก ต ิ น อ อ ก จ า ก ป ะ เ ท ส ก ั ม ป ู เ จ ั ฽ ฽ เ พ ื ่ อ ใ ห ้ ช า ว ข เ ม ร ไ ด ้ เ ป ็ น เ อ ก ร า ช ส อ ่ ม อ ฽ ต น า ม น ั ้ น ย ั ง ต ้ อ ง แ บ ่ ง เ ป ็ น ส อ ง พ า ค ก ั น อ ู ่ อ ี ก ค ื อ เ ก ่ า เ พ ร ะ ช า ว อ ฽ ต น า ม ไ ต ้ บ ่ ม ี ย ิ ม ร ะ บ อ บ ค อ ม ม ิ อ น ิ ส ต ์ ก อ ง ป ะ ช ุ ม ไ ด ้ ต ก ล ง ย ึ ด เ ส ้ ฽ น ข น า น ท ี 17 เ ป ็ น เ ข ต แ บ ่ ง ช ่ อ ค า ว ข อ ง อ ฽ ต น า ม ส อ ง ร ะ บ อ บ ใ น ช ่ อ ง ท ี ่ ม ี ก า ร ผ ั ก ร ์ บ แ ล ะ ส ง ็ ค า ม อ ิ ນ ด ู จ ี ນ ส ิ ้ น ส ุ ด ล ง ็ แ ล ้ ว น ี ้ ห า ก ส ุ พ า น ุ ว ง ส ์ จ ง ิ ใ จ ท ี ่ จ ะ เ ข ้ ำ ม า ร ่ อ ม ค ะ น า ย า ต ก ั บ ร ั ฐ บ า ล แ ห ่ ง ร า ช อ า ณ า จ ั ก ร ก ็ ย อ ม ไ ด ้ ส ด อ ก เ พ ร ะ ต อ ນ ม ี ส ง ็ ค า ม อ ิ ນ ด ู จ ี ນ ท ี ่ ส ุ พ า น ุ ว ง ส ์ ก ่ า อ ้ า ง อ ู ่ ส เ ม ื อ ่ า " ต ้ อ ง ข ั บ ไ ล ่ ฝ ร ั ่ ง เ ส ส " อ อ ก จ า ก อ ิ ນ ด ู จ ี ນ ก ็ ค ื ใ ห ้ อ อ ก จ า ก ล า ว ใ ห ้ ส ำ เ ร ็ จ แ ต ่ เ ม ื อ เ อ ล า น ั ้ น ม า ร อ ด แ ล ้ ว ส ุ พ า น ุ ว ง ส ์

ກັບກອາດຕ້ອນເອົາພວກລາວອິສຣະທ່ອປະເທສຂຶ້ນໄປເຕ້ຳໂຮມກັນ ຢູ່ທີ່ສອງແຂວງ ພາຄເໜືອຕ່ໍໄປອີກ ຜູ້ມັກອ່ານປຶ້ມປວັຕິສາສຕຣ໌ອາຈຄິດຕັ້ງຄຳຖາມຂຶ້ນມາເອງວ່າ ໄປເຕ້ຳໂຮມກັນຕ່ໍໄປເພື່ອຫຍັງ.?ຈະພາກັນໄປໃສ.? ຢາກໄດ້ເອກຣາຊຈາກໃຜອີກ ສຸພານຸວົງສ໌ກຳລັງຫຼອກຕົນເອງ ຫລືສຸພານຸວົງສ໌ກຳລັງຖືກຄົນອື່ນຫລອກ? ສຸພານຸວົງສ໌ຮູ້ຕົວຫລືບ່ວ່າ ຕົນເອງກຳລັງເຮັດຫຍັງຢູ່.? ເພາະຫາກອີງໃສ່ທິສດີກາຣເມືອງຂັ້ນຕົ້ນຂອງສຸພານຸວົງສ໌ແລ້ວ ຫຼາຽຄົນອາຈເອີ່ຽວ່າ "ບ່ເຂົ້າໃຈ" ແຕ່ຫາກຕ້ອງກາຣທີ່ຈະເຂົ້າໃຈກໍຕ້ອງຕິດຕາມອ່ານຕ່ໍໄປ.

ເມື່ອມີເຂຕເຕ້ຳໂຮມສອງແຂວງຫລັງສັນຍາເຈນີວາ ໂຮຈິມິນຫ໌ກໍ່ວາງແຜນສ້າງເມືອງໃໝ່ ໃຫ້ສຸພານຸວົງສ໌ ກັບຣັຖບາລລາວອິສຣະຂຶ້ນໄກ້ໆກັບໝູ່ບ້ານນາແມວ ທີ່ເປັນບ້ານນ້ອຽໆພຽງສິບຫຼັງຄາເຮືອນເທ່ຳນັ້ນ ແລະກໍ່ຢູ່ຫ່າງຈາກສາຽແດນລາວ ອຽຕພຽງປະມາຣຫນຶ່ງກິໂລແມຕ໌ ພວກອຽຕມິນຫ໌ເກນເອົາປະຊາຊົນອຽຕນາມ ກັບກອງກຳລັງທຫາຣຊ່ວງຈຳນວນເປັນພັນຄົນຈາກແຂວງທັນຫົວ ໃຫ້ມາປຸກສ້າງ ເມືອງໃໝ່ຫລາຽກວ່າຣ້ອຽຫລັງຄາເຮືອນ ໃສ່ເທິງພື້ນທີ່ກວ້າງກວ່າ 10 ກລມ. ມີນ ທິນ ໂຄຽແມ່ນສູນຍ໌ກາງ+ກະຊວງທະບວງກົມຕ່ວງໆ ຂອງຣັຖບາລລາວອິສະຫັ ທຫາຣແລະປະຊາຊົນທີ່ຢູ່ຝ່າຍລາວອິສຣະທ່ອປະເທສຕາມຂໍ້ຕົກລົງເຈນີວາ.

ໃນຂນະທີ່ກັມມະກອຣຊາວອຽຕນາມກຳລັງທຳກາຣກໍ່ສ້າງເມືອງໃນຝັນ ໃຫ້ ແກ່ຣັຖບາລລາວອິສຣະຂອງສຸພານຸວົງສ໌ຢູ່ນັ້ນ ກໍມີພວກແມວລາວອິສຣະຈຳນວນ ນາກທີ່ຢູ່ໄກ້ແດ່ໄດ້ອົພຍົບມາເຖິງກ່ອນ ພວກເຂົ້າຕ້ອງຊ່ວຽຕົນເອງປຸກຕູບພ້ໍໄດ້ຢູ່ ນອນຊ່ວຄາວຣໍຖ້າກາຣກໍ່ສ້າງເມືອງໃໝ່ ໃນວັນຕ່ໍໆມາແລະນານວັນໄປກໍ່ຍິ່ງມາຢູ່ ເພີ່ມຢ່າງຫຼວງຫຼາຽ ຈົນບ່ຮິເວນປ່າຮົກທີ່ກວ້າງໃຫ່ຽໄພສາຣສຸດສາຽຕາຕາມສອງ ຂ້າງທາງຈາກເມືອງປູນໄປຈົນເຖິງເມືອງລຽດແປນຕະເລີດໄປໝົດ.

ບ່ວ່າທີ່ສູນຍ໌ກາງເກ່ຳແລະທີ່ອື່ນໆຂອງຣັຖບາລລາວອິສຣະ ພວກອຽຕ ມິນຫ໌ບ່ຍອມຈັດທີ່ພັກນອນໃຫ້ສຸພານຸວົງສ໌ຢູ່ໄກ້ ກັບໄກສອຣ ພຣົຫ໌ມວິຫາຣຈັກ ເທ່ືອ ພວກອຽຕມິນຫ໌ໄດ້ແຕ້ມແຜນຜັງຂອງເມືອງສ້າງໃໝ່ ອັນມີສຳນັກສູນຍ໌ ກາງ-ທີ່ພັກນອນ-ສະໂມສອຣ-ຄຸ້ມຄ່າຽຕ່ວງໆ ກ່ລ້ວນແຕ່ແຍກຄົນຫັ້ງສອງໃຫ້ໄກ ຫ່ວງຈາກກັນຢູ່ຕຼອດ ເມືອງໃໝ່ໃນຝັນແຫ່ງນີ້ຖືກແບ່ງເປັນ 5 ເຂຕ ໂດຍແຕ່ລະ ເຂຕຈະຫ່ວງກັນເຖິງ 2 ກລມ. ປະທານສຸພານຸວົງສ໌ພ້ອມຄນະອີກສີ່ຄົນຊຶ່ງມີ ພູມີ ວົງສ໌ສີຈິຕ+ໝູຣັກ ພູມສວັຣຄ໌+ສີງຫ໌ກະໂປ ສີໂຄຕຣ໌ຈູນນະມາລີ+ພູນ ສີປະເສີຖໄດ້ ຢູ່ໃນສູນຍ໌ກາງທີ່ເອີ້ນວ່າກອງ 85 ແຕ່ວ່າໄກສອຣ ພຣົຫ໌ມວິຫາຣທີ່ເປັນຣັຖມົນຕຣີ

ປ້ອງກັນປະເທສແລະ ຜບ. ສູງສຸດກອງທັພນັ້ນຢູ່ທີ່ກອງທີ 102 ຊຶ່ງໄກກັນກວ່າສອງ ກິໂລແມຕຣ ມີຄຳໄຕ ສີພັນດອຣ+ສມານ ບຸນຍະເກດເປັນຫົວໜ້າກົມການເມືອງ.

ການຂຽນພາສາລາວດັ້ງເດີມທີ່ພວກຄນະລາວອິສຣະເຄີຽໄດ້ຮ່ຳຮຽນມາແຕ່ກ່ອນນັ້ນ ໄດ້ຖືກປ່ຽນແປງພ້ອມກັບການເກີດຂອງເມືອງໃໝ່ໃນຝັ່ນແຫ່ງນີ້ ເມື່ອງຈາກວ່າເອກສາຣຕ່າງໆຕ້ອງແປອອກມາຈາກພາສາວຽຕນາມ ພວກຄນະລາວອິສຣະຖຽງກັນເອງຍືດຍາວຣະຫວ່າງພວກທີ່ເປັນມຫາອາຈາຣຍ໌ຜ່ານການຮ່ຳຮຽນອອກມາຈາກວັດ ກັບພວກທີ່ມີເຈຕະນາປ່ຽນແປງການສະກົດຂຽນພາສາລາວໃໝ່ ໃນນັ້ນແມ່ນພູມີ ວົງສ໌ວິຈິຕເປັນຄົນສເນີໃຫ້ຂຽນພາສາລາວຕາມ "ສຽງ" ສ່ວນມຫາຄຳພັນທ໌ ພິຣະຈິຕ ສເນີໃຫ້ຂຽນພາສາລາວຕາມອັຄຣະວິທ ີ ແລະຖືກເຄົ້າມູລເດີມເປັນຫລັກ ແຕ່ວ່າເຈົ້າສຸຂ ວົງສັກດ໌ຜູ້ເປັນຫົວໜ້າແປເອກສາຣ ກໍຖຽງຊ່ອຍພູມີ ວົງສ໌ວິຈິຕ ໃຫ້ຂຽນຕາມສຽງຕາມສະດວກຕາມສບາຍແບບງ່າຽໆ ຄົນວຽຕນາມທີ່ປຶກສາເກີດຮຳຄານຫູຈຶ່ງບອກໄປວ່າ "ຂຽນໃຫ້ອ່ານໄດ້ລະແມ່ນໂທຍ" ສນັ້ນເມື່ອຖືກນາຽສັ່ງ ພວກລາວອິສຣະກໍພາກັນນັ່ງງຽບ ແລ້ວການສະກົດພາສາລາວຕາມເຄົ້າກໍຫາຽໄປຈາກຄົນລາວອິສຣະ ນັບແຕ່ບັດນັ້ນເປັນຕົ້ນມາ.

ໃນເມືອງນະຄອຣອິສຣະແຫ່ງຄຽນີ້ເອງ ທ່ອຽຕມິນຫ໌ໄດ້ຄ່ອຽໆຕັດສິທທ໌ຣັບຜິດຊອບທາງການເມືອງຂອງສຸພານຸວົງສ໌ລົງເທື່ອລະນ້ອຽ ໂດຍຈຳກັດການປາກົຖຕົວໃນກຸ່ມລາວອິສຣະລົງເກືອບທັງໝົດ ຈົນກະສັຕຣຍ໌ໂຮ້ບັລລັງກ໌ແທບບໍ່ມີອຽກໃນແຕ່ລະວັນ ຊຶ່ງກົງກັນຂ້ວາມກັບໄກສອຣ ພຣົຫ໌ມວິທາຣທີ່ຖືກພວກວຽຕມິນຫ໌ສົ່ງເສີມໃຫ້ຕັດໜ້າສຸພານຸວົງສ໌ດ້ວຽການອອກປາກົຖຕົວ ໃນສັງຄົມການເມືອງຂອງລາວອິສຣະມາກຂຶ້ນ.

ສຸພານຸວົງສ໌ກົ້ມໜ້າທົນ ບຸຄຄົລທີ່ເຄີຍຢູ່ກັບສຸພານຸວົງສ໌ບອກເລົ່າໃຫ້ຜູ້ຂຽນຟັງວ່າ "ສເດັຈເຫງົາແລະທໍ້ແທ້ໃຈທີ່ສຸດ" ຕື່ນເຊົ້າມາກໍຂ້າເວລາຖົ້ມດ້ວຍການອ່ານເອກສາຣຈົນຄ່ຳກໍເຂົ້ານອນ ຈົນຫຼາຽໆເດືອນຕໍ່ມາກໍພາໃຫ້ຄິດນັ້ນຄິດນີ້ເໝືອນຄົນຈົນປັນຍາ ສຸພານຸວົງສ໌ຄິດຝັນແມ່ນກະທັ້ງຢາກປ່ຽນຊື່ບ້ານຊື່ເມືອງຂອງລາວ ຄິດຈະປ່ຽນຊື່ເມືອງຫຼວງພຣະບາງໃຫ້ເປັນ ເມືອງພຣະບາງ ຈະປ່ຽນເມືອງຜ້ງສາລີໃຫ້ເປັນເມືອງຍອດອູ ຢາກປ່ຽນເມືອງຫ້ວຽຊາຽໃຫ້ເປັນເມືອງບໍ່ແກ້ວ ຄິດຈະປ່ຽນນະຄອຣວຽງຈັນໝໃຫ້ເປັນນະຄອຣສຣີສັຕນາຄ ຢາກໃຫ້ທ່າແຂກມາເປັນສຣີໂຄຕຣ ຢາກໃຫ້ສວັຣຄົນະເຂຕມາເປັນເມືອງສວັຣຄ ຢາກໃຫ້ເມືອງປາກເຊການເປັນເມືອງເຊໂດນ ສຸພານຸວົງສ໌ໄດ້ນຳເອົາຄວາມຝັນຂອງຕົນຂຶ້ນໄປສເນີໃນ

ກອງປະຊຸມຂອງຣັຖບາລລາວອິສຣະໃນເວລາຕໍ່ມາ ແຕ່ບໍ່ມີໃຜເຫັນດີໃຫ້ປ່ຽນໃນ ຕອນນີ້ເພາະບໍ່ແມ່ນວຽກຮີບດວ່ນແລະຈຳເປັນ ຈຶ່ງຖືກງົດໄວ້ກ່ອນເພາະກົວວ່າ ຈະເປັນບັຣຫາຕໍ່ກາຣເຈຣະຈາກັບຝ່າຽຣາຊອານາຈັກຣໃນອະນາຄົຕ ແລ້ວເຣື່ອງ ກາຣປ່ຽນຊື່ເມືອງຕ່າງໆຂອງສຸພານຸວົງສ໌ກໍມິດງຽບໄປ.

ຄຣິສຕ໌ສັກຣາຊ 1955 ແມ່ນປີທີ່ໃຫ້ຄວາມຫວັງແກ່ຊົນຊາຕລາວທົ່ວປະເທສ ເພາະລາວທັງສອງຝ່າຽກຳລັງຈະຫັນໜ້າເຂົ້າມາເຈຣະຈາກັນອີກ ໂດຍກຳໜົດ ເອົາວັນທີ 06 ມົກຣາ 1955 ເປັນວັນເຣີ່ມເຈຣະຈາປຈັຕິສາສຕ໌ຣ ລາວໂຮມລາວ ຣະຫວ່າງຄນະຜູ້ຕາງຂອງຣັຖບາລຣາຊອານາຈັກຣ໌ລາວ ກັບຄນະຜູ້ຕາງໜ້າລາວ ອິສຣະນະທີ່ທ່ຽໃຫຫີນ ນັກກາຣເມືອງຂອງຝ່າຽຣາຊອານາຈັກຣນັ້ນ ແມ່ນທ່ານໝໍ ທອງດີ ສູນຍ໌ທອນວິຈິຕເປັນຫົວໜ້າຄນະ ອັນມີ ສຸກັນ ວິລັຍສາຣ+ຜູມີ ນໍ່ສວັຣຄ໌+ສີ ສຸຂ ນະຈຳປາສັກດ໌+ອິນທຣ໌ແປງ ສູຣິຍະໄທຍເປັນລູກທີມ ສ່ວນສຸພານຸວົງສ໌ນັ້ນໄດ້ ສົ່ງພູມີ ວົງສ໌ວິຈິຕເປັນຫົວໜ້າຄນະ ໂດຽມີສົງຫ໌ກະໂປ ສີໂຄຕຣ໌ຈູນນະມາລີ+ຜູນ ສີປະເສີຖ ຕິດຕາມມານຳ.

ແຕ່ຍັນສພາວະກາຣນ໌ທາງກາຣເມືອງຂອງໂລກ ໄດ້ແຊກຊ້ອນເຂົ້າມາຍັງ ຣາຊອານາຈັກຣ໌ລາວ ເພາະພາຽຫຼັງທີ່ກອງທັພຝຣັ່ງເສສຕ໌ກລົງຈະຖອນໜີອອກ ຈາກດິນລາວຕາມສັນຍາເຈນີວາແລ້ວ ນາຍພົລໄອເຊັນຮາວເວີຣ໌ປະທານາທິບໍດີ ຂອງອາເມຣິກາມີນະໂຍບາຽສະກັດກັ້ນບໍ່ໃຫ້ລັທທິຄອມມິວນິສ ແຜ່ຂຍາຍເຂົ້າມາ ໃນກຸ່ມປະເທສອິນດູຈີນ ຍັງຜົລສະທ້ອນໃຫ້ກາຣເຈຣະຈາໂຮມລາວບໍ່ຄືบໜ້າ ເພາະ ທັງສອງຝ່າຽເຣີ່ມຖຽງກັນແຕ່ຕາເວັນໂຜ່ຟ້າ ຈົນຕາເວັນຕົກດິນກໍຍັງຕົກລົງກັນບໍ່ໄດ້ ຖຽງກັນແທບນ້ຳລາຽແຫ້ງປາກແຕ່ບັຣຫາກໍຫຍຸ້ງຍາກຢູ່ເໝືອນເດີມ ກໍເພາະຝ່າຽ ຣາຊອານາຈັກຣ໌ມັກເວົ້າສເມີວ່າ ຝ່າຽລາວອິສຣະເປັນພວກມີຄວາມຜິດທີ່ນຳເອົາ ກຳລັງທຫາຣອຽຕນາມເໜືອເຂົ້າມາຣົບໃນລາວ ຫາກມີປະສົງຄ໌ຢາກເຂົ້າມາຣ່ວມ ສ້າງປະເທສນຳກັນນັ້ນຕ້ອງສາຣະພາບຣັບຜິດເສັຽກ່ອນ ຝ່າຽຣາຊອານາຈັກຣ໌ຈຶ່ງ ຈະຍອມນິຣະໂທສກັນໃຫ້ ແຕ່ຖືກພູມີ ວົງສ໌ວິຈິຕຖາມວ່າ...

"ດ້ວຍເຫຕຸໃດຕ້ອງມາຂໍໂທສ ລາວອິສຣະຜິດຫຍັງ.? ທີ່ມີຫທາຣອຽຕນິນທ໌ໃນ ດິນລາວນັ້ນກໍເພື່ອຂັບໄລ່ຫທາຣຝຣັ່ງເສສໃຫ້ໜີອອກຈາກແຜ່ນດິນລາວ ແຕ່ຫາກ ບໍ່ແມ່ນມາຣົບກັບກຳລັງທຫາຣຂອງຣາຊອານາຈັກຣ໌"

ດຣ.ທອງດີ ສູນຍ໌ທອຣວິຈິຕຈຶ່ງຖາມຄືນວ່າ...

"ທີ່ພວກອຽຕນິນທ໌ໂຈມຕີຝ່າຽກອງທັພແຫ່ງຊາຕໃນທົ່ວປະເທສລະ??"

ພູມີ ວົງສ໌ວິຈິຕ ກໍຕອບໂຕ້ວ່າ...

"ກໍເພາະທທາຣຣາຊອານາຈັກຣໂປຣຣ່ວມຣົບຊຸອ່ຽງຝຣັ່ງເສສ ສນັ້ນກາຣທີ່ລາວ ອິສຣະກັບວຽຕນົນຫ໌ມາໄລ່ຝຣັ່ງເສສໃຫ້ອອກຈາກແຜ່ນດິນລາວ ຈຶ່ງບໍ່ແມ່ນຄວາມ ຜິດແຕ່ປະກາຣໃດຫັ້ງສິ້ນ...ລາວອິສຣະບໍ່ຕ້ອງກາຣໃຫ້ໃຜມາມີຣະໂທສກັມໃຫ້"

ລາວສອງຝ່າຍມາຖຽງກັນຄົບໜຶ່ງເດືອນເຕັມ ຈຶ່ງເຫັນດີນໍາກັນພຽງແຕ່ງຄໍາຂວັນ ວ່າ ສັຣຕິພາພ-ເອກຣາຊ-ປະຊາທິປະໄຕຍ-ເອກພາພ-ວັທນາຖາວອນ ເທົ່ານັ້ນ.

ແຕ່ພໍກັບມາຣາຍງານຜົລກາຣເຈຣະຈາທີ່ນະຄອຣວຽງຈັນທນ໌ ນາຍົກກະ ຕ່າຍກໍໂວຍວາຍຕໍານິຕ່ານໜ້ໜອງດີວ່າ...

"ຂ້ອຍແຕ່ງໃຫ້ໄປເຈຣະຈາເຣື່ອງກາຣໂຮມລາວ ບໍ່ແມ່ນໃຫ້ໄປຫາເອົາສໍານວນ ຄວາມເວົ້າຂອງພວກລາວອິສຣະມາໃຫ້ຂ້ອຍອ່ານ ພວກເຈົ້າພາກັນໄປຕົກເລ່ຫົ໊ລ ກາຣເມືອງຂອງພວກລາວອິສຣະຈຶ່ງນໍາເອົາຄໍາຂວັນນີ້ມາ"

ດຣ.ທອງດີ ສຸນຍ໌ທອນ ວິຈິຕຕອບຄືນໄປວ່າ...

"ທີ່ຍອມຕົກລົງກັນກໍເພາະເຫັນວ່າ ມັນກໍແມ່ນພາສາລາວທັມມະດາ"

ແລ້ວ ດຣ.ທອງດີ ກໍຖືກນາຍົກກະຕ່າຽປົດອອກຈາກຕໍາແໜ່ງຫົວໜ້າກາຣເຈຣະ ແລ້ວແຕ່ງໃຫ້ອຸ່ນເຮືອນ ນໍຣະສິງຫ໌ຂຶ້ນມາແທນ ນາຍົກກະຕ່າຽເຊີນສຸພານຸວົງສ໌ ມາເຈຣະຈາກັນໃໝ່ ເພື່ອແກ້ໄຂຄໍາຂວັນ ສຸພານຸວົງສ໌ກໍຕອບວ່າ...

"ເຣື່ອງເກົ່າທີ່ເວົ້າທີ່ເຊັນກັນແລ້ວກໍແລ້ວໄປ, ຖ້າເຈຣະຈາກັນໃໝ່ກໍຕ້ອງເວົ້າ ເຣື່ອງໃໝ"

ນາຍົກກະຕ່າຍຕົກລົງ ສຸພານຸວົງສ໌ກໍສົ່ງພູມີ ວົງສ໌ວິຈິຕ ຄນະເກົ່າກັບມາທີ່ງໄຫ ຫີນຄືນອີກໃນເດືອນຕໍ່ມາ ແຕ່ກາຣເຈຣະຈາເທື່ອທີ 2 ນີ້ພັດເຕັມທີກວ່າເກົ່າເພາະ ອ່ນເຮືອນ ນໍຣະສິງຫ໌ ບໍ່ຕັດສິນໃຈໃນບັຣຫາຖ້າແຕ່ຈະນໍາມາປຶກສາຣັຖບາລທີ່ວຽງ ຈັນທນ໌ ຈຶ່ງເກີດຂັດໃຈກັບລູກທີມຕົນເອງແລ້ວກໍຜິດກັນເອງ ພໍກັບມາເຖິງວຽງ ຈັນທນ໌ກໍຖືກນາຍົກກະຕ່າຍຣ້າຍ ແລ້ວປົດອຸ່ນເຮືອນອອກຈາກຫົວໜ້າຄນະ ຈຶ່ງມາ ແຕ່ງຫຍູຍ ອະໄພຍຂຶ້ນແທນ.

ຄັ້ງທີສາມນີ້ນາຍົກກະຕ່າຍສເນີປ່ຽນສຖານທີ່ ໂດຍເຊີນສຸພານຸວົງສ໌ເຂົ້າ ມາເຈຣະຈາກັນທີ່ນະຄອຣວຽງຈັນທນ໌ເສັຽເລີຍ ສຸພານຸວົງສ໌ຕອບໂອເຄ ແລະເດີນ ທາງເຂົ້າມາຍັງວຽງຈັນທນ໌ໃນຣະຫວ່າງກາງເດືອນພຶສພາ 1955 ໂດຽຣັຖບາລ ກະຕ່າຽຈັດທີ່ພັກເຊົ່າໃຫ້ທີ່ຄ່າຽຝຣັ່ງເສສເກົ່າປາກປ່າສັກດ໌ ແລະທີ່ໂຮງຮຽນປະຖົມ ແຫ່ງໜຶ່ງໃນບ້ານສີຖານ .

ກອງປະຊຸມໄຂຂຶ້ນໃໝ່ໃນທ້າຽເດືອນພຶສພາມະທີ່ສຳນັກນາຍົກຣັຖມົນຕຣີ ແຕ່ ທຍູຍ ອະໄພຍ໌ກໍຍັງເອົາເຣື່ອງເກົ່າຂຶ້ນມາເວົ້າອີກວ່າ ລາວອິສຣະເປັນກະບົຖຕ້ອງ ມອບຕົວ ຈຶ່ງຈະໃຫ້ອະພັຍ ສຸພານຸວົງສ໌ຣຳຄານໃຈເຕັມທົນ ທີ່ນັກການເມືອງຝ່າຍ ຂວາເວົ້າແຕ່ເຣື່ອງເກົ່າ ຈຶ່ງສົ່ງກັນຂຶ້ນເຄື່ອງບິນກັບຊຳເໝືອເສັຍ ແລ້ວສຸພານຸ ວົງສ໌ກໍຊວນນາຍົກກະຕ່າຍໄປເຈຣະຈາກັນຄັ້ງທີ 4 ທີ່ເມືອງຢ່າງກຸ້ງຂອງພະມ້າ ຄາວນີ້ສຸພານຸວົງສ໌ສມັຄຣໄປເອງ ໂດຽມີໝູຣັກ ພູມສວັຣຄ໌ກັບພູມີວົງສ໌ວິຈິຕ ຕິດຕາມ ໄປນຳ ສ່ວນພວກທີ່ເຫຼືອນອກນີ້ໃຫ້ຖ້າຢູ່ວຽງຈັນທນ໌ ຝ່າຽຣັຖບາລກໍແມ່ນຄນະເກົ່າ ແຕ່ມີນາຍົກກະຕ່າຍຕິດຕາມໄປດ້ວຍ ການເຈຣະຈາຈຶ່ງເຣີ່ມມີຂຶ້ນແຕ່ວັນທີ 09-13 ຕຸລາ 1955.

ຄນະເຈຣະຈາກໍມີແຕ່ເພື່ອນເກົ່າກັນແລະກັນ ວັນແຣກກໍທັກທາຍກັນດີໆ ແຕ່ ເມື່ອມີກອງປະຊຸມທັ້ງສອງຝ່າຽກໍໝີບ່ມີນການເວົ້າແຕ່ເຣື່ອງອັນເກົ່າໂດຍນາຍົກກະ ຕ່າຍເອງກໍເວົ້າວ່າ ສຸພານຸວົງສ໌ເອງເປັນກະບົຖແລ້ວກົດດັນໃຫ້ຍອມຣັບສາຣະພາບ ຈຶ່ງຈະເຈຣະຈາກັນໄດ້ ສຸພານຸວົງສ໌ກໍຕອບວ່າ...

"ບ່ມີປໂຍຊນ໌ອັນໃດ ທີ່ຝ່າຽຣັຖບາລຣາຊອານາຈັກຣ໌ຈະມາເວົ້າແຕ່ເຣື່ອງເກົ່າໆ ພວກເຮົາພາກັນລືມສິ່ງທີ່ຜ່ານມາເສັຽແລ້ວພາກັນເວົ້າແຕ່ເຣື່ອງໃໝ່ ທີ່ຈະພາໃຫ້ ລາວຮ່ວມເປັນອັນໜຶ່ງອັນດຽວກັນໄດ້ ເພື່ອສ້າງຊາຕລາວດຽວກັນ"

ທັ້ງສອງຝ່າຽຖຽງກັນຢູ່ 5 ວັນເຕັມໆແຕ່ຍັງຕົກລົງກັນບ່ໄດ້ມ່ນແຕ່ຂໍ້ດຽວ ໃນທີ່ສຸດ ທັ້ງສອງຄນະກໍພາກັນເດີນທາງກັບບ້ານເກີດ ໂດຍບ່ໄດ້ຜົລເຈຣະຈາຕິດມືມາເລັຍ.

ເມື່ອມາຣອດວຽງຈັນທນ໌ແລ້ວ ເຈົ້າສຸພານຸວົງສ໌ກໍຕັດສິນໃຈສັ່ງໃຫ້ພູມີ ວົງສ໌ ວິຈິຕປະກາສຂູ່ຈະຖອນຄນະເຈຣະຈາຂອງພວກຕົນກັບຄືນເມືອຊຳເໝືອທັນທີ ແຕ່ ໃຫ້ເຫລືອພູມ ສີປະເສີຖກັບພັຄພວກຈຳນວນໜຶ່ງໄວ້ທີ່ນະຄອຣວຽງຈັນທນ໌ ຕາມຄຳ ຮ້ອງຂໍຂອງທູຕອັງກິດແລະໂຊວຽຕທີ່ເປັນປະທານຄູ່ເຈຣະນາເຈນີວາແລະຄນະກັມ ການກວດກາສາກົລຄືອິນເດັຽ+ແຄນາດາ+ໂປແລນດ໌ ເພາະຢ່າງນ້ອຽກໍເພື່ອເປັນ ຜູ້ຄອຽທຳການຕິດຕໍ່ຣະຫວ່າງ ຣັຖບາລຣາຊອານາຈັກຣ໌ກັບແນວລາວອິສຣະທີ່ຊຳ ເໝືອ ແລ້ວສຸພານຸວົງສ໌ກັບເຈົ້າໜ້າທີ່ສຳຄັນຂອງລາວອິສຣະບາງຄົນ ກໍບິນກັບ ຄືນໄປຊຳເໝືອໃນເວລາຕໍ່ມາ.

ສຸພານຸວົງສ໌ ລົງໄປວຽງຈັນທນ໌....

ພ້ຢ່າງເຂົ້າຕົ້ນປີ ຄສ.1956 ເຈົ້າສຸວັນນາພູມາໄດ້ຂຶ້ນເປັນນາຍົກຣັຖມົນຕຣີ ແທນນກະຕ່າຽ ໂດນສາໂສຣິທ ແຕ່ແນວນັ້ນກໍຕາມ ອະດີຕນາຍົກກະຕ່າຍຍັງໄດ້ຖືກ

ເຈົ້າສຸວັນນາພູມາດຶງມາເປັນຮອງນາຍົກໃນຣັຖບາລຂອງຕົນອີກ ຈຶ່ງສັ່ງປົດຫຍູຍ ອະໄພຍ໌ອອກຈາກຫົວໜ້າຄນະເຈຣະຈາແລ້ວແຕ່ງຫ່ານຕາລ ຈູລມຸນຕຣີ ຂຶ້ນແທນ ແມ່ນມີການສັບປ່ຽນຫົວໜ້າຄນະຄັ້ງທີ 4 ແລ້ວກໍຕາມ ແຕ່ຝ່າຽລາວອິສຣະນັ້ນສຸ ພານຸວົງສ໌ຍັງໃຫ້ຄວາມເຊື່ອໝັ້ນແກ່ພູມີ ວົງສ໌ວິຈິຕຢູ່ເໝືອນເດີມ.

ໃນຣັຖບາລໃໝ່ຂອງນາຍົກສູວັນນາພູມາ ນອກຈາກຍັງມີກະຕ່າຍທີ່ບໍ່ ຊື່ນຊອບຣະບອບຄອມມິວນິສມ໌ແລ້ວກໍຍັງມີຜູຍ ຊຸນະນິກອຣ ແລະພັນເອກພູມີ ນໍ່ສວັຣຄ໌ທີ່ກຳລັງມາແຮງໃນວົງສ໌ການເມືອງລາວ ພິເສສແມ່ນກຽຈຊັງຣະ ບອບຄອມມິວນິສມ໌ເຂົ້າກະດູກດຳ.

ການເດີນທາງກັບມານະຄອຣວຽງຈັນທມ໌ເທື່ອໃໝ່ຂອງສຸພານຸວົງສ໌ ຝົດຜົ້ນ ສນໍ່ນເມືອງສຸດຂນາດ ເພາະສຖານີວິທຍຸແຫ່ງຊາຕທີ່ອຽວຈັນທມ໌+ສຖາວິທຍຸໃນຣາ ໂໝ່ຍ+ສຖານີວິທຍຸຂອງແນວລາວຮັກຊາຕທີ່ຊຳເໜືອ+ສຖານີວິທຍຸປັກກິ່ງຕ່າງກໍ ພາກັນອອກຂ່າວອຶກກະທຶກ ທີ່ສນາມບິນວັຕໄຕຍກໍໄດ້ມີກອງກຽຣຕິຍ໌ສນາຄອຍ ຕ້ອງຖ້າຕ້ອນຮັບການມາຂອງສຸພານຸວົງສ໌ ຂບວນພຣະສົງຄ໌ຫຼາຽຮູປຄອຽຖ້າສູດໄຊ ຍັນໂຕຕາມພິທີທາງສາສນາຢ່າງພ້ອມພຽງ.

ສຸພານຸວົງສ໌ ຂຶ້ນເຄື່ອງບິນພິເສສຂອງຄນະກັມມະການກວດການາສາກົລຈາກ ສນາມບິນນອ້ຽງຂອງບ້ານງົ້ວ ໃນຣະດູຝົນຂອງທ້າຍເດືອນກໍຣະກະດາ ຄສ.1956 ໂດຽມີທ່ານປະດິຕ ທ່ຽງທັມກັບທ່ານບຸນຍົງ ວໍຣະສານທີ່ເປັນນັກຂ່າວປະຈຳສຖານີ ວິທຍຸແນວລາວຮັກຊາຕທີ່ຊຳເໜືອຕິດຕາມມາໃນເຄື່ອງບິນ ເມື່ອເຄື່ອງບິນລຳນ້ຽ ຈອດຣຽບຣ້ຽແລ້ວ ຄົນທີ່ຢູ່ພາຽໃນເຄື່ອງບິນກໍແນມເຫັນເຈົ້າສຸວັນນາພູມາໄດ້ມາ ຢືນຢູ່ໄກ້ໆກັບຂອບປະຕູເຄື່ອງບິນແລ້ວ ທ່ານບຸນຍົງ ວໍຣະສານໄດ້ຽນເລົ່າໄວ້ໃນ ປຶ້ມຂອງເພິ່ນວ່າ ຕາມທັມນຽມແລ້ວສຸພານຸວົງສ໌ຕ້ອງໃຫ້ພວກນັກຂ່າວລົງໄປກ່ອນ ເພື່ອຖ່າຽພາພແລະບັນທຶກສຽງ ແຕ່ເທື່ອນີ້ສຸພານຸວົງສ໌ລຸກຂຶ້ນກ່ອນໃຜໆມາຢືນທີ່ ປະຕູເຄື່ອງບິນ ແລ້ວຣີບລົງໄປເປັນຄົນແຣກທັນທີ ສອງນ້ອງອ້າຽແລ່ນຜ່ານເຂົ້າ ກອດກັນແໜ້ນຢູ່ຫລາຍອຶນາທີ ຫຼັງຈາກນັ້ນສຸວັນນາພູມາກໍພາສຸພານຸວົງສ໌ຍ່າງໄປ ຕໍ່ໜ້າກອງກຽຣຕິຍ໌ສໃຫ້ພຣະສົງຄ໌ສູຕຣໄຊຍັນໂຕຣັບໄຊກ ແລ້ວຄົນທັ້ງສອງກໍໄປ ຂຶ້ນຣົຖລັນດຽວກັນແລ່ນອອກຈາກສນາມບິນວັຕໄຕຍໄປຍັງປາກປ່າສັກ.

ສຸພານຸວົງສ໌ກັບເຈົ້າສຸວັນນາພູມາໄດ້ນັດພົບກັນແບບວຽບໆ ໃນສຳນັກນາຍົກ ຣັຖມົນຕຣີໃນວັນທີ 01 ສິງຫາ 1956 ແຕ່ບ່ຍອມອອກແຖລງການໃດໆ ນອກ ຈາກໃຫ້ໂຄສົກປະຈຳສຳນັກນາຍົກປະກາສພຽງສັ້ນໆວ່າ ທັ້ງສອງສເດັຈໄດ້ທຳການ

ແລກປ່ຽນຄວາມຄິດກັນດ້ວຍບັຍຍາກາສອັນດີ ຫຼັງຈາກນັ້ນມາແລ້ວກໍຍັງບໍ່ມີອີ່ແອວ
ວ່າຈະມີກາຣປະຊຸມເຈຣະຈາກັນເກີດຂຶ້ນເລີຍ ເພາະທຸກຕອນແລງໃຜໆກໍເຫັນແຕ່
ສຸພານຸວົງສ໌ອີ່ຣິຖໄປກິນເຂົ້າແລງກັບສຸວັນນາພູມາທີ່ບ້ານພັກ "ໝອງເທວະດາ" ເປັນ
ປະຈຳ ແລະຫຼັງພາເຂົ້າແລງຜ່ານໄປແລ້ວ ກໍເຫັນສອງສເດັຈອ້າຽນອ້ວງນັ່ງຫຼິ້ນໄພ່
ແກ້ກຸ້ມກັນຢູ່ຕາມລຳພັງຈົນເຖິງທ່ຽງຄືນ ໂດຍບໍ່ມີໃຜລວ່ງຮູ້ວ່າທັ້ງສອງສເດັຈນອ້ວ
ອ້າຽໄດ້ເວົ້າລົມກັນເຣື່ອງອັນໃດແດ່ທີ່ເປັນແກ່ນສານສຳຄັນ ກ່ຽວກັບຄວາມຖືກຕ້ວ
ປ້ອງດອງຊາຕ ຄນະຄົນສຳຄັນຂອງຝ່າຍລາວອິສະ ທີ່ຮົ່ມກັນເຂົ້າມາຍັງນະຄອຣ
ວຽງຈັນຫນໃນເທື່ອນີ້ນີ ພູມີ ວົງສ໌ວິຈິຕ+ໝູຮັກ ພູມສວັຣຄ໌+ພູນ ສີປຣະເສີຖ+ຄຳໄຕ
ສີພັນດອຣ+ກາວິນ ແກ້ວນະຄອຣ+ຄຳເພ໌ຊຸຣ໌ ພົມມະວັນ+ສາລີ ວົງສ໌ຄຳຊາວ.

ກອງປະຊຸມສອງຝ່າຽໄດ້ເຣີ່ມຂຶ້ນໃໝ່ ພາຽໄຕ້ເງື່ອນໄຂທີ່ວ່າໃຫ້ທັ້ງສອງຝ່າຽ
ມານັ່ງເຈຣະຈາກັນອາທິຕຍ໌ລະ 2 ເທື່ອບໍ່ໃຫ້ຂາດ ໃນກາຣປະຊຸມແຕ່ລະເທື່ອນັ້ນ
ຈະບໍ່ມີສຸພານຸວົງສ໌ເຂົ້າຮ່ວມນຳ ເພາະໄດ້ເດີນທາງກັບໄປຍັງຊຳເໝືອກອ່ນໜ້ານີ້
ແລ້ວພາຽຫຼັງທີ່ໄດ້ຝາກຄວາມຫວັງໄວ້ ກັບສຸວັນນາພູມາຜູ້ອ້າຽເປັນກາຣສ່ວນຕົວ
ກາຣນັດປະຊຸມກັນຄັ້ງແຣກດຳເນີນໄປໂດຽດີ ແຕ່ຄັ້ງໃໝ່ໃນຕ່ໍມານັ້ນຊັກຊ້າສິ້ນດີ
ພຽງອາທິຕຍ໌ລະຄັ້ງກໍຍັງມາຣ່ວມປະຊຸມບໍ່ໄດ້ ຫົວໜ້າເຈຣະຈາຝ່າຍຣາຊອານາ
ຈັກຣ໌ມັກອ້າງຢູ່ເປັນປະຈຳວ່າ "ບໍ່ມີເວລາ" ພາໃຫ້ກາຣເຈຣະຈາຣອມລາວເທື່ອໃໝ່ນີ້
ມີຊັກຊ້າແລະເປັນຕາເບື່ອໜ່າຍຂຶ້ນທຸກວັນ.

ໃນຂນະທີ່ບັຍຍາກາສກຳລັງມືດມົນຢູ່ນີ້ ຊ້ຳພ້ດມີສພາພກາຣນ໌ອັນໃໝ່ແຊກ
ຂຶ້ນມາຈົນຄນະເຈຣະຈາຂອງລາວອິສຣະປະຫ້ວ່ງວ່າ ຣັຖບາລຣາຊອານາຈັກຣ໌
ຂອງເຈົ້າສຸວັນນາພູມາພາກັນຫລົ້ນລະຄອນ "ສົກກະປົກ" ເພື່ອສ້າງສພາພກາຣນ໌ໃຫ້
ຕ່ືງຄຽດດ້ວຽກາຣລັກຈີ້ຈັບເອົາຕ໋ວພັນໂທ.ກາວິນ ແກ້ວນະຄອຣ ຜູ້ທີ່ເປັນພນັກງານ
ແປຣະທັສໂທຣະເລຂຂອງຄນະເຈຣະຈາຝ່າຽລາວອິສຣະໄປ ພູມີ ວົງສ໌ວິຈິຕໄດ້ຍື່ນ
ຄຳປະຫ້ວ່ງຕ່ໍຄນະກັມມະທິກາຣກວດກາສາກົລສາມຊາຕ(ອິນເດັຽ+ຄານາດາ+ໂປ
ແລນດ໌) ເປັນທາງກາຣ ເຫຕກາຣນ໌ຍິ່ງສັບສົນຕື່ມເມື່ອພວກຄົນສຳຄັນໃນຄນະເຈ
ຣະຈາລາວອິສຣະພາກັນເຊື່ອວ່າ ແມ່ນເລ່ຫ໌ກົລກາຣເມືອງຂອງເຈົ້າສຸວັນນາພູມາ
ແລະສເນີໃຫ້ພາກັນປະຫ້ວ່ງດ້ວຽກາຣຖອນຕົວອອກຈາກກາຣເຈຣະຈາ ກັບຄືນເມືອ
ຊຳເໝືອເສັຍທັ້ງໝົດ ແຕ່ເມື່ອເວລາຜ່ານອີກ 72 ຊົ່ວໂມງ ຈຶ່ງໄດ້ອ່ານຂ້ໍຄວາມ
ກາຣໃຫ້ສັມພາສນ໌ຂອງພັນໂທກາວິນ ແກ້ວນະຄອຣ ທີ່ຕີພິມພ໌ໃນໜັງສືພິມພ໌ AFP
ມີເນື້ອຄວາມສຳຄັນວ່າ...

"ຕົນເອງໄປສວາມີພັກດຕ໌ຣັຖບາລຣາຊອານາຈັກຣ໌ດ້ວຽສມັຄຣໃຈ"
ໃນກາຣສືບຕ່ໍກາຣເຈຣະຈາໃນເວລາອີກຕ່ໍມາ ທັງສອງຝ່າຽກໍມີທ່າທີເຄັ່ງຂຶມໃສ່ກັນ ເພາະຝ່າຽລາວອິສຣະຍັງພາກັນເຊື່ອວ່າພັນໂທ ກາວິນ ແກ້ວນະຄອຣ ຖືກລັກພາ ຕົວໄປ ແຕ່ແນວໃດກໍຕາມບໍ່ມີກາຣຍົກເຣື່ອງນີ້ມາກ່າວກັນໃນທີ່ປະຊຸມ ນອກຈາກ ຄນະລາວອິສຣະຍິ່ງເພີ່ມຄວາມຣະມັດຣະວັງຂຶ້ນຕື່ມ ເພາະຄິດວ່າແນ່ນອນທີ່ສຸດພທ. ກາວິນ ແກ້ວນະຄອຣ ຕ້ອງຖືກພວກ CIA ຊູ່ເອົາຄວາມລັບຕ່າງໆຂອງພວກຕົນຈົນ ຣະອຽດໝົດສິ້ນແລ້ວ ແລະສິ່ງທີ່ພວກລາວອິສຣະຫວາດຫວັ່ນໄວ້ນັ້ນກໍມາເຖິງຈິງໆ ເພາະໃນກາຣເຈຣະຈາຕ່ໍມານັ້ນ ທ່ານຕາລ ຈູລມົນຕຣີທີ່ເປັນຫົວໜ້າເຈຣະຈາຝ່າຽ ຣັຖບາລຣາຊອານາຈັກຣ໌ໄດ້ຍື່ນເງື່ອນໄຂເດີມ ທີ່ຫົວໜ້າເຈຣະຈາຄົນກ່ອນໆເຄີຍ ເວົ້າມາແລ້ວວ່າ...

"ໃຫ້ລາວອິສຣະວາງວາງອາວຸທແລ້ວຍອມມອບຕົວເສັຽກ່ອນ ກາຣເຈຣະຈາໂຮມ ລາວຈຶ່ງຈະມີຂຶ້ນໄດ້"
ແລ້ວຣກາຣເຈຣະຈາໂຮມລາວຄັ້ງທີ 5 ຣະຫວ່າງລາວສອງຣະບອບກໍຈົບເທ່ກັນລົງ ແຕ່ບັດນັ້ນມາ ທັງສອງຄນະຫັນຫຼັງໃຫ້ກັນອີກດັ່ງດຽວກັນກັບກາຣເຈຣະຈາ 4 ຄັ້ງທີ່ ຜ່ານໆມາແລ້ວ.

ສ່ວນທີ່ກ່ຽວກັບພັນໂທກາວິນ ແກ້ວນະຄອຣ ຜູ້ຊຶ່ງເຂົ້າສວາມີພັກດຕ໌ຝ່າຽຣັຖ ບາລຣາຊອານາຈັກຣ໌ເມື່ອວັນທີ 15 ກັນຍານັ້ນໄດ້ເປີດເຜີຍເຖິງແຜນກາຣນ໌ຣະເມີດ ສັນຍາຢຸດຍິງແລະກາຣແກ້ງມາເຈຣະຈາກັບຣັຖບາລຂອງແນວລາວ ໃຫ້ເຈົ້າໜ້າທີ່ ຝ່ງວ່າ ເປັນພຽງແຜນກາຣນຊື່ເວລາຂອງວຽຕນາມເໜືອ ເພື່ອຕຽມກາຣສົ່ງກຳ ລັງທຫາຣຂອງພວກຕົນຜ່ານດິນລາວ ເຂົ້າໄປໃນວຽຕນາມພາຄໄຕ້ເທ່ານັ້ນ ກາຣເຂົ້າສວາມີພັກດ໌ຂອງພັນໂທ ກາວິນເທ່ືອນີ້ ໄດ້ສ້າງຄວາມແຄ້ນແກ່ສຸພານຸ ວົງສ໌ເປັນອັນມາກ ເພາະທ່ໍຣະຍົສຕ່ໍຄຳສາບານຂອງຂບວນກາຣນ໌ ແລະຈົນພວກ ແນວລາວໄດ້ຄອງອຳນາຈທ່ົວປະເທສເມ່ືອປ 1975 ແລ້ວນັ້ນ ຊຶ່ງນາຍກາວິນ ແກ້ວນະຄອຣໄດ້ເປັນອະທິກາຣຕຳຣວຈເອກຂອງກົມຕຳຣວຈ ແຫ່ງຣາຊອານາ ຈັກຣ໌ແລ້ວ ກໍຖືກສຸພານຸວົງສ໌ສ່ັງຈັບມັດສອກສ່ັງຂຶ້ນໄປກັກຂັງໄວ້ໃນສູນຍ໌ມ໌ຣະນະ ທ່ີ ສົບຣ່າວໃນເຂຕເມືອງຊຽງຂ໋ ແຂວງຫົວພັນທ໌ຈົນກາວິນຕາຽຄາຄຸກສົມໃຈໃນປ ຄສ. 1978 ອັນເປັນສູນຍ໌ສັພທຸກຂ໌ແຫ່ງດຽວກັນກັບທ່ີເຊ້ືອກະສັຕຣຍ໌ລາວ ຖືກກັກຂັງຈົນ ຕາຽດັບໂລຕຣ໌ທັງໝົດໃນທ້ອງປ 1980.

(10) ลาคิ่มไทย....

ເປັນທີ່ຊາບກັນດີແລ້ວວ່າ ເຈົ້າເພັຊຣາຊ ຣັຕນະວົງສານັ້ນ ຍັງລີ້ພັຍຢູ່ທີ່ປະ ເທສໄທຽ ໂດຽປະຕິຍານຕົນວ່າຈະບໍ່ໜີຈາກບາງກອກຫາກຊາຕລາວບໍ່ໄດ້ພົບກັບ ຄວາມຮົ່ມເຢັນເປັນສຸຂເສັຍກອ່ນ ແລະເສັຽໃຈທີ່ເຈົ້າສຸວັນນາພູມາພາຜູ້ນ້ອງລັກ ໄປຕິດຕໍ່ທູຕຝຣັ່ງເສສເພື່ອຂໍຄືນມາຣັບເອກຣາຊເຄິ່ງເມືອງຂຶ້ນໃນປີ 1949 ໂດຽບໍ່ ຍອມປຶກສາຕົນເສັຽກອ່ນ ເຈົ້າເພັຊຣາຊຮູ້ດີວ່າສຸພານຸວົງສ໌ນ້ອງຝັກໃຝ່ລັທທິຄອມ ມີວນິສຕ໌ແລະກຳລັງຕົກເລ່ທ໌ກົລຂອງ ໂຮຈິມິນທ໌ຈົນຖອນຕົວກັບອອກມາບໍ່ໄດ້ອີກ ຈົນ ກອງທະຫາຣອຽຕນົມທ໌ຈຳນວນມາກເຂ້ົ້າມາຍຶດເອົ້າດິນລາວຫລາຍແຫ່ງທົ່ວປະເທສ ໃນກາຣເຈຣະຈາກັນທີ່ນະຄອຣວຽງຈັນທນ໌ຂອງສອງຝ່າຍ ເມື່ອເດືອນກໍຣະກະດາ 1956 ນັ້ນ ໄດ້ເຫັນດີເຊີນເອົ້າເຈົ້າເພັຊຣາຊມາຣ່ວມແກ້ໄຂບັຣຫາຄວາມຂັດແຍ່ງ ຂອງລາວດ້ວຍ ສນັ້ນຄນະຣັຖບາລຂອງເຈົ້າສຸວັນນາພູມາທັ້ງສພາຜູ້ແທນຣາຊຄອຣ ແລະອົ້ງຄ໌ກາຣສົ້ງຄ໌ແຫ່ງຊາຕຈຶ່ງໄດ້ສົ່ງສາຣເຊີນເອົ້າເຈົ້າເພັຊຣາຊ ຣັຕນະວົງສາ ທີ່ຍັງລີ້ພັຍກາຣເມືອງຢູ່ທີ່ບາງກອກໃຫ້ກັບຄືນມາຍັງລາວ.

ເຈົ້າເພັຊຣາຊ ຣັຕນະວົງສາອອກຈາກບາງກອກໃນທ້າຽເດືອນມິນາ ປີ ຄສ 1957 ພາຽຫັ້ງທີ່ກັກຂັ້ງຕົວເອງຢູ່ໃນບາງກອກເຖິງ 11 ປີພໍດີ 5 ວັນ ພໍມາເຖິງ ໜອງຄາຽກໍຂ້າມມານະຄອຣວຽງຈັນທນ໌ ໃນກາຣກັບມາຂອງເຈົ້າເພັຊຣາຊຄັ້ງ ນີ້ຄຶກຄື້ນສົນຄອຣ ເພາະນອກຈາກມີຜູ້ຕາງໜ້າຄນະເຈຣະຈາຣວມລາວແລ້ວ ກໍ ມີສະມາຊິກສພາຜູ້ແທນຣາຊຄອຣ ມີນາຽທະຫາຣຊັ້ນຜູ້ໃຫ່ຽໃນກອງທັພລາວ ມີຊາວ ວຽງຈັນທນ໌ນັບໝື່ນຄົນພາກັນມາຢືນລຽນແຖວຖ້າຕ້ອນຮັບ ຕັ້ງແຕ່ທ່ານາແລ້ວຈົນ ເຖິງນະຄອຣວຽງຈັນທນ໌ ເຈົ້າເພັຊຣາຊໄດ້ເດີນທາງຕໍ່ໄປຫລວງພຣະບາງໃນວັນທີ 09 ເມສາ ແລ້ວເຈົ້າຊີວິຕສີສວ່າງວົງສ໌ກໍ່ມອບກຽຣຕ໌ສັກດຊຶ້ນມາຈຸປຣາຊ ທີ່ເປັນ ຕຳແໜ່ງຣອງກະສັຕຣຍ໌ໃຫ້ຄືນໃນວັນທີ 12 ເດືອນດຽວກັນ ເຈົ້າເພັຊຣາຊຶ່ນຊົ່ມທີ່ ຈະໄດ້ຊ່ວຽກັນແກ້ໄຂບັຣຫາຊາຕຮ່ວມກັນ ແລະກໍ່ບໍ່ຫລົ້ງລືມທີ່ຈະເກ້ຽກອ່ມເອົ້າສຸ ພານຸວົງສ໌ນ້ອງໃຫ້ໜີຫ່າງອອກມາຈາກເລ່ທ໌ກົລກາຣເມືອງຂອງວຽຕນົມທ໌ໃຫ້ໄດ້.

ໃນເຊົ້າວັນຕ່ໍ່ໆມາເຈົ້າເພັຊຣາຊໄດ້ເດີນທາງດ້ວຽເຄື່ອງບິນ ຂອງຄນະກັມມະ ກາຣກວດກາສາກົລໄປຍັງແຂວງຫົວພັນທ໌ ຕາມຄຳເຊີນຂອງເຈົ້າສຸພານຸວົງສ໌ເປັນ ເວລາ 3 ວັນ ກອ່ນກັບຄືນມາຍັງນະຄອຣວຽງຈັນທນ໌ໃນວັນທີ 15 ເມສານັ້ນ ເຈົ້າ ເພັຊຣາຊໄດ້ເອີ້ຽເຕືອນເຈົ້າສຸພານຸວົງສ໌ຫລາຽໆຢ່າງທີ່ກ່ຽວກັບກາຣເມືອງ ແລະ ອຸປສັຄໃນກາຣທ້ອນໂຮມລາວ ຫາກອົ້ງເອົ້າຕາມບົທບັນທຶກຂອງທ່ານນະຄອຣຄຳ

ບຸບຜານຸວົງສ໌ ທີ່ຂຽນໄວ້ໃນປຶ້ມ "ຂບວນການຮົ່ລາວອິສຣະ 12 ຕຸລາ" ຊຶ່ງຕອນນັ້ນ ໄດ້ຢູ່ໃນເຫຕຸການຮົ່ແລະໄດ້ຍິນເຈົ້າເພັຊຣາຊບອກແກ່ສຸພານຸວົງສ໌ວ່າ...

"ຢ່າໄດ້ເຊື່ອໃຈພວກວຽຕນາມຫ໌ຈົນເກີນໄປ ເພາະຢູ່ໃນປວັຕິສາສຕຣ໌ລາວແລ້ວ ແກວບ່ເຄີຽຈິງໃຈຕ່ໍລາວເຮົາຈັກເທ່ືອ".

ແຕ່ໂຊຄຊາຕາຂອງຊາຕລາວຍັງບ່ເຖິງຄາວທ່ີຕ້ອງມີຄວາມສງົບສຸຂ ເພາະ ການກັບມາລາວຂອງເຈົ້າເພັຊຣາຊເທ່ືອນ້ີນ້ັ ບ່ຕ່າງຫຽັງກັນກັບການກັບມາຕາຽ ຄວາມມຸ່ງຫວັງທ່ີຈະໄດ້ເຫັນຄົນລາວປອງດອງກັນກ່ໍເພທະລາຽລົງ ເພາະເມ່ືອຜູຍ ຊຸນະນິກອຣ໌ໄດ້ເປັນນາຍົກແທນເຈົ້າສູວັນນາພູມາໃນເວລາຕ່ໍມາແລ້ວ ກ່ໍມີສພາພ ການຮົ່ແນວໃຫ່ມເກີດຂ້ຶນ ກ່ໍຄືສຸພານຸວົງສ໌ພ້ອມພັຄພວກແນວລາວອິສຣະທັງ 16 ຄົນ ໄດ້ຖືກນາຍົກຜູຍ ຊຸນະນິກອຣ໌ສ່ັງຈັບໃສ່ຄຸກທ່ີໂພນເຄັງ ໂດຍຕ້ັງຂ້ໍຫາສັນ້ຈ໌ຫາງ ການເມ່ືອງວ່າ "ເປັນກະບົຖແຜ່ນດິນ" ຄວາມແຕກແຍກກັນອີກເທ່ືອໃຫ່ມໄດ້ສ່ົງຜົລ ສະທ້ອນໃຫ້ເຈົ້າເພັຊຣາຊຍກ້ຳທະວີຄູນ ແລະມີໂອກາສໄດ້ຈ່ົມຈາຣະບາຽຄວາມ ຜິດຫວັງໃຫ້ທ່ານບຸນຍ໌ຍົງ ວ໋ຣະສາຣ ອດີຕແນວລາວອິສຣະຜູ້ເຄ່ືຍໄກ້ຊິດກັບສຸພານຸ ວົງສ໌ມາຫຼາຽປ ໃນຕົກທ່ີພັກເກ່ົາໆຫລັງໜ່ຶງຢູ່ກົງກັນຂ້ວາມກັບຖນົນລ້ານຊ້າງວ່າ

"ອ່ີຕົນປະຊາຊົນລາວທ່ີຕ້ອງທຸກຍ໌ຍາກລ໋ຳບາກແລະຈະລ້ົມຕາຽກັນຕ່ໍໄປອີກ" ເມ່ືອເຫັນວ່າຕົນເອງຊ່ວຽຫຽັງຕ່ືນບ່ໄດ້ແລ້ວກ່ໍດີ ເຈົ້າເພັຊຣາຊກ່ໍບ່ຄິດທ່ີຈະຫວນກັບຄືນ ໄປລ້ີພັຍໃນປະເທສໄທຽອີກ ແຕ່ຕັດໃຈເດີນທາງໜ່ີຈາກນະຄອຣວຽງຈັນທນ໌ດ້ວຍ ຣົຖຍົນຕ໌ໄປຍັງເມ່ືອງຫລວງພຣ໋ະບາງໃນວັນທ່ີ 5 ກັນຍາ 1959.

ພ໋ໍເຈົ້າເພັຊຣາຊອອກໜ່ີໄປບ່ໜ້ັນວ້ານ 72 ຊ່ົວໂມງດ້ວຽຊ້ຳ ຜູຽ ຊຸນະນິກ໋ອຣ ກ່ໍອ້າງວ່າ ຕ້ອງການທ່ີພັກເກ່ົາຂອງເຈົ້າເພັຊຣາຊຄືນມາເພ່ືອໃຊ້ໃຫ້ເປັນບ່ອນເຮັດ ການຂອງຣັຖບາລໃຫ່ມ ແລ້ວກ່ໍສ່ັງໃຫ້ສາຣ໋ະວັຕຣ໌ທຫາຣໄປຍ໌ກຍ້າຽເຄ່ືອງຂອງ ທ່ີ ຍັງເຫ່ືອຢູ່ຂອງເຈົ້າເພັຊຣາຊອອກຈົນໝົດ ແລ້ວຍ໌ນລົງໄປໃສ່ເຮ໋ືອກ໋ຳປ່ັນຂອງທ້າວ ທ໋ິດສຸຂ ນ໋ຳເອ໋ົາໄປສ່ົງໃຫ້ເຈົ້າເພັຊຣາຊທ່ີຫຼວງພຣ໋ະບາງ ມັນເປັນການກ໋ະທ໋ຳຮຸນ ແຮງເກີນກວ່າເຈົ້າເພັຊຣາຊຈະຈ່ົນຕ໋ະນາໄດ້ ຈ໋ິຕໃຈຂອງສເດັຈໄດ້ຮັບການກ໋ະທ໋ົບ ກ໋ະເທ໋ືອນຢ່າງແຮງແລ້ວກ່ໍລ້ົມປ່ວຽລົງ ເຈົ້າເພັຊຣາຊສ້ົນໃຈຕາຽເພ໋ະເສ້ັນເລ໋ືອດ ແຕກໃນສມອງຂອງຄືນວັນພຸທຣ໌ເວລາ 22.30 ໂມງຂອງວັນທ່ີ 15 ຕຸລາ 1959 ທ່ີ ວັງ "ສີສຸພັນທ໌ທ໋ໍຄ໋ຳ" ນ໋ະວ້ັງຊຽງແກ້ວໃນຫຼວງພຣ໋ະບາງ ຊຶ່ງຮວມອາຍຸໄດ້ 69 ປ 7 ເດ໋ືອນກັບ 12 ວັນພ໋ໍດ.

ຊ໋ີວ໋ິຕການເມ໋ືອງສວ່ນຕ໋ົວຂອງເຈົ້າເພັຊຣາຊ ຣັຕນ໋ະວົງສາ ທ່ີມັນພ໋ົວພັນທ໌ກັບ

ການເມືອງລາວນັ້ນແມ່ນຊຸນິດແໜ້ນຢູ່ກັບຄວາມປອງດອງ ແລະຄວາມເປັນເອກ ຣາຊຂອງຊາຕລາວ ເຈົ້າເພັຊຣາຊບໍ່ໄດ້ຫຼົງເຊື່ອເລ່ຫ໌ກົລຂອງໃຜໆ ແມ່ນແຕ່ຕອນ ທີ່ຍັງຢູ່ໃນບາງກອກ ຂ້າຫຼວງໃຫ່ຽຝຣັ່ງເສສປະຈຳລາວກໍເຄີຽວ່າງແຜນຫຼອກໃຫ້ ກັບຄືນມາລາວເພື່ອຮັບຕຳແໜ່ງສຳຄັນພາຽໃນຣາຊອັງຫລວງພຣະບາງ ໂດຽ ຝຣັ່ງເສສຄິດວ່າຫາກຫຼອກໃຫ້ເສືອອອກຈາກຖ້ຳໄດ້ ກໍຈະສິ້ນສ້ຽນໜາມທາງການ ເມືອງເພາະເຈົ້າເພັຊຣາຊຕໍ່ຕ້ານການປົກຄອງລາວຂອງຝຣັ່ງເສສ ແຕ່ຄຳຕອບທີ່ ຝຣັ່ງເສສໄດ້ຮັບຈາກເຈົ້າເພັຊຣາຊນັ້ນກໍຄື...

"ຂ້າພຣະເຈົ້າຈະກັບໄປເມືອງລາວ ກໍຕໍ່ເມື່ອປະເທສລາວໄດ້ຮັບເອກຣາຊທີ່ສົມ ບູຣນ໌ແລ້ວເທ່ານັ້ນ"

ເປັນຄຳຕອບທີ່ເຮັດໃຫ້ຝຣັ່ງເສສຕ້ອງນຳມາຄິດໜັກໃນການຕໍ່ມາ.

ນັກຽນລາວໃນຣະບອບຄອມມິວນິສ໌ໄດ້ຽນປຶ້ມສຸດຕິຄຸນຄວາມເກ່ງ ຂອງ ໄກສອຣ ພຣົ໋ມວິຫານ ກ່ຽວກັບການເມືອງລາວເອົ້າໄວ້ວ່າໄກສອຣ ພຣົ໋ມວິຫານ ເປັນຜູ້ສ້າງຕັ້ງຂບວນການນ໌ລາວອິສຣະຄັ້ງວັນທີ 12 ຕຸລາ 1945 ທີ່ນະຄອຣວັງ ຈັນທ໌ ແຕ່ເມື່ອໄດ້ສຶກສາຄົ້ນຄວ້າເຖິງປວັຕຊີວິຕສ່ວນຕົວຂອງ ໄກສອຣ ພຣົ໋ມວິ ຫານແລ້ວຈຶ່ງເຂົ້າໃຈວ່າມັນຂັດກັນຢ່າງແຮງ ເພາະໃນວັນທີ່ເຈົ້າເພັຊຣາຊໄດ້ປະ ກາສສ້າງຕັ້ງຂບວນການນ໌ລາວອິສຣະຄັ້ງວັນທີ 12 ຕຸລາ 1945 ນັ້ນ ໄກສອຣເອງ ມີອາຍຸໄດ້ປະມານ 24 ເທ່ານັ້ນ (ເກີດ ວທ.13-12-1920)ແລະຍັງເປັນນັກຽນ ໜຸ່ມ PLAY BOY ຢູ່ໃນວິທຍາລັຍຣາໂໝ໊ຍພຸ້ນ ໂດຍທີ່ໄກສອຣ ພຣົ໋ມວິຫານປະພຶຕ ຕົວຢູ່ໃນຂນະນັ້ນກໍຄື ນອກຈາກພົວພັນທ໌ກັບຂບວນການນ໌ອຽຕມິນທ໌ໂຕ໊ດິນ ຄວບຄູ່ ກັບການສຶກສາແລ້ວ ຍັງຫຼົງສເນທ໌ສາວອຽຕນາມທີ່ເປັນສະມາຊິກໂຕ໊ດິນອຽຕມິນທ໌ ຈົນບໍ່ເປັນອັນກິນອັນນອນແລະຽນໜັງສືຄ້າງຫ້ອງບໍ່ທັນໝູ່ ໃນຄືນໃດທີ່ນາງແອມ ແສນສເນ່ທ໌ເຂົ້າປະຊຸມລັບກັບພວກອຽຕມິນທ໌ໂຕ໊ດິນ ໄກສອນ ພຣົ໋ມວິຫານກໍຈະຖືກ ຂໍໃຫ້ນັ່ງຕົບຍຸງຢູ່ຂ້າງນອກນານເປັນຊົ່ວໂມງໆ ເພາະບໍ່ມີສິທທ໌ຕິດຕາມແອມເຂົ້າໄປ ໃນຫ້ອງປະຊຸມລັບຂອງພວກອຽຕມິນທ໌ໂຕ໊ດິນ.

ຈົນເຖິງປີ ຄສ.1990 ກໍຄືຫຼັງຈາກທີ່ໄກສອຣ ພຣົ໋ມວິຫານ ກັບສຸພານຸວົງສ໌ ໄດ້ຄອງອຳນາຈທາງການເມືອງສູງສຸດໃນປະເທສລາວແລ້ວເຖິງ 15 ປີ ໂຮງຊຽງ ແກ້ວທີ່ລ້ຳໜຶ່ງເຄີຽເປັນເຮືອນຕາຽຂອງເຈົ້າເພັຊຣາຊ ເມື່ອປີ ຄສ.1959 ນັ້ນກໍ ຖືກຂາຽໃຫ້ພໍ່ຄ້າຄົນໄທຽ ແລ້ວພວກຜູ້ຊື້ກໍທຳການທັບມ້າງເພື່ອດັດແປງແຕ່ງຕື່ມ ໃຫ້ເປັນໂຮງແຮມກາຊີໂນ ໂຮງຊຽງແກ້ວກໍຈຶ່ງໄດ້ປ່ຽນສີໂສມໄປຈາກຮູປະພັນທ໌

ເດີມຂອງມັນເກືອບທັງໝົດ ຫາກຄົນລາວພາກັນສົລໃຈໃນປວັຕສາສຕ໌ຂອງຊາຕ ຕົນກໍຈະຄົ້ນພົບວ່າ ມັນແມ່ນເຈຕະນາທຳລາຍຮອ່ງຮອຍປວັຕສາສຕ໌ອີກແບບໜຶ່ງ ຂອງຣະບອບຄອມມິວນິສ ເພື່ອລຶບລ້າງວິຣະກັມຂອງເຊື້ອກະສັຕຣຍ໌ລາວໃນອດີຕ ໃຫ້ດັບຊາຕຂາດຕົກໄປຈາກຄວາມຊົງຈຳຂອງຊົນຊາຕລາວ ກໍຄືການທຳລາຍຫລັກ ຖານທີ່ເປັນປວັຕການ໌ຂອງເຊື້ອຣາຊວົງສ໌ລາວດີໆນີ້ເອງ ແທນທີ່ຈະບູຣະນະຟື ທັກສ໌ຮັກສາເອົາໄວ້ໃຫ້ຊົນຮຸ່ນຫຼັງໄດ້ເຫັນ ເພື່ອການສຶກສາດ້ານປວັຕສາສຕ໌ຂອງ ຊາຕຕົນເອງ ດັ່ງດຽວກັນກັບຢູ່ໃນກຸ່ມປະເທສທີ່ຈເຣີນສີວິລັຍແລ້ວ.

(11) ສຸພານຸວົງສ໌ເຂົ້າຄຸກ....

ມີເອກສາຣຈຳນວນໜຶ່ງຂຽນວ່າ ໃນການເຈຣະຈາກັນຂອງລາວສອງຝ່າຽ ໃນແຕ່ລະເທື່ອນັ້ນ ສຸພານຸວົງສ໌ໄດ້ປະຕິບັຕຕາມແຜນການ໌ຊີ້ເວລາຂອງຣັຖບາລ ອຽຕນາມເໝີອ ແກ້ງສ້າງເງື່ອນໄຂສຳຄັນຈີປະຖະເພື່ອຫາທາງສົ່ງກຳລັງທຫາຣ ຈຳນວນມາກຂອງຕົນຜ່ານດິນລາວເຂົ້າໄປຍັງສົງຄາມອຽຕນາມໄດ້ ມີຂ້ໍສັງເກຕ ວ່າຽໆໃຫ້ເຂົ້າໃຈວ່າ ໃນການພົບປະກັນສອງຕໍ່ສອງຣະຫວ່າງສຸພານຸວົງສ໌ກັບເຈົ້າ ສຸວັນນາພູມາເມື່ອວັນທີ 01 ສິງຫາ ປີຄສ.1956 ນັ້ນ ໄດ້ມີການ໌ຕົກລົງກັນໄວ້ລວ່ງ ໜ້າແລ້ວ ສຸພານຸວົງສ໌ບໍ່ຍອມເອີ່ຽເຖິງຄຳວ່າຈັກກະພັຕຣ໌ອາເມຣິກາ ແລະເຈົ້າ ສຸວັນນາພູມາກໍບໍ່ຍອມເວົ້າຄວາມເກົ່າທີ່ວ່າ ໃຫ້ສຸພານຸວົງສ໌ສົ່ງທຫາຣຂອງຕົນວາງ ອາວຸທແລະເຂົ້າມາຍອມຈຳນວນ ຈົນເຖິງວັນທີ 05 ສິງຫາຈຶ່ງມີແຖລງການ໌ຮ່ວມ ຂອງສອງເສດ ຖ້ອຍຄຳ ທີ່ກ່ຽວກັບການ໌ຢຸດຍິງ-ສິທທີ່ໃນການ໌ເລືອກຕັ້ງ-ການ ໂຮມເອົາສອງແຂວງ (ຜົ້ງສາລີ+ຫົວພັນ) ກັບກຳລັງທຫາຣລາວອິສຣະຈຳນວນ ໜຶ່ງ ເຂົ້າມາຮ່ວມກັບຣັຖບາລຣາຊອານາຈັກ ຣ໌-ຈັດຕັ້ງຄນະກັມມະທິການ ໆເມືອງ+ ການ ສ້າງຕັ້ງຣັຖບາລປະສົມຊົ່ວຄາວ-ການເລືອກຕັ້ງເພີ່ມ.

ເມື່ອຣັຖບາລປະສົມຖືກສ້າງຕັ້ງຂຶ້ນໃນວັນທີ 19 ພຶສຈິກາ 1957 ນັ້ນ ເຈົ້າສຸ ວັນນາພູມາໄດ້ເປັນນາຍົກ ສ່ວນສຸພານຸວົງສ໌ໄດ້ເປັນຣັຖມົນຕຣີແຜນຜັງ ໃຫ້ມີກອງ ກຳລັງປະກອບອາວຸທຂອງແນວລາວອິສຣະຈຳນວນໜຶ່ງກອງຣວ້ຽເຂົ້າມາຢູ່ທີ່ຄ່າຽ ທາຕຸດຳໃນນະຄອນຣວ້ຽງຈັນທນ໌ໂດຽສຸພານຸວົງສ໌ອ້າງວ່າເພື່ອມາຮັກສາຄວາມປອດ ພັຍໃຫ້ພວກຕົນ ແຕ່ຫາກຣັຖບາລຣາຊອານາຈັກອົເຄາະຫ໌ໃຫ້ດີວ່າ ຖ້າທັງສອງ ຝ່າຽມີຄວາມຈິງໃຈຕໍ່ການ໌ເຈຣະຈາ ກໍບໍ່ເຫັນຈຳເປັນຫຽັງທີ່ຕ້ອງມີກຳລັງປະກອບ

ອາວຸທຂອງສຸພານຸວົງສ໌ເຂົ້າມາຢູ່ໃນວຽງຈັນທນ໌.

ເມື່ອມີກາຣເລືອກຕັ້ງເພີ່ມຂຶ້ນໃນວັນທີ 05 ເດືອນພຶສພາ ປີ 1958 ນັ້ນສຸພານຸວົງສ໌ກໍໄດ້ຄະແນນສຽງຖ້ວມທົ້ນ ແລະກໍໄດ້ເປັນຜູ້ແທນຣາຊດອຣເຕັມຂັ້ນ ຈຳນວນ ທຫາຣລາວອິສຣະໜຶ່ງກອງຣ້ອຍນັ້ນຖືກລະລາຍ ໃຫ້ເຂົ້າສັບຊ້ອນຕາມກຣົມຕຳ ຣວຈ ກຣົມສາຣະວັຕຣ ມີຈຳນວນໜຶ່ງຖືກສົ່ງເຂົ້າເຮັດກາຣໃນສຖາບັນວິທຍຸ ມີ ຈຳນວນໜຶ່ງກໍແຖຜົມເຂົ້າບວຊຕາມວັດຫລາຍແຫ່ງໃນນະຄອຣວຽງຈັນທນ໌ຊຶ່ງ ລ້ວນແຕ່ເປັນແຜນເຊື່ອງສາຍລັບນັກສຶບຂອງພວກລາວອິສຣະເອົາໄວ້ຢ່າງມິດ ຊິດແສນສລາດດັ່ງຈະເຫັນໃນກາຣ ໂຕນໜີຈາກຄຸກ ໂພນເຄັງຂອງສຸພານຸວົງສ໌ ກໍແມ່ນສາຣະວັຕຣ໌ສາຍລັບຝ່ງແໜ້ນຂອງແນວລາວເອງພາໜ ຣວມທັງພວກ ທີ່ບວຊຢູ່ໃນວັດທາຕຸຫລວງດ້ວຍ.

ແຜນກາຣນ໌ແລະຄວາມພຍາຍາມສ້າງຕັ້ງຣັຖບາລປະສົມ ຂອງພວກຄອມມິວ ນິສຕ໌ນັ້ນແມ່ນທີ່ສດຸດ ຊຶ່ງເປີດໂອກາສໃຫ້ພວກຕົນຍາດແຍ່ງອຳນາຈມາຈາກ ນັກກາຣເມືອງຝ່າຍຂວາໄດ້ ຍົກຕົວຢ່າງກາຣສ້າງຕັ້ງຣັຖບາລປະສົມຊຸ່ວລາວເມື່ອ ປີ ຄສ.1973 ວ່າດ້ວຍຄວາມຖືກຕ້ອງປ້ອງດອງຊາຕ ພໍເຖິງປີ 1975 ກໍທັບມ້າງ ມັນຖິ້ມເສັຍ ແລ້ວກໍສ້າງຣະບອບສາທາຣະນະຣັຖຂຶ້ນມາແທນ ສນັ້ນໃນກາຣຜິປອງ ສ້າງຕັ້ງຣັຖບາລປະສົມຂອງສຸພານຸວົງສ໌ໃນແຕ່ລະເທື່ອທີ່ຜ່ານໆມາແລ້ວນັ້ນ ກໍແມ່ນ ເພື່ອທຳລາຍຣັຖບາລປະສົມນັ້ນເອງ.

ກ່ອນທີ່ຈະມີກາຣ ໂຮມລາວສອງຝ່າຽໃນເດືອນພຶສຈິກາ ຄສ.1957 ນັ້ນ ສຸພານຸວົງສ໌ໄດ້ຮັບແຜນກາຣນ໌ມາຈາກພັຄຄອມມິວນິສຕ໌ອິນດູຈີນ ທີ່ມີ ໂຮຈິມິນຫ໌ເປັນຫົວໜ້າຢູ່ ດັ່ງທ່ານຈະໄດ້ອ່ານບົທບັນທຶກທີ່ຖອດຄວາມມາຈາກຕົ້ນສບັບ ຂອງທ່ານບົວ ທາຣ ຣວງມາລີ (ພນັກງານຄົນສຳຄັນຂອງແນວລາວ) ທີ່ຂຽນລົງໄວ້ ໃນປຶ້ມຊີວະ ປວັຕສ່ວນຕົວຂອງສຸພານຸວົງສ໌ ເນື່ອງໃນໂອກາສຄົບຣອບວັນເກີດ 80 ປີ ທີ່ພິມພ໌ ອອກໃນນະຄອຣວຽງຈັນທນ໌ເມື່ອເດືອນກໍຣະກະດາ 1989 ໂດຽກ່າວເຖິງຕອນທີ່ມີ ຄຳສັ່ງມາຈາກສູນຍ໌ກາງພັຄຄອມມິວນິສຕ໌ອິນດູຈີນ ໃນຣະຫວ່າງທ້າຽເດືອນທັນວາ ປີ 1957 ໃຫ້ຣະດົມເອົາພນັກງານລາວອິສຣະແລະປະຊາຊົນທົ່ວເຂຕຊຳເໜືອ ມາ ຟັງຄຳປາສັຍຂອງສຸພານຸວົງສ໌ ຜູ້ຂຽນໄດ້ລອກກ່າຽເອົາຂ້ໍຄວາມສຳຄັນອອກມາ ຈາກຕົ້ນສບັບເດີມທັງໝົດຂອງທ່ານບົວທາຣ ຣວງມາລີ ທີ່ເຈົ້າສຸພານຸວົງສ໌ປ່າວ ປະກາສຜ່ານໄມຄ໌ໂຄຣໂຟນຕໍ່ໜ້າຄົນເປັນພັນໆດ້ຽສຳນຽງຫຼວງພຣະບາງວ່າ....

"ຈຸດປະສົງຄ໌ຂອງກາຣປະຕິວັຕ ແມ່ນເພື່ອປົດປ່ອຍຊາຕ ໂດຽສົມບູຣນ໌ດ້ວຽກາຣ

ຂັບໄລ່ຈັກກະພັຕຣຸກຮານ ໂຄ່ນລົ້ມການປົກຄອງຫຸ່ນ ທັງລຶບລ້າງຣະບອບຣາຊາທິ ປະໄຕຍ໌ເພື່ອກໍ່ສ້າງຣະບອບປະຊາທິປະໄຕຍທີ່ແທ້ຈິງ ໃນປັຈຈຸບັນນີ້ປະຊາຊົນທົ່ວ ປະເທສ ໂດຽສເພາະໃນເຂຕທົ່ງພຽງແລະຕົວເມືອງຍັງບໍ່ທັນຮູ້ເຖິງແນວທາງການ ປະຕິວັຕຂອງພວກເຮົາໄດ້ດີ ດັ່ງນັ້ນສູນຍ໌ກາງຈຶ່ງໄດ້ປຽນຍຸທວິທີໃໝ່ ຄືເຂົ້າຮ່ວມ ຈັດຕັ້ງຣັຖບາລປະສົມຊົ່ວຄາວຂຶ້ນ ແລ້ວມອບ 2 ແຂວງໃຫ້ຣັຖບາລປະສົມຊົ່ວຄາວ ແຫ່ງຊາຕ ປອ່ມບັຕເອົາຜູ້ແທນ ໂດຽມີຕົວແທນຝ່າຽແນວລາວຮັກຊາຕເຂົ້າຮ່ວມ ນຳເອົາກຳລັງປະຕິວັຕ 1500 ຄົນ (ມີທັງພົລເຮືອນແລະທະຫານ) ເຂົ້າກັບຣັຖບາລ ເຫຼືອນັ້ນແມ່ນສົ່ງກັບຄືນຫ້ວຖິ່ນເດີມ ໃຫ້ອ້າຽນອ້ວງລູກຫລານເຂົ້າໃຈວ່າທາງສູນຍ໌ ກາງເຣັດແນວນັ້ນ ບໍ່ແມ່ນຍຸບກຳລັງປະຕິວັຕ ບໍ່ແມ່ນຍອມຈຳນົນຕໍ່ສັຕຣູ ອັນນີ້ ແມ່ນນັ້ນຣົບໃໝ່ ຄືໂຄສະນາເຜີຽແຜ່ແນວທາງປະຕິວັຕ ໃນທຸກໆຂອກບ້ານແຈ ເມືອງໃນບັຣຖາປັນຍາຊົນໃນເມືອງ ເມື່ອເຫຕຸການສຸກງອມສູນຍ໌ກາງກໍຈະຣຽກ ຮ້ອງໃຫ້ພາກັນລຸກຮືຂຶ້ນ ແລະປະຕິບັຕຕາມແນວທາງນະໂຍບາຽຂອງສູນຍ໌ກາງ ເປັນຂັ້ນໆຕໍ່ໄປ..."

ການທີ່ລາວສອງຝ່າຽຈະສາມາຣຖ໌ຮ່ວມກັນໄດ້ນັ້ນ ແມ່ນຍອດປຣາຖນາຂອງ ຊາຕລາວໃນມູມມອງຂອງຄົນລາວ ເມື່ອຈະມີຣັຖບາລປະສົມເກີດຂຶ້ນ ຊົນໃນຊາຕກໍ ແນມເຫັນສັນຕິພາພຢູ່ມືທີ່ສຸດແລ້ວ ຄວາມຊື່ນຊົມຍິນດີທີ່ບໍ່ໄດ້ປະກາສນັ້ນ ມັນລົ້ນ ເລື່ອນຢູ່ພາຽໃນຫົວໃຈຂອງຄົນລາວທົ່ວປະເທສ ແຕ່ພໍມີຂ່າວວ່າຣັຖບາລປະສົມຈະ ກຳເນີດຂຶ້ນມາແລ້ວຊໍ້າພັດມີເຫຕຸການອັນໃໝ່ແຊກຊ້ອນຂຶ້ນມາເສັຽກ່ອນ ກໍຄືເມື່ອ ພວກ CIA ບອກອະທິບາຽໃຫ້ນາຍົກສຸວັນນາພູມາໃຫ້ຮູ້ວ່າ...

"ເງິນພາສີທີ່ຄົນອາເມຣິກັນຊ່ວຽເຫຼືອລາວນັ້ນ ແມ່ນເງິນງົປປະມານກ້ອນໃຫ່ຽ ເພື່ອໄຊ້ຕ້ານກັບຣະບອບຄອມມິວນິສ ການທີ່ນາຍົກສຸວັນນາພູມາປະກາສເອົາ ພວກລາວຄອມມິວນິສຕ໌ຂອງສຸພານຸວົງສ໌ເຂົ້າມາອາສັຍກິນເງິນງົປປະມານດັ່ງກ່າວ ນີ້ ແມ່ນຂັດຕໍ່ນະໂຍບາຽການຕ່າງປະເທສຂອງສຫະຣັຖ"

ນາຍົກສຸວັນນາພູມມາເອງເຖິງກັບຕາຄ້າງເມື່ອໄດ້ຟັງ ເພາະບໍ່ເຄີຍຄິດວ່າມັນຈະມີ ເຣື່ອງແຊກຊ້ອນຂຶ້ນມາໄດ້ ແລະການໂຮມລາວທົ່ວາດໄວ້ໃຫ້ມີຣັຖບາລປະສົມ ກໍຈຶ່ງ ເຣີ່ມມີບັຣຫາຂຶ້ນມາແລ້ວ.

ພວກ CIA ກໍຄືຊີໄອເອ ພວກເຂົາແມ່ນມືອາຊີພທີ່ສາມາຣຖ໌ຝຶກຝົນສພາວະ ການຣົບໄດ້ແທບທຸກຢ່າງໃນໂລກ ພວກເຂົາບໍ່ຍອມແຕະຕ້ອງຣັຖບາລປະສົມຂອງສຸ ວັນນາພູມາແຕ່ປະການໃດ ພວກເຂົາມີວິທີການ 108 ຂອງພວກເຂົາເອງ ກໍຄືເຣັດ

ທຸກຢ່າງເພື່ອເປັນການກຳຈັດສຸວັນນາພູມາ ໃຫ້ພົ້ນຈາກຕຳແໜ່ງນາຍົກລັຖມົນຕຣີ ໃນລັຖບາລປະສົມນີ້ເສັຽ ກ່ອນທີ່ສຸພານຸວົງສ໌ຈະພາພັຄຜວກລາວຄອມມິວນິສຕ໌ໂຫ່ ເຂົ້າມາຈົດຊື່ລຽນແຖວເປີກເງິນຊ່ວຍເຫລືອຂອງອາເມຣິກາ ພວກຊີໄອເອໃນນະ ຄອຣວຽງຈັນທນ ໄດ້ທຳການປຸກລະດົມຊຸກຍູ້ໃຫ້ກຸ່ມປັນຍາຊົນທີ່ນິຍົມຝ່າຽຂວາແລະ ຄຽດຊັງລະບອບຄອມມິວນິສ ຈຳນວນໜຶ່ງຊຶ່ງສ່ວນມາກສັງກັດຢູ່ໃນພັຄ "ລາວໂຮມ ລາວ" ຂອງທ່ານຜູ້ ຊຸນະນິກອນ ພາກັນທຳການຄັດຄ້ານອອກສຽງລົ້ມລະຕິ ບໍ່ໃຫ້ສຸ ພານຸວົງສ໌ນຳພົລພັຄແນວລາວອິສຣະເຂົ້າມາຮ່ວມຢູ່ໃນລັຖບາລປະສົມນີ້ເດັດຂາດ.

ເຫັຕນີ້ກໍໄດ້ພົລເກີນຄາດເສັຽອີກ ເພາະຜູ້ ຊຸນະນິກອນນັ້ນບໍ່ເຂົ້າແກ່ນກັນ ກັບຣະບອບຄອມມິວນິສ ຢູ່ເປັນທຶນຢູ່ແລ້ວ ພັນເອກບຸນຍ໌ປອນ ນາກເທພາຣັກສ໌ ທີ່ເປັນຫົວໜ້າກຸ່ມປັນຍາຊົນ ກໍໄດ້ຣະດົມເພື່ອນນາຽທຫານແລະພົລະເຮືອນຄົນສຳ ຄັນໆທຳການກົດດັນທາງດ້ານການເມືອງຢູ່ໃນສພາ ຈົນນາຍົກສຸວັນນາພູມາຕ້ອງ ຂໍລາອອກຈາກຕຳແໜ່ງໄປໃນວັນທີ 22 ກໍຣະກະດາ 1958 ເມື່ອເຫັນເປັນເຊັ່ນນີ້ ກຸ່ມປັນຍາຊົນຈຶ່ງເລັ່ງລັດໃຫ້ຜູ້ ຊຸນະນິກອນທີ່ບໍ່ມັກຂີ້ໜ້າສຸພານຸວົງສ໌ຢູ່ແລ້ວຣີບຈັດ ຕັ້ງຣັຖບາລຂຶ້ນມາໃໝ່ທັນທີ ເພື່ອໃຫ້ສົມໃຈຕື່ມອີກຜູ້ຊຸນະນິກອນ ດຶງເອົາກະຕ່າຽ ໂດນສະໂສຣິທ ຜູ້ທີ່ບໍ່ເຂົ້າແກ໊ບກັນຫັ້ງໃນທາງສ່ວນຕົວແລະການເມືອງ ກັບສຸພາ ນຸວົງສ໌ ມາເປັນຮອງນາຍົກລັຖມົນຕຣີ ສ່ວນອດີຕນາຍົກສຸວັນນາພູມານັ້ນ ຮູ້ຄັກ ແນ່ວ່າຜູ້ ຊຸນະນິກອນ ບໍ່ຕ້ອງການຕົນໃຫ້ມາຣົກສະພາການເມືອງຂອງເຂົາ ຈຶ່ງ ປະກາສ "ຂໍພັກຜ່ອນ" ແລ້ວນາຍົກຜູ້ກໍສົ່ງສຸວັນນາພູມາໄປພັກຜ່ອນໄກໆ ໂດຍການ ສົ່ງໄປເປັນທູຕໃນຝຣັ່ງເສສເສັຽເລີຽ.

ລັຖບາລຂອງຜູ້ ຊຸນະນິກອນທີ່ຜ່ານສະພາມະຕິ ໃນວັນທີ 18 ສິງຫາ 1958 ທີ່ສ້າງຄວາມພໍໃຈໃຫ້ພວກຊີໄອເອທີ່ສຸດນັ້ນກໍຄື ປະເທສລາວຕ້ອງມີນະໂຍບາຽຕ່ຳ ຕ້ານລັທທິຄອມມິວນິສ໌ ແຕ່ບໍ່ທັນຂ້ວາມຄືນດ້ວຽຊ້ຳ ລັຖບາລຂອງຜູ້ກໍຖືກໂຫ່ປະ ນາມສັບແຫລກຈາກກຸ່ມສຸພານຸວົງສ໌ ໜັງສື ພິມພ໌ອຽງຊ້າຽຊື່ "ລາວຮັກຊາຕ" ກໍຂຽນບົທວິວິຈາຣນ໌ປະນາມລັຖບາລໃໝ່ຂອງຜູ້ ຊຸນະນິກອນແບບເສັຽຫາຽວ່າ ເປັນລັຖບາລຈອມຜເດັຈການແລະເຈຕນາທຳລາຽ ແຖລງການຮ່ວມຣະຫວ່າງສອງເຈົ້າລາວຄັ້ງວັນທີ 05 ສິງຫາ 1956 ແບບໜ້າ ດ້ານທີ່ສຸດ ຖານີວິທຍຸວຽຕນາມໃນຣາໂໝ່ຽກ໋ອອກອາການສ່ອນບົທວິຈາຣນ໌ໂຈມຕີ ລັຖບາລນາຍົກຜູ້ ຊຸນະນິກອນ ເປັນພາສາລາວຊ່ວຍສຸພານຸວົງສ໌ວ່າ ເປັນລັຖບາລ ຫຸ່ນ ສ່ວນສຖານີວິທຍຸແນວລາວໃນຊ່ຳເໝືອກໍກະຈາຽສຽງປະນາມລັຖບາລຜູ້ຍຸ

ສຸພານຸວົງສ໌ເອງກໍລຸກຂຶ້ນກ່າວປະນາມກາງສະພາວ່າ...

"ນະໂຍບາຍຕໍ່ຕ້ານຄອມມິວນິສ໌ຂອງຜູຍ ຊນະນິກອຣນັ້ນ ບໍ່ແມ່ນນະໂຍບາຍເປັນກາງຈັກໜ່ອຍ ແຕ່ມັນເປັນນະໂຍບາຍຂອງພວກປະຕິກາຣຂວາຈັດ.!"

ສຸພານຸວົງສ໌ຣະດົມພົລທັງພວກນັກສຶບສາຣລັບແລະພວກທີ່ນິຍົມຄອມມິວນິສ໌ ທີ່ເຊື່ອງຊ້ອນແປກປົນຢູ່ໃນກຳລັງຝ່າຍຣັຖບາລຣາຊອານາຈັກຣ໌ ຮວມທັງພຣະສົງຄ໌ອົງຄ໌ເນຣ ແລະປະຊາຊົນຈຳນວນໜຶ່ງໃຫ້ມາຮ່ວມກະໜ່ຳໂຈມຕີຣັຖບາລອັນທີ່ສຸພານຸວົງສ໌ຂນານນາມໃຫ້ວ່າ "ຣັຖບາລເຖື່ອນ" ຢ່າງອຶກກະທຶກຄຶກໂຄມຢູ່ໄລຍະໜຶ່ງ ແຕ່ນາຍົກ ຜູຍ ຊນະນິກອຣ ກໍອົມຍິ້ມເສັຽງເອົາໄວ້ ທັງໄດ້ເອີ່ຍບອກກັບຄົນໃກ້ຊິດຂອງຕົນວ່າ...

"ແນວລາວພວກນີ້ ຂ້ອຽຈັດການຽງຄົນດຽວກໍສຳເຣັຈ"

ແລ້ວກໍສັ່ງປິດສຳນັກງານໜັງສືພິມພ໌ຊື່ "ລາວຣັກຊາຕ" ທີ່ເປັນປາກກະບອກສຽງຂອງຝ່າຍສຸພານຸວົງສ໌ເສັຽ ປະກາສຍົກເລີກສັນສັນຍາຕ່າງໆຂອງຣັຖບາລເກົ່າທີ່ເຄີຍມີກັບພວກແນວລາວ ໂດຽອ້າງເຫຕຜົລວ່າຝ່າຍສຸພານຸວົງສ໌ ກໍບໍ່ເຄີຍເຄົາຣົພສັນຍານັ້ນໆເລີຽ.

ສພາພການເມືອງຣະຫວ່າງສອງຝ່າຍ ກຳລັງເຄັ່ງຕຶງສຸດຂນາດ ພາໃຫ້ອຽຕນາມເໝືອເປັນເດືອດເປັນແລ້ນແທນສຸພານຸວົງສ໌ ທີ່ເຫັນພວກຊີໄອເອທຳການຂວັ້ນບາດຣັຖບາລປະສົມຂອງລາວ ພວກຊີໄອເອຮູ້ຄັກແນ່ວ່ານາຍົກຜູຍ ຕ້ອງຫຼີ້ນງານສຸພານຸວົງສ໌ໜັກຂຶ້ນເຣື່ອຍໆ ເພາະໃນພ້ອມດຽວກັນນັ້ນຍັງມີເຣື່ອງກ່ຽວກັບການໂຮມເອົາທຫານແນວລາວຈຳນວນ 2 ກອງພັນຈາກທົ່ງໄຫຫີນ ແລະຊຽງເງິນເຂົ້າຮວມກັບກອງທັພແຫ່ງຊາຕ ຕາມທີ່ອດີຕນາຍົກເຈົ້າສຸວັນນາພູມາຕົກລົງແຕ່ແນວນີ້ກໍດີ ຣັຖບາລໃໝ່ຂອງນາຍົກຜູຍ ຊນະນິກອຣກໍຍັງຮັກສາຮູບຮ່າງຂອງຣັຖບາລປະສົມຊື່ວລາວເອົາໄວ້ປົກະຕິ ແຕ່ສຸພານຸວົງສ໌ເຣີ່ມປະຕິວັຕງຽບ ໂດຍບໍ່ຍອມຣັບຍົສຊັ້ນທີ່ຣັຖບາລເກົ່າເຈົ້າສຸວັນນາພູມາທຽບໄວ້ໃຫ້ແລ້ວ ສິງຫ໌ກະໂປ ສີໂຄຕຣ໌ຈູນນະມາລີເອງກໍປະຕິເສທຊັ້ນພັນເອກໂດຽອ້າງວ່າ ຫາກຕົນເອງຈະເປັນພັນເອກ ນາຽທຫານແນວລາວຈຳນວນໜຶ່ງກໍຄວຣໄດ້ຣັບເໝືອນກັນ.

ນາຍົກຜູຍ ຊນະນິກອຣອາສັຍເຫຕຸຜົລນີ້ປັ້ນລົ້ນຄືນໄປກ່າວຫາສິງຫ໌ກະໂປວ່າພຍາຍາມທຳລາຽສັນຕິພາພຂອງລາວແບບງ່າຍໆ ແລ້ວອອກຄຳສັ່ງປະກາສຜ່ານສຖານີວິທຍຸກະຈາຽສຽງແຫ່ງຊາຕຍື່ນຄຳຂາດໃຫ້ທຫານແນວລາວ ເຂົ້າມາຮ່ວມພິທີປະດັບຍົສພາຽໃນ 48 ຊົ່ວໂມງ ແຕ່ພ້ເຖິງເວລາກຳໜົດໄວ້ທຫານກອງພັນທີ 2

ຂອງສຸພານຸວົງສ໌ຈາກທີ່ງໄຫຫິນກໍບ່ຍອມມາຮ່ວມພິທີປະດັບຍົສ ເມື່ອເປັນເຊັ່ນນີ້ ນາຍົກຜູຍ ຊຸນະນິກອຣກໍກ່າວຫາວ່າ ສຸພານຸວົງສ໌ເປັນຂບົຖ ທີ່ສັ່ງໃຫ້ທຫາຣກອງພັນທີ 2 ປະຈຳເຂຕທີ່ງໄຫຫິນແຂວງຂ້ ຈຶ່ງສັ່ງໃຫ້ພັນເອກພູມີ ນໍ່ສວັຣຄ໌ ຊຶ່ງເປັນຣັຖມົນຕຣີຊ່ວຍວ່າການກະຊວງປ້ອງກັນປະເທສອອກຄຳສັ່ງໃຫ້ກຳລັງທຫາຣຝ່າຍຂວາ ທີ່ຢູ່ແຖວບໍຣິເວນທີ່ງໄຫຫິນຍົກກຳລັງໄປປົດລ້ອມເພື່ອຈັບຕົວທຫາຣກອງພັນທີ 2 ຂອງ ແນວລາວໃນວັນທີ 11 ພຶສພາ 1959 ພ້ອມສັ່ງດ່ວນໃຫ້ກຳລັງສາຣະວັຕຣ໌ທຫາຣໃນ ນະຄອຣວຽງຈັນທນ໌ທຳການກັກຕົວສຸພານຸວົງສ໌ກັບພວກຜູ້ນຳແນວລາວຄົນອື່ນໆ ໃຫ້ ຢູ່ໃນບໍຣິເວນເຮືອນນອນໃນວັນທີ 12 ພຶສພາມື້ຕ່ໍມາ ສ່ວນໄກສອຣ ພຣົຫ໌ມວິຫາຣ ກໍລັກລັ້ຢູ່ໃນເຮືອນສາຍລັບຄົນໜຶ່ງໃນນະຄອຣວຽງຈັນທນ໌ເໜືອນກັນ ແລະພໍພັຄ ພວກຖືກນາຍົກຜູຍສັ່ງຈຳກັດຕົວໄວ້ພາຍໃນເຮືອນ ທັນທີໄກສອຣກໍໄຊ້ພາສປອຣ໌ຈີນ ໄຕຫວັນແລະໄທຍຫາຍຕົວອອກໄປຈາກນະຄອຣວຽງຈັນທນ໌ໂດຍ່າງຫວຸດຫວິດ.

ມັນກໍທັມມະດາຢູ່ດີທີ່ທຫາຣຣາບກອງພັນທີ 2 ຂອງສຸພານຸວົງສ໌ກໍມີອາວຸທໃນມື ເຕັມອັຕຣາເສີກເໜືອນກັນຈຶ່ງບ່ຍອມໃຫ້ໃຜມາຈັບຕົວໄປງ່າຽໆ ກໍໄດ້ເກີດມີການຕໍ່ ສູ້ກັນດວ້ຽອາວຸທຢ່າງດຸເດືອດ ແຕ່ໃນທີ່ສຸດກຳລັງກອງພັນທີ 2 ຂອງແນວລາວ ກໍຕີ ຝ່າວົງລ້ອມອອກໜີໄປໄດ້ພາຍຫລັງທີ່ຍິງຕໍ່ສູ້ກັນຢູ່ນານໜຶ່ງອາທິຕຍ໌ໂດຍບໍ່ມີໃຜໄດ້ ຮັບບາດເຈັບຫລືເສັຍຊີວິຕແລະຖືກຈັບເປັນສເລີຍ ຈົນເຖິງວັນທີ 17 ພຶສພາ ທຫາຣ ກອງພັນທີ 2 ຈຶ່ງໄປເຖິງຊຳເໜືອ.

ຈາກເຫຕຸການທີ່ຮຸນແຮງດັ່ງກ່າວນີ້ ຍິ່ງຍົວະຍຸໃຫ້ວຽຕນາມເໜືອແລ້ນ ເຄືອງເປັນພິເສສທະວີຄູນ ຈຶ່ງທຳການແກ້ເຜັດນາຍົກຜູຍ ຊຸນະນິກອຣດວ້ຽການສົ່ງ ກຳລັງທຫາຣວຽຕນາມຫ໌ຈຳນວນ 1 ກອງພັນໂດຍປອມເອົາຊື່ຂອງກອງພັນທີ 2 ຂອງ ແນວລາວທວນຍ້ອນກັບມາຕີໂຕ້ກຳລັງທຫາຣຣາຊອານາຈັກຣ໌ທີ່ທ່ງໄຫຫິນ ສວຍໂອ ກາສສົ່ງທຫາຣວຽຕນາມເໜືອອີກຫຼາຽກອງພັນເຂ້ົາບຸກຕີກຳລັງທຫາຣ ຂອງກອງ ທັພພາຄທີ 3 ສວັຣຄ໌ນະເຂຕທ່ໍອພາຄກາງ ຄືທີ່ທ່າໂຮ່ງແລະເຊໂປນຢ່າງໝັກໝ່ວ ເມື່ອຍຶດເອົາທ່າໂຮ່ງໄວ້ໄດ້ແລ້ວ ກໍຈູດເຜົາເມືອງເຊໂປນຖິ້ມຈົນເປັນເຖົ້າຖ່ານ ຫຼັງຈາກນັ້ນກໍສົ່ງກຳລັງລົງຕາມສາຽທາງເລຂ 9 ເຂ້ົາຍຶດເອົາເມືອງພີນໄວ້ອີກຈົນ ເກີດມີຂບວນອົພຍົບໜີເຂ້ົາມາຍັງສວັຣຄ໌ນະເຂຕຢ່າງຫຼວງຫຼາຽ.

ຫລັງຈາກທີ່ໄດ້ສັ່ງຈຳກັດສຸພານຸວົງສ໌ກັບພັກພວກໃຫ້ຢູ່ແຕ່ໃນເຮືອນແລ້ວ ນາ ຍົກຜູຍ ຊຸນະນິກອຣ ກໍອອກຄຳສັ່ງເປັນລາຽລັກສນ໌ອັກສອຣ ໃນວັນທີ 28 ກໍຣະກະ ດາ 1959 ໃຫ້ສາຣະວັຕຣ໌ຈັບກຸມຕົວສຸພານຸວົງສ໌ກັບພັຄພວກໃນຂ້ໍຫາສະກັນຈ໌ວ່າ

ທຳການເຄື່ອນໄຫວທີ່ເປັນໄພຍ໌ອັນຕະຣາຍຕໍ່ຊາຕ ການຈັບກຸມເຈົ້າຕຳຣາ "ຕໍ່ຝັ່ງນ້ຳ ໃຫ້ຈອດກັນ "ກັບພວກຜູ້ນຳລາວອິສຣະອີກ 15 ຄົນ ຍັດໃສ່ຄຸກຄອກມ້າຂອງຝຣັ່ງເສສ ທີ່ໂພນເຄັງແລ້ວ ນາຍົກຜູຍ ຊຸນະນິກອຣກໍເຍີ້ຍວ່າ..

"ບໍ່ແມ່ນຄຸກຄອກມ້າດອກແຕ່ມັນແມ່ນໂຮງແຮມ 5 ດາວສຳຣັບພວກແມວລາວ ອິສຣະຢ່າງສຸພານຸວົງສ".

ເວລາຕໍ່ມານາຍົກຜູຍ ຊຸນະນິກອຣຍັງຮ່ຳໄຮອີກວ່າ...

"ອັນພວກລາວຄອມມິວນິສຕ໌ນີ້ມັນຫົວແຂງອີຫຼີ, ເຣື່ອງການຈັບເຈົ້າສຸພານຸວົງສ໌ ເທື່ອນີ້ຂ້ອຽຣັບຜິດຊອບເອງ".

ແມ່ນວ່າສຸພານຸວົງສ໌ກັບພັຄພວກບໍ່ໄດ້ສົ່ງສຽງໂວຍວາຍ ອອກມາກ່ອນໂກນຫູ ຂອງນາຍົກຜູຍໃນສະພາຜູ້ແທນຣາຊດອຣແລ້ວກໍຕາມທີ ແຕ່ກໍຍັງມີພວກຜູ້ແທນຫົວ ອ່ຽງຊ້າຽພາກັນປ້ອງກັນກຽຣຕິຂອງສຸພານຸວົງສ໌ຢູ່ຕໍ່ມາ ໂດຍພາກັນໄຊ້ສິທທິ໌ຂອງ ພວກຕົນແສດງຄວາມຄິດເຫັນໃນສະພາວ່າ ເປັນການກະທຳທີ່ເກີນກວ່າເຫຕຸແລະ ບໍ່ມີເຫຕຸຜົລພຽງພໍ ການຈັບຕົວສຸພານຸວົງສ໌ເຂົ້າຄຸກຈະກໍ່ຄວາມອັບອາຍໃຫ້ຊາຕຕື່ມ ອີກ ພາໃຫ້ສພາພການ໌ຂອງຣັຖບາລປະສົມເຄັ່ງຕຶງ ແລະອາຈເປັນສາເຫຕຸນຳ ໄປສູ່ການແຕກແຍກກັນອີກເທື່ອໃໝ່ ຣາຽຊື່ພວກທີ່ຖືກຈັບ 16 ຄົນ ດັ່ງນີ້...ສຸພານຸ ວົງສ໌ +ໝູຣັກ ພູມສວັຣຄ໌+ພູມີ ວົງສ໌ວິຈິຕ+ພູນ ສີປະເສີຖ+ສິງຫ໌ກະໂປ ສີໂຄຕຣ໌ຈູນ ນະມາລີ+ສີທົນ ກົມມາດຳ+ຄຳຜາຽບຸບຜາ+ມາ ໄຂຄຳພິທູລ+ສີຊຸນະ ສີສາຣ+ເພົ້າ ພິມພະຈັນທຣ໌+ມຫາສົມບູຣນ໌ ວົງສ໌ນໍບຸນຍ໌ທັມ+ໝື່ນ ສົມວິຈິຕ+ຄຳເພັຊຣ໌ ພຣົຫ໌ມມະ ວັນ+ບົວສີ ຈເຣີນສຸຂ+ພູເຂົ້ຳ+ແລະມານະ ການຈັບກຸມພວກຜູ້ນຳລາວອິສຣະທັງ 16 ຄົນເປັນຂ່າວໃຫ່ຍ ຄນະກັມມະການຣາວດການສາກົລ 3 ປະເທສປະຈຳລາວຕິດ ຕາມຢ່າງໃກ້ຊິດທີ່ສຸດ.

ເມື່ອກຳລັງວຽຕນາມເໜືອປະສົມແນວລາວ ທຳການບຸກໂຈມຕີກຳລັງຂອງ ຣັຖບາລຣາຊອານາຈັກ໌ໜັກຂຶ້ນ ນາຍົກຜູຍ ຊຸນະນິກອຣ+ທ່ານຄຳພັນທ໌ ປັນຍາ ຣັຖມັນຕຣີຊ່ວຽວ່າການກະຊວງຕ່າງປະເທສ+ພູມີ ນໍ່ສວັຣຄ໌ ຣັຖມົນຕຣີຊ່ວຽວ່າ ການກະຊວງປ້ອງກັນປະເທສ ໄດ້ພາກັນອອກເດີນທາງໄປຍັງສະຫະຣັຖອາເມຣິກາ ໃນທ້ອງເດືອນສິງຫາປີ 1959 ທັງນີ້ກໍເພື່ອເຂົ້ຳພົບເລຂາທິການໃຫ່ຽສະຫະປະຊາ ຊາຕ **Dag Hammarkjold** ແລ້ວຣາຽງານການຣຸກຣານລາວຂອງທຫາຣວຽຕ ນາມເໜືອ ເລຂາທິການໃຫ່ຽສະຫະປະຊາຊາຕຈຶ່ງໄດ້ເດີນທາງມາລາວໃນເວລາຕໍ່ ມາເພື່ອສັງເກຕການ໌ດ້ວຽຕົນເອງ ກ່ອນອອກເດີນທາງນາຍົກຜູຍໄດ້ມອບເອກສາຣ

ເຣື່ອງກາຣຍື່ນຟ້ອງສຸພານຸວົງສ໌ຂຶ້ນສາຣອາຍາ ໃຫ້ຣອງນາຍົກກະຕ່າງ ໂດນສາໂສ ຣິທທ໌ຈັດກາຣທັງໝົດ ແຕ່ຈົນນາຍົກຜູ້ງກັບຄືນມາຍັງນະຄອຣວຽງຈັນທນ໌ ເອກ ສາຣນັ້ນຍັງນອນສງົບຢູ່ໃນລິ້ນຊັກໂຕ໊ະເໝືອນເດີມ.

ທ່ານສີຊຸນະ ສີສາຣ ແມ່ນບຸຄຄົລສຳຄັນຂອງຂບວນກາຣແນວລາວຮັກຊາຕ ເປັນໜຶ່ງໃນຄນະເຈຣະຈາຂອງທີມສຸພານຸວົງສ໌ ວ່າດ້ວຽກາຣໂຮມລາວສອງຝ່າງ ຈົນສາມາຣຖ໌ຈັດຕັ້ງຣັຖບາລປະສົມຄັ້ງນີ້ຂຶ້ນມາໄດ້ ແລະສີຊຸນະ ສີສາຣກໍເປັນໜຶ່ງ ໃນຈຳນວນນັກໂທສກາຣເມືອງທີ່ນາຍົກຜູ້ ຊຸນະນິກອຣ ສັ່ງຈັບຂັງໃສ່ຄຸກຄອກຂີ້ນ້ຳ ທີ່ໂພນເຄັງພ້ອມກັນກັບສຸພານຸວົງສ໌ ສນັ້ນເມື່ອງໃນວັນຄ້ຳງວັນເກີດຄົບຣອບ 80 ປີຂອງສຸພານຸວົງສ໌ ເມື່ອປີ ຄສ. 1989 ນັ້ນທ່ານສີຊຸນະ ສີສາຣ ໄດ້ຂຽນປວັຕກາຣ ຕິດຄຸກຂອງສຸພານຸວົງສ໌ໄວ້ໃນປຶ້ມ " ຊີວະປວັຕເຈົ້າສຸພານຸວົງສ໌ ຜູ້ນຳປະຕິວັຕ " ຊຶ່ງ ພິມພ໌ອອກເຜີຽແຜ່ທີ່ນະຄອຣວຽງຈັນທນ໌ໃນເດືອນກໍຣະກະດາ 1989 ພາຍໄຕ້ຫົວ ຂໍ້ເຣື່ອງວ່າ "300 ມື້ທີ່ຄຸກໂພນເຄັງ" ໂດຍບັຣຍາຍຮູປພັນສັຣທ໌ສີລັກສນະຂອງຄຸກ ຄອກມ້າໄວ້ໃຫ້ຜູ້ອ່ານເໝືອນຮູ້ເໝືອນໄດ້ເຫັນດວ້ຍຕາຂອງຕົນເອງວ່າ...

ສມັຍເປັນເມືອງຂຶ້ນຂອງຝຣັ່ງເສສ ຄຸກຫຼັງທີ່ກ່າວນີ້ເປັນພຽງຄອກມ້າຂອງ ທະຫາຣມ້າຝຣັ່ງເສສ ແຕ່ໃນຫຼາຽໆປີອີກຕໍ່ມາ ຄືຫຼັງຈາກທີ່ລາວໄດ້ຣັບເອກຣາຊ ສົມບູຣນ໌ແລະມີກອງທັພເປັນຂອງຕົນເອງແລ້ວ ຄອກມ້າຫຼັງດັ່ງກ່າວກໍຖືກດັດແປງ ໃຫ້ເປັນທີ່ພັກນອນຂອງພວກທະຫາຣຍາມປະຈຳເສນາທິກາຣທະຫາຣໂພນເຄັງ ຊຶ່ງມັນ ກໍແມ່ນຕຶກນ້ຽໆທີ່ກໍ່ດວ້ຽດິນຈີ່ສີແດງ ມີລວງຍາວປະມານ 30 ແມຕຣ໌ ລວງ ກວ້າງປະມານ 9 ແມຕຣ໌ ມີເພດານທີ່ເຮັດດວ້ຽໄມ້ແປ້ນກັນຣ້ອນຈາກຫຼັງຄາສັງກະ ສີໃນຍາມແດດກ້າ ແຕ່ຕໍ່ມາຕຶກກໍ່ວ່າງລົງຈຶ່ງຖືກແປສພາພໃຫ້ເປັນຄຸກຂັງຄົນ ໂດຽ ໄຊ້ແປ້ນໄມ້ອັດໜາໆມາຂັ້ນໃຫ້ເປັນຫວ້ງໆເຖິງ 20 ຫວ້ງ ແຕ່ລະຫວ້ງນັ້ນກວ້າງປະ ມານ 3 ແມຕຣ໌ແລະຍາວປະມານ 4 ແມຕຣ໌ ແລະເມື່ອສຸພານຸວົງສ໌ກັບພັຄພວກຖືກ ຈັບເຂ້ົາຂັງໄວ້ແລ້ວ ນາຍົກຜູ້ ຊຸນະນິກອຣກໍໄດ້ສັ່ງໃຫ້ເອົາເຫຼັກໜາມໜາກຈັບ ມາອ້ອມເປັນຣ້ົວຄຸກດ້ານນອກເຖິງ 7 ຣາວ.

ທ່ານສີຊຸນະ ສີສາຣຂຽນບັຣຍາຽເອົາໄວ້ວ່າ ສຸພານຸວົງສ໌ຖືກຂັງໄວ້ໃນຫວ້ງ ໜາຽເລຂ 4 ໄກ້ກັບຫວ້ງສຳຣັບຈັດພາເຂ້ົາແລະໄກ້ຫວ້ງນ້ຳ ປະຕູປວ່ງຢັຽມທຸກ ປວ່ງມີເຫຼັກເສັ້ນໃຫ່ຽຂນາດໂປ້ມືໄຂ່ວກັນຖີ່ໆເພື່ອປວ້ງກັນກາຣໂຕນໜີ ປະຕູໃຫ່ຽ ທີ່ໄຊ້ຫຽວເຂ້ົາອອກນັ້ນມີກຸນແຈໝວ່ຽໃຫ່ຽອັດໄວ້ ຕຽງນອນຂອງພວກນັກໂທສເປັນ ຕຽງເຫຼັກແບບທີ່ເຫັນຕາມໂຮງພຍາບາລ ແຕ່ລະຫວ້ງມີໂຕະນ້ຽ ສຳຣັບຕັ້ງພາ

ເຂົ້າ ມີເກົ້າອີ້ເພື່ອໃຫ້ນັ່ງກິນເຂົ້າ ຝົ້ນຫ້ອງຂັງປູດ້ວຍດິນຈີ່ສີແດງຊໍ້າ ມີດອກໄຟ ຫ້ອຍເຜດານທຸກຫ້ອງ ເຈົ້າສຸພານຸວົງສ໌ໄດ້ວິຈາຣນ໌ເຫຕຸການເທື່ອນັ້ນວ່າ ຜູຣ ຊນະ ນິກອຣປະຕິບັຕຕາມຄຳສັ່ງຈັກກະພັຕຣ໌ອາເມຣິກາ ແມ່ນຈະຢູ່ໃນຫ້ອງຂັງສຸພານຸ ວົງສ໌ກໍ່ຈັດຕັ້ງກັນເປັນຈຸ ອັນມີກັມມະການແລະຄນະເລຂາ ໂດຍແຕ່ລະຈຸມີໜ້າທີ່ ຫຼັກສຳຄັນ ຄືທຳການປຸກຣະດົມ ໂຄສນາເອົາພວກສາຣະວັຕຣ໌ທຫານຍາມຄຸກທັ້ງໝົດ ໃຫ້ປ່ຽນໃຈມາເປັນພວກຂອງຕົນໃຫ້ໄດ້.

ສຸພານຸວົງສ໌ກັບພັຄພວກຖືກກັກຂັງຢ່າງນັກໂທສການເມືອງ ແຕ່ໄດ້ຮັບການ ຜ່ອນຜັນໃນເຣື່ອງວິນັຍ ກໍຄືປ່ອຍໃຫ້ພວກນັກໂທສຢູ່ກັນແບບສບາຍ ຈະມານັ່ງຊຸມ ແຊວກັນຫຼືທ່ອງທ່ຽວໄປມາເຂົ້າອອກພາຍໃນຫ້ອງຂັງອື່ນໆໄດ້ຕາມໃຈ ອານຸຍາຕໃຫ້ ຄົນນອກຄຸກທຽວໄປສົ່ງອາຫານການກິນແກ່ນັກໂທສໄດ້ຕາມເວລາກິນເຂົ້າ ພ້ອມທັງ ນຳເອົາຂ່າວຄາວຂອງນັກໂທສໄປສົ່ງໃຫ້ຄອບຄົວຂອງພວກຕົນ ພວກນັກໂທສພາ ກັນທັດກາຍບໍຣິຫານກັບທີ່ທັ້ງເຊົ້າແລະແລງບໍ່ໄດ້ຂາດ ສຸພານຸວົງສ໌ຍັງຍືມເອົາຈົກ ຂຸດດິນຈາກພວກສາຣະວັຕຣ໌ທຫານ ມາທຳການປູກເບັ້ຽໝາກຫຸ່ງທີ່ເອື້ອຽເມັ້ຽຂອງ ນາຽພົລອ້ອນ ຣາທິກູລຫາມາໃຫ້ ນັກໂທສພາກັນປູກຜັກບົ່ວ+ຜັກທຽມ+ຫອມອື່ນໆ ສຸພານຸວົງສ໌ຍັງປູກເບັ້ຍດອກຕາເວັນເລາະໄປຕາມແຄມຮົ້ວຫນາມໜາກຈັບ ທີ່ອ້ອມ ເຮືອນຄຸກ ເພາະມີເດີ່ນກ້ວາງເກືອບ 10 ແມຕຣ໌ ແລະຍາວໄປຕາມຂນາດຂອງ ເຮືອນຄຸກ ສຸພານຸວົງສ໌ມັກລົມກັບພັຄພວກຣ່ວມຄຸກສເມີ່ວ ມີທາງເຂົ້າຕ້ອງມີທາງ ອອກ ຢ່າງນ້ອຽກໍກິນໝາກຫຸ່ງສຸກທີ່ຕົນປູກເສັຽກ່ອນຈຶ່ງຄ່ອຽໄປ.

ໃນວັນຕໍ່ມານາຍົກຜູຣ ຊນະນິກອຣ ກໍສົ່ງພວກໄອຍະການສາຣເຂົ້າໄປໃນຄຸກ ເພື່ອສືບສວນສອບສວນປາກຄຳຂອງສຸພານຸວົງສ໌ ໃນຂໍ້ກ່າວຫາວ່າເປັນຂບົຖຊາຕ ແລະທຳການຍຸແຍ່ໃຫ້ທຫານແນວລາວອິສຣະຫລົບໜີມາຣັບຍົສຊັ້ນ ອີກ ອັນໜຶ່ງສຸພານຸວົງສ໌ໄດ້ຊັກນຳເອົາທຫານອຽຕນາມເໜືອ ເຂົ້າມາຣຸກຣານປະເທສ ຂອງຕົນເອງ ແຕ່ສຸພານຸວົງສ໌ປະຕິເສທທຸກຂໍ້ຫາ ໂດຍການຊີ້ແຈງຕໍ່ໄອຍະການສາຣ ວ່າ ທີ່ກະທຳໄປທັ້ງໝົດກໍເພາະຄວາມຮັກຊາຕ ແຕ່ບໍ່ແມ່ນທຳລາຽຊາຕຕົນເອງ ແຕ່ຢ່າງໃດເລີຽ ສຸພານຸວົງສ໌ຢືນຢັນວ່າເຂົາເຄີຽເຂົ້າຮ່ວມໃນຣັຖບາລລາວອິສຣະຂອງ ເຈົ້າເພັຊຣາຊ ນັຕນະວົງສາເພື່ອຕໍ່ສູ້ກັບທຫານຝຣັ່ງເສສ ທີ່ກັບຄືນມາຍຶດຄອງລາວ ຄັ້ງທີສອງເມື່ອປີ 1946 ການທີ່ຄົນລາວຜູ້ໜຶ່ງໄດ້ທຳການຕໍ່ສູ້ເອົາເອກຣາຊມາໃຫ້ ຊາຕຕົນເອງນັ້ນ ຈະເວົ້າວ່າເປັນຂບົຖຕໍ່ຊາຕບໍ່ໄດ້ໂດຽເດັດຂາດ ສຸພານຸວົງສ໌ອະທິ ບາຍຕໍ່ໄປວ່າ ການຕໍ່ສູ້ຂອງຕົນເຣີ່ມແຕ່ເດືອນຕຸລາ 1945 ມານັ້ນ ແມ່ນການປະ

ກອບສ່ວນເພື່ອສັນຕິພາພທ່ວໂອິນດູຈີນຈົນເກີດມີສັນຍາເຈນີວາ 1954 ສືບຕໍ່ປະຕິບັຕ
ຕາມສັນຍານັ້ນ ຕົນເອງໄດ້ພຍາຍາມທຸກຢ່າງເພື່ອໃຫ້ມີຄວາມປອງດອງແລະກ້າວ
ສູ່ການຮວມລາວ ແຕ່ເມື່ອໄວຍະການສາຣຖາມວ່າ...

"ເມື່ອຊາຕລາວໄດ້ຮັບເອກຣາຊທີ່ສົມບູຮນ໌ໃນວັນທີ 22 ຕຸລາ 1953 ນັ້ນ ສເດັຈ
ສຸພານຸວົງສ໌ຢູ່ໃສ ຈຶ່ງບ່ຍອມເຂົ້າມາຮ່ວມວົງສາຄະນາຍາຕ"??

ສຸພານຸວົງສ໌ກໍຕອບໄວຍະການສາຣໄປວ່າ...

"ວັນນີ້ກໍແມ່ນຣັຖບາລຣາຊອານາຈັກຮ໌ທີ່ຫໍຣະຍ໌ສສັນຍາເສັຽເອງ ໂດຽນຳເອົາ
ຈັກກະພັຕຣ໌ອາເມຣິກາເຂົ້າມາແທນພວກຝຣັ່ງເສສ ຈຶ່ງຕ້ອງຕໍ່ສູ້ກັບອາເມຣິກາຕໍ່ໄປ
ຣັຖບາລຂອງທ່ານສິ່ງກຳລັງໄປປົດລ້ອມກອງທະຫານແນວລາວທີ່ທົ່ງໄຫຫີນ ຈົນພວກ
ເຂົ້າແຕກໝີໄປ ແລ້ວກໍມາຖິ້ມໂທສໃຫ້ພວກຂ້າພະເຈົ້າ ເພາະຢາກສ້າງເຣື່ອງມາ
ຈັບກຸມຄຸມຂັງພວກຂ້າພະເຈົ້າ ສນັ້ນການກັກຂັງອັນນີ້ເປັນການກະທຳທີ່ຜິດກົດ
ໝາຽ ຈຶ່ງຂໍທວງໃຫ້ຮີບປ່ອຽຕົວພວກຂ້າພະເຈົ້າໂດຽດ່ວນ"

ເມື່ອໄວຍະການສາຣກັບອອກໄປແລ້ວ ສຸພານຸວົງສ໌ຍັງປະນາມໄລ່ຫລັງໄປອີກວ່າ..

"ພວກໄວຍະການສາຣກໍລ້ວນແຕ່ປະຕິການທັງໜົດ"

ສຸພານຸວົງສ໌ປະຜຶຕົນເອງຢູ່ໃນຄຸກກໍຄືກັນກັບເວລາຢູ່ນອກຄຸກ ຄືຝຶກແອບຕົນເອງ
ຢູ່ກິນແບບງ່າຽໆສບາຽໆ ທຸກເຊົ້າສຸພານຸວົງສ໌ຈະຕື່ນເດິກກວ່າໃຜໆ ແລ້ວທຳການ
ອອກກຳລັງກາຽກັບບ່ອນ ຕ່ຈາກນັ້ນກ່ຈະເລາະຫົດດອກໄມ້ແລະຫົດຜັກຕາມສ່ວນ
ນ້ອຽໆທີ່ຕົນເອງປູກເອົາໄວ້ ເວລາຝົນຕົກສຸພານຸວົງສ໌ມັກອອກອາບນ້ຳຝົນ ແຕ່ເວ
ລາທີ່ຢູ່ໃນຫ້ອງຂັງສຸພານຸວົງສ໌ຂຽນບັນທຶກປະຈຳວັນແລະແຕ່ງປະຫານຸກົມ ສຸພານຸ
ວົງສ໌ໃຊ້ສໍດຳແຕ້ມຮູບແມ່ນ້ຳໃສ່ຝາຫ້ອງຂັງຂອງຕົນ ຊຶ່ງມີຮູບນົກນ້ອຽງອຽຂອນຢູ
ດອນກາງນ້ຳ ຕາມແຄມຕລິ່ງກໍມີຕົ້ນໄມ້ໃຫ່ຽທີ່ເຫງົ້າຂອງມັນເປັນໂກນແລະມີຫົວງ
ໃຫ່ຽໂປໂລອອກມາຈາກໃນໂກນ ສຸພານຸວົງສ໌ອະທິບາຽຮູປແຕ້ມຂອງຕົນໃຫ້ເພື່ອນ
ນັກໂທສຫົວ 15 ຄົນຟັງວ່າ...

"ຮູປນົກນ້ອຽງອຽຂອນໄຫລນ້ຳນັ້ນໝາຽເຖິງອິສຣະພາພ, ສ່ວນງູໃຫ່ຽທີ່ໂປໂລ
ຫົວອອກມາຈາກໂກນນັ້ນ ແມ່ນຄວາມມີສຕິຣະວັງຕົວ"

ທ່ານທອງເສີຽ ໂຄຕຣ໌ວົງສາ ອດີຕສາຣະວັຕຣ໌ທະຫານຍາມຄຸກທີ່ຕັດສິນໃຈຜາ
ສຸພານຸວົງສ໌ແທກຄຸກໃນເທື່ອນັ້ນໄດ້ຂຽນບັນທຶກລົງໄວ້ໃນປຶ້ມຊ່ອຽຄວາມຈຳ ທີ່ມີຊື່ວ່າ
"ແທກຄຸກ" ຂອງຜູ້ກ່ຽວຫລັງຈາກພວກແນວລາວມີອຳນາຈເດັດຂາດໃນລາວແລ້ວ
ເວົ້າວ່າ...

"ລຸງສຸພານຸວົງສ໌ນີ້ຫາກແປກຕ່າງກັນກັບພວກຜູ້ນຳອື່ນໆທີ່ຂ້ອຽເຄີຽຮູ້ຈັກ ລຸງຕິ່ນ ແຕ່ເຊົ້າທຸກວັນ ລຸງແອບກຳລັງກາຽໃນທ່າທີ່ທີ່ແຂງແຮງມາກ ມີຈັງຫວະເປັນຕາ ຢ້ານ ມີແບບຕີມວຽຟຕ໌ຕີອ່ງໄອ ມີແບບແລ່ນກະໂດດຕ່ຳກະໂດດສູງ ລຸງມັກ ຕັດຜົມຈອນແລະຈິ່ງໝວດຈ້ອນໆ ໃບໜ້າກໍເຂັ່ງຂຶມບໍ່ທັກທາຽຕໍ່ໃຜໆໃນຍາມທີ່ອອກ ກຳລັງກາຽ ແຕ່ຫາກສັງເກຕໃຫ້ດີແລ້ວລຸງສຸພານຸວົງສ໌ເປັນຄົນເບີກບານຢູ່ປະຈຳ ເຮັດໃຫ້ຂ້ອຽມ່ວນໃຈ ທີ່ເຫັນເຜີ່ນເດັດດ່ຽວສົມເປັນຜູ້ນຳຕົວຢ່າງແລະທຸ່ນທຽງ ຕ່ຳ ສຜາວະກາຽນ໌ທ້ຽງຍາກຄືແນວນີ້"

ເວລາຜ່ານໄປອີກ ແຕ່ສຸພານຸວົງສ໌ກັບພັຄພວກ 16 ຄົນຍັງຖືກນາຍົກຜູຍ ຊຸນະ ນິກອຽແຊ່ເຢັນຢູ່ໃນຄຸກຄອກມ້າໂດຍບໍ່ຍອມ ກາຽພິຈາຽະນາໂທສທັ້ງໆທີ່ເຄີຽສັ່ງໃຫ້ ຽອງນາຍົກກະຕາຍ ໂດນສາໂສຽິທທ໌ສັ່ງສຳນວນຂຶ້ນຝ້ອງສາຽອາຍາມາແລ້ວເທື່ອ ໜຶ່ງ ກາຽຂັງລືມສຸພານຸວົງສ໌ກັບພັຄພວກ ເປັນສາເຫຕຸໃຫ້ຣັຖບາລຂອງນາຍົກຖືກ ນັກກາຽທູຕຕ່າງປະເທສໂຈມຕີວ່າ ລວ່ງຽະເມີດສິທທິມະນຸສຍ໌ຢ່າງຮ້າຍແຽງແລະ ກົດດັນໃຫ້ຣັຖບາລຂອງນາຍົກຜູຽ ທຳກາຽສືບສວນສອບສວນຕັດສິນໂທສພວກນັກ ໂທສຕາມຂບວນກາຽປະຊາທິປະໄຕຍ໌ຮີບດ່ວນ ນາຍົກຜູຍ ຊຸນະນິກອຽ ເສັຍເມັຍບໍ່ ຍອມສິ່ງໄອຍະກາຽສາຽມາສືບສວນສອບສວນນັກໂທສຕື່ມອີກ ແຖມກົດກັນບໍ່ໃຫ້ສຸ ພານຸວົງສ໌ກັບພັຄພວກຕິດຕໍ່ເອົາທະນາຽຄວາມມາສູ້ຄະດີ ສຸພນຸວົງສ໌ຈິ່ງຂຽນຈົດ ໝາຽສັ່ງອອກມາຍື່ນປະທ້ວງຕໍ່ຣັຖບາລວ່າ ໄຊ້ອຳນາຈໜ້າທີ່ຈັບຕົວພວກຕົນທີ່ ບໍ່ມີຄວາມຜິດ ທວງໃຫ້ປ່ຽພວກຕົນອອກຈາກທີ່ຄຸມຂັງໂດຽດ່ວນເພື່ອໃຫ້ໄດ້ໄປຮ່ວມ ກອງປະຊຸມສະພາຜູ້ແທນຽາຊດອຽແລະພິທີທາງກາຽເມືອງອື່ນໆ ຕາມຂໍ້ຕົກລົງ ຂອງຣັຖບາລປະສົມ ແຕ່ນາຍົກຜູຍກໍຍັງເສັຍເມັຍຕາມເຄັຍ ແຕ່ສິ່ງທີ່ສຸພານຸວົງສ໌ ເຮັດໄດ້ຕື່ມອີກໃນຕອນນີ້ ກໍຄືກາຽຫາໂອກາສໂອ້ລົມທັກທາຽສ້າງຄວາມສນິດສນົມ ກັບພວກຕຳຽວຈຍາມຄຸກ ສຸພານຸວົງສ໌ກໍຈິ່ງເຣີ່ມລົ້ງແກ່ນກັບພວກເອົາໃນຕໍ່ມາ.

ໝາກຫຸ່ງທີ່ສຸພານຸວົງສ໌ປູກເອົາໄວ້ນັ້ນມີໝາກດົກດີ ແລະເມື່ອມັນເຣີ່ມແກ່ ເທິ່ມກໍປົດເອົາມາໄວ້ໃນຫ້ອງນອນ ພໍເຖິງເວລານາງຈັນທຣ໌ເພັ້ງຊຶ່ງເປັນເອື້ອຽເມັຽ ຂອງນາຍພົລອ້ອນ ຽາທິກູລນຳເຄື່ອງກິນມາສົ່ງໃຫ້ກິນເພີ່ມປະຈຳວັນ ສຸພານຸວົງສ໌ ກໍຈະຖືໝາກຫຸ່ງເທິ່ມຫນວຍນັ້ນຍ່າງໄປຫາພວກຕຳຽວຈຍາມປະຕູຄຸກ ເພື່ອສເນີຂໍ ສົ່ງຫມາກຫຸ່ງອອກນອກຄຸກ...

"ພວກລູ້ງຢາກກິນຕຳໝາກຫຸ່ງເທິ່ມເພາະບໍ່ໄດ້ກິນຫຼາຽເດືອນແລ້ວ ຈິ່ງຂໍຝາກ ຫມາກຫຸ່ງໜ່ອຽນີ້ໃຫ້ນາງຈັນທຣ໌ເພັ້ງນຳອອກໄປຕຳມາສົ່ງໃຫ້ກິນຄາບແລ້ງ"

ຫ້ອໜ້າໝວດຍາມກໍຈະຮັບເອົາໄປຍື່ນໃສ່ມືນາງຈັນທຣ໌ເພັ່ງໂດຍດີ ແຕ່ຈະມີໃຜ ແດ່ໃນຈຳນວນພວກຕຳຣວຈທີ່ຄິດສົງສັຍວ່າ ອາຈເປັນໝາກຫຸ່ງເຫີ່ມຍັດໄສ້ທີ່ບັຣ ຈຸຂໍ້ຄວາມສຳຄັນສົ່ງອອກໄປຫາພວກສາຣລັບຂອງນັກໂທສ ຊຶ່ງກຳລັງຫາວິທີທາງ ຊ່ວຍເອົາສຸພານຸວົງສ໌ໜີອອກຈາກຄຸກຄອກມ້າຢູ່ໃນຂນະນີ້ ທີ່ມີຢູ່ເຮືອຽງກໍຄືສຸພານຸ ວົງສ໌ໄດ້ຝາກມັດດອກຕາເວັນສີເຫຼືອງງາມ ກັບມັດຜັກຫອມເສັ້ນອອກໄປໃຫ້ຄອບຄົວ ຂອງຕົນ ໂດຽຜ່ານທາງຄົນທີ່ໄດ້ຮັບສິທທິ໌ພິເສສເຂົ້າມາຢ້ຽມໃນຄຸກ ເຊັ່ນນາຍຕຳ ຣວຈຊັ້ນຜູ້ໃຫ່ຍຂອງກຣົມຕຳຫ່ວຊາຕຣວຈກໍມີ ພໍ່ຄ້າຊື່ດັ່ງນາຍສົມບູຣນ໌ກໍມາເປັນ ປະຈຳ ຈົນກາລຕໍ່ມາຕຳຣວຈຍາມຄຸກບາງຄົນຍັງຍອມເລົ່າເຫຕຸການ໌ບາງອັນ ທີ່ ເກີດຂຶ້ນຢູ່ນອກຄຸກໃຫ້ສຸພານຸວົງສ໌ຟັງກໍມີ ແລະແລ້ວຈົນເຖິງເດືອນຕຸລາຕໍ່ມານາຍົກ ຜູຽ ຊຸນະນິກອຣ ກໍຕັດສິນໃຈສັ່ງໃຫ້ພັນສາຣະວັຕຣ໌ໂທສະກູນ ຊຸນະນິກອຣ ຈັດເອົາ ພວກສາຣະວັຕຣ໌ທຫາຣເຂົ້າມາຍາມຄຸກປ່ຽນພວກຕຳຣວຈຢ່າງກະທັນຫັນ.

ນາຍົກຜູຽ ຊຸນະນິກອຣ ໄດ້ດຳເນີນນະໂຍບາຽການ໌ເມືອງທີ່ຮຸນແຮງກັບພວກ ລາວຄອມມິວນິສຕ໌ຍິ່ງຂຶ້ນເທ່າໃດ ຜູ້ແທນໃນສະພາຍິ່ງວິຈາຣນ໌ກັນດຸເດືອດທະວີຄູນ ພູມີ ນໍ່ສວັຣຄ໌ທີ່ຫາກໍໄດ້ເປັນນາຍພົລຈັຕະວາໃຫ່ມອ່ຽມ ກໍເຣີ່ມຄິດທີ່ຈະຕັດບັຣຫານີ້ ໃຫ້ໄດ້ ອົງຄ໌ການ໌ນິຣະໂທສກັມສາກົລກໍສົ່ງໜັງສືມາຕຳນິນາຍົກຜູຽ ຊຸນະນິກອຣ ຕໍ່ການ໌ລ່ວງຣະເມີດສິທທິມະນຸສຍ໌ ເພາະບໍ່ຍອມສອບສວນສືບສວນນັກໂທສ ບໍ່ອະ ນຸຍາຕໃຫ້ນັກໂທສມີທນາຽຄວາມມາສູ້ຄະດີຕາມກົດໝາຽ ການ໌ເມືອງລາວກຳລັງ ປັ່ນປ່ວນໜັກໜ່ວງ.

ພູມີ ນໍ່ສວັຣຄ໌ນັ້ນເປັນນາຽທຫາຣທີ່ພັກໄຝ່ອຳນາຈຢູ່ແລ້ວ ເມື່ອທົນບໍ່ໄຫວກໍ ຂໍລາອອກຈາກຣັຖບາລຂອງນາຍົກຜູຍ ອິນແປງ ສູຣິຍະທັຍເຫັນພູມີລາອອກໄປ ກໍຕັດສິນໃຈລາອອກໄປເໝືອນກັນ ນາຍພົລພູມີ ນໍ່ສວັຣຄ໌ຈຶ່ງສົ່ງທຫາຣນຳເອົາຣົຖ ຖ້ວຫາຽຄັນມາຈາກເສນາທິການ໌ທຫາຣພາຄ 5 ຈືນາຍໂມ້ແລ່ນໄປຍັງສີຖານ ທຳ ການ໌ລ້ມເຣືອນຂອງຣອງນາຍົກກະຕ່າຽ ໂດນສາໂສຣິທທ໌ແບບກະທັນຫັນໃນຕອນ ກາງຄືນຂອງວັນທີ 25 ທັນວາ 1959 ຫຼັ້ນເອົາຣອງນາຍົກກະຕ່າຽຕົກໃຈຕື່ນຈົນ ຕ່າຕີ່ຕາລານໄປເໝືອນກັນ ຫຼັງຈາກນັ້ນຣົຖຖ້ວອີກຈຳນວນໜຶ່ງກໍແລ່ນຜ່ານໄປ ມາຕໍ່ໜ້າເຣືອນພັກຂອງນາຍົກເພື່ອເປັນການ໌ບອກກ່ຶກໃຫ້ນາຍົກຜູຽຮູ້ວ່າ "ຢ່າອອກ ມານະ" ນາຍົກຜູຍ ຊຸນະນິກອຣເຂົ້າໃຈທັນທີວ່າ ເມື່ອດາວນາຍພົລເຕັ້ນຂຶ້ນສອງບ່າ ພູມີກໍບ່ຢາກເປັນຣອງຣັຖມົນຕຣີອີກ ແລະຮູ້ວ່າຈະມີຫຍັງເກີດຂຶ້ນ ຈຶ່ງຕັດສິນໃຈລາ ອອກຈາກຕຳແໜ່ງໃນອີກ 2 ວັນຕໍ່ມາ (27 ທັນວາ 1979) ໂດຍມອບຣັຖບາລ

ໃຫ້ແກ່ນາຍພົລພູມີນໍ່ສວັຣຄ໌ກັບພວກນາຍພົລກອງທັພບົກອີກຈຳນວນໜຶ່ງ.

ພໍເຖິງວັນທີ 31 ທັນວາ 1959 ເຈົ້າສົມສນິຕຖືກເລືອກຂຶ້ນດຳຣົງຕຳແໜ່ງ ນາຍົກຣັຖມົນຕຣີແລະທ່ານຫຍູຽ ອະໄພຍ໌ເປັນຣອງນາຍົກ ທັນທີທີ່ມີຣັຖບາລໃໝ່ ແທນທີ່ມັນຈະດີຂຶ້ນແຕ່ກັບຣ້າຽແຣງລົງກວ່າເກົ່າເພາະນາຍພົລພູມີ ນໍ່ສວັຣຄ໌ ເພີ່ມ ກາຣນາບຂູ່ສຸພານຸວົງສ໌ກັບພັຄພວກທີ່ຢູ່ໃນຄຸກໜັກຂຶ້ນໄປອີກຄື ໄດ້ສັ່ງໃຫ້ທ່ານອຸ່ນ ຊຸນະນິກອຣເພື່ອນລາວອິສຣະເກົ່າແກ່ຂອງຕົນຣະດົມສື່ມວລຊົນລົງຖນົນເດີນຂບວນ ສເນີໃຫ້ຣັຖບາລໃໝ່ຕັດສິນປະຫາຣຊີວິຕເຈົ້າສຸພານຸວົງສ໌ກັບພັຄພວກ ໂດຍດວ່ນ.

ແມ່ນວ່າສຸພານຸວົງສ໌ຢູ່ແຕ່ໃນຄຸກ ແຕ່ສຸພານຸວົງສ໌ກ໋ຮູ້ເຫຕຸກາຣນ໌ທີ່ກຳລັງເກີດ ຂຶ້ນຢູ່ນອກຄຸກ ມັນເປັນຂ່າວທີ່ສະທ້ານຂວັນຂອງສຸພານຸວົງສ໌ກັບພັຄພວກຢູ່ເອົາກາຣ ບັນດານັກກາຣທູຕປະເທສສັງຄົມນິຍົມປະຈຳວຽງຈັນທນ໌ພາກັນສົ່ງສາຣປະທ້ວງໄປ ຍັງນາຍົກເຈົ້າສົມສນິຕ ໃຫ້ທຳກາຣສືບສວນສອບສວນນັກໂທສໂດຍດວ່ນ ຫາກສຸ ພານຸວົງສ໌ບໍ່ມີຄວາມຜິດກໍໃຫ້ປລ່ຍອອກມາທັນທີ ໃນຂນະດຽວກັນທີ່ສຸພານຸວົງສ໌ ໄດ້ບອກກັບເພື່ອນຣ່ວມຄຸກທັງ15 ຄົນວ່າ...

"ຖ້າພວກເຮົາຈະຖືກພວກຝ່າຍຂວານຳຕົວໄປຍິງເປ້າ ເຮົາເອງຈະຂໍໄປຕາຍ ເປັນຄົນແຣກເພາະເຮົາເປັນຫົວໜ້າຄນະ"

ແລ້ວສຸພານຸວົງສ໌ກໍເຂ້ົາໄປຢູ່ໃນຫ້ອງຂ້ົວຂອງຕົນຕາມປົກະຕິ.

ສພາພກາຣນ໌ຕອນນີ້ກຳລັງຟ້ອງໃຫ້ເຊື່ອວ່າຈະມີກາຣສັງຫາຣນັກໂທສເຈົ້ງໆ ເພາະນອກຈາກທີ່ມີກາຣປ່ຽນພວກຕຳຣວຈຍາມຈຸເກົ່າ ແລ້ວເອົາພວກສາຣະວັຕຣ ທຫາຣນາຍາມແທນແລ້ວຍັງຖືກສັ່ງຫ້າມບ່ໃຫ້ເຂ້ົາໄປໄກ້ຫຼືຕິດຕ່ໍພົວພັນກ໋ັບພວກນັກ ໂທສໂດຽເດັດຂາດ ຫາກສາຣະວັຕຣ໌ທຫາຣຄົນໃດຝືນດ້ີຈະມີໂທສໜັກເຖິງປະ ຫາຣຊີວິຕ ສິ່ງທີ່ເຮັດໃຫ້ສຸພານຸວົງສ໌ຄິດວ່າຕົນຕ້ອງຕາຽແນ່ນອນນັ້ນກໍຄື ນາຍພົລ ພູມີ ນໍ່ສວັຣຄ໌ໄດ້ສັ່ງໃຫ້ທຫາຣເອົາເຫຼັກໜາມໜາກຈັບແບບເປັນໂລ້ງຖ່ຽ ມາເນ່ັງ ອອມຄຸກໃຫ້ໜາແໜ້ນເພີ່ມອີກ ສວ່ນອຸ່ນ ຊຸນະນິກອຣອດ່ີຕເພື່ອນຣ່ວມວິທຍາ ລັຍໃນຣາໂນ່ຍຊ່ວງປ່ 1930 ແລະຣ່ວມສນາມເລືອດທ່ຳແຂກ ໃນເດືອນມີນາ 1946 ກໍກຳລັງປະຕິບັຕຄຳສັ່ງຂອງນາຍພົລພູມີນໍ່ສວັຣຄ໌ ຣະດົມພົລລົງຖນົນ ສເນີໃຫ້ຂ້ຳສຸພານຸວົງສ໌ເສັຍ ໂດຍດວ່ນ.

ຄຸກທີ່ຂ້ັງສຸພານຸວົງສ໌ຖືກພູມີ ນໍ່ສວັຣຄ໌ສັ່ງໃຫ້ທຫາຣຂົນເອົາສັງກະສີຣ່ວ ຍາວ 2 ແມຕຣ໌ມາແອ້ມນອກທນາມໜາກຈັບອ້ອມຄຸກອີກຕ່ໍໜຶ່ງ ເຮັດໃຫ້ຜູ ຢູ່ນອກບ່ເຫັນຄົນຂ້ັງໃນແລະຜູ້ທີ່ຢູ່ຂ້ັງໃນກໍບ່ເຫັນຂ້ັງນອກ ພວກນັກໂທສມີ

ສິທທີ່ແຫງນເບິ່ງທ້ອງຟ້າສູງກັບດອກໄຟທີ່ຕິດຢູ່ຕາມເສົາຢ່າງດຮ ສິ່ງທີ່ມັນ ຄຶກຄັກກວ່ານີ້ອີກກໍຄືນາຍພົລພູມີ ນໍ່ສວັຣຄ໌ສັ່ງໃຫ້ທຫາຣຍາມເກາະ ເອົາຣົຖຫຸ້ມ ເກາະ 3 ຄັນມາຈອດສແຕນດ໌ບາຍໄວ້ຕຣົງເດີ່ນຕໍ່ໜ້າປະຕູເຂົ້າຄຸກ ໂດຍຄັນທນຶ່ງ ຫັນປາກກະບອກເລ໊ຽງາວຂອງມັນຈ້ີໃສ່ປະຕູຄຸກ ສອ່ນອີກ 2 ຄັນນັ້ນ ປ່ນປາກ ກະບອກອອກໄປທາງປະຕູເຂົ້າຄ່າຍໂພນເຄັ່ງ ພັນເອກລໍາເງີນ ພຣະສວັສ ຜູ້ທີ່ ຈັດກາຣເຣ່ືອງນີ້ມາຣາຽງານໃຫ້ນາຽພົລພູມີ ນໍ່ສວັຣຄ໌ຟັ່ງວ່າ ມີແຕ່ພວກເທວະດາ ເທ່ົານັ້ນ ທ່ີຈະສາມາຣຖ໌ບົນຫນີອອກຈາກທ່ີຄຸມຂັ່ງໄດ້.

ເມ່ືອຣັຖບາລນາຍົກພູຍ ຊຸນະນິກອຣ໌ສ້ິນອາຍຸລົ່ງ ສະພາຜູ້ແທນຣາຊຸດອຣ ກ໌ຖືກຍຸບຕາມໄປ ຈ່ຶງຕ້ອງມີກາຣເລ໊ອກຕ້ັງເອົາຜູ້ແທນໃໝ່ອີກໃນວັນທ ີ 24 ເມສາ 1960 ຕ່ໍມາ ສຸພານຸວົງສ໌ແລະພັຄພວກທ່ີຍັງຖືກກັກຂັ່ງຢູ່ໃນຄຸກຄອກນ້ໍາຮູ້ວ່າ ພວກ ຕົນກ໌ຍັງມີສິທທ໌ຖືກຕ້ອງຕາມຣັຖທັມມະນູນຢູ່ ເພາະບ່ໍທັນຖືກສາຣອາຍາຕັດສິນໂທສ ຈ່ຶງສ່ົງຣາຽຊ່ືຂອງພວກຕົນອອກມາສມັຄຣ໌ເລ໊ອກຕ້ັງ ແຕ່ສຸພານຸວົງສ໌ກ໌ຖືກກ່ັນແກ້ງ ດ້ວຍກາຣເມ໊ນເສ໊ຍຂອງເລ່ົາຂຸນພົລທ້ັງຫລາຍ ເພ່ືອແຊ່ເຢ໊ນຄໍາຣ້ອງຂອງນັກໂທສ ຈົນໃຫ້ເຖ ິງອັນສຸດທ້ າຽ ຈ່ຶງໄດ້ຣັບຄໍາຕອບຈາກຣອງນາຍົກທຍູຽ ອະພັຍວ່າ...

"ໃບສມັຄຣ໌ຂອງສຸພານຸວົງສ໌ບ່ໍຖືກແບບຟອຣ໌ມ ເພາະບ່ໍມີທ່ີຢູ່ແນ່ນອນ"

ສຸພານຸວົງສ໌ພ້ັອມພັຄພວກກໍກາຽເປ ັນນັກໂທສທ ີ່ໂຊຄຮ້ ຣາຽຕ ່ໍໄປອີກຕາມເຄ ີຽ ກ ໍເພ າະ ສາເຫຕຸນ ີ້ແຫ ຼະ ສຸພານຸວົງສ ຈ ່ຶງໄ ຊ ້ ສ ັ ພ ທ ົ ກ າ ຣ ເ ມ ືອ ງ ຂ ນ ານ ນ າ ມ ໃ ຫ ້ ພ ວ ກ ຂ ຸ ນ ພ ົ ລ ຝ ່ າ ຽ ຣາຊອານາຈັກຣ ໃ ນ ກ າ ລ ຕ ່ໍ ມ າ ວ ່ າ " ພ ວ ກ ຂ ຸ ນ ເ ສ ົ ກ ປ ະ ຕ ິ ກ າ ຣ ຂ ວ າ ຈ ັ ດ " .

ສຸພານຸວົງສ ນ ້ ີ ເ ກ ິ ດ ມ າ ເ ພ ່ ື ອ ມ ີ ລ ້ ິ ນ ຂ ອ ງ ນ ັ ກ ຈ ິ ຕ ະ ວ ິ ທ ຍ າ ໂ ຄ ຽ ສ ເ ພ າ ະ ແ ລ ະ ກ ໍ ມ ີ ວາທະສິລປ ໍ ມ າ ແ ຕ ່ ເ ລ ັ ກ ແ ຕ ່ ນ ນ ້ ອ ຽ ແ ລ ້ ອ ນ ອ ກ ຈ າ ກ ຈ ະ ເ ໝ າ ະ ສ ົ ມ ກ ັ ບ ຣ ະ ບ ອ ບ ທ ີ ່ ສ ຸ ພ າ ນ ຸ ວ ົ ງ ສ ຝ ັ ນ ໄ ຝ ່ ແ ລ ້ ອ ວ າ ທ ະ ສ ິ ລ ປ ໂ ຂ ອ ງ ສ ຸ ພ າ ນ ຸ ວ ົ ງ ສ ຍ ັ ງ ມ ີ ອ ິ ທ ທ ິ ພ ົ ນ ເ ໝ ື ອ ປ ຸ ຖ ຸ ຊ ົ ນ ຄ ົ ນ ລ າ ວ ຜ ູ ້ ມ ີ ແ ຕ ່ ທ ັ ມ ມ ะ ທ ັ ມ ໂ ມ ໃ ນ ຫ ົ ວ ໃ ຈ ສ ຸ ພ າ ນ ຸ ວ ົ ງ ສ ສ າ ມ າ ຣ ຖ ໄ ຊ ້ ສ ໍ າ ນ ວ ນ ທ ລ ອ ກ ຄ ົ ນ ຫ ົ ວ ອ ່ ອ ນ ໄ ດ ້ ວ ່ າ ຽ ດ າ ຽ ຂ ນ າ ດ ພ ວ ກ ສ າ ຣ ะ ວ ັ ຕ ຣ ທ ທ າ ຣ ທ ີ ່ ພ ູ ມ ີ ນ ໍ ່ ສ ວ ັ ຣ ຄ ໍ ກ ່ ັ ນ ກ ອ ງ ເ ລ ◌ ◌ ◌

ພານຸວົງສ໌ເອງກັບພັຄພວກກໍກຳລັງພາກັນດິ້ນຮົນຫາທາງອອກ ເພື່ອບໍ່ໃຫ້ພວກຕົນພາ ກັນຕາຍໃນຄຸກຄອກມ້າໂພນເຄັງ ຣັຖບາລນາຍົກເຈົ້າສົມສນິດ ທີ່ມີພວກຂຸນພົລຂອງ ກອງທັພເຕັມຢູ່ທຸກໆກະຊວງນັ້ນຮູ້ດີວ່າ ຖ້າຫາກສົ່ງຕົວສຸພານຸວົງສ໌ກັບພັຄພວກ ໄປຂຶ້ນສານອາຍາ ກໍແນ່ນອນວ່າຕ້ອງຖືກຕັດສິນປ່ອຍອອກມາ ເພາະບໍ່ມີເຫຕຸ ຜົລພຽງພໍໃຫ້ສານຕັດສິນລົງໂທສໄດ້.

ສີຊນະ ສີສານທີ່ເປັນຫນຶ່ງໃນຈຳນວນຜູ້ຖືກຈັບຂັງຮ່ວມຄຸກຄອກມ້າບ່ວນດຽວ ກັບສຸພານຸວົງສ໌ ແລະໄດ້ຮູ້ເຫັນເຫຕຸການໂດຽຕອດ ໄດ້ຂຽນເລົ່າຕື່ມໄວ້ໃນປຶ້ມຫົວ ດຽວກັນນີ້ວ່າ ສຸພານຸວົງສ໌ນັ້ນເກັ່ງດ້ານອາທະສິລປ໌ສາມາຣຖ໌ໂຄສນາເກັ້ຍກ່ອມເອົ້າ ພວກສາຣະວັຕຣ໌ທທາຣ ທີ່ຍາມຄຸກໄດ້ທັ້ງໝົດເລີຍ ສີຊນະ ສີສານ ຂຽນຢ້ຳອີກວ່າ ທ້າວທິດມ່ວນແລະນາງຈັນທຣາ ທີ່ເປັນສາຍລັບຂັ້ນຄນະພັຄແຂວງວຽງຈັນທນ ກໍ ເຄີຍໄດ້ສົ່ງໝ່ວຽຈາຣະກັນຂອງແນວລາວເຂົ້າມາໃນຄຸກເທື່ອຫນຶ່ງແລ້ວ ເພື່ອຊອກ ຫາວິທີທາງລັກເອົາຕົວເຈົ້າສຸພານຸວົງສ໌ກັບຜູ້ສຳຄັນອີກບາງຄົນອອກໜີໄປຈາກຄຸກ ແຕ່ຕໍ່ມາແຜນການນີ້ໄດ້ຖືກຍົກເລີກ ເພາະຢ້ານເປັນອັນຕຣາຍຕໍ່ພວກນັກໂທສທີ່ຍັງ ເຫຼືອຢູ່ໃນຄຸກ ສີຊນະ ສີສານຂຽນຢືນຢັນວ່າ ສຫາຍໝູຮັກ ພູມສວັຣຄ໌ ທີ່ຢູ່ພາຽໃນ ຄຸກຮ່ວມສາມາຣຖ໌ຕິດຕໍ່ກັບໄກສອຣ ພຣົຫມ໌ວິຫານທີ່ຊຳເໝືອພົ້ນຢູ່ເປັນປະຈຳ.

ແລ້ວ...ສຸພານຸວົງສ໌ກໍແຫກຄຸກໂພນເຄັງ...

ສີຊນະ ສີສານຂຽນຕໍ່ໄປວ່າ ນັກໂທສຕ້ອງຖືເອົາແຕ່ສິ່ງທີ່ຈຳເປັນເລັກນ້ອຍ ເທົ່ານັ້ນຕິດຕົວໄປນຳແລະແບ່ງອອກເປັນສາມຈຸ ໂດຽສຸພານຸວົງສ໌ເປັນຫົວໜ້າຈຸທີ ສາມຊຶ່ງມີ ສີຊນະ ສີສານ+ນາ ໄຊຄຳພິທູລ+ໝື່ນ ສົມວິຈິຕຣ໌+ຄຳຜາຽ ບຸບຜາ+ເພົ້າ ພິມພະຈັນທຣ໌+ຄຳເພັຊຣ໌ ພຣົຫ໌ມະວັນ ຢູ່ໃນຈຸນີ້ມີສາຣະວັຕຣ໌ຍາມຄຸກຜູ້ຫນຶ່ງຊື່ ວ່າທ້າວທອງເສີຍ ໂຄຕຣ໌ວົງສາທີ່ຈະເປັນນາຽທາງພາອອກໄປຈາກຄຸກ ແລະທ້ວ ເປັນອະດີຕລາວອິສຣະທີ່ຖືກສັບຊ້ອນເອົາໄວ້ແຕ່ຕອນຮ່ວມລາວຄັ້ງແຣກໃນ 1957.

ຜູ້ຂຽນຈະພາທ່ານຍ້ອນກັບໄປຍັງສພາພກາຣມ ເມື່ອສາມເດືອນກ່ອນນີ້ວ່າ ໄດ້ມີເຫຕຸການລີ້ລັບອັນໃດແດ່ ທີ່ເປັນເບື້ອງຫລັງແຫ່ງການຕິດຄຸກຂອງເຈົ້າສຸພານຸ ວົງສ໌ ແລະພວກສາຍລັບນັກສຶບຮ່ວມທັງນັກການເມືອງຫົວອຽງຊ້າຍ ທີ່ແປກປົນ ຢູ່ພາຽໃນຂອງຣັຖບາລຝ່າຍຂວານັ້ນກຳລັງເຣັດຫຍັງແດ່ ເພື່ອປົດປ່ອຍສຸພານຸວົງສ໌ ໜີອອກມາຈາກຄຸກຄອກມ້າ ພວກຝ່າຍຂວາຮູ້ພຽງວ່າສາລີ ວົງສ໌ຄຳຊາວເປັນ ແນວລາວ ແຕ່ບໍ່ມີໃຜເຝົ້າຕິດຕາມການປະພຶຕຂອງຜູ້ກ່ຽວວ່າ ຕອນນີ້ກຳລັງເຣັດ ຫຍັງຢູ່ ນອກຈາກພາກັນໝື່ນປະມາທຄວາມສາມາຣຖ໌ຂອງເຂົ້າວ່າ....

"ອັນນ້ຳໜ້າພວກແນວລາວອິສະນັ້ນ ມັນຈະເຮັດຫຍັງໄດ້???"
ແຕ່ບໍ່ຮູ້ວ່າສາລີ ວົງສ໌ຄຳຊາວ ແມ່ນເຄຈີບີຕົວແສບສຳຮັບພວກຝ່າຍຂວາ ຜູ້ກ່ຽວມີໜ້າທີ່ສເພາະໜ່ວຍງານການຈາຣະກັນ-ຄາຕກັນ-ກໍ່ວິນາຖກັນ ທີ່ວເຂຕ ແຂວງວຽງຈັນທນ ຊຶ່ງມີສຳນັກງານໄຕ້ດິນຢູ່ໃນເຂຕບ້ານວ໊ອຫວາ ມີຜູ້ຮ່ວມງານ ສຳຄັນອີກຄົນຫນຶ່ງຄືທ້າວຊຽງສົມ ກູລະວົງສ໌ ກໍແມ່ນທ້າວຊຽງສົມຜູ້ນີ້ເອງທີ່ມີໂອ ກາສເຂ້ົາຢ້ຽມສຸພານຸວົງສ໌ໃນຄຸກຄອກມ້າຫຼາຽເທື່ອ ເພື່ອແຈ້ງແຜນການນ໊ແຫກຄຸກ ໃຫ້ສຸພານຸວົງສ໌ໄດ້ຮັບຮູ້.

ນາທີມ໋ຣະນະຄືນວັນທີ 23 ພຶສພາ 1960 ໄກ້ເຂ້ົາມາທຸກທີແລ້ວ ຈົນເຖິງເວ ລາ 23.30 ໂມງຜ໋ດີທີ່ຫນູຮັກ ພູມສວັຣຄ໌ໄດ້ສັ່ງໃຫ້ເພື່ອນນັກໂທສທຸກຄົນມ໐ນຫ້ອງ ແລະທີ່ນອນຂອງພວກຕົນໃຫ້ຮຽບຮ້ອຍດີ ສ່ວນພູມີ ວົງສ໌ວິຈິຕກໍ່ກຳລັງຈ້ຳປາກກາ ຂຽນລົງໃນເຈ້ຍກະດາດຂາວແຜ່ນຫນຶ່ງຢ່າງເອົາໃຈໃສ່ ແຕ່ບໍ່ມີນັກໂທສຄົນໃດໄດ້ຮູ ວ່າຜູ້ກ່ຽວໄດ້ຂຽນຫຍັງແດ່ລົງໄວ້ໃນກະດາດແຜ່ນນັ້ນ ສີຂຸນະ ສີສາຣກຳລັງຍ່າງ ຜ່ານໄປມາຢູ່ຕໍ່ຫ້ອງຂັງຂອງສຸພານຸວົງສ໌ ກໍເຫັນຜູ້ກ່ຽວນ່ັງສ໐ບອາຮົມນ໌ຢູ່ສບາຍ ເມື່ອຜ່ານມາອີກເທື່ອໃຫ່ມ ສຸພານຸວົງສ໌ກໍເອ້ີນຖາມອອກມາຄ່ອຍໆວ່າ...

"ຮອດໂມງນັດແລ້ວຫລືຍັງ.?"

ສີຂຸນະ ສີສາຣກໍຕອບວ່າ

"ຍັງອີກເລັກນ້ອຍ"

ສຸພານຸວົງສ໌ບອກຕື່ມວ່າ

"ຫາກໄກ້ເວລານັດໝາຍແລ້ວ ເຮົາຈະແຖຫນອດຖ້ີມ"

ແລ້ວສຸພານຸວົງສ໌ກໍເຮ່ີມແຖຫນອດຕົນເອງຢູ່ພາຍໃນຫ້ອງຂັງ.

ໃນຄືນນັ້ນຂນະດຽວກັນນ້ີ ສາລີ ວົງສ໌ຄຳຊາວໄດ້ເຂ້ົາໄປລ້ີຖ້ຳຢູ່ໃນກຸຕິວັດ ທາຕຫຼວງຂອງຍາທ່ານຄູນ ມະນີວົງສ໌ ທີ່ເປັນອົງຄ໌ສັງຄະນາຍົກສົງຄແຫ່ງຊາຕ ກ່ອນແລ້ວ ແລະກຳລັງຮ່ວມພິທີລາສິກຂາຂອງຄູບານິຍົມລັທທິຄອມມ໐ນິສ 4 ອົງຄ໌ (ພວກນ້ີກໍ່ແມ່ນນັກບວຊສາຍລັບລາວອິສຣະສ໐ຍຮ່ວມລາວຄັ້ງແຣກ ເມ່ືອປ໊ 1957) ເພ່ືອຫນ້ີເຂ້ົາປ່າພ້ອມກັນກ໊ບຂບວນແຫກຄຸກຂອງສຸພານຸວົງສ໌ ໂດຍແມ່ນມຫາ ບ໊ວລີ ຈັນດາວົງສ໌ເປັນຜູ້ທຳພິທີແບບກະທັນຫັນພາຍໄຕ້ການເປັນປະທານຂອງຍາທ່ານຄູນ ເອງ ນອກຈາກນ້ີກໍ່ມີສົບສາຣະວັຕຣ໌ເອກອຸດອຣ ຊ໊ຍປ໋ນຍາ ກ໊ບສາຍລັບທ້າວຊຽງ ສົມ ກູລວົງສ໌ ຫລັງຈາກນັ້ນຊຽງສ໊ກໃຫ່ມ 4 ຄົນ ກໍ່ນຸ່ງຫົ່ມເຄ່ືອງແບບສາຣະວັຕຣ໌ ທຫາຣເຂ້ົາໄປແທນຜ້ົາເຫລືອງ ເມ່ືອຮຽບຮ້ອຍແລ້ວກໍ່ພາກັນຕິດຕາມສາລີ ວົງສ໌

ຄຳຊາວອອກຈາກວັດທາຕຸຫລວງໄປຍັງຈຸດນັດພົບ ສ່ວນສິບເອກອຸດອຣ ຊັຍປັນຍາ ກັບທ້າວຊຽງສົມ ກູລວົງສ໌ ກໍພາກັນຂີ່ຣົຖຖີບເລັ່ງຕຣົງມາຍັງດ້ານໂພນເຄັງກ່ອນເວລາທີ່ສິບເອກອຸດອຣເອງຕ້ອງເຂົ້າປ່ຽນເປັນນາຍຈຸຍາມຄຸກຈຳນວນ 8 ຄົນ ແຕ່ທ່ຽງຄືນເຖິງ 06.00 ໂມງເຊົ້າຂອງວັນໃໝ່ ສິບເອກອຸດອຣທຳການປ່ຽນສາຣະວັຕຣ໌ທະຫາຣຍາມໜ້າໃໝ່ 3 ຄົນອອກຈາກຈຸ ແລ້ວກໍເອົາສາຣະວັຕຣ໌ຄົນເກົ່າຈາກຈຸອື່ນມາແທນ ຫລັງຈາກນັ້ນກໍທຳການແຈກເຄື່ອງແບບສີຂຽວຂອງສາຣະວັຕຣ໌ທະຫາຣ 16 ຊຸ ໃຫ້ແກ່ນັກໂທສນຸ່ງຫົ່ມເຂົ້າໄປຢ່າງສ່ວງໄວ ສ່ວນສຸພານຸວົງສ໌ນັ້ນເມື່ອນຸ່ງຫົ່ມເຄື່ອງແບບສາຣະວັຕຣ໌ເຂົ້າໄປແລ້ວ ກໍໃສ່ເສື້ອກັນຝົນທັບເຂົ້າໄປອີກຕ໊ອໜຶ່ງ ທ້າວໜົດຈຶ່ງພາກັນຕຽມຖ້າວິນາທີອອກຈາກຄຸກໄປສົມທົບກັບຈຸຂອງສາລີ ວົງສ໌ຄຳຊາວທີ່ຈຸດນັດພົບ ໂດຍສວຍໂອກາສນັ່ງຝັງແຜນການຫນີແຫກຄຸກຈາກທ້າວຊຽງສົມ ກູລວົງສ໌ຢ່າງຕັ້ງໃຈ ກໍທ້າວຊຽງສົມຜູ້ນີ້ເອງທີ່ສີຊຸນະ ສີສາຣ ຂຽນກ່າວເອົ້າໄວ້ວ່າເປັນຄນະພັຄແຂວງ ຊຶ່ງເຄີຍປອມຕ໊ວເຂົ້າໄປໃນຄຸກຄອກມ້າມາແລ້ວເຖິງ 3 ເທື່ອ ກ່ອນໜ້ານີ້ ເພື່ອວາງແຜນລັກພາຕ໊ວສຸພານຸວົງສ໌ອອກໜີຈາກຄຸກ.

ນັບຕຣົງກັນກັບເວລາ 24.05 ໂມງ ຊຶ່ງເປັນ 5 ນາທີ ຂອງວັນໃໝ່ວັນທີ 24 ພຶສພາ 1960 ທີ່ສິບສາຣະວັຕຣ໌ເອກອຸດອຣ ຊັຍປັນຍາ ຫ໊ວໜ້າໜ່ວຍຍາມຄຸກໄດ້ພາສາຣະວັຕຣ໌ທະຫາຣລູກນ້ອງຈຳນວນ 7 ຄົນ ແລະນັກໂທສການເມືອງ ຈຳນວນ 16 ຄົນໜີອອກຈາກຄຸກອດີຕຄອກມ້າທະຫາຣມ້າຝຣັ່ງເສສສມັຍສົງຄາມອິນດູຈີນ ທີ່ໂພນເຄັງຢ່າງງ່າຍດາຍ ແລະປອດພັຍ ຈາກການສົງເກຕຸການ ຂອງໜ່ວຍຮັກສາການຈຸອື່ນໆ ວິທີການແຫກຄຸກຂອງສຸພານຸວົງສ໌ດຳເນີນໄປໂດຍດີ ບໍ່ຕ່າງຫຍັງກັບທີ່ເຫັນໃນພາພຍົນຕ໌ ໃນບໍ່ເທົ່າໃດນາທີຕໍ່ມາ ຄຸກຄອກມ້າຂອງນາຍພົລພູມີ ນໍ່ສວັຣຄ໌ ກໍວ່າງເປົ່າ ແລະສງັດງຽບເໝືອນນັກໂທສກຳລັງພາກັນນອນຫລັບຢູ່ພາຍໃນຫ້ອງຂັງຂອງພວກຕົນ ຈົນເຖິງ 06.00 ໂມງເຊົ້າ ພວກສາຣະວັຕຣ໌ຍາມປະຕູທ່ວງອອກຈຶ່ງພົບວ່າສາຣະວັຕຣ໌ 8 ຄົນ ແລະນັກໂທສ 16 ຄົນຫາຍໄປ.

ຂ່າວການແຫກຄຸກຄອກມ້າຂອງສຸພານຸວົງສ໌ກັບພັຄພວກ ໄດ້ສ້າງຄວາມອຶກທຶກນັນເນືອງໃຫ້ນັກການເມືອງຝ່າຽຂວາ ແລະບັຣດາຂຸນພົລບໍ່ນ້ອຽເລີຽ ນາຍພົລມີ ນໍ່ສວັຣຄ໌ ຜູ້ຮຽນວິຊາເສນາທິການທະຫາຣຈາກຝຣັ່ງເສສ ຈັດທະຫາຣຣາອາກາສກອງພັນທີ 2 ຂອງຣ້ອຍເອກກອງແລ ອອກຕິດຕາມຢ່າງວ່ອງໄວ ແຕ່ຜິດຫວັງກັບມາ ເພາະບໍ່ສາມາຣຖ໊ຕາມຈັບຕ໊ວຫຼືສົ່ງທາຣພວກນັກໂທສໄດ້ແມ່ນແຕ່ຄົນດຽວ ບໍ່ຮູ້ແມ່ນກະທັ້ງວ່າ ສຸພານຸວົງສ໌ພາພັຄພວກລັກອອກຍາມໃດ-ໄປທາງໃດ-ແລະ ມີໃຜແດ່ທີ່

ສາມາຣຖ໌ໃຫ້ຂ່າວນີ້ໄດ້ ເພາະພວກສາຣະວັຕຣ໌ຍາມຄຸກທັງໝົດ ທີ່ຄັດເລືອກເອົາ ຕ໊ອມວ່າ "ດີເດັ່ນ" ສຸດຂນາດແລ້ວກໍຫາຣ໌ຕ໊ອໄປຈາກຄຸກຄອກມ້າພ້ອມກັບນັກໂທສ ເໝືອນກັນ ເທື່ອນີ້ສຸພານຸວົງສ໌ສາມາຣຖ໌ລ໊ອບລ້າງຄຳຫມິ່ນປມາທ ຂອງພວກຝ່າຣ໌ ຂວາທີ່ມັກພາກັນເວົ້າຢູ່ສເມີວ່າ " ນ້ຳໜ້າພວກແນວລາວນີ້ ມັນຈະເຮັດຫຍັງໄດ້ " ຢ່າງຂາດລອຍເລີຍທີດຽວ ການຈັບສຸພານຸວົງສ໌ກັບພັຄພວກເຂົ້າຄຸກເທື່ອນັ້ນມັນໄດ້ ສ້າງຄວາມແຕກແຍກແກ່ການໂຮມລາວຢ່າງແສນສາຫັສ ເປັນຮອຍແຕກທີ່ຍາກ ແກ່ການຈອດໃຫ້ຕິດກັນຄືນໄດ້.

ພູມີ ນໍ່ສວັຣຄ໌ຈັບຈົດໝາຣ໌ຂອງຄົນຊື່ດຽວກັບຕົນແຕ່ຕ່າງນາມສະກຸລກັນຂຶ້ນ ມາອ່ານ ຊຶ່ງມີໃຈຄວາມແບບລ້ວລຽມເຍີ້ຍຫຍັນວ່າ....

"ພວກເຮົາອົດທົນຢູ່ໃນຄຸກຄອກມ້າຫຼັງນີ້ນານເຖິງ 10 ເດືອນແລ້ວ ໝາກຫຸ່ງ ທີ່ປູກຈົນສຸກຄາຕົ້ນແລະໄດ້ກິນແລ້ວໝ໋ຽຫນຶ່ງ ຄອງຖ້າໃຫ້ພວກທ່ານປ໋ຽກໍບໍ່ປ໋ຽ ຈັກເທື່ອ ຄອຽໃຫ້ຕັດສິນກໍບໍ່ຕັດສິນ, ມື້ນີ້ພວກເຮົາຈຳເປັນຕ້ອງຂໍລາພວກທ່ານໄປ ເຮົາຂໍອະນຸຍາດເອົາມຸ້ງໄນລ໊ອນສີຂຽວດາງຫນຶ່ງ ແລະກະຕິກນ້ຳໜ໋ຽຫນຶ່ງໄປໃຊ້ ຖ້າພວກທ່ານບໍ່ເຫັນດີກໍຈະນຳເອົາມາສົ່ງໃຫ້ຄືນເວລາພົບກັນອີກເທື່ອໃໝ່ ເຮົາຂໍ ລາໄປກ່ອນ,ຂໍໃຫ້ທ່ານທຸກໆຄົນຈົ່ງສບາຽດີ, ຢ່າວົນວາຽຊອກຫາພວກເຮົາໃຫ້ເສັຽ ເສັຽເວລາເລີຍ" ...

ວິທີການແຫກຄຸກຂອງສຸພານຸວົງສ໌ກັບພວກພັຄນັ້ນງ່າຍໆ ເພາະມີຄົນພາຍໃນ ໃຫ້ຄວາມຮ່ວມມື ໂດຍສິບເອກອຸດອຣ ຊັຍປັນຍາ ເປັນຄົນຢ່າງນ້ຳໜ້າແຖວຍາວ ຂອງນັກໂທສຫົວ 16 ຄົນ ຜ່ານດ່ານຫຼັງຕຶກໃຫ່ຽຂອງເສນາທິການທະຫາຣ໌ໂພນເຄັ່ງ ແລ້ວກໍອອກຈາກຂອບຮົ້ວເສນາທິການໄປໄດ້ຢ່າງສບາຍ ເອກສາຣຫລາຍສັບບໍ່ ໄດ້ກ່າວວ່າຂບວນນັກໂທສອອກທາງປະຕູໃດ ແຕ່ກ່າວວ່າເມື່ອຂບວນນັກໂທສກັບ ສາຣະວັຕຣ໌ທະຫາຣຍາມເຂົ້າສູ່ຖນົນປູຢາງຕໍ່ໜ້າແລ້ວກໍພາກັນຢ່າງຕໍ່ໄປຈົນຮອດຂົ້ວ ຮ່ວງແຊງ ຈຶ່ງໄດ້ພົບສາລີ ວົງສ໌ຄຳຊາວກັບພວກຊຽງສິກໃໝ່ 4 ຄົນທີ່ຍືນຄອຍຖ້າ ຢູ່ກ່ອນແລ້ວ.

ສີຊນະ ສີສາຣ໌ໄດ້ຂຽນບັນທຶກຄວາມຈຳຂອງຕົນເອົາໄວ້ຕອນກຳລັງໜີອອກ ທ໋ວດປະຕູຄຸກຄອກມ້າເທື່ອນັ້ນໃຫ້ເປັນຕາອ່ານທີ່ສຸດວ່າ ພວກເຮົາພາກັນໜີອອກ ຈາກຄຸກຄອກມ້າໃນຄືນເດືອນດຳສນິດ ແຕ່ພໍ້ພົ້ນປະຕູຄຸກສຫາຽສຸພານຸວົງສ໌ກໍຢຸດຢູ່ ກັບທີ່ ຂ້າພະເຈົ້າຜູ້ຢ່າງຕາມຫລັງຕົກໃຈໃຫ່ຽ ເພາະຄິດວ່າສຫາຽສຸພານຸວົງສ໌ກຳ ປ່ຽນໃຈບ່ຽອມໄປຈາກຄຸກແລ້ວ ຈຶ່ງເອີ້ນຖາມສຫາຽສຸພານຸວົງສ໌ຄອຍໆວ່າ...

"ເປັນຫຍັງສທາຽຈຶ່ງຢຸດລະ??"
ກໍໄດ້ຮັບຄຳຕອບມາວ່າ...
"ຕາກຳລັງຜາງແສງໄຟເທິງຫລັກພຸ້ນ ແລະໄປບໍ່ທັນຜູ້ນຳທາງ"
ຫຼັງຈາກນັ້ນຈຸຂອງສຸພານຸວົງສ໌ ກໍຢ່າງຕາມຫລັງສິບເອກອຸດອຣຕໍ່ໄປຈົນເຖິງຈຸດນັດພົບ ເມື່ອທຸກຈຸມາເຖິງຈຸດນັດພົບທີ່ຂົວຣອ່ງແຊງແລ້ວກໍພາກັນເດີນທາງຕໍ່ໄປຍັງທ່ຽບາແຫ່ງຫນຶ່ງທາງທິສຕາເວັນອອກ ແລ້ວກໍພາກັນຜລະໝີອອກຈາກສາຍທາງເລຂທີ 13 ຣະຫວ່າງເໝືອບ້ານຫົວຂົວແລ້ວທາຽຕົວໝີເຂົ້າປ່າ ຕັ້ງຫນ້າພາກັນໄປໃຫ້ໄກຈາກຄຸກແສນແສບໂພນເຄັງເທົ່າທີ່ທຳໄດ ກ່ອນທີ່ແສງຕາເວັນຂອງມື້ໃໝ່ຈະໂຜ່ຟ້າ ເມື່ອນັກໂທສກາຣເມືອງຫາຍຕົວເຂົ້າໄປໃນປ່າເລິກແລ້ວ ນາຍສາລີ ວົງສ໌ຄຳ ຊາວກັບນາຍຊຽງສົມ ກູລວົງສ໌ ກໍພາກັນຫັນຫລັງກັບຄືນເຂົ້າມາຍັງວຽງຈັນໜ້ອຍ ເມື່ອເດີນທາງໄປໄດ້ປະມາຣ 2 ຊົ່ວໂມງອີກ ສຸພານຸວົງສ໌ກໍລົ້ມຟຸບລົງຢ່າງແຮງໃນກາງປ່າຣົກແຫ່ງຫນຶ່ງທ່າມກາງຄວາມມືດຂອງຣາຕຣີກາລ ໝູ່ເພື່ອນພາກັນຕົກໃຈ ເພາະຄິດວ່າສຸພານຸວົງສ໌ອາຈເດີນຕໍ່ໄປບໍ່ໄດ້ອີກແລ້ວ ແຕ່ເມື່ອສຸພານຸວົງສ໌ພາຕົວເອງລຸກຂຶ້ນຢືນຈຶ່ງບອກໃຫ້ໝູ່ຮູ້ວ່າ ຕົນເອງໄດ້ຢ່າງໄປເຕະເອົາຕໍ່ໄມ້ຈຶ່ງເສັຍຫລັກຈົນລົ້ມລົງດັ່ງກ່າວ ເພື່ອນໆເຫັນຖົງເປ້ຂອງສຸພານຸວົງສ໌ໜັກເກີນໄປ ໝູ່ຮັກພູມສວັຣຄຈຶ່ງຈັດແບ່ງອອກໃຫ້ເພື່ອນຄົນອື່ນໆເອົາໄປຖື ເພື່ອໃຫ້ສຸພານຸວົງສ໌ຢ່າງຕົວເປົ່າ ຫຼັງຈາກນັ້ນສຸພານຸວົງສ໌ຈຶ່ງຢ່າງຕາມຫຼັງໝູ່ໄດ້ສະດວກ.

ກາຣແຫກຄຸກຂອງສຸພານຸວົງສ໌ ມີກາຣວາງແຜນເປັນຕອງໂສ້ຣ່ວມກັນຫລາຍຝ່າຍ ເພາະພໍຂບວນນັກໂທສໜີອອກຈາກເສັ້ນທາງເລຂທີ 13 ລົງສູ່ທ່ຽບາແລ້ວກໍມີຄົນບ້ານຫົວຂົວທີ່ເປັນສາຍລັບຂອງແມ່ລາວຣັກຊາຕໄດ້ໄລ່ຄວາຍຈຳນວນຫລາຍກ່ວາສິບຕົວຜ່ານຕົ້ນທາງເພື່ອລົບຣອງຣອຍກາຣຫລົບໜີ ພໍຕົ້ນເຊົ້າຂຶ້ນມາສາຍລັບຂອງສາລີ ວົງສ໌ຄຳຊາວປະຈຳບ້ານດົງບັງກໍປ່ອຍຂ່າວປອມວ່າ ຕົນໄດ້ເຫັນທຫາຣກອງໜຶ່ງ ແຕ່ບໍ່ຊາພ່ວ່າຝ່າຍໃດເດີນຜ່ານກາຍຫລັງສວນຂອງຕົນໄປໃນຕອນໄກ້ແຈ້ງ ສວ່ນສາຍລັບຂອງແມ່ລາວທີ່ບ້ານຫວຍກໍປ່າວຂ່າວປອມໆວ່າ ໄດ້ເຫັນກຳລັງທຫາຣຫລາຍສິບຄົນຢ່າງຕາມຫລັງກັນມາຂຶ້ນຣົຖບັຣທຸກຄັນໜຶ່ງ ທີ່ຈອດຖ້າຢູ່ໄກ້ຖນົນດິນແດງ ແລ້ວກໍແລ່ນເຂົ້າສູ່ຖນົນເລຂທີ 13 ມຸ່ງໜ້າໄປຍັງປາກນ້ຳງື່ມ.

ພາຽຫຼັງທີ່ສຸພານຸວົງສ໌ກັບພັລພວກ ໄດ້ພາກັນໂຕນໜີໄປຈາກຄຸກຄອກມ້າແລ້ວ ນາຍພົລພູມີ ນໍ່ສວຣັຕ໌ໄດ້ເອີ່ຍບອກກັບພວກພັລທັ້ງຫຼາຽວ່າ...
"ດີແລ້ວທີ່ສຸພານຸວົງສ໌ພາພັລພວກໂຕນໜີໄປເອງ ກໍສິ້ນສຣັນໝາມກັນເສັຽ

ທີ ເພາະສິ່ນວລຊົນສາກົລກຳລັງພາກັນເຂົ້າສອດແຊກໃນເຫຕກາຣນ໌ຈົນອຸ້ນວາຣໄປ ໝົດ ກາຣກ່າວຝ້ອງສຸພານຸວົງສ໌ນ໌ສາຣອາຍາຈຶ່ງຊັກຊ້າເຣື່ອຍມາ"

ຢູ່ໃນເອກສາຣລັບຂອງພວກ CIA ທີ່ປະຕິບັຕງານຢູ່ໃນນະຄອນວຽງຈັນຫມ໌ ຊຶ່ງ ສອດຮູ້ສອດເຫັນກາຣເຄື່ອນໄຫວຕ່າງໆຂອງນັກກາຣເມືອງລາວຫັ້ງຝ່າຍຂວາ ຝ່າຍກາງແລະຝ່າຍຊ້າຍຂຽນໄວ້ວ່າ ນາຍໂອຫງວຽນຢ໊ົບໄດ້ຝຶກຊ້ອມວິທີ ລັກພາຕົວສຸພານຸວົງສ໌ອອກຈາກຄຸກໂພນເຄັງ ແກ່ນັກຈາກຣະກັ້ມກ້າຕາຍ ມີ ອາຊີພຊື່ NGUYEN NGON ດ້ວຍຕົ໋ນເອງຫລາຍຊົ່ວໂມງທີ່ຣາໂນ໋ຍ ກ່ອນຖືກສົ່ງ ເຂົ້າຍັງນະຄອນວຽງຈັນຫມ໌ ແລ້ວກໍສົ໋ມຫົ໋ບໝ່ວຍຈາຣະກັ້ມຂອງແນວລາວຮັກ ຊາຕເຊັ່ນນາຍຊຽງສົ໋ມ ກູລບຸຕຣ໌ແລະສາລີ ວົ໋ງຄຳຊາວ ອາງແຜນກາຣນ໌ກັ້ນ ຢູ່ເກືອບໜຶ່ງເດືອນ ຈຶ່ງສາມາຣຖລັກພາຕົວສຸພານຸວົງສ໌ກັ໋ບພັ໋ດພວກຫັ້ງໝົດ ຫລົ໋ບໜີໄປໄດ້.

ຢູ່ໃນບົ໋ທຂຽນຂອງສີຊນະ ສີສາຣທີ່ຕິດຄຸກພ້ອ໋ມດຽວກັ໋ນກັ໋ບສຸພານຸວົງສ໌ ເຣື່ອງ "300 ມື້ທີ່ຄຸກໂພນເຄັງ" ແລະບົ໋ທຂຽນຂອງທ້າວເສີຍ ໂຄຕຣ໌ວົ໋ງສາ ທີ່ ເປັ໋ນຫົ໋ວໜ້າສາຣະວັຕຣ໌ຝ່າຍຂວາຍາມຄຸກຄືນນັ້ນແລະສົ໋ມຮູ້ຮ່ວ໋ມຄິດ ພາສຸພາ ນຸວົງສ໌ອອກຈາກຄຸກດ້ວຍຄວ໋ມປອດພັຍນັ້ນ ກໍ່ບ່ໄດ້ກ່າວເຖິ໋ງເຣື່ອງທີ່ມີດັ໋ກກົ໋ວ ວຽຕນ໋ວ໋ມເໝືອມາພາສຸພານຸວົງສ໌ໂຕ໋ນຄຸກເລີຍ ມັ໋ນເປັ໋ນໄປໄດ້ສູ໋ງທີ່ບົ໋ທຂຽນ ນັ້ນໆຖືກກ໋ອດກາເສັ໋ຍກ່ອ໋ນໆນ໋ຳອອກພິ໋ມພ໌ ເພາະວຽຕນ໋ວ໋ມເໝືອຖນັ໋ດດີກ່ຽວ ກັ໋ບກາຣຢືມມືຄົ໋ນອື່ນປະຕິບັ໋ຕກາຣ ໂດຍສເພາະແ໋ມ່ນແຜນກາຣນ໌ຮຸ໋ກຣ໋ວ໋ມປະ ເທສລາວ ເພື່ອລວງຕາຊາວລາວແລະຊາວໂລກວ່າ ບ່ໍ່ມີວຽຕນ໋ວ໋ມເໝືອໃນ ຂບວນກາຣນ໌ແນວລາວຮັກຊາຕ ຫັ້ງໆທີ່ມີໜັ໋ງສືພິ໋ມພ໌ອອກໃນວຽຕນ໋ວ໋ມຕິດ ຮູບນາຍ NGUYEN NGON ອຸ້໋ມຂັ໋ນກຽຣຕິຍ໌ສຈາກຣັຖບາລວຽຕນ໋ວ໋ມຕິດຕາ ມ ດ້ວຍບົ໋ທຄວ໋ມຍ້ອ໋ງຍໍຄວ໋ມເກ້ັ໋ງກ້ັ໋ນຂອງຜູ້໋ກ່ຽວ ພ້ອ໋ມບອກອີກວ່າເປັ໋ນລູ້ກ ເມືອງ HOA LU ໃນແຂວງ PLEIKU.

(12) ໃຜຫລ9ກກ9ແລກ໋ຣັຖປະຫາຣ.?

ຣັຖປະຫາຣກອງແລ ໂຣແລ້ັ໋ງເມ່ືອວ໋ັນທ ີ 08 ສ໋ິງຫ າ 1960 ນ໋ັ໋ນໄດ້ມ ີສ ອ ່ ນ ຜ ັ ກ ດ ັ ນ ໃ ຫ ້ ກ ານ ເ ມ ືອ ງ ລ າ ວ ພ ິ ກ ຜ ັ ນ ຫ ັ ນ ປ ່ ຽ ນ ໄ ປ ຢ ່ າ ງ ໃ ຫ ່ ຽ ຫ ຼ ວ ງ ຈ ົ ນ ບ ່ ໍ ່ ມ ີ ນ ັ ກ ກ າ ຣ ເ ມ ືອ ງ ລ າ ວ ຄ ົ ນ ໃ ດ ໃ ນ ກ າ ລ ຕ ່ ໍ ມ າ ສ າ ມ າ ຣ ຖ ຊ ່ ວ ຍ ຊ ້ ວ ນ ເ ອ ົ າ ສ ພ າ ພ ກ າ ຣ ນ ໍ ໃ ຫ ້ ກ ັ ບ ຄ ຶ ນ ສ ູ ່ ຄ ວ າ ມ ສ ງ ົ ບ ສ ຸ ຂ ຄ ຶ ນ ມ າ ໄ ດ ້ ອ ີ ງ ຕ າ ມ ປ ວ ັ ຕ ສ າ ສ ຕ ຣ ໍ ຈ ິ ງ ຂ ອ ງ ຊ າ ຕ ລ າ ວ ແ ລ ້ ວ ຣ ັ ຖ ປ ະ ຫ າ ຣ ກ ອ ງ ແ ລ ແ ມ ່ ນ ໄ ຮ ້ ຄ ່ າ ແ ກ ່ ກ າ ຣ ໂ ຮ ມ ລ າ ວ ເ ພ າ ະ ກ ອ ງ ແ ລ ຖ ກ ຫ ລ ອ ກ ໃ ຫ ້ ກ ່ ໍ ຣ ັ ຖ ປ ະ ຫ າ ຣ ຈ າ ກ ນ ັ ກ

ກາຣເມືອງຕ່າງປະເທສແລະໃນປະເທສຫລາຍຝ່າຍ ຈົນຜັກດັນໃຫ້ທັ່ງມຫາອຳນາຈ ທຶນນິຍົມແລະສັງຄົມນິຍົມ ພາກັນກະໂດດເຂົ້າມາໄຊ້ແຜ່ນດິນເປັນກາງຂອງລາວ ເປັນສນາມແຂ່ງອຳນາຈກັນ ເປັນເຫຕຸໃຫ້ກຳລັງທຫາຣອຽຕນາມເໝືອຫລາຍກອງ ພົລເຂົ້າມາຮຸກຮານຣາຊອານາຈັກຣ໌ລາວ ແລ້ວກໍເກີດເສິກໃຫ່ຍຂຶ້ນໃນລາວ.

ນາຽທຫາຣຣາບອາກາສຊັ້ນຣ໑ອັຽເອກຄົງບາງຣ່າງເຕັ້ຍ ແຕ່ແຂງແຮງດີຜູ້ນີ້ ເກີດທີ່ເມືອງຜາລານໃນແຂວງສວັຣຄ໌ນະເຂຕເມື່ອວັນທີ 06 ມີນາ 1934 ເປັນລູກ ຊາຍຄົນທີ 2 ໃນຈຳນວນອິກ 5 ຄົນຂອງຍາພໍ່ຈັນທຣາກັບຍາແມ່ແດງ ພໍ່ກອງແລມີ ອາຍຸ 10 ປີ ພໍ່ກໍເສັຍຊີວິຕໄປ ກອງແລຈຶ່ງໄດ້ເຣີ່ມເຂົ້າໂຮງຮຽນປະຖົມເມື່ອອາຍຸ ຄົບ 11 ປີ ກອງແລຮຽນເກັ່ງແລະຈົບຊັ້ນປະຖົມສນັຍເປັນເມືອງຂຶ້ນຝຣັ່ງເສສ ເມື່ອ ອາຍຸ 17 ປີ ແລະສາມາຣຖ໌ຮຽນອ່ານປາກເວົ້າພາສາຝຣັ່ງເສສໄດ້ດີສົມຄວຣ ແຕ່ກອງແລບໍ່ມີໂອກາສໄດ້ຮຽນຕໍ່ໃນມັທຍົມເພາະຖານະຄອບຄົວ ກອງແລຈຶ່ງ ໄປສມັຄຣ໌ເຂົ້າເປັນນັກຮຽນນາຍສິບທຫາຣຣາບອາກາສທີ່ເມືອງດົງເຫັນ ເມື່ອຜ່ານ ຫລັກສູຕຣ໌ຫົກເດືອນ ກອງແລໄດ້ເປັນນາຍສິບເອກໃນຂນະທີ່ອາຍຸບໍ່ທັນໄດ້ຄົບ 19 ປີ ຊ້ຳ ໃນທ້າຍປີ 1951 ຜູ້ບັງຄັບກອງພັນທຫາຣຣາບອາກາສທີ 1 ໄດ້ເລືອກເອົາສິບ ເອກໜຸ່ມກອງແລໄປເສັງເຂົ້າເປັນນັກຮຽນນາຍຣ໑ັຍຣຸ່ນທີ 6 ສົກປີ ຄສ 1952 -1953 ທີ່ໂຮງຮຽນນາຍຣ໑ັຍເມືອງດົງເຫັນ ຈຶ່ງຖືກຜູ້ອຳນວຍກາຣໂຮງຮຽນນາຍ ຣ໑ັຍຊາວຝຣັ່ງເສສຕື່ມນາມສະກູລໃຫ້ວ່າ ROLLIN ໃນຊີວິຕນາຍທຫາຣຂອງກອງ ແລ ໂຣແລ້ງນັ້ນໄດ້ຜ່ານຫຼັກສູຕຣ໌ Ranger Cours ໃນປະເທສຟິລລິປປິນ ແລະ ປະເທສໄທຍຂອງກຸ່ມ SEATO (South East Asia Treaty Organization) ກອງແລໄດ້ເປັນນາຽຣ໑ັຽເອກໃນຊ່ວງປີ 1959 ແລ້ວຖືກນາຍພົລພູມີ ນໍ່ສວັຣຄ໌ຊຶ່ງ ກຳລັງເຮືອງອຳນາຈແຕ່ງຕັ້ງ ໃຫ້ເປັນຜູ້ບັນຊາກາຣກອງພັນທຫາຣຣາບອາກາສທີ 02 ແທນພັນຕຣີສີສມຸທຣ໌ ຊນະນິກອຣ ທີ່ຖືກສົ່ງໄປເປັນທູຕທຫາຣໃນຝຣັ່ງເສສໂດຍ ມີເສນາທິກາຣກອງພັນຕັ້ງຢູ່ທີ່ຄ້າຍອັດໄຕຍ໌ ແລະກຳລັງທຫາຣຢູ່ຄ້າຍບ້ານດົງບັງ ຊຶ່ງແມ່ນພັນໂທສຸຣິທທ໌ ໂດນສະໂສຣິທທ໌ເປັນຜູ້ບັນຊາກາຣກຣົມ ນາຍພົລພູມີ ນໍ່ ສວັຣຄ໌ທີ່ປັ້ນກອງແລຂຶ້ນມາດ້ວຍມືຂອງຕົນເອງກ່າວວ່າ ຣ໑ັຍເອກກອງແລກ້າຫາຣ ດີ ຂ໑ັຍເຊື່ອໃຈນາຍຣ໑ັຍຫນຸ່ມຄົນນີ້ໄດ້ເຕັມຣ໑ັຍ.

ແຕ່ເພາະກາຣເມືອງລາວທີ່ກຳລັງຫຍຸ້ງຍາກສົບສົນໃນຕອນນັ້ນ ຣ໑ັຍເອກ ກອງແລ ໂຣແລ້ງ ຈຶ່ງກາຍເປັນເຄື່ອງມືທາງກາຣເມືອງຈາກຄົນຫລາຍຈຳພວກມາ ຍົກເຍັຍວ່າຈະໄດ້ເປັນປະທານປະເທສລາວຫາກກໍ່ຣັຖປະຫານສຳເຣັຈລົງ ເຫຕຸຜົລ

ທີ່ ຣອ.ກອງແລ ເປັນນາຍທະຫານຕິດພັນທ໌ສນາມຣົບມາກກວ່ານັ່ງຕ້ຽນນອມຕາມຫ້ອງ ການນີ້ເອງ ເຂົາຈຶ່ງຖືກສົ່ງໄປຍັງສນໍຣະພູມເລືອດຫຼາຽແຫ່ງທົ່ວປະເທສລາວ ໂດຍ ຢ່ຍົນຕ໌ໄປໂດດລົ່ງຟົ້ນທີ່ແລ້ວກໍຣົບ ສນັ້ນກອງແລກັບພັນຣາບອາກາສທີ 02 ຈຶ່ງຮູ້ ກັນທົ່ວກອງທັພລາວເປັນຢ່າງດີ ຢູ່ໃນບົດບັນທຶກສອ່ນຕົວແລະແສນລັບຂອງທ່ານ ນາຍພົລທົ່ງຣິດທ໌ ໂຈກເບັ້ງບຸນຍ໌ຂຽນເອົ້າໄວ້ວ່າ ຝຣັ່ງເສສຍັ່ງແສບຊ້ຳຢູ່ບ່ທ່ານ ພາຍຫລັ່ງທີ່ປຣາໄຊຍ໌ໃນສົ່ງຄາມດຽນບຽນຟູເມ່ືອປີ 1954 ໃນຊ່ວ່ງປີ 1960 ນັ້ນ ສທະຣັຖອາເມຣິກາກໍາລັ່ງເຣ່ີມສົ່ງທທາຣເຂ້ົາສູ່ອຽຕນາມພາຄໄຕ ແລະກໍສົ່ງ CIA ເຂ້ົາມາຍັ່ງລາວ ຣັຖບາລຝຣັ່ງເສສຍັ່ງຜ້ນຄຽດຢູ່ບ່ລືມວ່າອາເມຣິກາບ່ຍອມ ສົ່ງກໍາລັ່ງຣົບຈາກເຣ່ືອຣົບທ່ 7 ທ່ລອຍລໍາຢູ່ໃນທະເລ່ອອຽຕນາມໄຕ້ມາຊ່ວ່ຍຕ້ນ ໃນສົ່ງຄາມດຽນບຽນຟູ ຈຶ່ງຄ່ດແກ້ເຜ່ັດສທະຣັຖ ໂດຍການເຫ້ນດ່ໃຫ້ປະເທສ ລາວກາຍມາເປ້ນປະເທສເປ້ນກາງ ເພ່ືອເປ້ນເຂຕປອດທທາຣຕ້ດໜ້າສທະຣັຖ ບ່ໃຫ້ສົ່ງກໍາລັ່ງໃດໆເຂ້ົາມາຍັ່ງແຜ່ນດ່ນເປ້ນກາງໄດ້ ຈຶ່ງເກ້ຍກອ່ມເຈ້ົາສູວ້ນ ນາພູມາທ່ຕອນນ້ັນຍັ່ງເປ້ນເອກອ້ຄຣາຊທູຕລາວປະຈໍາຝຣັ່ງເສສ ແລ້ວກໍສົ່ງ ໃຫ້ໝວ່ຍ MMF (MISSION MILITAIRE FRANCAISE) ໃນນະຄອຣວຽງຈ້ນທນ ດໍາເນ່ນການດ້ານສ່ສານໃຫ້ຣວ້ຍເອກກອງແລ ໂຣແລ້ງທ້ງໝ່ດ ຊ່ຶງແມ່ນຣວ້ຍ ເອກ JEAN DEUVE ເປ້ນທ້ງທ່ປ່ກສາແລະລ່ງມ່ຊ່ວ່ຍດ້ວ້ຍຕ່ນເອງໂດຍພາຊ່າງ ວ່ທຍຸຊາວຝຣັ່ງທໍາການຕ່ດຕ້ັງວ່ທຍຸຕ່ດຕ່ໜ້າງທທາຣໃສ່ຣ໌ຖທຸກຄ້ນຂອງຄນະກ່ ຣັຖປະຫານກອງແລດ້ວ້ຍ.

ຕ່ຈາກນ້ັນກ່ເກ່ດເປ້ນຕ່ອ່ງໂສ້ເຊ່ືອມໂຍງກ້ນກວ້ານຂວ່ານ ຢູ່ພ່ຍໃນຕ່ມ ຂ້ຶນ ຄ່ນແຣກກ່ແມ່ນຫ້ອໜ້ານ້ລລາວເປ້ນກ່ານຂອງທ່ານກ່ອໝ່ນ (ກ່ນ່ນ ພ່ນເສ ນາ) ໃຫ້ເປ້ນຜ້ຕ່ດຕ່ກ້ບຈ່ນແດ່ງແລະອຽຕນາມເໜ່ືອ ເພ່ືອໃຫ້ນາອ້ມຊູຣັຖປະ ຫານຂອງຣວ້ຍເອກກອງແລທ້ງກອ່ນ ແລະຫລ້ງການກ່ຣັຖປະຫານສໍາເຣ້ັຈລ້ງ ຜ້ຕ່ນາກ່ແມ່ນນາຍສາລ ວ່ງສ໌ຄໍາຊາວ ຜ້ຕາງໜ້າສຸພານຸວ່ງສ໌ທ່ເຊ່ືອງຕ້ອຢູ່ໃນ ປ່າເຂຕດ່ານສູງແຂວ່ງວຽງຈ້ນທນ ບຸຄ ລ ລ ສໍາຄ້ນຜ້ຕ່ນາກ່ແມ່ນນາຍພ້ນໂທ ອະທ່ບ່ດ່ສ້ມພາວຸທແຫ່ງຊາຕ ເປ້ນຜ້ສົ່ງໃຫ້ເບ່ກຈ່າຍປ່ນນ້ອຍປ່ນໃຫ່ຍພ້ອມ ກະສູນໃຫ້ແກ່ພວກແມວລາວຮັກຊາຕ ທ່ຈະນາຣົບຊ່ວ່ຍຣວ້ຍເອກກອງແລໃນ ເມ່ືອມ່ການຕ້ານຣັຖປະຫານ ແຜນການກ່ຣັຖປຫານດ່ັ່ງກ່າວໄດ້ຕ່ກເຂ້ົາລ ລ ຂອງຣາໂນ່ຍທ່ຝ່ປ່ອງຣຸກຣານລາວພ່ດ່ບພ່ດ ໃນຂນ່ະທ່ຣວ້ຍເອກກອງແລເອ ກໍາລ້ງດ່ັ່ງດ້ງແລະໄດ້ຣັບຄວາມເຊ່ືອຖ່ຈາກເສນາທ່ການກອງທ້ພ ເພາະຫາກ

ຣ້ຍເອກກອງແລ ໂຣແລ້ວຣົບບອ່ນໃດກໍຊຸນະບອ່ນນັ້ນ ເມື່ອຊຸນະແລ້ວຍັງ ຣາຍງານຂໍເຄື່ອງອຸປໂພຄບໍຣິໂພຄຈຳນວນມາກໆໃນແຕ່ລະແຫ່ງ ເພື່ອແຈກ ຍາຍໃຫ້ປະຊາຊົນທ້ອງຖິ່ນທີ່ທຸກຍົຍາກ ພ້ອມສົ່ງຂໍກະສູນປືນແລະອາວຸທບາງ

ສນິດທີ່ອ້າງວ່າໄດ້ສູນຍ໌ເສັຍໄປໃນກາຣຣົບກັບສັຕຣູ ແລ້ວອົ້ງຄ໌ກາຣນ໌ USAID ກໍຈັດເຄື່ອງອຸປໂພຄໄປໃຫ້ທັນກາຣ ສວ່ນພັນໂທທັມ ໄຊຍ໌ສິທທິ໌ເສນາ ອະທິບໍດີກຣົມສັມພາວຸທກໍສົ່ງຈ່າຍປືນແລະລູກກະສູນໃສ່ຍົນຕ໌ໂປຖິ້ມໃຫ ຕາມທີ່ ກອງແລຕ້ອງກາຣ.

ກາຣຊວ່ຍເຫລືອຂອງອາເມຣິກາແກ່ລາວ ໂດຍເຣີ່ມແຕ່ປີ 1957 ເປັນຕົ້ນມາ ນັ້ນ ມີສວ່ນເປັນຕົ້ນເຫຕຸໃຫ້ນັກກາຣເມືອງລາວມີຄວາມຄິດແຕກແຍກແປກຕ່າງກັນ ຕລອດມາ ເປັນກາຣໃຫ້ມຫາສາຣທາກທຽບໃສ່ຈຳນວນພົລເມືອງລາວປະມາຣສາມ ລ້ານ ຄົນໃນຕອນນັ້ນກໍຄືປະມານ 150 ດອລລາຣ໌ຕໍ່ປະຊາກອຣລາວຜູ້ຫນຶ່ງ ເປັນຣາຍໄດ້ ມາກກວ່າສອງເທ່າຕໍ່ປີຂອງກັມມະກອຣລາວຫນຶ່ງຄົນ ດ້ຽເງິນຊວ່ຍເຫລືອຂອງ ຊີ ໄອເອທີ່ວ່ານີ້ ຣັຖບາລຣາຊອານາຈັກຣ໌ລາວໄຊ້ຈ່າຽໃນກາຣເລືອກຕັ້ງຂອງຜູ້ເປັນ ມິຕຣ໌ກັບອາເມຣິກາ ໄຊ້ຊື້ແມ່ນກະທັ້ງຄະແນນສຽງເລືອກຕັ້ງໃນສະພາ ເພື່ອຄ້ຳ ປະກັນຄ່າສເງິນກີບ ພວກຊີໄອເອຈະກວ້ານຊື້ເອົ້າເງິນກີບຕາມຕລາດມືດທ່ອໄປໃນ ນະຄອນວຽງຈັນທນ໌ ພວກພ່ໍຄ້າຫ໋ວໃສພາກັນຂົນເອົ້າເງິນກີບອອກມາແລກດອລລ່າ ເປັນຂບວນ ສວ່ນຫານະບັຕຣ໌ລາວທີ່ໄດ້ມາ ພວກຊີໄອເອກໍຍັດໃສ່ກະເປ໋າປ່ານນ໋ຳ ໄປເຜົ້າໄຟຖິ້ມ ແຕ່ພວກພ່ໍຄ້າລາວຢັ້ມເພາະຣ໋ຳຣວຍດອລລ່າແລ້ວພາກັນສົ່ງຊື້ຣົຖ ເບັ້ນຊຸ໌ລັນງາມຈາກເຢີຣະມັນມາຂາຍຕ໋ໃຫ້ໄທຍໄດ້ກຳໄຣງາມໆ.

ໝວ່ຽຣາຊການລັບຂອງອາເມຣິກາເປັນຜູ້ຈ່າຽງ໊ປະມານໃຫ້ກອງທັພລາວ ທ້ັງໝົດ ກາຣທຸຈຣິຕຊື້ຈ໋າງໄດ້ຂຍາຽອົງສ໌ກ້ວ້າງຢ່າງວອ່ງໄວໃນກອງທັພຣະດັບເສ ນາທິກາຣ ເປັນສາເຫຕຸໃຫ້ວຽຕນາມເໝືອວ້າງແຜນໃຫ້ສຸພານຸວົງສ໌ສິ່ງຄົນ ຂອງ ຕົນເຂ້ົ້າເຊ່ືອງຊ້ອນຢູ່ພາຽໃນຣັຖບາລຢ່າງມາກມາຽ ພວກ CIA ກໍຮູ້ຄັກແນ່ວ່າຄົນ ຂອງສຸພານຸວົງສ໌ເຂ້ົ້າມານ່ັງກີນເງິນຂອງພວກຕົນ ຢູ່ໃນຜແນກຄັງຫລວງຂອງຣັຖ ບາລກໍມີວິທີກາຣຜັນເງິນກີບໃຫ້ແນວລາວຂອງສຸພານຸວົງສ໌ໄຊ້ຈ່າຍຟູມເຟ່ືອຍ ພວກ ນາຍທຫາຣຊັ້ນນ້ອຍພາກັນບ່ໍພ່ໃຈໃນກາຣປະພຶຕຂອງພວກຜູ້ໃຫ່ຍໃນກອງທັພ.

ກາຣກ່ໍຣັຖປະຫາຣຂອງກອງແລ ເມ່ືອວັນທ ີ 09 ສິງຫາ 1960 ນັ້ນ ໄດ້ສ່ົງ ຜົລສະທ້ອນໜັກໜວ່ງແກ່ການເມືອງລາວໃນກາລຕ່ໍມາ ຣັຖປະຫາຣກອງແລດ້ັງ ສນ່ັນໂລກຈົນນັກການເມືອງມຫາອ໋ານາຈພາກັນຜິກແຜນທ່ີຊອກຫາທ່ີຕ້ັງ ຂອງປະ

ເທສລາວກັນເປັນແຖວ ຄວາມເປັນກາງຂອງລາວຫາກໄຮ້ຄ່າ ເພາະມັນກາຍມາ ເປັນຮູຮົ່ວໃຫ້ອຽຕນາມເໝືອຮະເມີດສັນຍາເຈນີວາ ດ້ວຍການສົ່ງກຳລັງທຫາຮ ຮຸກຮານລາວຕລອດມາ.

ເມື່ອມີຣັຖປະຫາຮກອງແລກໍເກີດມີສາມຣັຖບາລຂຶ້ນມາທັນທີ ໃນນັ້ນມີ ຝ່າຽຂວາຂອງນາຍພົລພູມີ ນໍ່ສວັຣຄ໌-ເຈົ້າບຸນອູ້ມ ນະຈຳປາສັກດ໌ ມີຣັຖບາລກາງ ຂອງຮ້ອຍເອກກອງແລ-ເຈົ້າສູວັນນາພູມາ ແລະມີແນວລາວຮັກຊາຕຂອງສຸພານຸ ວົງສ໌ ພວກຝ່າຍຂວາມີອາເມຣິກາສນັບສນູນ ພວກຝ່າຍຊ້າຍສຸພານຸວົງສ໌ມີກຸ່ມ ປະເທສສັງຄົມນິຍົມໃຫ້ຄວາມອູ້ມຊູ ສ່ວນຣັຖບາລກາງກອງແລ-ສຸວັນນາພູມາຖືກ ພວກຊີໄອເອປະຖິ້ມໂດຍສິ້ນເຊີງ ແຕ່ມີຣັສເຊັຍປະຄັບປະຄອງເອົາໄວ້ ກອງແລກໍ ເລີຍກາຍເປັນກາງອຽ່ງຊ້າຍໄປໃນຕົວ ແລ້ວລາວສາມຝ່າຍກໍເຣີ່ມລົງມືເຂັ່ນຂ້າ ກັນເອງຢ່າງສນຸກມື ສນັ້ນຈຶ່ງເວົ້າໄດ້ວ່າຣັຖປະຫາຮກອງແລ ໄດ້ຜັກດັນໃຫ້ວິຖີທາງ ການເມືອງລາວພົກຜັນໄປໃນທາງຮ້າຍຫລາຍກວ່າສິ່ງດີໆ ເພາະໄດ້ມີການເຂັ່ນຂ້າ ລ້າງຜານຊີວິຕຄົນລາວກັນເອງຢ່າງມາກມາຍໃນກາລຕໍ່ໆມາ.

ຜູ້ຂຽນຈະຂໍພາຜູ້ອ່ານຍ້ອນກັບຫາຈຸດເຣີ່ມຕົ້ນວ່າ ດ້ວຽເຫຕຸໃດກອງແລຈຶ່ງ ຄິດເຮັດຣັຖປະຫາຮ ມັນເຣີ່ມຕົ້ນຂຶ້ນດ້ວຽວິທີໃດແລະມີໃຜແດ່ທີ່ຢືນຢູ່ເບື້ອງຫຼັງເຫຕຸ ການ໌ ຫາກອີງເອົາຕາມເອກສາຮການເມືອງລາວຫລາຍສບັບທີ່ຂຽນໄວ້ວ່າ ກອງ ແລທະເຍີທະຍານຢາກເປັນປະທານປະເທສລາວ ຈຶ່ງຍອມກໍ່ຣັຖປະຫາຮໂດຍອ້າງ ເພື່ອໂຄ່ນລົ້ມນັກການເມືອງສໍ້ຮາຊບັງຫຼວງ ທວງໃຫ້ພວກນາຽທທາຮຜູ້ໃຫ່ຽໃນກອງ ທັພລາວເຊົ້າຫຼີ້ນຜົລຫຼີ້ນພວກເສັຽທີ ແຕ່ກຳລັງທທາຮຂອງກອງພັນຮາບອາກາສທີ 02 ຂອງກອງແລຊຶ່ງມີບໍ່ເຖິງຫນຶ່ງພັນຄົນນັ້ນ ຈະປາບກຳລັງກອງທັພແຫ່ງຊາຕທີ່ມີ ຈຳນວນເໝືອກວ່າເປັນ 10 ເທ່ານັ້ນໄດ້ວິທີໃດ...?

ໃນບັນທຶກລັບຂອງທ່ານນາຍພົລທອງຣິທທ໌ ໂຈກເບັ້ງບຸນຍ໌ທີ່ຂຽນກຽ່ວກັບຣັຖ ປະຫາຮຂອງຮ້ອຍເອກກອງແລ ໂຮແລັງນັ້ນເປັນຕາອ່ານດີ ໂດຍເຣີ່ມວ່າໃນປີ ຄສ 1959 ນັ້ນ ທອງຣິທທ໌ຍັງເປັນນາຍຮ້ອຍເອກຢູ່ ແລະມີໜ້າທີ່ເປັນເສນາທິການ ທທາຮພາຄ 2 ປະຈຳເຂຕຍ່ອຍເມືອງບໍ່ຣິຄັນ ໃນຣະຫວ່າງທ້າຍເດືອນທັນວາຂອງ ປີ 1959 ທາງເສນາທິການສູງສຸດກອງທັພໄດ້ສັ່ງໃຫ້ກອງພັນຮາບອາກາສທີ 02 ນຳໂດຍຮ້ອຍເອກກອງແລ ໂຮແລັງ ໄປໂຕນຈ້ອງລົງຂັບໄລ່ກຳລັງທທາຮແນວ ລາວທີ່ມາຊຸມນຸມກັນຢູ່ໃນເຂຕເມືອງເກ່ົາບໍ່ຣິຄັນ ໃນສອງສາມອັນຕໍ່ມາກອງແລກໍ ຮາຍງານເຂົ້າມາໃຫ້ກອງບັນຊາການສູງສຸດກອງທັພວ່າ ໄດ້ຂັບໄລ່ທທາຮແນວລາວ

ແຕກຫນີອອກໄປໄດ້ແລ້ວ ຫລັງຈາກນັ້ນກອງທັພກໍຈັດສິ່ງສິ່ງຂອງພ້ອມກະສູນປືນ ໄປໃຫ້ຕາມທີ່ຮ້ອຍເອກກອງແລະມາ.

ປະມານສອງອາທິຕຍ໌ຕໍ່ມາພວກສາຍລັບຂອງຮ້ອຍເອກຫອງຣິທທີ່ກໍຣາຍງານ ເຂົ້າມາຖາມວ່າ...

"ພວກທຫາຣເສື້ອລາຍທີ່ມາໂດດຈ້ອງລົງໄກ້ຫມູ່ບ້ານສູນຍ໌ແບ່ງນັ້ນເປັນພວກໃດ ກັນແທ້, ບໍ່ມີການສູ້ຣົບກັບທຫາຣແນວລາວປະສົມອຽຕນາມເຫນືອເລີຍ ແຕ່ກົງກັນ ຂ້ານກັບທ້ອນໂຮມເຄື່ອງຂອງ+ປືນແລະລູກກະສູນທີ່ຍົນຕົ໋ມາຖິ້ມໃຫ້ນັ້ນເອົາໄວ້ ໃຫ້ ພວກທຫາຣແນວລາວມາຂົນເອົາໄປຈົນຫມົດ"

ຮ້ອຍເອກຫອງຣິທທີ່ຈົບຣາຍງານຢີ່ຣົຖເຂົ້າໄປພົບນາຍພົລອ້ອນ ຣາທີກູລ ຜູ້ບັນຊາ ການກອງທັພທີ່ໂພນເຄັງທັນທີ ເມື່ອອ່ານຣາຍງານແລ້ວນາຍພົລອ້ນເຖິງກັບຕື່ນ ຕົກໃຈ ອຸທານອອກມາວ່າ...

"ເປັນໄປໄດ້ເຖິງຂນາດນີ້ຫວ໋ະ.!!? ຮ້ອຍເອກກອງແລກໍເປັນຫລານເຂີຍຂອງ ຂ້ອຍເອງແທ້ໆ.!"

ເຣື່ອງຂອງເຣື່ອງກ້ວຽບຫາຍໄປ ເຈົ້ານາຍຄົງບ່ຍອມເຊື່ອຈົ່ງບ່ມີການສອບສວນ ຫາຫລັກຖານຕື່ມອີກ.

ຈົນຢຽບຢ່າງເຖິງວັນທີ 24 ພຶສພາ 1960 ອັນເປັນວັນທີ່ສຸພານຸວົງສ໌ກັບພັລ ແຫກຄຸກໂພນເຄັງອອກໄປໄດ້ ແລ້ວຖືກກໍາລັງທຫາຣແນວລາວຣັກຊາຕປະສົມອຽຕ ນາມເຫນືອມາຣັບເອົາເຖິງປຸ່່ງໄຮໃນເຂຕບ້ານດອນແລະສາມຫມື່ນເມືອງເຜືອງ ໃນ ສອງວັນຕໍ່ມາກໍຖືກກໍາລັງທຫາຣພາຄ 2 ມາດັກສະກັດລັດຫາງ ຈົ່ງເກີດປະທະກັນ ກັບທຫາຣແນວລາວແລະອຽຕນາມເຫນືອເປັນການໃຫ່ຍ ເປັນເຫຕຸໃຫ້ທຫາຣພາຄ 2 ເສັຍຊີວິຕ 2 ຄົນ ໄດ້ຣັບບາດເຈັບອີກ 4 ຄົນ ເມື່ອນາຍພົລອ້ນ ຣາທີກູລ ຜູ້ບັນ ຊາການກອງທັພໄດ້ຣັບຣາຍງານຈາກຮ້ອຍເອກຫອງຣິທທ໌ ທີ່ເປັນເສນາທິການຂອງ ກອງທັພພາຄ 2 ກໍຣີບສົ່ງທຫາຣຣາບອາກາສທີ 2 ຂອງຮ້ອຍເອກກອງແລທນຶ່ງ ກອງຮ້ອຍ ບັນຊາໂດຍຮ້ອຍໂທເດືອນ ສູນນາຣາຊ ໄປໂດດຈ້ອງລົງໃນເຂຕສາມ ຫມື່ນເມືອງເຜືອງຊຶ່ງຫ່າງຈາກຈຸດປະທະກັນປະມານ 20 ກິໂລແມຕຣ໌ ໃນວັນຕໍ່ມາ ຮ້ອຍໂທເດືອນກໍສົ່ງທຫາຣໄປບອກຊາວບ້ານປຸ່່ງໄຮ ເພື່ອສົ່ງຂ່າວໄປບອກໃຫ້ທຫາຣ ແນວລາວແລະອຽຕນາມເຫນືອຣີບຖອນຕົວອອກໄປຈາກພື້ນທີ່ໂດຍດວ່ນ ກ່ອນທີ່ກໍາ ລັງທຫາຣຫນຶ່ງກອງຮ້ອຍຂອງຮ້ອຍໂທເດືອນຈະມາເຖິງ ບໍ່ເຖິງຊົ່ວໂມງຕໍ່ຈາກນັ້ນ ນາຍພົລອ້ນກໍໄດ້ຣັບໂທຣເລຂຈາກຮ້ອຍໂທເດືອນ ສູນນາຣາຊມີເນື້ອຄວາມວ່າ...

"ໄດ້ມາເຖິງຈຸດໝາຍ/ປອດໄພຍ໌ດີ/ບໍ່ມີການປະທະກັນ/ຊາວບ້ານປຸ່ງໄຮບໍ່ເຄີຍ ເຫັນໜ້າຂແນວລາວເຂົ້າມາໃນບ້ານຂອງພວກເຂົາ,ບໍ່ຮູ້ແມ່ນກະທັ້ງວ່າແນວລາວ ອິສຣະນັ້ນແມ່ນຫຍັງ/.."

ນາຍພົລອ້ອນ ຣາທິກູລເອີ້ນຮ້ອຍເອກທອງຣິທທ໌ ໂຈກເບັ້ງບຸນຍ໌ ຈາກເສນາທິການ ຈີນາຍໂມ້ມາຊູດເປັນການໃຫ່ຍ.... ໂດຍຖິ້ມໂທຣເລຂສັບນັ້ນໃສ່ໂຕະແລ້ວຮ້ອງຂຶ້ນ ດັງໆ ທັ້ງເອົາມືຕົບໂຕະວ່າ...

"ເຈົ້າຈົບວິຊາເສນາທິການໜ້າຣມາຈາກຝຣັ່ງເສສ ແຕ່ມາເຮັດວຽກແບບນີ້ ໜ້ອ..!? ອ່ານຂໍ້ຄວາມໃນໂທຣເລຂຂອງຮ້ອຍໂທເດືອນເບິ່ງດຸ...ບໍ່ມີແມ່ນແຕ່ເງົາ ຂອງສັຕຣູ, ໜອກໃຫ້ຂ້ອຍສົ່ງໜ້າຣາບອາກາສໄປໂດດເສັຍຈ້ອງລ້ຳໆ..ເສັຍນ້ຳ ມັນຍົນຕ໌...ເສັຍໜ້າຕື່ນອີກ..!"

ຮ້ອຍເອກທອງຣິທທ໌ ໂຈກເບັ້ງບຸນຍອມຮັບຜິດເອົາໄວ້ກ່ອນ ແຕ່ຣາຍງານເພີ່ມໃຫ້ ນາຍພົລອ້ອນຕື່ນອີກວ່າ...

"ຂໍໃຫ້ທ່ານນາຍພົລຕັ້ງຂນະກັມມະການສືບສວນເຣື່ອງນີ້ເບິ່ງອີກ ໜ້າຣຂອງ ຂນ້ອຍຖືກຂ້າຕາຍຕັ້ງສອງຄົນ ໄດ້ຮັບບາດເຈັບອີກ 4 ຄົນ ພວກເຂົາຈະຍືນຍັນໃຫ້ ທ່ານໄດ້ວ່ามีໜ້າຣแนวลาวปะสົมໜ້າຣอฐตนามเหมือมาຮັบเอົาสุพานุอົງส์ ແທ້ໜລືບໍ່?"

ທ່ານນາຍພົລຍັງໂກໜເຄືອງເປັນໄຟໄໝ້ມປ່າ ໜ້າວ່າລູກນ້ອງເຮັດວຽກບໍ່ສອດຄ່ອງ ໃນແຜນການຮ່ວມກັນ...

"ພວກເຈົ້າປະສານງານກັນແບບໃດຈຶ່ງບໍ່ເຂົ້າໃຈກັນ.!?"

"ຂນ້ອຍອະທິບາຍຣະອຽດໃຫ້ຮ້ອຍໂທເດືອນທຸກຢ່າງແລ້ວ, ບໍ່ແມ່ນຄວາມຜິດ ຂອງຂນ້ອຍ"

"ເຈົ້າຢ່າໄປຖິ້ມໂທສໃສ່ຄົນອື່ນ ແລປທອງຣິທທ໌.!"

"ທ່ານນາຍພົລຈີ່ໄດ້ບໍ່ຕ່ໍບົທຣາຍງານຂອງຂນ້ອຍເມື່ອປີກາຍ ທີ່ກ່ຽວກັບການປະ ໜ້າຣໂດດຈ້ອງກອງພັນທີ 2 ຂອງຮ້ອຍເອກກອງແລ ທີ່ບ້ານສູນຍ໌ແບ່ງເຂຕຍ່ອຍບໍ ຣິລັນ ຮ້ອຍເອກກອງແລຣາຍງານຢ້ຳຕ໊ອະແຕ່ທ່ານບໍ່ເຊື່ອຂນ້ອຍ ແລະເຄື່ອງຂອງ ກັບກະສູນປືນທີ່ທ່ານອົດສາຫ໌ຈັດຫາໄປດຣ໊ອປໃຫ້ນັ້ນ ຮ້ອຍເອກກອງແລເອົາໃຫ້ແກ່ ໜ້າຣแนวลาวอິສຣະທັ້ງໝົດ"

ນາຍພົລອ້ອນເຣີ່ມປຽ່ນທ່າທີ ບອກຮ້ອຍເອກທອງຣິທທ໌ຄ່ອຍໆວ່າ...

"ເປັນໄປໄດ້ຂນາດນີ້ພຸ້ນຫວ່ຳ.? ເອົາຣາຍຣະອຽດມາຣາຍງານຂ້ອຍຕື່ນອີກ"

ເມື່ອເຈົ້ານາຍບໍ່ເຊື່ອວ່າຣອ້ຍເອກກອງແລຕິດຕໍ່ກັບພວກແນວລາວໃນເຂຕນອກ ອັນ ຕຣາຍກໍເຄື່ອນໄກ້ເຂົ້າມາໃນແຕ່ລະວັນ ຈົນເຖິງຣະຫວ່າງກາງປີ 1960 ສົງຄາມ ວຽຕນາມເຣີ່ມຮຸນແຣງຂຶ້ນເຣື່ອຍໆ ພວກ CIA ກໍາລັງເຣີ່ມລຽນຄືອກັນເຂົ້າມາ ໃນປะເທສລາວ ເມື່ອວຽຕນາມເຫນືອຮູ້ວ່າວ່າຝຣັ່ງເສສກໍາລັງຈະຜັກດັນ ໃຫ້ລາວເປັນກາງເພື່ອປ້ອງກັນບໍ່ໃຫ້ສหะຣັຖສົ່ງກໍາລັງທหาຣ ເຂົ້າມາໃນດິນ ດິນລາວຣາໂນ້ຍກໍແສນຍິນດີ ຈຶ່ງເລັ່ງລັດໃຫ້ສຸພານຸວົງສ์ຕິດຕໍ່ສายລับ ສาลิ ວົງສ์ຄໍาຊาວທີ່ດ່ານສูງ ແລະກົ່ວหนิม (ກິນິມ) ພົລເສນาໃນນะຄອຣວົງ ຈันหน์ ຊຸກຍູ້ໃຫ້ຣອ້ຍເອກກອງແລກໍຣັຖປะหาຣຂຶ້ນໂດຍໄວ.

ສอນຣອ້ຍເອກກອງແລຜູ້ໂຊກດີທີ່ຜູ້ໃຫ່ຍເຊື່ອໃຈແລະໄດ້ລັກຕິດຕໍ່ກັນກับ ພวกแนวลาวรักชาตมาตั้งแต่ต้นปี 1960 พันแล้วก็ยิ่งเล่งสปีดสิ่งอา ยุทกับกะสูนปืนให้พวกแนวลาวในเขตด่านสูง โดยผ่านสายลับแนว ลาวตามหมู่บ้านห้วยอ้อ-ห้วยข้าว-นาซอน-นายางย่างมิดวรบ โดย แม่นพันโททัม ไชยสิทที่เสนา ยะทีบ่ดิกธ์มสัมพาอุทสั่งจ่ายกะสูนปืน ทุกสนิดให้แก่ຣอ้ยเอกกองแล โรแล้วจำนอนเป้นล้านนัด ຣอ้ยเอก ทองธิทที่ โจกเบ้วบุนย์ ต์กใจถิ่นอ่าถอ้ยเหตุใดยะทีบ่ดิกธ์มสำพา อุทจึ่งเบิดจ่ายลูกกะสูนปืนให้ຣอ้ยเอกกองแลมากมายขนาดนี้ เพาะ ได้ติดตามการปะติบัตงานของຣอ้ยเอกกองแลอยู่ปะจำ ก็บ่ปากົຖเห็น อ่ากองพันธาบอากาสที่สองได้ยิงกับสัตรูในสมานธ์บใด จึ่งตัดสินใจ จับใบสั่งจ่ายกะสูนปืนลั้งใหย่นั้นไปให้พันเอกกปะสิทที่ ยะไพย์ ที่เป้น เอกยะทีบ่ดิกะชองป้องกันปะเทส เพื่อให้นำเอ๋ำไปสเมิแก่นายผົลผูมี บ่สอัธลธ์ัຖมินตรีป้องกันปะเทสธูนำ แต่นายผົลผูมีที่ใผๆเอ๋ำใจอ่าผู ที่มีสติยะอ๋ังต์อยู่สเมิและสลาดหลักแหลมนั้นก็ยังบ่ยอมเชื่อยู่ดี โดย ให้เหตุผົลอ่าต่หน้าพันเอกกปะสิทที่ ยะไพย์อ่า...

"กองแลเป้นนายทหารเจ๋ำอินัย, ติเสิกก่เกั่ง, แม่นยอ้ยเองแท้ๆ เป้นผู้แต่งตั้งให้เป้นผู้บังคับกองพันธาบอากาสที 2, กองแลยังผักดิต่ ยอ้ยสเมิ, เป้นผจ๋งรอ้ยเอกเท่านั้น จะมาคิดก่ຣัຖปะหาຣได้อีทีใด?" นายผົลผูมี นิ่สอัธลกับคิดอ่าพันเอกกปะสิทที่ที่เป้นเอียดົนเหนือ และ ยู่ฝ่ายชุนะนิกกยธสเมินา ทังกำลังถูกแต่งตั้งให้ไปเป้นผู้บันชาการ ทหารพาล 5 ยู่แล้อ กำลังคิดปักป้ารอ้ยเอกกองแล ที่เป้นคົนเมืองว

ສວັຣຄ໌ເຫມືອນກັນກັບຕົນເອງເສັຍຕື່ມ.

ພໍເຣີ່ມຢ່າງເຂົ້າເດືອນສິງຫາ 1960 ຊຶ່ງກອງພັນຣາບອາກາສທີ 2 ກຳລັງຢູ່ໃນອາຣະພັກຜ່ອນເພາະຫາກໍກັບມາຈາກສນາມຣົບນ້ຳອູ-ເມືອງໄຊຍ໌ ທີ່ແຂວງຫຼວງພຣະບາງ ແລະກ່ອນການກໍ່ຣັຖປະຫານພຽງ 24 ຊົ່ວໂມງ ຣ້ອຍເອກກອງແລໄດ້ສວຍໂອກາສໃນຂນະທີ່ນາຍົກຣັຖມົນຕຣີເຈົ້າສົມສນິຕນຳຄນະຣັຖບາລໃຫ່ມ ໂດຍມີ ນາຍພົລຕຣີພູມີ ນໍ່ສວັຣຄ໌ຣັຖມົນຕຣີປ້ອງກັນປະເທສ ນາຍພົລຕຣີອ້ວນ ຣາທິກູລ ຜູ້ບັນຊາການສູງສຸດກອງທັພຍັງຢູ່ໃນຫລວງພຣະບາງ ເພື່ອສເນີຄນະຣັຖບາລໃຫ່ມ ຕໍ່ເຈົ້າຊີວິຕສີສວ່າງ ວັທນາ ເປີດປະຊຸມລັບກັບເພື່ອນນາຍທະຫານປະຈຳກອງພັນ ອັນມີຣ້ອຍເອກຄຳລ້ວນ ທອງພັນທ໌-ຣ້ອຍໂທສຸກັນ-ຣ້ອຍໂທທອງມີ-ຣ້ອຍ ໂທເດືອນ ສຸນນະຣາຊ-ຣ້ອຍໂທແຈ້ງ ຊັຍະວົງສ໌ ຫລັງການປະຊຸມແລ້ວນາຍທະຫານທັງໝົດ ກໍໄດ້ພາກັນເຂົ້າໄປສາບານໃຫ້ຊື່ສັຈແລະບໍ່ຄິດທັກຫລັງກັນຕໍ່ໜ້າພຣະໃຫ່ຍ ໃນ ວັດອົງຄຕື້ແຕ່ປາກົຖວ່າຣ້ອຍໂທເດືອນ ສຸນນະຣາຊ ກັບຣ້ອຍໂທແຈ້ງ ໄຊຍວົງສ໌ ໄດ້ທໍຣະຍົສຄຳສາບານປ່ຽນໃຈໄປຮ່ວມກັບສຸພານຸວົງສ໌ ພາຍຫລັງທີ່ຖືກຂັບໄລ່ອອກ ໜີຈາກນະຄອຣວຽງຈັນທນ໌ໃນທ້າຍເດືອນທັນວາ 1960 ໄດ້ເປັນໃຫ້ຽເປັນໂຕໃນ ຣັຖບາລລາວຄອມມິວນິສຕ໌ຫລັງປີ ຄສ.1975 ແລະເດືອນ ສຸນນະຣາຊ ໄດ້ເສັຽຊີ ວິຕໄປທີ່ນະຄອຣວຽງຈັນທນ໌ ໃນບໍ່ເທົ່າປີຕໍ່ມາ.

ໃນເຊົ້າວັນທີ 07 ສິງຫາ 1960 ຣ້ອຍເອກກອງແລໄດ້ເຂົ້າໄປຍັງເສນາທິການກອງທັພທີ່ຄ່າຍໂພນເຄັງເພື່ອຂໍຣົຖຖັງຈຳນວນ 6 ຄັນ ໂດຽອ້າງວ່າເພື່ອ ນຳໄປກວາດລ້າງສັຕຣູທີ່ເຂຕເມືອງກາສີແລະລອ່ງຕອນ ເສນາທິການກອງທັພຕົກ ໃຈຕື່ນ ເພາະທີ່ຜ່ານມາກອງແລບໍ່ເຄີຽຂໍຣົຖຖັງຫາຽຂນາດນີ້ຈັກເທື່ອ ຈຶ່ງຕອບກອງ ແລໄປວ່າ...

" ທີ່ເສນາທິການເຮົາກໍມີຣົຖຖັງT-34 ຢູ່ 8 ຄັນເທົ່ານັ້ນ ແຕ່ 3 ຄັນກຳລັງສ້ອມ ແປງຢູ່ ຫາກເອົາໃຫ້ກອງແລນຳໄປເມືອງກາສີເສັຽກໍຈະຂາດຣົຖຖັງໄວ້ປ້ອງກັນ ເສນາທິການ "

ແຕ່ແນວນັ້ນກໍຕາມ ກອງແລກໍໄດ້ຣົຖຫຸ້ມເກາະໄປ 4 ຄັນ.

ໃນບົທບັນທຶກລັບຂອງນາຍພົລທອງຣິທທ໌ ໂຈກເບັ້ງບຸນຍ໌ ຂຽນໄວ້ວ່າຫົວກະທິ ທີ່ວາງແຜນໃຫ້ຣ້ອຍເອກກອງແລ ໂຮແລັ້ງກ່ໍຣັຖປະຫານເທື່ອນີ້ມີຫລາຍຄົນຄື ທ່ານ ທູຕຝຣັ່ງເສສປະຈຳນະຄອຣວຽງຈັນທນ໌ ກັບຣ້ອຍເອກ JEAN DEUVE-ນາຍພັນຕຣີ ຄຳອ້ວນ ບຸບຜາ ຜູ້ບັນຊາການເຂຕຍ່ຍຜ້ັງສາລີ-ນາຍສາລີ ວົງສ໌ຄຳຊາວ ຕາງ

ຫນ້າໃຫ້ສູພານຸວົງສ-ນາຍກິນິມ ພົລເສນາ ຜູ້ແທນຣາຊດອຣແຂວງສວັຣຄ໌ເຂຕ-ພັນໂທຫັມ ໄຊຍສິທທິ໌ເສນາ ອະທິບໍດີສັມພາວຸທ-ເຈົ້າສູວັນນາພູມາ ທີ່ຍັງເປັນທູຕຢູ່ໃນຝຣັ່ງເສສ-ຣອ້ຍເອກຖວິລ ອຸດານິນທ ຫົວຫນ້າຫອ້ງການກຳລັງພົລຂອງກະຊວງປ້ອງກັນປະເທສ ແລະຄນະທິວຈັກຣ໌ການກໍ່ຣັຖປະຫານຮາກຮູ້ດີວ່າກຳລັງທຫານ ພາຄ 5 ຂອງພັນເອກກຸປະສິທທິ໌ສ່ວນມາກແມ່ນຢູ່ໃນເຂຕແນວຫນ້າ ສ່ວນທີ່ປະຈຳຢູ່ໃນແນວຫລັງທີ່ຄ່າຍຈິນາຍໂນ້ກໍມີແຕ່ຫນ່ວຍພລາທິການສິ່ງກຳລັງບຳຣຸງ ແຜນການເບີກຈ່າຍແລະຄົນເຈັບປ່ວຍ ນອກຈາກນີ້ກໍບໍ່ມີກຳລັງໃດພໍທີ່ຈະຂັດຂວາງການກໍ່ຣັຖປະຫານຂອງກອງແລໄດ້ ແລະສອງຂຸນພົລໃຫ່ຍອ້ນ ຣາທິກູລກັບພູມີ ນໍ່ສວັຣຄ໌ກໍ່ຢູ່ທີ່ນະຄອຣຫລວງພຣະບາງແລ້ວ.

ຄວາມງຽບສງັດປົກະຕິດີໃນຄືນເດືອນດຳຂອງວັນທີ 08 ສິງຫາ 1960 ຜ່ານໄປ ຈົນຫລັງທ່ຽງຄືນເລັກນ້ອຍ ຊຶ່ງເຣີ່ມເຊົ້າຂອງວັນທີ 09 ສິງຫາ 1960 ທັນທີ ຖ້ອຍຄຳທີ່ນາຍພົລອ້ນ ຣາທິກູລເຄີຍບອກຣອ້ຍເອກທອງຣິທທິ໌ວ່າ...

"ຣອ້ຍເອກກອງແລກໍເປັນຫລານເຂີຍຂອງຂອ້ຍແທ້ໆ"

ແລະຄຳຢືນຢັນຂອງນາຍພົລພູມີ ນໍ່ສວັຣຄ໌ທີ່ຕຳນິຣອ້ຍເອກທອງຣິທທິ໌ວ່າ...

"ກອງແລເປັນພຽງນາຍຣອ້ຍເອກ ແລະແມ່ນຂອ້ຍເອງເປັນຜູ້ແຕ່ງຕັ້ງໃຫ້ເປັນຜູ້ບັງຄັບກອງພັນຣາບອາກາສທີ 2 ຈະມາຄິດກໍ່ຣັຖປະຫານໂຄ່ນລົ້ມຂອ້ຍໄດ້ວິທີໃດ" ນັ້ນກໍຖືກລືມລ້າງທັນທີ ເພາະຣັຖຖປະຫານກອງແລຣະເບີດຂຶ້ນຈິງໆ ຍຶດຈຸດສຳຄັນຕ່າງໆໃນນະຄອຣເຊັ່ນ ສນາມບິນ+ສຖານີວິທຍຸ+ຄັງເງິນ+ຄ່າຍສັມພາວຸທ+ກັບຄ່າຍທຫານປືນໃຫ່ຍເອົາໄວ້ໂດຍບໍ່ມີການຕໍ່ຕ້ານຈາກຝ່າຍກອງທັພແຕ່ປະການໃດ ກຳລັງທຫານຣາບອາກາສອີກປະມານ 400 ຄົນຂອງຣອ້ຍໂທແພງກຣ້ອ ສຸວັທນ໌ແລະຣອ້ຍໂທພູມີ ບັນຊາການໂດຍຣອ້ຍເອກຳລອ້ມ ທອງພັນທ ໄດ້ພາກັນບຸກເຂົ້າໄປຍຶດເອົາເສນາທິການທຫານພາຄ 5 ທີ່ຈິນາຍໂນ້ແບບສາຍຟ້າເຫລື້ອມ ໃນຂນະທີ່ທັງພັນເອກກຸປະສິທທິ໌ ອະພັຍກັບຣອ້ຍເອກທອງຣິທທິ໌ ໂຈກເບັ້ງບຸນຍ໌ກຳລັງນອນຫລັບຢູ່ໃນຄ່າຍ ນາຍທຫານທັງ 2 ຕື່ນຜເວີຜອາການາງເດີກ ເມື່ອຂນະກໍ່ຣັຖປະຫານເຂົ້າຄວບຄຸມຕົວເອົາໄວ້ ຖືກປົດອາວຸທໃນທັນທີແຕ່ບໍ່ມີການໃສ່ກັບມືຫລືມັດສອກ ນອກຈາກທີ່ຖືກນາຍທຫານຣາບອາກາສໜຸ້ມລ້ອມເອົາໄວ້ເທົ່ານັ້ນ ແລະຍິ່ນເງື່ອນໄຂເອົາໄວ້ວ່າຢ່າພຍາຍາມຫນີ ທັງນີ້ກໍເພື່ອຄວາມປອດໄພຍ໌ຂອງນາຍທຫານທັງສອງເອງ ນາຍທານທັງສອງພາກັນຈິ່ມເສັຍໃຈແລະນ້ອຍໃຈເມື່ອຕົກເປັນສເລີຍ ເພາະຮູ້ຢູ່ແກ່ໃຈວ່າໃນວັນຫນຶ່ງຣອ້ຍເອກກອງແລ ໂຣແລ້ງຕ້ອງທຳແສບ ແລ້ວມັນກໍແສບເສັຍຈົນ

ໄດ້ ເພາະເຈົ້ານາຍຜູ້ໃຫ່ຍເຊື່ອແຕ່ກອງແລ.

ພັນເອກກຸປະສິທທິ ອະໄພຍແລະຮ້ອຍເອກທອງຣິທທ໌ ໂຈກເບັ້ງບຸນຍ໌ ຖືກຄຸມຕົວໃຫ້ຍືນປືນກັບພວກນາຍທຫາຣຣາບອາກາສກໍ່ຣັຖປະຫາຣຢູ່ບໍຣິເວນໜ້າປະຕູຮົ້ວທາງເຂົ້າຄ່າຍຈິນາຍໂນ້ ຈຶ່ງໄດ້ຮູເຫັນວ່າຮ້ອຍໂທພູມີ ທີ່ນໍາທຫາຣ 200 ຄົນເຂົ້າທາງດ້ານຄ່າຍຍານເກາະ ສ່ວນຍານເກາະຫນຶ່ງໜວດທີ່ຮັກສາສນາມບິນອັດໄຕຍອັນມີຣົຖຖັງ M-24.1 ຄັນແລະ AM (AUTO MILTRAILLEUSE) 3 ຄັນ ຊຶ່ງຮ້ອຍໂທ ຄໍາສຸຂ ສ.ຣາຊພັກດ໌ບັນຊາຢູ່ ກໍພາໜູ່ປຽ່ນໃຈໄປເຂົ້າຝ່າຍກໍ່ຣັຖປະຫາຣເສັຍຊໍ້າ ເມື່ອເຫຕຸການມັນມາເຖິງຂັ້ນເປັນສເລັຍແລ້ວເຊັ່ນນີ້ ນາຍທຫານພາຄ 5 ທັ້ງສອງໄດ້ລັກລົ້ນກັນຄອ່ຍໆວ່າ ຕ້ອງແກ້ງລອຍຕາມລົ້ນໄປກ່ອນແຕ່ຕ້ອງຫາວິທີລ້າງແຄ້ນໃຫ້ຕົນເອງໃນພາຍຫລັງ ວິທີນັ້ນກໍຄືເຊື່ອວ່ານາຍພົລຕຣີພູມີ ນໍ່ສວັຣຄ໌ຈະຕ້ອງເອົາຕົວຫລົບໜີຈາກຫລວງພຣະບາງໄປຍັງສວັຣຄນະເຂຕດ້ວຍຄວາມອາລາຕແກ່ກອງແລຢ່າງບໍ່ມີທາງຫລີກລ່ຽງໄດ້ ແລະຄອຍເປັນໄສ້ເສິກແກ່ນາຍພົລພູມີ ນໍ່ສວັຣຄ໌ຢູ່ກັບຄນະກໍ່ຣັຖປະຫາຣຕໍ່ໄປ ກໍເພາະການເຊື່ອງຕົວຢູ່ໃນຂບວນກໍ່ຣັຖປະຫາຣກອງແລຂອງພັນເອກກຸປະສິທທິ ອະໄພຍ໌ແມ່ນຊົ່ວໄລຍະສັ້ນໆນີ້ເອງກໍດີ ແຕ່ມັນຍິ່ງເຮັດໃຫ້ນາຍພົລພູມີ ນໍ່ສວັຣຄ໌ບໍ່ເຊື່ອໃຈກຸປະສິທທິ໌ ແລະນາທຫານຄົນອື່ນໆຂອງກອງທັພລາວກໍພາກັນເຫມົ່ານເຊື່ອວ່າ ພັນເອກກຸປະສິທທິ ອະໄພຍ໌ໄດ້ກໍມືອຮ່ວມມືພັນທໃນການໂຄ່ນລົ້ມນາຍພົລພູມີ ນໍ່ສວັຣຄ໌ເຫມືອນກັນ ຜົລສໍາເຣັຈໃນການກໍ່ຣັຖປະຫາຣຂອງກອງແລເທື່ອນີ້ຊີ້ໃຫ້ເຫັນວ່າ ມີຫລາຍຄົນຊ່ວຍວາງແຜນໄວ້ໃຫ້ລ່ວງໜ້າເປັນຢ່າງດີ ມັນບໍ່ແມ່ນເຫຕຸບັງເອີນເລີຍທີ່ພວກເສນາທິການທົ່ວກະທິເລ່ານັ້ນ ໄດ້ຊຸກຍູ້ຮ້ອຍເອກກອງແລ ໂຮແລ້ງເລືອກເອົາວັນດັ່ງກ່າວ ພັນເອກກຸປະສິທທິ໌ໄດ້ຢ່າງອອກນາ ຖາມຮ້ອຍເອກຄໍາລ້ອມ ທອງພັນທ໌ທີ່ຍັງຢືນຈັບກຸ່ມກັນຢູ່ຕໍ່ໜ້າປະຕູທາງເຂົ້າຄ່າຍຈິນາຍໂນ້ວ່າ...

"ພວກເຈົ້າຈະເຮັດວິທີໃດຫລັງກໍ່ຣັຖປະຫາຣສໍາເຣັຈລົງແລ້ວ?"

ຮ້ອຍເອກຄໍາລ້ອມ ທອງພັນທ໌ກໍຕອບຕາມຄວາມຈິງວ່າ

"ບໍ່ທັນຮູ້ດອກ ທ່ານໂກໂລແນລ"

"ແລະຮ້ອຍເອກກອງແລເດລະ?"

"ຮ້ອຍເອກກອງແລ ກໍຄົງບໍ່ຮູ້ຄືກັນວ່າຈະເຮັດຫຍັງຕໍ່ຈາກນີ້ໄປ"

ພັນເອກກຸປະສິທທິ໌ ອະໄພຍ໌ຍິ່ງເຊື່ອວ່າກອງແລຖືກຍືມເປັນເຄື່ອງມືທາງການເມືອງຫລອກໃຫ້ກໍ່ຣັຖປະຫາຣໃນຄັ້ງນີ້ ແຕ່ເພື່ອໃຫ້ນາຍທຫາຣຣາບອາກາສທີ 2 ເຊື່ອໃຈ

ວ່າຕົນເອງບໍ່ໄດ້ຕ້ານການກໍ່ຣັຖປະຫານ ຈຶ່ງບອກຣ້ອຍເອກຄໍາລ້ມໄປວ່າ...

"ເມື່ອຍຶດອໍານາຈສໍາເຣັຈແລ້ວກໍຕ້ອງມີແຖລງການ ເພື່ອແຈ້ງໃຫ້ປະຊາຊົນພາຍໃນຊາຕຣັບຮູ້"

ຫລັງຈາກນັ້ນມາບໍ່ເຖິງຊົ່ວໂມງຫ້າຜັນເອກກຸປະສິທທິ໌ແລະຣ້ອຍເອກທອງຣິທທິ໌ ກໍຖືກນໍາໄປຂັງໄວ້ໃນຄຸກຂອງຄ່າຍຈືນາຍໂນ ແລ້ວຖືກສັ່ງແກມຂໍຣ້ອງໃຫ້ຂຽນແຖລງການ6ເຖິງ 6 ສບັບ ເພື່ອໃຫ້ຣ້ອຍເອກກອງແລໄດ້ນໍາໄປອ່ານຜ່ານສຖານີວິທຍຸແຫ່ງຊາຕໃນຕອນສວາຍໆຂອງວັນດຽວກັນ.

ຊາວເມືອງວຽງຈັນທນ໌ຜູ້ເຫັນເຫຕຸການ6ພາກັນເລົ່າໃຫ້ກັນຟັງໃນວັນຕໍ່ມາວ່າ ຕອນແຕ່ເຊົ້າໆ ພວກຕົນໄດ້ຍິນສຽງວິທຍຸດັງໂກກໆຢູ່ທົ່ວໄປຕາມສີ່ແຍກຖນົນຫລາຍແຫ່ງຟັງແລ້ວຄືຄໍາສັ່ງຂອງທຫານ ແຕ່ພໍແຈ້ງຕາຂຶ້ນມາຈຶ່ງເຫັນວ່າທຫານກອງແລມີວິທຍຸທຣານຊິສເຕີ6ນ້ອຽສີດໍາຫ້ອຍຄໍຂອງພວກຕົນຢູ່ເປັນປະຈໍາ ຄົນນະຄອຣວຽງຕື່ນຕາຕື່ນໃຈທີ່ເຫັນທຫານເສື້ອລາຽໜ້າແລ້ງຢ້ຽງຢາຽຢູ່ທົ່ວໄປ ມີນາຍທຫານເສື້ອລາຍບອກພວກເຂົາວ່າ " ກໍາລັງກໍ່ຣັຖປະຫານໂຄ່ນລົ້ມພວກສໍ້ຣາຊບັງຫຼວງ "ຈົນເຖິງຕອນເຊົ້າຈຶ່ງມີ6ຣຖຈີປຕິດປ້າຍ **MMF (MISSION MILITAIRE FRACAISE)** ໄດ້ແລ່ນແອະເຂົ້າໄປຍັງສຖານີວິທຍຸແຫ່ງຊາຕ ເພື່ອຢາກຊາວ່າຣ້ອຍເອກກອງແລຢູ່ໃນສຖານີວິທຍຸແລ້ວຫລືຍັງ? ການກໍ່ຣັຖປະຫານ6ເທື່ອນີ້ນອກຈາກພວກຫົວກະທິທີ່ໄດ້ກ່າວມາແລ້ວນັ້ນ ກໍຍັງມີເຈົ້າສີສູມັງຄ໌ ສີເສລິມສັກດ໌+ທ່ານເພັງ ພົງສວັຣຄ໌ ກັບຈາຣຍ໌ປາວ ວັນທານຸວົງສ໌ ສນັບສນູນຢູ່ເບື້ອງຫລັງດ້ວຍ ຣັຖບາລຝຣັ່ງ6ເສສໄດ້ສົ່ງເຈົ້າສຸວັນນາພູມາເດີນທາງຈາກນະຄອຣປາຣີສ ກັບຄືນມານະຄອຣວຽງຈັນທນ໌ໃນ 3-4 ວັນອີກຕໍ່ມາ ເພື່ອໃຫ້ຈັດຕັ້ງຣັຖບາລໃຫ່ມ6ເປັນການຂັ້ນແທນຣັຖບາລຂອງເຈົ້າສົມສນິດທີ່ການກໍ່ຕັ້ງຂຶ້ນມາບໍ່ທັນຄົບສອງອາທິຕຍ໌ຊໍ້າ ຊໍ້ວຕຣົງກັນກັບຫນັງສືພິມຝ່ຣັ່ງປະ6ເທສ6ເປັນພາສາຝຣັ່ງ6ເສສສບັບຫນຶ່ງຂຽນວິຈານ6ວ່າ...

A 7 H. DU MATIN KONGLE VA TROUVER SOUVANNA PHOUMMA QUE LE COUP D'ETAT EST ACCOMPLI ET QU'IL COMPTE SUR LUI POUR DEVENIR PRESIDENT DU GOUVERNEMENT COMME CONVENU SECRETEMENT.

ຊາວນະຄອຣວຽງຈັນທນ໌ສ່ວນໃຫ່ຍກໍາລັງພາກັນຕື່ນອີ່6ເປ6ເສ ໃນຕອນ6ແຕ່ເຊົ້າ6ເມື່ອໄດ້ຍິນສຽງ6ເພງຈັ໊ງຫວະ6ເດີນ 23 ມິນາຈາກສຖານີວິທຍຸ ແລະ6ແລ້ວຈົນ6ເຖິງ6ເວລາປະມານ 08.30 ໂມງ ຈຶ່ງໄດ້ຍິນສຽງຂອງຣ້ອຍເອກກອງແລອ່ານຄໍາ6ແຖລງການ6ສບັບທີ 01 ກ່ຽວກັບການກໍ່ຣັຖປະຫານວ່າ 6ເພື່ອໂຄ່ນລົ້ມພວກສໍ້ຣາຊບັງຫລວງກັບພວກຂຸນ6ເສິກກະຫາຍສົງຄາມໃຫ້ລາວ້ຳກັນ6ເອງ ຄນະຣັຖປະຫານ6ຈະຈັດຕັ້ງຣັຖບາລໃໝ່6ເພື່ອໃຫ້6ເກີດມີຄວາມປອງດອງກັນ ຫລັງ6ເພງ 23 ມິນາ6ຈົບ

ຣອ້ຍເອກກອງແລກ່ອ່ານແຖລງກາຣນ໌ສບັບທີສອງ ຊຶ່ງກ່ຽວກັບຄົນຕ່າງດ້າວ ທີ່ອາສັຍຢູ່ໃນເມືອງວຽງຈັນທນ໌ ເຮັດໃຫ້ພວກCIAຕື່ນສະເດີດໄປຕາມໆກັນ ແຕ່ໃນຕອນທ້າຍຂອງແຖລງກາຣນ໌ ກອງແລຢ້ຳວ່າຄົນຕ່າງດ້າວຣວມທັງນັກ ກາຣທູຕທຸກປະເທສຈົ່ງຢູ່ຕໍ່ໄປຕາມປົກະຕິ ຄນະຣັຖປະຫາຣຈະເຄົາຣົພໃນກົດ ໝາຍສາກົລ ແລະພ້ອມທີ່ຈະໃຫ້ຄວາມສະດວກເປັນຢ່າງດີ.

ພໍຕົກບ່າຍເວລາປະມານ 15.00 ໂມງ ກອງແລກ່ອ່ານແຖລງກາຣນ໌ ສບັບທີ 3 ອີກ ໃນຂນະທີ່ມີຣົຖຈຳນວນຫລາຍຄັນກຳລັງແລ່ນຖີ້ມໃບປິວທີ່ເປັນ ແຖລງກາຣນ໌ຂອງຣອ້ຍເອກກອງແລໄປຕາມຖນົນທ່ວນະຄອຣວຽງຈັນທນ໌ ມີ CIA 2-3 ຄົນພາກັນຂຶ້ນໄປສັງເກຕກາຣນ໌ຢູ່ເທິງດາດຟ້າຂອງສຖານທູຕອາເມ ຣິກາແລະທຳກາຣຖ່າຍຮູປເອົ້າໄວ້ດວ້ຍ.

ໃນແຖລງກາຣນ໌ສບັບທີ 03 ຂອງກອງແລ ໄດ້ຣະບຸນະໂຍບາຍກາຣປົກ ຄອງຂອງຣັຖບາລກາງເອົ້າໄວ້ 7 ຂ້ໍສຳຄັນດັ່ງນີ້...

1-ເພາະຄນະຣັຖປະຫາຣຢາກໃຫ້ເກີດມີສັນຕິພາບຢ່າງຈິງຈັງ.

2-ຄນະຣັຖປະຫາຣຈະດຳເນີນນະໂຍບາຍເປັນກາງຢ່າງເຄັ່ງຄັດ.

3-ຣັຖບາລກາງຂອງຄນະຣັຖປະຫາຣ ຈະບ່ເຂ້ົາຂ້າງຣະບອບກາຣເມືອງຂອງ ປະເທສອື່ນໃດ.

4-ໃຫ້ມີກາຣຍຸຕິກາຣປາບປາມປະຊາຊົນດວ້ຍກາຣທຳສົງຄາມຣະຫວ່າງລາວ ກັນເອງໂດຍທັນທີ.

5-ຫ້າມບ່ໃຫ້ຕ່າງປະເທສເຂ້ົາມາຕັ້ງຖານທັພໃນດິນລາວ.

6-ຣັຖບາລກາງຍິນດີຣັບເອົ້າກາຣຊວ່ຍເຫລືອ ແລະຮວ່ມມືຈາກທຸກປະເທສທີ່ ບ່ມີເງື່ອນໄຂຜູກມັດທາງກາຣເມືອງ.

7-ກ່ມຄົນລາວທີ່ເຄີຍສ້ໂກງງ໊ປະມາຣຂອງຊາຕ ຕ້ອງຖືກນຳມາພິຈາຣະນາ ໂທສຕາມກົດໝາຍ.

"ເມື່ອT-28 Trojan Aircraft ຂອງ YOU ລົ່ງເດີ່ນຣຽບຮ້ອຍແລ້ວ ກໍຈົ່ງຮີບ ໜີໄປເສັຍ ເພຣະມີຍົນຕ໌ຮ້ຍປີກຕັດCESSNA ກຳລັງຈອດຖ້າຢູ່ທີ່ເດີ່ນຍົນຕ໌ ອາເມຣິກາແລ້ວ"

ແຕ່ນາຍພົລທ້າວມາຍັງຫ້ວຄ້ີ ເພຣະຄວາມແຄ້ນທີ່ມີຕໍ່ນາຍພົລກຸປະສິທທ໌ ອະ ໄພຍ໌ ຈົນລືມຄິດເຖິງຊີວິຕກັບລົມຫາຍໃຈຂອງຕົນເອງ ທັງລືມຄິດເຖິງວ່າ ຟ້ານັ້ນສູງ-ແຜ່ນດິນນັ້ນຕ່ຳ ຫາກອີງເອົາຂ້ໍຄວາມຕາມບົທບັນທຶກຂອງເຈົ້າ ໜ້າທີ່ CIA ປະຈຳສຖານທູຕອາເມຣິກາໃນນະຄອຣວຽງຈັນທນ໌ທີ່ອ້າງວ່າ ຕົນ ເອງໄດ້ຕິດຕໍ່ທາງວິທຍຸໄປຫານາຍພົລທ້າວມາແລະແນະນຳໃຫ້ໜີໄປເສັຍ ແຕ່ ແທນທີ່ນາຍພົລທ້າວມາຈະຮີບໜີໄປກັບຕອບຄືນມາວ່າ...

"ຍັງດອກ...! ໄອຈະຂ້າບັກFAT KOUPRASITH ໃຫ້ໄດ້ເສັຍກ່ອນ" (ບັກ ຕ້ຍ ກຸປະສິທທ໌).

ໃນຄວາມສຳພັນທ໌ສ່ວນຕົວແລ້ວ ສອງນາຍພົລກໍເປັນເພື່ອນລູກເມືອງໄຕ້ດຽວ ກັນ ເປັນນາຍທຫາຣຜ່ານໂຮງຮຽນນາຍຮ້ອຍດົ່ງເຫັນມາເໝືອນກັນ ໂດຍນາຍ ພົລກຸປະສິທທ໌ຣຽນຮຸ່ນຂ້ ຍສ ນນາຍພົລທ້າວມາຣຽນຮຸ່ນນ ້ ງ.

ໃນຂນະທີ່ນາຍພົລທ້າວມາກຳລັງຈະອອກໜີຈາກເຄື່ອງບິນ T-28 ຂອງ ຕົນນັ້ນ ກໍ ີ ດີ ຣ ຖ ບ ັ ຣ ທ ຸ ກ ທ ທ າ ຣ ເ ຕ ັ ມ ລ ຳ ລ ັ ນ ໜ ຶ ່ ງ ຂ ອ ງ ນ າ ຍ ພ ົ ລ ອ າ ສ ັ ຫ ວ ງ ມ າ ເຖິງສນາມບິນອັດໄຕ ຣ ຖ ບ ັ ຣ ທ ຸ ກ ແ ລ ່ ນ ຕ ັ ດ ຣ ັ ນ ເ ອ ຍ ຕ ລ ູ ຍ ປ ່ ຳ ໄ ມ ້ ນ ້ ອ ຍ ໄ ປ ຍ ັ ງ

ຫ໊ວເດີ່ນບ່ອນຍົນຕ໊ຂອງນາຍພົລຫ້າວມາຈອດຢູ່.

ມັນເປັນໂຊຄສະຕາ+ອະນາຄົຕຂອງປະເທສລາວ ເປັນປະວັຕສາສຕຣ໌ທີ່ ຊ້ຳຮອຍເດີມ ເພາະຊາຕລາວເຄີຍລົ້ມລຸກຂຸຄານມາແລ້ວຫລາຍຍຸຄຫລາຍ ສມັຍຜ່ານມາໃນອດີຕກາລ ເພາະຄົນລາວບ່ຍອມເຂົ້າໃຈກັນໃນບັຣຫາສ່ວນ ຮວມ ມີແຕ່ເຫັນແກ່ຕົວແລະຂາດສາມັຄັຄຄີ ແລະອິຈສາກັນເຂົ້າກະດູກດຳ ກາຣກໍ່ຣັຖປະຫາຣຫາງອາກາສຄັ້ງທີ່ສອງຂອງນາຍພົລຫ້າວມາ ແສງສວັຣຄ໌ ໄຊຍ໌ ເພື່ອໂຄ່ນລົ້ມຣັຖບາລປະສົມລິບລ້າງສັນຍາຟື້ນຟູສັນຕິພາພ-ຄວາມຖືກ ຕ້ອງປອງດອງຊາຕເທື່ອນີ້ຕ້ອງລົ້ມຕົ້ງລົ້ງ ເພາະຖືກເພື່ອນຮ່ວມປະຊຸມລັບຫັກ ຫລັງໂດຍເຈຕະນາ.

ຫາກອີງເອົາຕາມບົທຄວາມໃນວາຣະສາຣ ຂອງລາວຮ່ວມເສຣີພາພ ສບັບທີ 157 ປະຈຳເດືອນກັນຍາ ແລະຕຸລາ 2003 ໃນໜ້າທີ 31 ນັ້ນຂຽນວ່າ ພາຍຫລັງທີ່ຮູ້ແຜນກາຣນ໌ກໍ່ຣັຖປະຫາຣ ຂອງນາຍພົລຫ້າວມາ ແສງສວັຣຄ໌ ໄຊຍ໌ຈາກນາຍພົລກຸປະສິທທ໌ ອະໄພຍ໌ແລ້ວ ນາຍົກຣັຖມົນຕຣີເຈ້ົາສຸວັນນາຟູ ມາກໍ່ໄດ້ຕິດຕ່ໍຫານາຍພົລບຸນຍ໌ປ່ອນ ນາກເທພາຣັກສ໌ ຜບ.ສູງສຸດກອງທັພ ກັບຣັຖມົນຕຣີປ້ອງກັນປະເທສເຈ້ົາສີສຸຂ ນະຈຳປາສັກດ໌ ແລະທ່ານເພັ່ງ ພົ່ງ ສວັຣຄ໌ເປັນກາຣດ່ວນ ໂດຍສັ່ງໄປວ່າ...

"ຢ່າພາກັນໃຫ້ກາຣຮ່ວມມືແກ່ຄນະຣັຖປະຫາຣ ຂອງນາຍພົລຫ້າວມາໂດຍ ເດັດຂາດ"

ເປັນທີ່ແນ່ນອນທີ່ສຸດວ່ານາຍພົລກຸປຣະສິທທ໌ ບ່ຍອມຣາຍງານຊື່ຂອງນາຍພົລ ຄົນອື່ນໆທີ່ສົມຮູ້ຮ່ວມຄິດກັນໂຄ່ນລົ້ມຣັຖບາລປະສົມໃນເທື່ອນີ້ ຮວມທັ້ງຣັຖມົນ ຕຣີປ້ອງກັນປະເທສເຈ້ົາສີສຸຂ ນະຈຳປາສັກດ໌ດ້ວຍ ວາຣະສາຣສບັບນີ້ຍັ່ງວິ ຈາຣນ໌ຕ່ໍໄປອີກວ່ານາຍພົລກຸປະສິທທ໌ ອະໄພຍ໌ ບ່ຢາກເປັນລູກນ້ອງຂອງຄູ່ອາ ຄາຕເກ່ົາທີ່ມີເຖິງສາມຄົນຄືນາຍພົລຜູມີ ນ່ໍສວັຣຄ໌ ກັບນາຍພົລຫ້າວມາ ແສງ ສວັຣຄ໌ໄຊຍ໌ ແລະນາຍພົລສີໂທ ລານພູທທະກູລ ຖ້າກາຣກໍ່ຣັຖປະຫາຣສຳເຣັຈ ລົ້ງ ສ່ວນນາຍພົລຫ້າວມາເອງເມື່ອຮູ້ວ່າຖືກຫັກຫລັງຄັກແນ່ແລ້ວ ກໍຣີບຂັບ T-28 ໜີຂ້ວ້ານນ້ຳຂອງໄປເສັຍເຣ່ືອງທຸກຢ່າງກໍ່ຄົ້ງສິ້ນສຸດລົ້ງໂດຍດີ ຄົ້ງບ່ໍມີ ໃຜເຈັບຕາຍແລະຖືກຕາມລ່າຊີວິຕກັນຕ່ໍມອີກ.

ນາຍພົລຫ້າວມາ ແສງສວັຣໄຊຍ໌ ທີ່ຖືກມັດມືມັດຕີນມາໃນຣົຖແລ້ວກໍ່ຖືກ ທຫາຣຂອງນາຍພົລອາສຜ້ົງທອງປະຖ້ົມມະວ້ົງສ໌ ຫາມຖ້ົມລົ້ງຈາກຣົຖບັຣທຸກ

ທີ່ສູງເກືອບ 2 ແມຕຣໂວ້ກາງເດີ່ນຫລັກທຸງຂອງເສນາທິກາຣທຫາຣຈີນາຍໂມ ເໝືອນສັຕວ໌ເດຣັຈສາຣ ທັນທີນາຍພົລກຸປະສິທທ໌ ອະໄພຍ໌ທີ່ລອຍຖ້າຢູ່ກ່ອນ ແລ້ວ ກໍກະໂດດເຂົ້າໄຊ້ຕີນເບື້ອງຂວາຢຽບກະທືບເຂົ້າເຕັມໃບໜ້າທີ່ຈືດຈາງ ຂອງນາຍພົລທ້າວມາ ແສງສວັຣຄ໌ໂຊຍ໌ດ້ວຍຄວາມແຄ້ນ ທ່ານສຸວັນນະຣາຊ ຈີນດາວົງສ໌ ຜູ້ເຫັນເຫຕຸກາຣນ໌ດ້ວຍຕົນເອງ ໄດ້ຂຽນເລົ່າໄວ້ໃນບົທບັນທຶກລັບ ແລະຖ່າຍທອດລົງໄວ້ໃນປຶ້ມຫົວນີ້ໃຫ້ເປັນປະວັຕິສາສຕຣ໌ຂອງຊາຕລາວໃຫ້ລູກ ລູກຫລານລາວຮຸ່ນຫລ້າໄດ້ອ່ານຮຽນເວົ້າວ່າ ເມື່ອນາຍພົລກຸປະສິທທ໌ເອົາຕີນ ຢຽບເນັ້ນໃບໜ້ານາຍພົລທ້າວມາແລ້ວກໍຮ້ອງດ່າແບບອາຄາຕວ່າ...

"ບໍ່ກມາ..! ມຶງຂ້າຫລານກູ..! ມຶງຢູ່ຮ່ວມໂລກກັບກູບໍ່ໄດ້ອີກແລ້ວ..!"

ນາຍພົລອາກາສທ້າວມາ ແສງສວັຣຄ໌ໂຊຍ໌ ທີ່ໃບໜ້າຍັງຢູ່ໃຕ້ຝົ້ນເກີບຂອງຄູ່ ອາຄາຕກໍອົດສາທ໌ຕອບຄືນດ້ວຍຄວາມແຄ້ນວ່າ...

"ບັກຕ້ຽຍໝູຕອນກຸປະສິທທ໌..!ມຶງຫັກຫລັງພວກກູ ກູຈຶ່ງເອົາຍົນຕໂລ່ຍິງຫົວ ມຶງ...ຖິ້ມຣະເບີດໃສ່ຫົວມຶງ ແຕ່ມຶງຍັງໂຊຄດີທີ່ບໍ່ເຈັບບໍ່ຕາຍ ກູກໍເປັນນາຍ ພົລພຣະຣາຊຄືກັນກັບມຶງ ມຶງບໍ່ຕ້ອງເອົາຕີນຢຽບໜ້າກູດອກ ມຶງປະພຶຕຕົວ ໃຫ້ດີກວ່ານີ້ບໍ່ໄດ້ບໍ?"

ແຕ່ໃນເອກສາຣທີ່ເປັນພາສາອັງກລິສຂອງພວກ CIA ຂຽນວ່າ...

AT WHICH TIME GEL.THAO MA CHIDED FAT KOUPASITH BY SAY " YOU CAN'T EVEN DO THE RIGHT".?

ນາຍພົລກຸປະສິທທ໌ ອະໄພຍຮູ້ວ່າບໍ່ຈຳເປັນຕ້ອງມາເສັຍເວລາດ່າກັນໃຫ້ ພວກທຫາຣໄດ້ຍິນຕໍ່ໄປອີກ ຈຶ່ງສະບັດໜ້າບອກຣ້ອຍເອກສົມສີ ນະຣົງຄ໌ສັກດ໌ ເພັ້ຊຄາຕນັມເບີຣໜຶ່ງປະຈຳພາຄ 5 ທັນທີທີ່ໄດ້ຮັບສັນຍານຈາກຜູ້ເປັນນາຍ ເພັ້ຊຄາຕສົມສີ ນະຣົງຄ໌ສັກດ໌ ກໍດຶງປືນພົກREVOLVER COBRA ຂນາດ 0,38 ມມ. ອອກມາຈາກແອວແລ້ວຈ້ຳປາກກະບອກມັນໃສ່ຂມັບຂາ ຂອງນາຍພົລ ທ້າວມາເພື່ອຂ້າໃຫ້ຕາຍນັດດຽວ ແຕ່ແທນທີ່ທຸກຄົນຈະໄດ້ຍິນສຽງໂປ້ງຂອງ ເຈົ້າເທ່າດົງກັບໄດ້ຍິນສຽງ"ແກຣ໊ກ"ຂອງເຂັມສັບແກ໊ບຂອງມັນເທ່ານັ້ນ...

"ຫີຍສ໌ສ໌...ຍິງບໍ່ອອກ...ມັນມີຂອງດີ ທ່ານນາຍພົລ!"???

ຣ້ອຍເອກມືປືນເພັ້ຊຄາຕອຸທານ ນາຍພົລກະປະສິທທ໌ທີ່ຍັງຢືນຢູ່ໄກ້ໆກໍສັ່ງວ່າ

"ຄົ້ນຕົວມັນໃຫ້ທົ່ວ ມີຫຍັງກໍເອົາອອກໃຫ້ໝົດ..!"

ຣ້ອຍເອກສົມສີ ນະຣົງຄ໌ສັກດ໌ທີ່ເກີດມາເພື່ອເປັນເພັ້ຊຄາຕຂ້າຄົນ ກໍທຳການ ຄົ້ນຖົງເສື້ອ+ຖົງສັ້ງຂອງນາຍພົລທ້າວມາທີ່ຍັງນອນເກືອກດິນຢູ່ກາງເດີ່ນທ່ານ

ภาวสายตานาย+พ็ลพหาธอิภหลายล็น...

" บ่เห็นมิ ขนอ่ย...! "

ธอ้ยเอภสิมสิเวียฟ้าบอภ.นายพ็ลภุปะสิพที่ ภ็สั่วใฟ่อิภว่า...

" ล็้นในสิ้วสลิปของมันเบิ่วอิภ..! "

ธอ้ยเอภมือืนสิมสิ มะธ็วล์สักด์ภ็จิ่วได้พ็บพระนอ้ยอ็วล์ฟื่ว ที่เชื่อวปู่ในห็อสิ้วสลิปของนายพ็ลห้าอมา มือืนโพดสิมสิไช้มิด RANGER ปาด ห็อสิ้วสลิปแล้อจับเอ็าพะอ็วล์นอ้ยติดมืออภมา.

นายยิภธัถมินตธิบาลปะสิมธู้จักมิสัยนายพ็ลพาล 5 ถิ เถิวเพตุภาธนโด้สวิบลิวแล้อภ็ตาม แต่บ่ปะสิวล์ให้มิภาธอ้าล้าวแล้นลาวอ้าล้าวโลตธ์ธะหว่าวลาวดธอกันอิภ จิ่วสั่วให้ท่านสุอันมะธาช จินดาอ็วส์ที่เป้นเลขาสอ่นต็อของตินอ่า...

"ให้เจ้็าไปพ็บนายพ็ลภุปะสิพที่ แล้อบอภว่าขอ้ยธอ้วยอ่บ่ให้สังหาธถลิท่ธะมาธนายพ็ลห้าอมา แสวสอัธลโขุยกับพันเอภปานิ พอธพิพย์สอัสด์เด็ดขาด..จิ่วสิ่วต็อนายพหาธทั้วสอวไปยังสำนักนายิภในตอนเช้้านี้ และดธอนี้โลด..! "

ท่านสุอันมะธาช จินดาอ็วส์ไปเถิวเสนาพิภาธจินายโม้เอลาปะมาน 09.30โมว พ่จอดธ์ถไอ้ข้าวหาวลอ้ยบอ่นมิต้นไม้กะบ็กใหย่สอวสามต้นก็ฟ้าอย่าวอื้นโมนเพื่อไปยังเสนาพิภาธพหาธพาล 5 แต่พ่โปโลอื้นตลิ่วก็ปาก็ถอ่าทุกย่าวมันสอายเกินภาธแล้อ ท่านสุอันมะธาช จินดาอ็วส์เถิวกับยุดสวักแล้อบธันต็อเข้าบั้วต้นกะบ็กใหย่ เพื่อติตามเพตุภาธนต่ไป ท่านสุอันมะธาช จินดาอ็วส์ที่พำนักยู่ในทะอิบอาเมธิภาได้ขธมเล่าในสิ่วที่ท่านเห็นมาดอ้ยตาต็นเองสิ่วมาให้ผู้ขธม โดยยืนยันอ่าได้ยินคำขู่ออกจากปากของนายพ็ลภุปะสิพที่ อะไพยอ่า...

" มิ๊ตาย บักนายพ็ลห้าวมา..! "

แล้อมิสธวงืนดังติดต่กัน 2 นัด นายพ็ลห้าอมา แสวสอัธลโขุยน็อม หวายดิ้นแด่อๆยู่ลาอฟื่วก็สวิบไป ธู้พายหลังอ่านายพ็ลห้าอมาถืกยิวดอ้ยเพ่าไฝ COBRA ของธอ้ยเอภสิมสิเข้าที่ลำต็อฟื่วนัด และที่ห็ออิภฟื่วนัดย่าวโพดห้ธม นายพ็ลห้าอมาตายสิมใจ นายพ็ลภุปะสิพที่ห้นหลังกับเข้าไปในที่ทำวานของติน สอ่นท่านสุอันมะธาช จินดาอ็วส์

ຮູ້ສຶກຜິດຫວັງຢ່າງແຮງທີ່ຕົນມາຊ້າພຽງ 4-5 ນາທີເທົ່ານັ້ນ ຖັດໄປອີກເລັກນ້ອຍທ່ານສຸວັນນະຣາຊ ຈິນດາວົງສ໌ ໄດ້ແນມໄປເຫັນສົບຂອງພັນເອກປານີ ພອຣທິພຍ໌ສວັສດ໌ ຊຶ່ງຖືກສັງຫານກ່ອນໜ້ານີ້ເລັກນ້ອຍ ທ່ານສຸວັນນະຣາຊ ຈິນດາວົງສ໌ຂຽນເລົ່າຕໍ່ໄປວ່າ ເມື່ອບັງເອີນເຊັ່ນນີ້ກໍຈຶ່ງລີບັງກົກໄມ້ກະບົກຕໍ່ໄປ ໃນຂນະທີ່ຣ້ອຍເອກສົມສີ ນະຣົງຄ໌ສັກດ໌ ກຳລັງໃຊ້ມີດ RANGER ປາດຫ້ອງນາຍພົລທ້າວມາ ແສງສວັຣຄໂຊຍ໌ ແລ້ວທຳການຄວັດເອົາເຄື່ອງໃນອອກມາຍັດໃສ່ຖົງຢາງໄວ້ ຫລັງຈາກນັ້ນກໍຫັນໄປປາດຫ້ອງພັນເອກປານີ ພອຣທິພຍ໌ສວັສດ໌ແລ້ວດຶງຕັບໄຕໄສ້ພຸງອອກໃສ່ຖົງຢາງອັນເກົ່າ ເມື່ອເສັຈແລ້ວນຳເອົາກ້ອນຫີນຂນາດເທົ່າກຳປັ້ນເທົ່າຫົວເຂົ່ານາຍັດເຂົ້າໄປແທນ ແລ້ວໃຊ້ເຊືອກມາມັດກຣ້ອຮ່າງກາຍຂອງສອງສົບຫລາຍຮອບ ກ່ອນຊ່ວຍກັນຫາມເອົາສົບຂອງນາຍທະຫານທັງສອງມາຫໍ່ດ້ວຍຜ້າຢາງສີຂຽວຄົນລະຜືນ ກ່ອນຖືກນຳໄປຂົ້ນຣົຖ 4×4 ແລ້ວກໍແລ່ນໜີອອກໄປຈາກຈິນາຍໂມ້.

ນາຍົກສຸວັນນາພູມາຮູ້ສຶກເສັຍໃຈເປັນອັນມາກທີ່ນາຍພົລກຸປະສິທທ໌ ອະໄພຍ໌ຕັດສິນໃຈຂ້ານາຍພົລອາກາສທ້າວມາ ແສງສວັຣຄໂຊຍ໌ກັບພັນເອກປານີ ພອຣທິພຍ໌ສວັສດ໌ຢ່າງໂຫດຫ້ຽມເຊັ່ນນີ້ ແລະການກະທຳທຸກຢ່າງຂອງນາຍພົລພາຄ 5 ບໍ່ໄດ້ພົ້ນຈາກການຕິດຕາມຂອງສາຍລັບພວກ CIA ເລັຍ ເພາະທູຕສະຫະຣັຖນາຍກອ໊ຕສ໌ ແມກມ໊ອຣ໌ທ໌ຣີປະຈຳນະຄອຣວຽງຈັນທນ໌ ໄດ້ຈ່າຍເງິນແກ່ສາຍລັບເຖິງ 60.000 ດອລລາ ໃຫ້ໄປຕິດຕາມເອົາຣາຍຣະອຽດໃນພິທີສັງຫານນາຍພົລທ້າວມາທີ່ຈິນາຍໂມ້.

ມັນຕຣົງກັນກັບເວລາ 11.00 ໂມງພໍດີທີ່ສຖານທູຕອາເມຣິກາໄດ້ໂທຣະສັພທ໌ໄປຫານາຍົກສຸວັນນາພູມາທີ່ທຳນຽບຣັຖບາລ ເພື່ອຜັກດັນໃຫ້ເຈົ້າສຸວັນນາພູມາທຳການກົດດັນໃຫ້ນາຍພົລກຸປະສິທທ໌ ອະໄພຍ໌ ນຳເອົາສົບຂອງນາຍທະຫານທັງສອງຄົນມາສົ່ງຄືນໃຫ້ນາຍົກສຸວັນນາພູມາໂດຍໄວ ໂດຍກ່າວເຍ້ຍຣັຖບາລປະສົມວ່າ...

"ຫາກທາງຣັຖບາລລາວບໍ່ມີປັນຍາຈັດພິທີສົ່ງສະການ ຂອງນາຍທະຫານຣະດັບສູງຂອງລາວທັງສອງຄົນນີ້ ທາງສຖານທູຕຍິນດີຈະຮັບເປັນເຈົ້າພາບໃຫ້ເອງທັງໝົດດັ່ງດຽວກັນກັບທີ່ເຄີຍໃຫ້ກຽຣຕິພັນເອກທອງ ວົງສ໌ຣັສມີ ທີ່ເສັຍຊີວິຕເພາະຊ່ວຍນັກບິນອາເມຣິກັນຖືກຍິງຕົກທີ່ພາຄເໜືອຂອງລາວມາແລ້ວ" ບໍ່ຕ່າງຫຍັງກັບມີກ້ອນຫີນໜ່ວຍໃຫ່ຍ ທີ່ໄດ້ມາຈາກແກ້ງຍາງກຳລັງຂວາງຮູຄໍ

ນາຍົກຣັຖມົນຕຣີຂອງຣັຖບາລປະສົມ ຈຶ່ງໄດ້ສັ່ງໃຫ້ພັນເອກຖວິລ ອຸດາມົນທ໌ ທີ່ເປັນເລຂາຝ່າຍທຫາຣຂອງສຳນັກນາຍົກ ໄປຕິດຕໍ່ກັບນາຍພົລກຸປະສີທ໌ ອະໄພຍ໌ໂດຍດວ່ນ ໃນພ້ອມດຽວກັນກໍໂທຣະສັພທ໌ຕຳນິນາຍພົລກຸປະສີທ໌ວ່າ

"ພວກເຈົ້າຈະຂ້າແກງກັນໄປເຖິງໃສອີກ? ເຣື່ອງມັນກຳລັງຈະຈົບລົງໂດຍດີຢູ່ແລ້ວ...ນາຍພົລທ້າວມາກໍແມ່ນນາຍພົລພຣະຣາຊທານຄືກັນກັບເຈົ້າຕ່ວ ຂ້ອຍຂໍໃຫ້ໄປງົມເອົາສົພຂອງນາຍທຫາຣທັງສອງຄືນມາໃຫ້ຂ້ອຍໃນມື້ນີ້ ເພື່ອຈະໄດ້ທຳພິທີສົ່ງສະກາຣໃຫ້ພວກເຂົາຕາມປະເພນີ..!"

ນາຍພົລກຸປະສີທ໌ ອະໄພຍ໌ ບ່ຍອມແກ້ຄຳຕຳນິຂອງນາຍົກແມ່ນແຕ່ຄຳໜຶ່ງ ນອກຈາກຮັບປາກວ່າ ໂດ່ຍ+ໂດຍ ແລ້ວກໍສົ່ງທຫາຣເປັນໝວດນຳເອົາມອງຂນາດໃຫ່ຍຍາວໆຫລາຍຕອນ ໄປແກ່ກວາດຊອກຫາສົພນາຍພົລທ້າວມາກັບສົພພັນເອກປານີ ພຍຣທິພຍ໌ສວັສດ໌ທີ່ຈົມຢູ່ໃນກົ້ນເລິກແກ້ງຍາງ ຈົນໃນທີ່ສຸດກໍງົມໄດ້ແຕ່ສົພຂອງນາຍພົລທ້າວມາ ແສງສວັຣຄໂຊຍ໌ຄືນມາ ພວກທຫາຣນາຍເຊືອກມັດສົພແລ້ວຈົກກ້ອນຫີນໃນທ້ອງອອກຖິ້ມ ຈຶ່ງໄຊ້ຜ້າຢາງຫໍ່ສົພຄືນເມື່ອສົພນາເຖິງຈົນາຍໂມ້ແລ້ວກໍເອົາໃສ່ເປຜ້າໃບ ໂດຍໄຊ້ຜ້າຫົ່ມຂົນສັຕວ໌ ທຫາຣປົກອີກຕໍ່ໜຶ່ງກອ່ນສົ່ງຂຶ້ນເຮລິຄອປເຕີຣ໌ H-34 ນຳໄປສົ່ງໃຫ້ໂຮງພຍາບາລທຫາຣທຫາຣສີສ່ວ່າງວ໋ງສ໌ໂສກປ່າຫລວງ ແລ້ວພິທີສົ່ງສະກາຣສົພທ້ວງເປ່ົາຂອງນາຍພົລອາກາສທ້າວມາ ແສງສວັຣຄໂຊຍ໌ ຈຶ່ງຖືກຈັດຂຶ້ນໃນເວລາຕ່ໍມາ ເຖິງແມ່ນບ່ສົມກຽຣຕ໌ແຕ່ກໍແມ່ນພິທີທາງສາສນາຕາມຮີດຄອງປະເພນີອັນດີງາມຂອງຊາຕລາວ ກໍອາຈມີສອ່ນສົ່ງໃຫ້ດວງວິນຍານຂອງນາຍພົລເຄາະຫ້ຳຍໄດ້ພົບສຸຂຕິພົພ ໂດຍບ່ໄດ້ທຸກຂ໌ເປັນຜີດິບທ້ວງຕົ່ງກ້ອນຫີນຈົມຢູ່ທີ່ກົ້ນແກ້ງຍາງຕລອດໄປ.

ສອ່ນສົພຂອງພັນເອກປານີ ພຍຣທິພຍ໌ສວັສດນັ້ນ ຫາບ່ພົບຈຶ່ງບ່ໄດ້ກັບຄືນມາໃຫ້ນາຍົກສຸວັນນາພູມາ ແຕ່ແນວນັ້ນກໍດີນາຍພົລກຸປະສີທ໌ ອະໄພຍ໌ ຍັງບ່ຍອມລາມືໂດຍສົ່ງສາຍລັບນອກເຄື່ອງແບບຂອງຕົນ ຕິດຕາມໄລ່ລ່າລູກນ້ວງຂອງນາຍພົລທ້າວມາຕ່ໍໄປ ພວກເຂົາຖືກຈັບກຸມແລ້ວທາຍສາບສູນຍ໌ໄປອີກເຖິງ 60 ຄົນ ນາຍພົລບາງຄົນຢ້ານຄວາມຜິດກໍເອົາຕົວຫລົບໜີໄປຍັງປະເທສໄທຍ ແຕ່ປະກາຣໃດກໍຕາມນາຍພົລກຸປະສີທ໌ເອງກໍຢູ່ຢ່າງວ໋ອສັນຫລັງບາດ ນາຍພົລບ່ຍອມປະກາສຊື່ເພື່ອນໆ"ປະຊຸມລັບ" ເພາະຫາກໃນວັນໜຶ່ງທີ່ຕົນເອງຕ້ວງໜີໄປຕ່າງປະເທສກໍກ໋ວ່າ ຈະຖືກເພື່ອນໆຫັນມາຄິດບັນຊີ

ລ້າງໜີ້ແລ້ນເອົາກໍໄດ້ ຈຶ່ງຫຸບປາກເອົາໄວ້ເສັຍດີກວ່າ ປະປ່ອຍໃຫ້ຄວາມຜິດຕິດໄປກັບວິຍານຂອງນາຍພົລທ້າວມາ ແສງສວັຣຄໂຊຍພຽງຜູ້ດຽວ.

ພາຍຫລັງການກໍ່ຣັຖປະຫານໄດ້ຮັບຄວາມຫລົ້ມແຫລວ ໜັງສືພິມພໂທຍສບັບໜຶ່ງໄດ້ຕີພິມພົ໌ຄຳໃຫ້ສັມພາສນ໌ເຈົ້າໜ້າທີ່ຊັ້ນສູງ ຂອງສນາມບິນດອຣເມືອງຄົນໜຶ່ງໃນບາງກອກຊຶ່ງເຄັຍໄດ້ຊ່ວຍເຫລືອເອົານາຍພົລທ້າວມາ ແສງສວັຣຄໂຊຍ໌ເຂົ້າເຣັດການໃນແຜນກພາສາຝຣັ່ງເສສຂອງສນາມບິນວ່າ...

"ນາຍພົລທ້າວມາເປັນຄົນນິສັຍດີ ຫາກຕົນຮູ້ລ່ວງໜ້າວ່າຈະກັບໄປກໍ່ຣັຖປະຫານໃນປະເທສລາວກໍຈະກ່າວເຕືອນຫ້ານປາມເອົາໄວ້"

ມັນເປັນຄວາມຫລົ້ມແຫລວທີ່ບໍ່ຄວນມີ ສາມັຄຄີທັມຂອງບຸຄຄົລຍັງມີບໍ່ພໍພຽງ ສິ່ງທີ່ຫລີກລ່ຽງໄດ້ກໍຫລີກບໍ່ເປັນເພາະຄວາມເຫັນແກ່ຕົວ ໃນຕລອດສາມເດືອນເຕັມໆນັບແຕ່ແຣກເຣີ່ມຂອງແຜນການ ທີ່ນາຍພົລພູມີ ນໍ່ສວັຣຄ໌ ໄດ້ທຳການຕິດຕໍ່ກັບຈອມພົລຈຽງໄລເຊັຄປະທານາທິບໍດີໄຕຫວັນ ຜູ້ຊຶ່ງກຽຈຊັງຣະບອບຄອມມິວນິສຕ໌ເຂົ້າກະດູກດຳ ທັງເປັນຜູ້ເຄັຍທຸ່ມເທເງິນຊ່ວຍເຫລືອແກ່ຕົນມາແລ້ວເມື່ອປີ 1965 ຕອນຖືກCIA ຕັດການຊ່ວຍເຫລືອແກ່ຕົນ ຫາກອີງເອົາຕາມບົທຄວາມທີ່ຂຽນໄວ້ໃນວາຣະສາຣຂອງ LAO UNITED FREEDOM ORGANIZATION ສບັບທີ 157 ປະຈຳເດືອນກັນຍາ-ຕຸລາ 2003 ໃນໜ້າທີ 31 ເວົ້າວ່າ ໄດ້ມີທັງນາຍພົລລອນໂນນແຫ່ງປະເທສຂເມຣ+ນາຍພົລປັກຈຸງຮີແຫ່ງເກົາຫລີໄຕ້ແລະຜູ້ນຳຈີນໄຕຫວັນຕ່າງກໍໂທຣະເລຂມາບອກຣັຖມົນຕຣີປ້ອງກັນປະເທສ ເຈົ້າສີສຸຂ ນະຈຳປາສັກດ໌ກັບນາຍພົລກຸປະສິທທ໌ ອະໄພຍ໌ວ່າ...

"ຈົ່ງພຍາຍາມຊ່ວຍເຫລືອ ນາຍພົລທ້າວມາ+ພັນເອກບຸນຍ໌ເລີດ+ພັນເອກຝອຍ+ພັນເອກປານິ ກໍ່ການຣັຖປະຫານໃຫ້ສຳເຣັຈ ແລ້ວການຊ່ວຍເຫລືອຈະທຸ່ມເທມາໃຫ້ຕາມຕ້ອງການ"

ສຳຣັບເພັຊຄາຕໂທດປະຈຳພາຄ 5 ຄືຣອ້ຍເອກສົມສີ ນະຣົງສັກດ໌ ຜູ້ຂ້າຄົນມາແລ້ວນັບບໍ່ຖ້ວນ ໃນນັ້ນຮວມທັງນາຍພົລສີໂທ ລາມພຸທທະກູລທີ່ຄຸກພູເຂົ້າຄວາຍດວ້ຍ ຫລັງຈາກທີ່ນາຍພົລກຸປະສິທທ໌ ຜູ້ເປັນນາຍໄດ້ເອົາຕົວຫລົບໜີອອກຈາກປະເທສໄປແລ້ວ ກໍຖືກທຫາຣລາວຄອມມິວນິສຕ໌ຈັບມັດສອກໃນຣະຫວ່າງປີ 1975 ຜູ້ກ່ຽວຖືກນຳຕົວໄປຂັງໄວ້ໃນອ່າງເກັບນ້ຳແຫ່ງໜຶ່ງໃນຄຸ້ມຫາຕດຳ ຊຶ່ງບ່ໄກຈາກເຮືອນເກົ່າຂອງນາຍພົລພູມີ ນໍ່ສວັຣຄ໌ ເພັຊຄາຕໂທດບ່ໄດ້ຖືກໃສ່ໂສ້ຫລືມັດສອກ ເພາະຂັງແຊ່ໄວ້ໃນນ້ຳທີ່ເລິກພຽງແອວ ມັນ

ເປັນຂັ້ງພິສດານແສນທໍຣະມານແລະໄຮ້ມະນຸສທັມທີ່ສຸດ ນອກຈາກທີ່ນັກໂທສ ຕ້ອງຍືນແຊ່ນ້ຳຢູ່ທັ້ງວັນກາງຄືນບໍ່ໄດ້ຫລັບໄດ້ນອນແລ້ວ ຍັງຕ້ອງຖ່າຍໝັກ ຖ່າຍເບົາໃສ່ນ້ຳພາຍໃນອ່າງນັ້ນເລີຍ ທຫາຣແມວລາວຄອມມິວນິສຕ໌ໃຫ້ກິນ ເຂົ້ານຶ່ງລະສອງເທື່ອຄືຄາບທ່ຽງແລະຄາບແລງ ໂດຍຖິ້ມປັ້ນເຂົ້າໝຽວລົງໄປ ໃຫ້ໃນອ່າງນ້ຳເໝືອນເກືອໝູເກືອໝາ ຖ້າເພັຊຄາຕຣັບເອົາບໍ່ທັນປັ້ນເຂົ້ານຶ່ງ ຈະຕົກໃສ່ນ້ຳສົກະປົກຊຶ່ງມີທັງນ້ຳປັສວະແລະອາຈົມຂອງຕົນເອງ ເພັຊຄາຕ ສົມສີຕ້ອງຝ່າວໄລ່ຄຸບໄລ່ງົມເອົາຕາມນ້ຳເປື້ອນມາຍັດໃສ່ປາກດ້ວຍຄວາມຫິວ ໂຫຍ ແລະເວລາຫິວນ້ຳກໍຕ້ອງດື່ມນ້ຳເປື້ອນໃນອ່າງ ຈົນສາມອາທິຕຍ໌ຜ່ານ ໄປ ເພັຊຄາຕສົມສີ ນະຣົງຄສັກດ໌ກໍເກີດປ່ວຍເປັນໄຂ້ໝາວສັ່ນເພາະແຊ່ນ້ຳ ເຢັນຢູ່ເປັນປະຈຳ ພວກທຫາຣຍາມລາວຄອມມິວນິສຕ໌ບໍ່ສົນໃຈໃຫ້ຢຽວຢາ ຫລືເອົາຜູ້ກ່ຽວຂຶ້ນມາຈາກອ່າງນ້ຳເຢັນ ທັ້ງໆທີ່ຜູ້ກ່ຽວອ້ອນວອນຂໍຂຶ້ນມາຕາຍ ຢູ່ນອກອ່າງນ້ຳ ສາມວັນອີກຕໍ່ມາເພັຊຄາຕສົມສີ ນະຣົງຄສັກດ໌ ກໍສິ້ນເຫື່ອ ແຮງບໍ່ສາມາຣຖ໌ແມ່ນກະທັ້ງຈະຊົງຕົວຢືນຕໍ່ໄປໄດ້ອີກ ຈຶ່ງເປັນລົມລົ້ມຈົມນ້ຳ ຕາຍດ້ວຍຄວາມທໍຣະມານທາທີ່ປຽບບໍ່ໄດ້ ສ່ວນເມັຍຂອງເພັຊຄາຕໂຫດ ສົມ ສີ ນະຣົງຄສັກດ໌ ທີ່ອົດສາທ໌ເອົາລູກຄົນດຽວຫລົບໜີໄປສ້າງຊີວິຕໃໝ່ຢູ່ໃນອາ ເມຣິກາ ລູກກໍກາຍເປັນບ້າບໍ່ສົມປະກອບເປັນຄົນພິກາຣໄປຕລອດຊີວິຕ ໃນ ທັມມະຊາຕວິທຍາແລ້ວ ມະນຸສຍ໌ຊາຕຄວຣສ້າງແຕ່ຄວາມດີໜ້ຈາກກາຣປະ ພຶຕຊົ່ວ...ບໍ່ເມົ້າມົວແຕ່ສ້າງມົລທິນ ໃຫ້ຖ້ວມຫ້ວງໃຈຂອງເຮົາເອງ...ຄົນເກ່ງ ບໍ່ສ້າງຊົ່ວ-ບໍ່ມ້ວກີເຫລດ-ບໍ່ລະເວັ້ນສິລທັມປະຈຳໃຈ ໃຜສ້າງຊົ່ວໄດ້ບາບແລະ ບາບນັ້ນຈະຕາມສນອງຈົນຊົ່ວກາລນານ.

(26) ກ່ອນຫລັບຕາຕາຍ....

ຣັຖປະຫາຣນາຍພົລອາກາສທ້າວມາ ແສງສວັຣຄ໌ໂຊຍ໌ຣອບສອງ ຫາກໍ ຜ່ານໄປ ກິ່ນອາຍຄວາມສົບສົລກັບຄວາມໂຫດທ້ຳມເພາະລາວຂ້າກັນເອງຍັງ ອຸ່ນໆຢູ່ ແລະຜູ້ທີ່ຫລົງກົລກາຣເມືອງຂອງພວກລາວຄອມມິວນິສຕ໌ກຳລັງເຣີ່ມ ຂຍາຍຕົວ ເພີ່ມຄວາມຂຸ້ນຂ້ຽວຮຸນແຮງຂຶ້ນມາແທນທີ່ຫລັງຈາກແຜ່ນດິນລາວ ເໜືອຂາດນາຍພົລວັ້ງປາວແລ້ວ ນັກກາຣເມືອງແລະນາຍທຫາຣຝ່າຍຂວາ ພາກັນຮັ້ງເລໃຈໃນສັນຍາຟື້ນຟູສັນຕິພາພ ແຕ່ຫວັ້ງຮອມລາວໃຫ້ຈົນສຳເຣັຈ

ເພາະເຂັ່ນຂ້າກັນເອງມານານຫລາຍທົສວັສແລ້ວ.

ຫລັງສັນຍາຢ່າເສິກຂອງອາເມຣິກາ-ວຽຕນາມເໝືອ 09 ກຸມພາ 1973 ທີ່ສາທາຣະຣັຖຝຣັ່ງເສສແລ້ວ ກາຣເມືອງລາວຍິ່ງຖລຳເລິກເຂົ້າສູ່ວິກິຈກາຣ ແສນສັນສົລ ໂລດທັນທີເມື່ອນາຍແຣນຣີ ຄິສຊິງເຈີຣເດີນທາງມາຈາກສະຫະຣັຖ ໃນຣະຫວ່າງກາງເດືອນກຸມພາ ຫາວິທີຜັກດັນໃຫ້ນາຍົກຣັຖມົນຕຣີຂອງຣັຖ ບາລປະສົມເຈົ້າສຸວັນນາພູມາແກ້ໄຂບັຣຫາລາວ ດ້ວຍກາຣຍອມເຊັນຮັບຮອງ ລົງໃນສັນຍາສັນຕິພາພທີ່ລາວບໍ່ມີສ່ວນກ່ຽວຂ້ອງນັ້ນເສັຍ ເຈົ້າສຸວັນນາພູມາ ບໍ່ມີທາງອອກອື່ນຈຶ່ງເຊັນລົງໄປເພື່ອປະຊົດຄວາມຜິດຫວັງຂອງຕົນເອງທັ້ງໆທີ່ ຮູ້ວ່າກຳລັງທຳລາຍອະທິປະໄຕຍຂອງຊາຕລາວ ເມື່ອເຊັນໃຫ້ແລ້ວທ່ານທູຕ ອາເມຣິກາປະຈຳລາວນາຍແມັກມົວຣ໌ທຣີກໍບອກເຈົ້າສຸວັນນາພູມາຕື່ມວ່າ ຣັຖ ບາລຂອງເຂົ້າໄດ້ຊ່ວຍສ້າງສັນຕິພາພໃຫ້ລາວ ໂດຍຜ່ານທາງຣັຖປະສົມຕັ້ງແຕ່ ເຣີ່ມແຣກມາແລ້ວ ແຕ່ຄົນອາເມຣິກັນຈຳນວນໜຶ່ງທີ່ຍັງຢູ່ໃນນະຄອນຮວຽງ ຈັນຫນ໌ແລະຮູ້ເຣື່ອງດີວ່າຄົນລາວຖືກວຽຕນາມເໝືອຫລອກຈົນລົ້ມລະລາຍລົງ ແລ້ວຍັງບໍ່ແລ້ວຄາດຖືກສະຫະຣັຖຫລອກຕົ້ມອີກພາກັນລະອາຍໃຈ ເມື່ອໄປພົບ ຫລືເດີນສວນທາງກັບພວກເຈົ້ານາຍລາວຝ່າຍຂວາ ກໍບໍ່ກ້າຫັນມາສົບຕາກັນ ເໝືອນເມື່ອກ່ອນອີກ ພວກເຂົ້າວິຈາຣນ໌ວ່າເປັນຄຳອ້າງທີ່ຂາດມະນຸສທັມ ທັ້ງ ຂາດເຫຕຸຜົລຈາກທ່ານທູຕແມັກມົວຣ໌ທຣີ.

CIA ອາວຸໂສນາຍເອັດກາຣ໌ດ ບູລຜູ້ເກືອກກ້ວຢູ່ກັບກຳລັງທັພພິເສສມ້ົງ ຕັ້ງແຕ່ຕົ້ນປີ 1960 ກໍຕຳນິຣັຖບາລຂອງເຂົ້າວ່າປຣາໄຊຍໃນສົງຄາມ ກຳລັງ ພຍາຍາມປະຖິ້ມປະເທສລາວໃຫ້ພະເຊີນຊາຕາກັນຕາມລຳພັງ ແລະຂຽນວ່າ

"ເປັນເຣື່ອງທີ່ລະອາຍໃຈ ເມື່ອສະຫະຣັຖມາສນັບສນຸນໃຫ້ລາວຝ່າຍຂວາຕໍ່ສູ້ ກັບພວກຄອມມິວນິສຕ໌ແລ້ວກໍຫັນຫລັງໜີ ແມ່ນດີໃຈທີ່ໂສກນາຖກັມກຳລັງມາ ເຖິງອະວະສານຂອງມັນແລ້ວກໍຕາມ ແຕ່ກໍອົດຄິດເຖິງສພາພກາຣນທີ່ຈະເກີດ ຂຶ້ນກັບຊົນຊາວລາວໃນໂອກາສຕໍ່ໄປບໍ່ໄດ້".

ຈົນເຖິງວັນທີ 01 ກໍຣະກະດາ 1973 CIA ທີ່ເຫລືອຈຳນວນສຸດທ້າຍໃນ ລາວກໍພາກັນຫ້ວກະເປົ໋າຂຶ້ນເຄື່ອງບິນບ໋າຍບ່າຍປະເທສລາວ ທັ້ງທຫາຣເສືອ ພຣານໄທຍ 15.000 ຄົນກໍຟ້າວລົງເຮືອຂ້ວາມນ້ຳຂອງກັບໄປກ່ອນວັນກຳນົດ ກາຣຖອນຄົນຕ່າງດ້າວອອກຈາກລາວຈະມາເຖິງ ສົງຄາມໃນຮູບແບບໄດ້ສິ້ນ ສຸດລົງໃນເດືອນກໍຣະກະດາ ແຕ່ວ່າມີສົງຄາມຈິຕສາສຕ໌ໄດ້ຣະເບີດຂຶ້ນມາ

ແທນທີ່ຢ່າງກ້າງຂວາງ ທີ່ລອ່ງແຈ້ງແແລະຊຳຫອງຊຶ່ງເປັນຖິ່ນທີ່ໄດ້ຍິນແຕ່ ສຽງປືນໃຫ່ຍກັບອາຍພົ່ນບົນຫອ້ງຟ້າກໍເກີດປ່ຽນມາເປັນການປຸ້ນສົ່ມພ໌ຊັພຍ໌ ສິນກັນແລະຂ້າລ້າງແຄ້ນກັນຂຶ້ນ ສາຍການບິນ AIR AMERICA ຕ້ອງຕົກງວາມ ກະທັນຫັນ ແຕ່ລະວັນສນາມບິນວັດໄຕຍສງົບງຽບ ນັກບິນຂອງບໍ່ຣິສັທທາຍ ໜ້າໄປຮຽບວຸດ ຕາມໄນຍ໌ລັບທີ່ມີອີ່ສາວແຕ່ງຊຸດສັ້ນໆໂຊວ໌ໂລນຂາບໍ່ມີນັກ ທ່ຽວພາອອກເຕັ້ນດອ່ງໆໃສ່ດົນຕຣີເໝືອນຄືນກອ່ນ ຄວາມຄຶກຄື້ນຕົ່ນຕາຕົ່ນ ໃຈບ່ຍອັນກັບມາໃໝ່ ໃນນະຄອຣວງເໝືອນເມືອງຮ້າງຢ່າງເຫລືອເຊື່ອ ຍິ່ງ ມີທຫາຣວຽຕນາມເໝືອນຸ່່ງເຄ່ືອງທຫາຣອ້າຍນ້ອ້ງ ປອມປົນກັນເຖິງ 1.500 ຄົນຖືປືນອາກາໃສ່ເກີບໂບກຢ່າງຕາມຖນົນຖົກບາດຕິນສູ່ງໆແບບຕົ່ນເຕັ້ນ ທີ່ ໄດ້ມາເຫັນຄວາມແປກຕ່າງຂອງເມືອງຫລວງ ບັຣຍາກາສກໍ່ຍິ່ງເລ້ົ່ງຂົ່ມແບບ ແປກໆ ມີຫລາຍກຸ່ມຍັ້ງພາກັນອອກແອກຍ່າງມີກຳແຮ່ອປືນອາກາໃນເວລາ ກາງເວັນແຈ້ງໆ ເພາະຍັ້ງຣະແວ່ງບໍ່ທັນຍອມເຊື່ອໃຈໃຜໆຢູ່ອີກ.

ພໍເຖິງວັນທີ 03 ເມສາ 1974 ສຸພານຸວົ່ງສ໌ທີ່ໃຜໆເຊື່ອວ່າເປັນຫົວໜ້າ ຂບວນການປະຕິວັຕກໍມາເຖິງນະຄອນວຽງຈັນທນ ທ່ານກາງຜູ້ຄົນພາກັນມາ ຈິ່ຈ່ຣ່ຣັບຈົນແໜ້ນສອງຂອກຖນົນ ນິມົນຕ໌ເອົ້າທ້ົ່ງພຣະສົ່ງຄ໌ອົ່ງຄ໌ເຈ້ົ່າມາຖ້ຳ ສູຕຣໂຊຍັນໂຕຕ້ອນຣັບການມາຂອງຜູ້ຊນະສິບທິສ ຂບວນແຫ່ສຸພານຸວົ່ງສ໌ ເຂ້ົ່າມາຝົດຟົ້ນກວ່າແຫ່ພຣະເວດເຂ້ົ່າເມືອງຫລາຍເທ່ົ່າ ມີຄົນເຖ້ົ່າຜູ້ບໍ່ມັກລັທ ທິຄອມມິວນິສມ໌ລັກຊັບໃສ່ຫູໝູ່ໄກ້ໆວ່າ "ຂບວນແຫ່ຜີຫ່ານ້ເ້ົ່າເມືອງ" ນາຍົກຣັຖ ມົນຕຣີຣັຖບາລປະສົມເຈ້ົ່າສຸວັນນາພູມາ ປະກາສຕ້ອນຣັບການມາຂອງສຸພານຸ ນ້ອ້ງຢ່າງກະຕືລືລົ້ນ ມີຄົນຮ້ອ້ງໂຮຊົ່ມເຊີຍສຽງຖ້ວ່ມທ້ົ່ບຢູ່ອ້ົ່ງຄະນ້ົ່ງ ມີຄົນຜູ້ ໜ້ົ່ງງວ່ານມາບອກໝູ່ວ່າ "ບໍ່ແມ່ນທ້ົ່ງແຫ່ພຣະເວດຫລ້ົ່ແຫ່ຜີຫ່ານ້ເ້ົ່າເມືອງ ແຕ ແມ່ນການແຫ່ເອົ້າຜູ້ຕ່ານ້ໜ້ານ້ວ່ເໝືອ ຖ້ານ້ບໍ່ເຊື່ອຂ້ອ້ຍກໍ່ຄອຍເບ້ົ່ງໄປເທ້ະ ອີກບໍ່ນານກ້ຈ່ະມີຄົນແກ່ວເ້ົ່າມາຕ່ານ້ຫລ້ົ່ງ".

ຄັນຢຽບຢ່າງເ້ົ່າປ ີ 1975 ການເມືອງຂອງຣັຖບາລປະສົມກໍ່ເຣ່ີ່ມເ້ົ່າສູ່ ວິກິຈການແຫ່ງຄວາມບໍ່ແນ່ນອນ ເພ່ຈ່ະກອ່ນໜ້ານ້ີ່ມີນັກການເມືອງຄົນວຽຕ ນາມຕິດຕາມເ້ົ່າມາເຊ່ືອງຊ້ອ້ນຢູ່ກັບນັກການເມືອງຝ່າຍຊ້ ້ າຍ ຂອງສຸພານຸ ວົ່ງສ໌ຈ່ານວນມາກ ເພ່ືອດ່ານ້ເນ້ົ່ນການຊັກເໜ້ົ່າຢູ່ດ້ານ້ຫລ້ົ່ງວ່າງແຜນທ້ົ່ບມ້ວ່ງ ຣັຖບາລປະສົມຂອງລ່າວໃນຂ້ົ່ນຕ່ໍ່ໄປເໝືອນໃນເມ່ືອກອ່ນ ຊ ຶ ່ ງພວກເ ຂ ົ ້ ່ າໄ ດ ້ ເ ສ ຍ ຍຸ ຍ ົ ່ ງ ໃ ຫ ້ ກ ອ ງ ທ ັ ພ ລ ່ າ ວ ຝ ່ າ ຍ ຂ ວ ່ າ ກ ັ ບ ຝ ່ າ ຍ ກ ່ າ ງ ຊ ້ ່ າ ກ ັ ນ ເ ອ ງ ຢ ່ ່ ງ ເ ມ ົ ນ ມ ັ ນ ແ ຕ ່ ມ ່ ່ ່

ວັນນີ້ກໍນຳເອົາທິສດີເກົ່າມາເປົ່າຫູປັນຍາຊົນຄົນຫົວອ່ອນ ຫລອກນັກສຶກສາ ແລະພະນັກງານສົມທົບຄນະ 21 ອົງຄົກາຣ ໃຫ້ພາກັນລົງຖນົນເດີນຂບວນປະ ທ້ວງທວງໃຫ້ກາຣຈັດຕັ້ງເກົ່າເອົາອຳນາຈກາຣປົກຄອງໃຫ້ຣັຖບາລປະສົມ ຈົນ ຝົດຝົ້ນສນັ່ນປະເທສ ເປັນເຫຕຸໃຫ້ຜູ້ຄົນສົລເທ່ຫ໌ໃຈວ່າຈະຢູ່ກັບຝ່າຍໃດດີ ບັດ ນີ້ຈຶ່ງເຫັນຜົລແຫ່ງຄວາມພາກພຽຣຂອງສຸພານຸວົງສ໌ ຊຶ່ງມີອຽຕນາມເໝືອຊັກ ໄຍຢູ່ເບື້ອງຫລັງໃຫ້ຈັດຕັ້ງຣັຖບາລປະສົມຂຶ້ນມາ ອັນມີໂຄງກາຣກາຣເມືອງ 18 ຂນາບຂ້າງຢູ່ນັ້ນຈະແຈ້ງດີ ຜ້າກັ້ງສີດຳຂອງລະຄອຣສາກໃໝ່ໄດ້ຖືກໄຂ ອອກ ບອກເຕືອນໃຫ້ພວກນັກກາຣເມືອງກັບນາຍທຫາຣຝ່າຍຂວາຮູ້ວ່າຂອງ ປອມ ແລະຍອມຣັບຮູ້ວ່າສັນຍາສັນຕິພາພ 18 ຂໍ້ອາບຢາພິສແລະເລທ໌ກົລຈຶ່ງ ຕື່ນວ່າພວກຕົນຫລົງກົລສຳນອນຄຳເວົ້າມ່ວນໆຂອງສັນຍານັ້ນ ພວກຣັຖມົນ ຕຣີຂອງແນວລາວຮັກຊາຕ ມີອຳນາຈເທ່າກັນກັບຣັຖມົນຕຣີຝ່າຍຂວາກໍຈິງ ແຕ່ເມື່ອອີງອາສັຍເອົາສັນຍາ ວ່າດວ້ຍຄວາມຖືກຕ້ອງປອງດອງຊາຕ 18 ຂໍ້ ແລ້ວພວກຣັຖມົນຕຣີຝ່າຍຂວາຈຶ່ງໝົດອຳນາຈລົງເທື່ອລະຂັ້ນ ພາກັນຈົນຕາ ແຈແລະເກີດຣັກຕ໊ອກ໊ອຕາຍ ກໍພາກັນຫາຍໜ້າໜີໄປຈາກຕຳແໜ່ງແບບລັບໆ ເປັນທ໊ອແຖວ ພວກແນວລາວຮັກຊາຕກໍສາມາຣຖຍຶດອຳນາຈໄວ້ໄດ້ທັ້ງໝົດ ໃນຕອນທ້າຍປີ 1975 ດວ້ຍກາຣປະກາສທັບມ້າງຣັຖບາລປະສົມຕາມທິສດີ ຂອງລັທທິລອມມ໊ອນິສມ໌ ແລ້ວສ້າງຕັ້ງຣະບອບສາທາຣະນະຣັຖປະຊາທິປະໄຕ ປະຊາຊົນລາວຂຶ້ນມາແທນ.

ໃນພິທີກາຣສ້າງຕັ້ງຣະບອບຄອມມ໊ອນິສຕ໌ເມື່ອວັນທີ 02 ທັນວາ 1975 ປີແຣກນັ້ນຝົດຝົ້ນສນັ່ນນະຄອຣ ເຈົ້າສຸວັນນາພູມາຂຶ້ນກ່າວແຖລງຕ້ອນຣັບຣະ ບອບຄອມມ໊ອນິສມ໌ຢ່າງສງ່າຜ່າເຜີຍ ແລ້ວເອີ້ຍເຊີນເອົາສຸພານຸວົງສ໌ນ້ອງຂຶ້ນ ມາກ່າວຄຳປາສັຍດວ້ຍຄວາມປິຕິທະນົງກຽຣຕ໌ ຕ່ໜ້າໄມໂຄຣໂຟນເມື່ອຈັບ ເຈ້ຍຂຶ້ນມາເປີດກອ່ນອ່ານ ຄົນທີ່ຢູ່ຂ້າງເວທີໄດ້ສັງເກຕຸເຫັນມືທັ້ງສອງຂອງສຸ ພານຸວົງສ໌ສັ່ນເຊັນ ທ່າທາງກໍສັ້ນສງ່າຣາສີແລະບໍ່ຂຶງຂັງມັງມ໋ເໝືອນອັນແຣກ ທີ່ຖືກແຫ່ເຂ້ົ້າມາຈາກສນາມບິນວັດໄຕຍ ເມື່ອອ່ານຄຳປາສັຍກໍມີສຽງສັ່ນແຫບ ຂາດຕົກເປັນຈັງຫວະບໍ່ສມ່ຳສເມີ ແລະອ່ານກັບໄປຫລຳມາສັບສົລຈົນຫລາຍ ຄົນຄິດວ່າສຸພານຸວົງສ໌ຈະເປັນລົມລົ້ມລົງຕ່ໜ້າໂມຄ໌ ເພາະໄດ້ຮູ້ບັດນີ້ວ່າແມ່ນ ຕົນເອງຈະເປັນຜູ້ກ່າວເຊີນໃຫ້ໄກສອຣ ພຣົຫ໌ມວິຫາຣ ຂຶ້ນມາກ່າວເປີດພິທີ ເສລີມສລອງກາຣສ້າງຕັ້ງຣະບອບໃໝ່ ເພາະໃນທີ່ຜ່ານໆມາມີແຕ່ໄກສອຣ

ເຊີນສຸພານຸວົງສ໌ໃນນາມຜູ້ນຳຂບວນການປະຕິວັດຂຶ້ນມາກ່າວ ແຕ່ລາວນີ້ສຸພານຸວົງສ໌ພົບວ່າ ອຳນາດທັງໝົດໄດ້ຕົກໄປຢູ່ໃນມືຂອງໄກສອນ ພົມວິຫານ ພຽງຄົນດຽວ ສຸພານຸວົງສ໌ກຳລັງໄດ້ສັມຜັສກັບຄວາມຕ່ຳຕ້ອຍຂອງຕົນເອງ ກ່ອນຈະມີຮ່າງສັນຍາແລະອະນຸສັນຍາສັນຕິພາພ 1973 ສຸພານຸວົງສ໌ກໍ່ບໍ່ໄດ້ຮ່ວມຄົ້ນຄວ້າກັບໄກສອນແລະວຽດນາມເໝືອແຕ່ປະການໃດ ນອກຈາກໄດ້ອ່ານເມື່ອມັນຜ່ານມະຕິອອກມາໃຊ້ແລ້ວເທົ່ານັ້ນ ໜ້າທີ່ຂອງສຸພານຸວົງສ໌ກໍ່ຄືປະຕິບັຕຄຳສັ່ງຂອງວຽດນາມເໝືອ ສ້າງສັນຕິພາພກັບຣັຖບາລປະສົມປອມຂຶ້ນໃນລາວໃຫ້ໄດ້ ຂັ້ນຕໍ່ໄປວຽດນາມເໝືອກໍຈະມ້າງຣັຖບາລປະສົມຖິ້ມເອງ.

ໃນການປົກຄອງຣະບອບໃໝ່ ສຸພານຸວົງສ໌ທີ່ຄົນລາວເຂົ້າໃຈວ່າເປັນຕົວແທນຂອງຂບວນການປະຕິວັດນັ້ນຖືກພັລແຕ່ງໃຫ້ເປັນປະທານປະເທສ ໃນຖານະເປັນພຽງຜູ້ນຳຣະດັບທີ 7 ແຕ່ຄົນປະເພສ **NO NAME** ຄືໄກສອນ ພົມວິຫານ ໄດ້ເປັນນາຍົກຣັຖມົນຕຣີ ຄົນທີ່ເຄີຍເປັນນາຍົກຣັຖມົນຕຣີຂອງຣັຖບາລປະສົມຢ່າງເຈົ້າສຸວັນນາພູມາກໍຖືກນາຍົກໄກສອນແຕ່ງຕັ້ງໃຫ້ມາເປັນລູກນ້ອງກ້ອງອຳນາດສຸພານຸວົງສ໌ ຄືແຕ່ງໃຫ້ນັ່ງຕັ່ງທີ່ປຶກສາປະເທສ ແຕ່ເມື່ອມີເຫຕຸການຣ໌ສຳຄັນເກີດຂຶ້ນກໍ່ບໍ່ຮູ ເພາະຜູ້ເປັນນາຍົກຣັຖມົນຕຣີຄົນໃໝ່ຄືໄກສອນ ພົມວິຫານບ່ຍອມມາປຶກສາ ກ່ວາຈະຮູ້ໄດ້ກໍ່ຕ່ເມື່ອສິ່ງນັ້ນໆຜ່ານໄປແລ້ວ.

ເມື່ອມີຣັຖບາລໃໝ່ໃນລັທທິຄອມມິວນິສ ທີສດີລົບລ້າງອັນທີ່ພວກເຂົ້າເວ້ົາວ່າສັງຄົມເກ່ົາ-ແນວຄິດເກ່ົາ-ຣະບອບເກ່ົາກໍ່ເຣີ່ມຂຶ້ນທັນທີ ຂັ້ນແຣກກໍ່ຄືຜັກດັນໃຫ້ເຈົ້າສຸວັນນາພູມາສັ່ງກອງທັພລາວ ຝ່າວເກັບອາວຸທເຂົ້າສາງໃນຣະຫວ່າງວັນທີ 06 ມິຖຸນາ 1975 ເມື່ອອາວຸທຫລຸດມືກໍ່ມີການຈັດສົ່ງຄົນໃນຣະບອບເກ່ົາເຂົ້າສູນຍ໌ກັກຂັງເພື່ອລ້າງສມອງໃຫ້ຕາຍດ້ອຍພັຍພຍາທ ແລະການອຶດຫິວ ລຽນຄືວດ້ອຍການລົບລ້າງສຖາບັລກະສັຕຣຍ໌ລາວ (ອ່ານຣາຍຣະອຽດໃນປຶ້ມ "ໃຜຂ້າກະສັຕຣຍ໌ລາວ?") ຈົນເຖິງວັນທີ 12 ມິນາ 1977 ຈຶ່ງມີການຈັບກຸມກະສັຕຣຍ໌ລາວ ພ້ອມພຣະຍາຕິວົງສ໌ຫລາຍພຣະອົງຄ໌ໄປກັກຂັງໄວ້ທີ່ສູນຍ໌ນ້ຳຣະນະສົບຫ່ວາໃນແຂວງຫົວພັນ ມີຊາວລາວພາກັນໂຕນໜີໄປເຂົ້າສູນຍ໌ອົພຍົບໃນປະເທສໄທຍເພີ່ມຂຶ້ນທຸກວັນ ມີການຂ້າກັນຕາຍເໝືອນຂອງຫລິ້ນ ໂດຍສເພາະແມ່ນພວກລາວເຜ່ົາມ້ົງທີ່ຖືກຕາມລ່າຊີວິຕໂດຍຄິດປະມານເອົ້າວ່າໄດ້ມີຊາວມ້ົງເຖິງໜຶ່ງແສນຄົນຖືກຂ້າຕາຍໃນປະເທສລາວຫລັງ 1975 ໂດຍບ່ນັບໄລ່ໃສ່ຈຳນວນທີ່ລ້ົມຕາຍໃນສົງຄາມຕ່ຳຕ້ານການຮຸກຮານຂອງ ວຽຕ

ນາມເໝືອກອ່ນປີ 1975.

ພໍເຣີ່ມປຽບຢ່າງເຂ້ົາປີ 1980 ນະຄອຣວຽງຈັນທນ໌ແລະເມືອງໃຫ່ຍໆທົ່ວ ທົ່ວປະເທສ ກໍປ່ຽນໂສມມາເປັນເມືອງຮ້າງເພາະຂາດຜູ້ຄົນທັ້ງທີ່ໂຕນໜີໄປ ຕ່າງປະເທສຫລາຍແສນຄົນແລະຖືກພວກລາວລອມມືອນິສຕ໌ຈັບກຸມໄປກັກຂັ້ງ ໄວ້ຕາມສູນຍ໌ສັພທຸກຂ໌ທີ່ຫ່າງໄກອີກຫລາຍໜື່ນຄົນ ຈົນຣັຖບາລລາວລອມມືອ ນິສຕ໌ອ່ອນເພັຍແທບລົ້ມລະລາຍເພາະຂາດນັກວິຊາການບໍຣິຫານປະເທສ ນັກ ການເມືອງຄົນໃຫ່ຍຄົນ ໂຕຂອງລາວລອມມືອນິສຕ໌ພາກັນກັກຕົວ ບໍ່ກ້າອອກໄປ ຢ່າງໂຢກເຢກຕາມໃຈຊອບເພາະຢ້ານຖືກຂ້າ ໃນຂນະທີ່ມີຂບວນຕໍ່ການຣົຕາມ ຣະບອບຢູ່ທຸກຫົນແຫ່ງ ແລະຕອນນີ້ມີທຫານແລະທີ່ປຶກສາວຽຕນາມເໝືອໃນ ລາວເກືອບສີໝື່ນຄົນແລວ.

ພໍເຖິງປີ 1988 ປະເທສລາວລາວຣະບອບລອມມືອນິສມ໌ ເຣີ່ມຈົມດິ່ງຢູ່ ໃນຄວາມດໍາແລະອັຕຄັດຮອບດ້ານເພາະປະຊາຊົນລາວປະຕິວັຕ ຽບດ້ວຍວິທີ ຮັບໃຊ້ຣະບອບແບບບໍ່ເຕັມໃຈ ໄກສອຣ ພົຣຫົມວິຫານເຂ້ົາໃຈທັນທີວ່າຄົນໃນ ຊາຕບໍ່ນິຍົມຊົມຊອບຣະບອບໃໝ່ແລະບໍ່ເຕັມໃຈໃຫ້ຄວາມຮ່ວມມື ຈຶ່ງປະຕິຮູບວິ ທີທາງການເມືອງໃໝ່ ໂດຍປ່ຽນໃຈຫລຸດຜ່ອນຄວາມເຄັ່ງຕຶງດ້ວຍການປ່ອຍ ນັກໂທສທີ່ສູງອາຍຸອອກຈາກສູນຍ໌ກັກຂັ້ງ ທັ້ງທໍາການຍຸບສູນຍ໌ກັກກັນບາງ ແຫ່ງແຕ່ປ່ຽນແປງມາເປັນນິຄົມໃຫ້ນັກໂທສຢູ່ກິນກັນແບບຣະບົບໝູ່ບ້ານໄປໃສ ມາໃສ່ໄດ້ສດວກຂຶ້ນ ອະນຸຍາຕໃຫ້ມີການຂາຍຄ້າຫາກຸ້ມຕົນເອງ ແຕ່ປານນັ້ນ ກໍຕາມ ສມາຊິກພັລບາງຄົນປະທ້ວງດ້ວຍການຍື່ນໃບລາອອກແລະສົ່ງຫລຽມ ຕຣາຄໍາຊອບຄືນ ໂດຍໃຫ້ເຫຕຸຜົລວ່າທົນເຫັນພັລຣັຖຂ້າຄົນພາຍໃນຊາຕຢ່າງ ໂຫດຫ້ຽມແລະຂາດເຫຕຸຜົລບໍ່ໄດ້ໃນແຕ່ລະອັນ ພ້ອມກັບອີຈານ໌ການຄາຕ ກັມນັ້ນວ່າລວ່ງຣະເບີດສີທິມະນຸນ໌ ບໍ່ຕ່າງຫຍັງກັບຜເດັດການຮິຕເລີຣ ຄົນ ລາວທຸກຄົນບໍ່ຄອຣຖືກຂ້າ ຫາກວ່າມີຄວາມຜິດກໍມີກົດໝາຍຕັດສິນໂທສ ໄກ ສອຣ ພຣົຫົມວິຫານບໍ່ກ້າຂ້າແມວລາວອີສຣະເກົ່າຢ່າງທ່ານທອງສຸຂ ສາຍສັງ ຄີ ຈຶ່ງສົ່ງຈັບສົ່ງໄປໃສ່ຄຸກທໍຣະມານໃນພາຄເໝືອຂອງລາວນານເຖິງ 14 ປີ.

ກໍາແພງເບີຣລິນຖືກທໍາລາຍລົ້ງໃນປີ 1989 ທີ່ປຶກສາຊາວໂຊວຽຕຈໍາ ນວນນາກຖືກສົ່ງໃຫ້ຖອນຕົວອອກໄປຈາກລາວ ແລະເມື່ອສທະພາພໂຊວຽຕ ລົ້ມທະລາຍລົ້ງໃນຕໍ່ມາຈຶ່ງພົບວ່າ ໄຊຍຊນະທີ່ໄດ້ມາຈາກການທໍາສົ່ງຄາມຍຶດ ເຍືອຂອງສຸພານຸວົ່ງສ໌-ໄກສອຣຈຶ່ງຍ້ອນກັບເປັນປຣາໄຊໃນຍາມສງົບ ຕົ້ນປີ

1992 ໄກສອຣ ພຣົຫົມວິຫານ ໄດ້ຕັດສິນໃຈນຳປະເທສລາວເຂົ້າຮ່ວມກຸ່ມ ASEAN ແລະເຣີ່ມຕິດຕໍ່ຣັຖບານອອສເຕຣເລັຍມາສ້າງຂົວຂ້າມນ້ຳຂອງທ່າ ເດື່ອ-ໜອງຄາຍອັນເປັນແຜນການຣົມເກົ່າ ທີ່ຣັຖບານຣາຊອານາຈັກຣົມ້ຄ້າງ ຄາເອົ້າໄວກອັ່ນແລ້ວ ແລະກໍເພາະຄຸນຄວາມດີອັນນີ້ ຣັຖບານອອສເຕຣຈຶ່ງ ໄດ້ຣັບສິທທິ່ເຂົ້າມາສັມປະທານບໍ່ແຫ ໃນປະເທສລາວ.

ຈົນເຖິງປີ 1994 ສີສມະ ສີສານ ທີ່ເປັນໜຶ່ງໃນຈຳນວນອິສຣະເກົ່າແກ່ ທົນເຫັນພັຄຣັຖເຂັ່ນຂ້າຄົນລາວບໍ່ໄຫວ ຈຶ່ງຕັດສິນໃຈປະທ້ວງດ້ວຍການຂຽນ ໜັງສືເປັນທາງການຮຽກຮ້ອງໃຫ້ພູມີ ວົງສ໌ວິຈິຕ ທີ່ເປັນປະທານປະເທສແທນ ໄກສອຣ ພຣົຫົມວິຫານຊຶ່ງຕາຍໄປແລ້ວແຕ່ວັນທີ 21 ພຶສຈິກາ 1992 ມີເນື້ອ ຄວາມສຳຄັນຖາມວ່າ...

"ພັຄປະຊາຊົນປະຕິວັຕລາວຕັ້ງຂຶ້ນມາ ເພື່ອປົກປັກຮັກສາຊີວິຕແລະຊັພຍ ສິນຂອງຄົນລາວຫລືເພື່ອຂ້າລ້າງຜານເຜົ່າພັນທົ່ລາວດ້ວຍກັນ? ການຂ້າແກ ກັນແບບອະທັມ,ບໍ່ມີການສືບສວນສອບສວນ, ບໍ່ມີການຜ່ອນສັ້ນຜ່ອນຍາວໃຫ ກັນ ມັນຊິເປັນບ້ານເປັນເມືອງໄດ້ແນວໃດກັນ"?

ສຸພານຸວົງສ໌ ໄດ້ຊີ້ໜ້າສີຊນະ ສີສານເພື່ອນເກົ່າແລະຕຳນິຮຸນແຮງວ່າ...

"ສຫາຍສີຊນະປະພຶຕົນເປັນປະຕິການໃຫ່ຍສາກົລ ກຳລັງປ່ວ່ງບ້າຫາວິທີ ຫັກຫລັງພັຄຢ່າງຄົນລືມຕົວ"

ທີ່ປຶກສາຄົນວຽຕນາມທີ່ຄຸມພັຄຣັຖຢູ່ແນະນຳບໍ່ໃຫ້ຂ້າສີຊນະ ສີສານ ເດັດຂາດ ເພາະວຽຕນາມຮູ້ວ່າຫາກສັງຫານຄົນລາວອິສຣະເກົ່າແກ່ ກໍຍັງມີລາວອິສຣະ ອີກນາກນາຍຢູ່ໃນພັກຣັຖນັ້ນ ຈະເປັນອຸປສັກຕໍ່ແຜນການຣົມວຽຕນາມໃນຂັ້ນ ຕໍ່ໄປ ແລ້ວສີຊນະ ສີສານກໍຖືກປົດອອກຈາກທຸກຕຳແໜ່ງ ບໍ່ໃຫ້ມີອຳນາຈໃດ ໃນວົງສ໌ຈອຣຂອງພັຄຣັຖ.

ທີ່ກ່ຽວກັບສຸພານຸວົງສ໌....

ໃນຊີວິຕຈິງຂອງສຸພານຸວົງສ໌ນັ້ນກໍລົ້ມລຸກຫລາຍເທື່ອຫລາຍທີ ເພາະມີ ການແຍ້ງຊິງອຳນາຈກັນກັບໄກສອຣ ພຣົຫົມວິຫານຕາມແຜນການຣົມ ຂອງ ພວກວຽຕມິນຫ ໃນເມື່ອກ່ອນ ໂດຍຫລອກເອົ້າສຸພານຸວົງສ໌ໃຫ້ເປັນຜູ້ຕ້ານໜ້າ ຊົນຊາວລາວທ່ວປະເທສໃນການກອບກູ້ເອົ້າເອກຣາຊຈາກຝຣັ່ງເສສ ວຽຕ ນາມຮູ້ເລິກເຊິ່ງວ່າ ຫາກຈະຄວບຄຸມອຳນາຈໃນພັກຣັຖລາວຄອມມິວນິສຕ໌ນັ້ນ ຈະບໍ່ແມ່ນລາວເຊື້ອກະສັຕຣຍ໌ຫລືຄົນລາວອິສຣະຜູ້ອື່ນໆເດັດຂາດ ສນັ້ນຄົນ

ທີ່ຈະສາມາຣຖ໊ຣັບໄຊ້ແຜນກາຣນ໊ຂອງວຽຕນາມເໜືອ ຕ້ອງເປັນຄົນທີ່ມີເລືອດ
ວຽຕນາມຢູ່ໃນຮ່າງກາຍ.

ມັນເປັນໄປໄດ້ສູງທີ່ມີຜູ້ຂຽນປະວັຕຊີວິຕຈິງຂອງໄກສອຣ ພຣ໊ທ໌ມວິທາຣ ໃຫ້ຜິດໆຖືກໆເພື່ອຜົລປໂຍຊນ໊ທາງກາຣເມືອງ ແລ້ວນັກຂຽນລາວກໍລອກກ໋ານ ມາຂຽນຕໍ່ໆກັນໄປດັ່ງໃນເອກສາຣສບັບໜຶ່ງຂຽນວ່າ ພໍ່ຂອງໄກສອຣ ພຣ໊ທ໌ມວິ ທາຣທີ່ເປັນຄົນວຽຕນາມຊື່ TRAN LOAN ຢູ່ໃນເອກສາຣ "ບັ້ງໄຟລາວ" ຂຽນ ວ່າ NGUYEN TRI LOAN ແມ່ຊື່ນາງດົກ ເປັນລາວຊາວບ້ານນາເຊັ້ງໄກ້ໆກັບ ສວັຣຄ໌ນະເຂຕ ໄກສອຣມີຊື່ວຽຕນາມວ່າ TRAN KE SON ແຕ່ບັ້ງໄຟລາວ ສບັບທີ 08 ປະຈ໋າເດືອນກໍຣະກະດາ-ສິງຫາ 2009 ຂຽນວ່າ NGUYEN CAI SONG ໄກສອຣມີຊື່ນອ້ຍວ່າ QUOC ເກີດທີ່ສວັຣຄ໌ນະເຂຕ ແຕ່ຜູ້ຂຽນຄົ້ນພົບ ເອກສາຣສບັບລ່າສຸດກ່ອນສິ່ງບົ໋ທຂຽນເຂົ້າໂຮງພິມພ໌ພຽງອາທິຕຍ໌ຽ ຂຽນ ໄວ້ວ່າ ໄກສອຣບໍ່ແມ່ນລູກປະສົມລາວ-ວຽຕແຕ່ປະກາຣໃດ ເພາະພໍ່ແມ່ຂອງ ໄກສອຣເປັນຄົນວຽຕນາມ ພໍ່ຊື່ NGUYEN DOC LOAN ເປັນອາຈາຣຍ໌ສອຣ ພາສາຝຣັ່ງເສສ ແມ່ຊື່ NGUYEN THI HO ສ່ວນໄກສອຣມີຊື່ວຽຕນາມວ່າ NGUYEN AI DOC ເກີດທີ່ຣາໂນ່ຍ ເມື່ອມີອາຍຸ 4 ປີກ໋ວ່າພໍ່ແມ່ກໍປະຣ້າງກັນ ພໍ່ດີພໍ່ຂອງໄກສອຣຖືກຝຣັ່ງສັ່ງຍ້າຍມາສອຣໜັງສືທີ່ສວັຣຄ໌ນະເຂຕ ຈຶ່ງໄດ້ນ໋ຳ ເອົາລູກຊາຍນ້ອຍເຂົ້າມາຍັງລາວ ຕໍ່ມາກໍໄດ້ແຕ່ງງານກັບນາງດົກແລ້ວຈຶ່ງ ປ່ຽນຊື່ລາວໃຫ້ລູກວ່າ...ທ້າວໄກສອຣ.

ໄກສອຣນ້ອຍເຣີ່ມຣຽນໜັງສືທັ໋ງພາສາລາວແລະພາສາຝຣັ່ງເສສ ແຕ່ ຊັ້ນປະຖົມ 1-2-3 ຈາກນັ້ນຈົນຈົບປະຖົມ 6 ຣຽນແຕ່ພາສາຝຣັ່ງເສສ ກ່ອນ ຖືກພໍ່ສົ່ງກັບໄປຣຽນມັທະຍົມໃນຣາໂນ່ຍຊຶ່ງເປັນເມືອງຂອງພໍ່ແມ່ ໄກສອຣກໍ ຈຶ່ງມີນິສັຍຄົນວຽຈນາມເຕັມຮ້ອຍເປີຣເຊັນ ໄກສອຣປາກເວົ້າພາສາລາວໄດ້ ແຕ່ບໍ່ຮູ້ຄ໋ຳສັພທ໌ເລິກເຊິ່ງ ແລະໄກສອຣ ພຣ໊ທ໌ມວິທາຣບໍ່ມີຄວາມສາມາຣຖ໊ ຂຽນປື້ມໃຫ້ເປັນຕາອ່ານໄດ້ ແຕ່ທີ່ເຫັນມີປື້ມຕ່າງໆກ່ຽວກັບກາຣປະຕິວັຕຂອງ ໄກສອຣນັ້ນແມ່ນນັກກາຣເມືອງຄົນວຽຕນາມຊື່ NGUYEN CHONG VINH ຫົວ ໜ້າ PC/38.ເປັນຄົນຂຽນແລ້ວໃສ່ຊື່ໄກສອຣເພື່ອຍົກຍ້ອງໄກສອຣວ່າ ເປັນນັກ ປະຕິວັຕຄົນເກ່ັ ທີ່ສ໋ຳຄັນແມ່ນເລ່ັ ງໃສ່ເພື່ອປົກປິດແຜນກາຣນ໊ສົກະປົກຂອງ ວຽຕນາມທີ່ມີຕໍ່ຣາຊອານາຈັກຣ໌ລາວເຊ່ັ ນໜັງສື (20 ປີແຫ່ງກາຣຕໍ່ຕ້ານແລະ ສິບປີສ້າງພັຄ+1/4 ສະຕະວັສແຫ່ງກາຣປະຕິວັຕລາວ ອ່ານ້ອຍສົງຄາມປະຊາ

ຊົນ+ບາດລ້ຽອປະວັຕິສາສຕຣ໌ລາວຫລັງສັນຍາວຽງຈັນຫນ໌ 21 ກຸມພາ 1973 ເປັນຕົ້ນ.

ພາຣະໜ້າທີ່ສຳຄັນທີ່ສຸພານຸວົງສ໌ມີມາໃນອຕີຕນັ້ນມາກມາຍ ເຊັ່ນຫລ້ນໂຮມກຳລັງລາວອິສຣະຕໍ່ຕ້ານການກັບເຂົ້າມາປົກຄອງລາວຮອບທີ 2 ຂອງກຳລັງທຫາຣຝຣັ່ງເສສທີ່ທ່າແຂກໃນເດືອນມິນາປີ 1946 ແລ້ວກໍຖືກຝຣັ່ງຂັບໄລ່ຈົນແຕກໜີໄປເມືອງໄທຍ ພໍເຖິງທ້າຍປີ 1949 ກໍໄປຫາວຽຕນິນຫ໌ຢູ່ໃນພາຄເໜືອວຽຕນາມ ເຂົ້າເປັນສະມາຊິກສຫະພັນທະຣັຖອິນດູຈີນໃນປີ 1951 ໄປປະຊຸມບັຣຫາລາວທີ່ນະຄອຣເຈນີວາໃນ 1954 ເຂົ້າຮ່ວມປະຊຸມແກ້ໄຂບັຣຫາລາວທີ່ຢ່າງກຸ້ງໃນພະມ້າເມື່ອປີ 1957 ໄດ້ຮັບເລືອກໃຫ້ເປັນຜູ້ແທນຣາຊຸດອຣແຂວງວຽງຈັນຫນ໌ໃນປີ 1958 ເຖິງທ້າຍປີ 1959 ຖືກນາຍົກຣັຖມົນຕຣີຜູຍ ຊຸນະນິກອຣສັ່ງຈັບໃສ່ຄຸກໂພນເຄັງ ຕັ້ງແຕ່ເດືອນຫັນວາປີ 1975 -1981 ເປັນປະທານເທສລາວໃນຣະບອບຄອມມິວນິສ໌.

ສຸພານຸວົງສ໌ມີໃຈໃນຄວາມຝັນໃຝ່ຫລາຍຢ່າງ ແຕ່ກໍຖິ້ມນິລທິນທີ່ດ່າງດຳ ແລະຕ້ອຍຕ່ຳໄວ້ໃຫ້ປະວັຕິສາສຕຣ໌ຂອງຊາຕລາວມາກມາຍໃຫ່ຍຫລວງ ສຸພານຸວົງສ໌ສັລຍ໌ເສົ້າເສັຍໃຈທີ່ຖືກວຽຕນາມຫລອກຈົນເປື່ອຍເລະ ຫັ້ງຖືກໄກສອຣຕັດໜ້າ ຈົນບໍ່ສາມາຣຖ໌ແກ້ຕົວໄດ້ເຖິງວັນຫລັບຕາຕາຍໃນນະຄອຣວຽງຈັນຫນ໌ ສຸພານຸວົງສ໌ມີປົ້ນດອ້ຍນອ້ຍເມື້ອຕ່ຳໃຈໃນຄວາມຜິດຂອງຕົນທີ່ວຽຕນາມເໜືອຍືນມືໄກສອຣ ພຣ້ທົ່ມວິຫາຣຜູ້ບໍ່ເຄີຍຈັບປືນຕໍ່ສູ້ໃນສນາມຣົບສນາມເລືອດແຫ່ງໃດໃນປະເທສລາວເຊັ່ນຂ້າໃຈຕົນເອງຢ່າງໂຫດຫ້ຽມ ຫອ້ງໃຈສຸພານຸວົງສ໌ມີຮອຍບາບມີນິລທິນຖ້ວມຖົມຢູ່ເຕັມໄປໝົດ ຕາຍແລ້ວເກີດຮອ້ຍຊາຕພັນຊາຕກໍ່ບໍ່ສາມາຣຖ໌ໄຖ່ຖອນຫລ້ລ້າງລ້ຶບໃຫ້ຮອຍບາບແສນແສບ ທີ່ຈົ່ມແຈບຢູ່ໄຕ້ເລ່ທ໌ກ໊ລກາຣເມືອງຂອງວຽຕນິນທ໌ ຊຶ່ງເປັນປຸຖຸຊົນຄົນຫັ້ມມະດາຍົບຍື່ນໃຫ້ເຊືອກະສັຕຣຍ໌ແຕກພຣະຣາຊວັງ ຢ່າງສຸພານຸວົງສ໌ມາເກືອບ 5 ທ໌ສວັສນັ້ນອອກຈາກຜົ້ງໃຈຂອງຕົນໄດ້.

ຊີວິຕກາຣເມືອງຂອງສຸພານຸວົງສ໌ ບໍ່ຣາບຮື່ນສຸຂສັນຕ໌ເໝືອນວັນແຫ່ພະເວດເຂົ້າເມືອງໃນຕົ້ນເດືອນເມສາ 1974 ເພາະມັນມີອາຖັນພ໌ສົມດັ່ງຄຳເຂົ້າຫວ້ົາວ່າ "ບໍ່ແມ່ນຫ້ົາແຫ່ພະເວດແລະຜີຫ່າເຂົ້າເມືອງ ແຕ່ມັນແມ່ນຕ໊ອແທນຂອງແກວເໜືອ ຫາກບໍ່ເຊື່ອຂອ້ຍກໍຖ້າເບິ່ງໂລດ" ມັນກໍຖືກເໝືອນເອົ້າກຳປັ້ນຊັດແຜ່ນດິນ ເພາະຫລັງຈາກມີສັນຍາມິຕຣ໌ພາພພິເສສລາວ-ວຽຕຄັ້ງວັນທີ 18

ກໍຣະກະດາ 1977 ເກີດຂຶ້ນແລ້ວ ກໍມີເຈົ້າໜ້າທີ່ແລະທຫາຣນອກເຄື່ອງແບບ ຂອງວຽຕນາມເໜືອປະມານ 5 ແສນຄົນ ປະສົມກັນກັບຄົນວຽຕນາມພົລເຮືອນ ກວ່າ 3 ລ້ານຄົນຫລັ່ງໄຫລເຂົ້າມາຢູ່ໃນແຜ່ນດິນລາວ ບໍ່ແມ່ນແຕ່ເປັນພາພ ພົຈນ໌ທີ່ເຮັດໃຫ້ຄົນລາວເບິ່ງຍາກເທົ່ານັ້ນ ແຕ່ຍັງເປັນພາບຖັ່ງແກ້ວຕາ ແລະ ບາດໃຈໃຫ້ເປັນຮອຍແຜເລິກແກ່ສຸພານຸວົງສ໌ ມັນຊ່າງອັບອາຍຂາຍໜ້າທີ່ສຸ ພານຸວົງສ໌ທລອກລວງປະຊາຊົນລາວ ສຸພານຸວົງສ໌ອາຈບໍ່ໄດ້ຮັງກຽຈຄົນວຽຕ ນາມເຊື້ອເມັຍຂອງຕົນ ແຕ່ກໍປອດໃຈທີ່ຣາໂນ່ຍທັກທລັງບໍ່ປະຕິບັຕຕາມສັນຍາ ທີ່ໃຫ້ກັນໄວ້ ສຸພານຸວົງສ໌ຈຶ່ງຊໍ້າໃຈຕາຍ ໂດຍກ້ຳກືນເອົາຄວາມຜິດຫວັງເຂົ້າ ໄວ້ໃນທີບສົພໃຫ້ເຂົ້າເຜົ້າຖົ່ມເປັນເຖົ້າຖ່ານຢ່າງຄົນພ່າຍແພ້ປຣາໄຊຍ ທັ້ງອັບ ອາຍຂາຍໜ້າແລະສົມເພຊທີ່ສຸດ ວິນຍານຂອງສຸພານຸວົງສ໌ຕ້ອງຄ້າງຫລົ້ງ ຢູ່ຕາມປ່າດົງພົງພຶກສ໌ໄປອີກຫລາຍຊົ່ວຊາຕ ຫລືອາຈນານຊົ່ວອະສົງໄຂຍ໌ ເພາະແມ່ນເມື່ອທັ້ງສຸພານຸວົງສ໌ແລະໄກສອຣ ພຣົຫ໌ມວິຫາຣໄດ້ພາກັນລວ່ງລັບ ດັບຂັນທ໌ໄປແລ້ວກໍຕາມ ແຕ່ຄວາມຊັ້ງທີ່ໄກສອຣມີຕໍ່ສະກູລສຸພານຸວົງສ໌ນັ້ນ ຍັງສຖິຕຍ໌ຢູ່ຕໍ່ມາ ມັນຣໍ້າຈົນນາຍໄຊຍສົມພອຣ ພຣົຫ໌ວິຫາຣລູກຊາຍໄກ ສອຣມີອຳນາຈແລ້ວກໍອາລາຕນາຍ ຄຳໄຊຍ ລູກຊາຍຄົນທີ 3 ຂອງສຸພານຸ ວົງສ໌ຈົນຟັ້ງອອກໄປລີ້ພັຍໃນປະເທສນິວຊີແລນດ໌.

ນາຍ **CHRISTOPHER KREMMER** ນັກໜັງສືພິມຜູ້ດັ້ງຊາວອອສຕເຣ ເລັຍໄດ້ເຂົ້າໄປເຖິງນະຄອຣວຽງຈັນທມ໌ໃນຊ່ວງປີ 1993 ຂນະດຽວກັນກັບທີ່ ສຸພານຸວົງສ໌ກຳລັງປ່ອຍໜັກຢູ່ທີ່ເຮືອນພັກໃນໂພນສະອາດ ຈຶ່ງມີໂອກາສລັກ ລອບເຂົ້າໄປສັມພາສນ໌ ຊຶ່ງສຸພານຸວົງສ໌ກໍໄດ້ສວຍໂອກາສໃຫ້ສັມພາສນ໌ເພື່ອ ສາຣະພາບຜິດຂອງຕົນໃນອດີຕ ໃຫ້ແກ່ນັກໜັງສືພິມຜູ້ກ້ອເມືອງຈົງໂຈ້ ແລະ ຖືກແປເປັນພາສາລາວເອົາໄວ້ແລ້ວດັ່ງນີ້...

"ຂອ້ຍກາຍເປັນຄົນຫູໜວກຕາບອດ ຍອ້ນຫລົ້ງຄວາມສວຍງາມຂອງສຕຣີ ຈົນກາຍເປັນຄວາມຜິດພາດໃຫ່ຍຫລວງໃນຊີວິຕຂອງຂອ້ຍ.ຂອ້ຍບໍ່ເຄີຍຄິດຈັກ ໜ່ອຍວ່າພວກວຽຕນິນຫ໌ຈະມີພຶຕຕິກັມໂຫດຮ້າຍກັບປະເທສລາວແລະຊົນຊາວ ລາວເຖິງຂນາດນີ້....ໃນຊ່ວງທີ່ຂອ້ຍກົ້ມໜ້າໄປຂໍຄວາມຊ່ວຍເຫລືອພວກເຂົ້າ ເພື່ອທຳການກູ້ຊາຕນັ້ນ ໄດ້ສັນຍາກັນໄວ້ວ່າເມື່ອສົງຄາມສິ້ນສຸດລົ້ງແລ້ວ ຄົນ ວຽຕນາມກໍຕ້ອງກັບຄືນໄປປະເທສວຽຕນາມ ສ່ວນຄົນລາວກໍເຂົ້າຢູ່ປະເທສ ລາວ ເຖິງວ່າສັນຍາມິຕຣພາພລາວ-ວຽຕແບບບ້ານພີ່ເມືອງນ້ອງຍັງໃຊ້ໄດ້ຢູ່

ກໍຕາມ.

ເມື່ອຂອ້ຍຕາຍກໍຖືກເອົາມຳຂຶ້ນເຜົາ ແລ້ວກໍກາຍເປັນເຖົ່າຖ່ານຫາຍໄປ ແຕ່ທີ່ພວກອຸຕນາມກະທຳຕໍ່ປະເທສຂອງຂອ້ຍນັ້ນ ຈະບໍ່ອັນຢຸດເຊົ່າຈັກເທື່ອ ໃນເມື່ອກອ່ນຂອ້ຍບໍ່ສາມາຣຖ໌ເວົ້າອອກມາໄດ້ ມີແຕ່ເກັບເອົາມັນໄວ້ພາຍໃນ ສອ່ນເລິກຂອງຫົວໃຈເທົ່ານັ້ນ.

ດັ່ງນັ້ນຕໍ່ໜ້າເຫຕຸຮ້າຍໃນປະເທສລາວຂອງຂອ້ຍນີ້ ຈຶ່ງຂໍຮຽກຮ້ອງມາ ຍັງພີ່ນ້ອງຮ່ວມຊາຕທັ້ງຊາຍຍິງລູກຫລານບັຮດາເຜົ່າແລະຜູ້ຊົ່ວຄຸນວຸທິ ຈົ່ງ ຮ່ວມແຮງໂຮມໃຈໃຫ້ເປັນອັນດຽວກັນຊ່ວຍສຳຮະລ້າງໂທສກັມທີ່ຂອ້ຍສ້າງໄວ້ ໃຫ້ປະເທສຊາຕແລະຊັພຍ໌ສົມບັຕຣ໌ຂອງປະຊາຊົນ ຮັກສາຊີວິຕແລະຄວາມ ເປັນຊາຕລາວໃຫ້ໝັ້ນຄົງດອ້ຍ.

ພີ່ນ້ອງຮ່ວມຊາຕທີ່ຮັກແພງທັ້ງຫລາຍ...ເປັນຕົ້ນແມ່ນເອື້ອຍອ້າຍນ້ອງ ທີ່ຢູ່ໃນຕ່າງປະເທສນັ້ນເປັນຜູ້ຮັກຊາຕຫລາຍທີ່ສຸດ ພວກເຈົ້າເຫັນກາຣໄກ ມີ ຄວາມຮູ້ຄວາມສລາດ...ພວກເຈົ້າຢ່າປະປ່ອຍໃຫ້ປະເທສເຮົາຕາຍດອ້ຍກາຣ ຖືກດັບສູນຍ໌.

ສອ່ນພວກພີ່ນ້ອງທີ່ຢູ່ພາຍໃນປະເທສຈົ່ງປະຕິຮູປຕົນເອງ ກ້າວເດີນໃນ ທາງສາຍໃໝ່ໃຫ້ສອດຄລ່ອງກັບແນວຄິດລາວນອກຢູ່ໃນຕ່າງປະເທສ.ຫາກພວກ ເຈົ້າພາກັນເຂົ້າໃຈໃນສພາພກາຣນບ້ານເມືອງດີ ແລະປະຕິບັຕຕາມຄຳຮຽກ ຮ້ອງຂອງຂອ້ຍນີ້ ພວກເຈຂ້ົາຈະຢູ່ດີກິນດີໝັ້ນຄົງ.

ກອ່ນທີ່ຂອ້ຍຈະຫລັບຕາຕາຍນີ້ ຂໍຝາກຄຳຮຽກຮ້ອງໄວ້ໃຫ້ພີ່ນ້ອງລາວ ທຸກຄົນຈົ່ງເອົາໃຈໃສ່ບາກບັ່ນປະຕິບັຕ. ຂອ້ຍເຊື່ອທີ່ສຸດວ່າປະເທສລາວຂອງ ພວກເຮົາຕ້ອງໝັ້ນຄົງຕລອດໄປ".

ເປັນຄຳໂອດໂອຍທີ່ບໍ່ໄດ້ຮັບຄວາມສົງສານ ແລະຍາກແກ່ກາຣໃຫ້ອະພັຍ ຫາກຄິດໃສ່ຜົລກັມທີ່ສຸພານຸວົງສ໌ກະທຳກັບຊາຕລາວ ຊັກນຳເອົາກຳລັງທຫາຣ ອຽຕນາມເໜືອມາຮຸກຮານລາວແຕ່ທ້າຍປີ 1959 ເປັນຕົ້ນມາ ຈົນຊາຕລາວ ຖລຳເລິກເຂົ້າສູ່ຄວາມມືດມົນທ໌ຕ່ຳຕອ້ຍ ຂາດສິທທີ່ເສຣີພາພທາງກາຣປາກ ເວົ້າແລະຍິດຂຽນ ຂາດສິທທີ່ໃນກາຣແສດງອອກທາງກາຣເມືອງ ປະເທສ ລາວຕ້ອງທຸພົລພາພເພາະຂາດຄວາມເປັນທັມ ສຳຄັນແມ່ນມີກາຣລ່ວງຣະ ເມີດສິທທີມະນຸສຍ໌ ສຸພານຸວົງສ໌ສ້າງຄວາມຜິດທີ່ແສນສະກັນຈໂ້ອ້ໃຫ້ຊາຕ ລາວມາກມາຍຈົ່ງມາໂອດໂອຍຂໍຄວມເຫັນໃຈເມື່ອທຸກຢ່າງມັນສວາຍ ຖິ້ມມົລ

ທິນຕ່ຳຕອ້ຍອາມາຖາໄວ້ໃຫ້ລູກໆທີ່ມີຊີວິຕຢູ່ຫ້ວ 9 ຄົນຂອງຕົນ ບໍ່ສົນຄ່າທີ່ ສຸພານຸວົງສ໌ພາເກືອກກ້ອຢູ່ກັບລັທທິຄອມມິວນິສ ເພາະຖືກພັຄຣັຖທີ່ສຸພາ ນຸວົງສ໌ມີສອ່ນສ້າງມັນມາປະຖິ້ມ ສຸພານຸວົງສ໌ຮອ່ມກັບເຈ້ຳສຸວັນນາພູມາປະ ຕິບັຕຄຳສັ່ງໄກສອຣ ພຣົທ໌ມວິຫາຣ ຜູ້ບອກໄດ້ໄຊ້ສະດວກສບາຍຂອງວຣຕ ນາມທຳລາຍສຖາບັລກະສັຕຣຍ໌ລາວຢ່າງລູກເມຣະຄຸນແລະທໍຣະຜີ (ອ່ານປັ້ນ ໃຜຂ້າກະສັຕຣຍ໌ລາວ) ເພາະເຊື່ອແຕ່ຣະບອບຄອມມິວນິສ໌ວ່າຈະພາຕົນເອງ ແລະຄອບຄົວກ້າວສູ່ຈຸດສຸດຍອດເຖິງວັທນາຖາວອນ ຝັກໃຝ່ໄຫລຫລົ່ງອຳ ນາຈທັ້ງໆສີ່ເຈ້ຳເພັຊຣາຊ້າຍເຕືອນແລ້ວວ່າ "ບໍ່ໃຫ້ເຊື່ອໃຈແກວ ເພາະໃນ ປະວັຕິສາສຕຣ໌ລາວນັ້ນແກວບໍ່ໄດ້ຮັກລາວຢ່າງຈິງໃຈຈັກເທື່ອ " ແຕ່ເມື່ອສຸພາ ນຸວົງສ໌ກຳລັງຕາບອດແຈ້ງຈິ່ງແກ້ງຫົວດີ້ແລ່ນຕາມຫລັງວຣຕມິນທ໌ ຈົນກາຣ ເມືອງລາວປ່ຽນໂສມໜ້າມັນໄປຣັບໄຊ້ລັທທິຜດັດກາຣ ເມື່ອວິເຄາະຫ໌ຄຳສາ ຣະພາບຜິດຂອງສຸພານຸວົງສ໌ຂ້າງເທິງໃຫ້ລັກແມ່ກໍຈະພົບວ່າ ຜູ້ກ່ຽວໄດ້ສ້າງ ໂທສກັມທີ່ບໍ່ມີໃຜເຫັນໃນເບື້ອງຕົ້ນ ແຕ່ຜົລດີທາງພິນັຍກັມບັ້ນປາຍແມ່ນວຣຕ ນາມເໝືອໄດ້ຣັບ ສນັ້ນຈິ່ງເວົ້າໄດ້ວ່າສຸພານຸວົງສ໌ບໍ່ແມ່ນພະເອກຄົນດີຫລືຄົນ ເກ່ັ່ງຂອງຊາຕລາວ ເພາະຜູ້ກ່ຽວເປັນຕົ້ນເຫຕຸທັ້ງໝົດໃຫ້ຊາຕລາວ ແລະຊົນ ເຜ່ົາລາວໄດ້ຣັບຢູ່ໃນປັຈຸບັນ.

ສຸພານຸວົງສ໌ໂອຍໂອດອ້ອນວອນກອ່ນຫລັບຕາຕາຍຕໍ່ຄົນລາວ ທີ່ສຸພານຸ ວົງສ໌ເອງປະນາມວ່າ "ພໍ່ແມ່ມັນເປັນປະຕິກາຣແລະລູກເຕ້ົາເຫລ່ົາຫລານມັນກໍ ເປັນປະຕິກາຣ" ທັ້ງທີ່ຕົນເອງເປັນປະຕິກູລຕ໋ອເອກເຂ້ັ່ນຂ້າຄົນລາວ ແລະເຊ້ືອ ນ່ໂລຕຣ໌ຂອງຕົນເອງໃຫ້ຕາຍທຸກຂ໋ທໍຣະມານ ຢູ່ຕາມຄຸກສັມມະນາທ໋ອປະເທສ ຢ່າງຄາຕກອຣມີເປ້ືອນເລືອດບໍ່ນອ້ຍໄປກວ່າໄກສອຣ ພຣົທ໌ວິຫາຣ ແລະພວກ ຜູ້ນຳຜເດັດກາຣລາວທຸກຍຸຄສມັຍຄົນອ່ືນໆເລີຍ ສຸພານຸວົງສ໌ຈິ່ງເປັນຂ໋ຖປະ ເທສຊາຕທີ່ຄົນລາວບໍ່ອາຈໃຫ້ອພັຍເຂ໋ົາອີກ ແມ່ນວ່າເຂ໋ົາໄດ້ດັບຂັນທ໋ໄປແລ້ວ ກໍຕາມ ຜົລງານທີ່ໄຮ້ຄ່າແລະສນຽດຈອງຫອງທີ່ເຂ໋ົາສ້າງເອ໋ົາໄວ້ໃນອດີຕນັ້ນ ຍັງຄ໋ົາງຄ້າງຄູ່ແຜ່ນດິນລ້ານຊ້ າງແລະຊົນຊາຕ-ເຜ່ົາລາວຢູ່ຕໍ່ມາ.

ກາຣຕາຍຂອງສຸພານຸວົງສ໌ມີຣະແວງມີປຣິສນາ ຫາກອ່ີງຕາມເອກສາຣ ຫລາຍສບັບທີ່ຄົນລາວນອກຂຽນອອກໃນທະວີບອາເມຣິກາເຊ້ັ່ນຢູ່ໃນປ້ັ ທີ່ຊ້ ື່ ວ່າ "16 ປ ີ ໃນແດນມັຈຸຣາຊ" ຂອງທ່ານອະທິກາຣຕຳຣວຈເອກນະຄອຣຄຳ ບຸບຜານຸວົງສ໌ ຊ ຶ່ງພິມພ ໍ ອອກຈຳ ໜ ່ າຍໃນເດ ືອນມ ິ ກຣາປ ີ 2000 ຢ ູ ່ ໃນໜ ້ າທ ີ

280 ຂຽນເອົາໄວ້ວ່າ ຜົລສະທ້ອນຈາກຄວາມຫລົ້ມແຫລວໃນການຜິປອງກໍ່ ຣັຖປະຫານໂຄ່ນລົ້ມອຳນາຈຂອງວຽຕນິນຫ໌ໃນອດີຕ ຂອງລູກຊາຍກົກອະທິຍະ ສຸພານຸວົງສ໌ກັບພວກ 3ຕດ(3 ໄຕ້ດິນ)ຈົນຖືກຂ້າຕາຍໃນບ້ານນາລວງເທື່ອນັ້ນ ຊຶ່ງວຽຕນິນຫ໌ເຊື່ອວ່າມີສຸພານຸວົງສ໌ຊັກໄຍຢູ່ເບື້ອງຫລັງນັ້ນຕາມສນອງ ແຕ່ທີ່ ພວກວຽຕນິນຫ໌ບໍ່ຍອມຂ້າສຸພານຸວົງສ໌ຕອນນັ້ນ ກໍເພາະຍັງຕ້ອງການຫລອກໃຊ້ ສຸພານຸວົງສ໌ອີກຕໍ່ໄປ ຈົນມາເຖິງປີ 1993 ຈຶ່ງເປັນຮອບຂອງສຸພານຸວົງສ໌ເອງ ນອກຈາກຖືກຈຳກັດໃຫ້ເປັນຫຸ່ນນັ່ງເຝົ້າຕົ່ວປະຫານປະເທສລາວແລ້ວ ແກວ ແດງຍັງໄດ້ສັກຢາໃຫ້ສຸພານຸວົງສ໌ເປັນອັມມະພາຕໄປແລ້ວເຖິງແກ່ຄວາມຕາຍ ໃນຕົ້ນປີ 1995 ສອນນາຍພົລບຸນຍ ພຣົຫ໌ມມຫາໄຊຍທີ່ເປັນໜຶ່ງໃນ 3ຕດ ນັ້ນ ກໍຖືກຈັບເຂົ້າຄຸກຄືນອີກໃນຂໍ້ຫາວ່າເປັນຄົນຍຸຍົງສິ່ງເສີມໃຫ້ນັກສຶກສາດົ້ງໂດກ ປະທ້ວງການປົກຄອງຜເດັດການຂອງພັກຣັຖໃນທ້າຍປີ 1979-1980 ແລ້ວ ກໍບໍ່ມີໂອກາສໄດ້ຮອດພົ້ນອອກມາອີກເລີຍຕາມທີ່ໄດ້ກ່າວມາກ່ອນແລ້ວ ໃນປີ ຕໍ່ມາກໍສັກຢາຂ້າເດືອນ ສູນນາຣາຊຸແລະນາຍສາລີ ວົງສ໌ລຳຊາວ ຢູ່ໃນເອກ ສາຣອີກສບັບໜຶ່ງ ກໍຂຽນບັຣຍາຍເຖິງເບື້ອງຫລັງການຕາຍຂອງສຸພານຸວົງສ໌ ໃນທຳນອງດຽວກັນແຕ່ໄດ້ເພີ່ມເອົາຄຳຈົ່ມເສັຍໃຈຂອງນາງຫວວຽນຖີ ກິນາມ ຫລືມອ່ມວຽງຄຳຜູ້ເປັນເມັຍຂອງສຸພານຸວົງສ໌ເອົາໄວ້ວ່າ...

"ຜົວຂອງຂ້ອຍເປັນຄົນແຂງແຮງດີເຖິງມີອາຍຸແກ່ແລ້ວກໍຕາມ ແຕ່ເພິ່ນຍັງ ອອກກຳລັງກາຍໄດ້ຢູ່ ພໍອອກມາຈາກກວດສຸຂພາບໃນໂຮງພຍາບາລສຸພາ ນຸວົງສ໌ກໍເຣີ່ມເປັນລອຍ ຜົວຂອງຂ້ອຍຢູ່ດີໆກໍມີຄົນມານຳເອົາໄປສັກຢາ".

ມີວາຣະສາຣອີກສບັບໜຶ່ງຊຶ່ງພິມພ໌ອອກຈຳນ່າຍໃນອາເມຣິກາ ທີ່ຂຽນ ບົທຄວາມກ່ຽວກັບສາເຫຕຸການຕາຍຂອງສຸພານຸວົງສ໌ ເໝືອນຖິ້ມປຣິສນາໄວ້ ໃຫ້ຄົນລາວທີ່ອ່ານພົບເກັບໄປຄິດ ບົທຂຽນດັ່ງກ່າວແມ່ນລອກກ່າຍອອກມາ ຈາກໜັງສືພິມພ໌ຊື່"ຄວາມຫວັງໃໝ"ທີ່ອອກໃນນະຄອຣວຽງຈັນທນ ຊຶ່ງເປັນບົທ ຂຽນຕຳນິຕິຕຽນການສ້ຣາຊບັງຫລວງຂອງພັຄຣັຖ ແລະກັບເຣື່ອງທີ່ໄກສອຣ ພຣົຫ໌ມວິຫານທຳການລັກເຊັນສັນຍາມິຕຣ໌ພາພພິເສສລາວ-ວຽຕຄັ້ງວັນທີ 18 ກໍຣະກະດາ 1977 ຣະຫວ່າງໄກສອຣແລະນາຍຟາມວັນດົ່ງຂອງວຽຕນາມ ເໝືອຕາມລຳພັ້ງພຽງສອງຄົນ ເພື່ອມອບເມືອງລາວໃຫ້ຢູ່ໃນອາຣັກຂາຂອງ ວຽຕນາມນານຂັ້ນຕົ້ນເຖິງ 25 ປີ ແລະຕໍ່ກັນອີກຄັ້ງລະສິບປີໂດຍເນັ້ນວ່າແມ່ນ ແຕ່ສຸພານຸວົງສ໌ຜູ້ເປັນປະຫານປະເທສກໍບໍ່ເຄີຍໄດ້ຮູ້ຈັກນຳເລີຍ ບົທຄວາມນັ້ນ

ພຍາຍາມບອກກົກວ່າແມ່ນບົທຂຽນ "ຜີ" ຢູ່ນອກພັລເປັນຄົນຂຽນເພື່ອປະທ້ວງ ຄວາມເປັນຜເດັດກາຣຂອງໄກສອຣ ພຣົທ໌ວິທາຣຢ່າງເຜັດຣ້ອນທີ່ສຸດ.

ໜັງສືພິມພ "ຄວາມຫວັງໃໝ" ອອກຈຳນ່າຍບໍ່ເຖິງ 2 ຊົ່ວໂມງຊໍ້າ ກໍເກີດ ອຸ້ນວາຍກັນໃຫ່ຍພາຍໃນຂບວນກາຣນ໌ພັລຣັຖ ຮວມທັງພວກປັນຍາຊົນທີ່ອ່ານ ພົບ ຄົນທີ່ຕື່ນສະເດີດຈົນຕາສວດກວ່າໃຜໆກໍຄືລູກຂອງໄກສອຣ ພຣົທ໌ມວິທາຣ ເອງ ແລະທີ່ປຶກສາຄົນວຽຕນາມທີ່ຄວບຄຸມກາຣເມືອງຂອງພັລຣັຖຢູ່ ແມ່ນສຸ ພານຸວົງສ໌ທຳເສັຍເມັຍເປັນທອງບໍ່ຮູ້ຮ້ອນຢູ່ກໍຕາມ ແຕ່ຍາມໃດວຽຕນາມເໜືອ ກໍບໍ່ເຄັຍເຊື່ອຄຳສາບານຂອງເຊື້ອກະສັຕຣຍ໌ລາວຈຶ່ງສັ່ງໃຫ້ເຈົ້າໜ້າທີ່ຕຳຣວຈ ຝ່າວທຳກາຣກວດຄົ້ນເຮືອນພັກຂອງສຸພານຸວົງສ໌ທີ່ໂພນສະອາດທັນທີ ຈາກ ຜົລກາຣກວດຄົ້ນໄດ້ພົບວ່າ ບົທຄວາມທີ່ຂຽນຕຳນິຕິຕຽນໄກສອຣ ພຣົທ໌ມວິ ທາຣທີ່ພິມພ໌ລົງໃນໜັງສືພິມພ໌ສບັບນັ້ນແມ່ນຖືກພິມພ໌ອອກຈາກຈັກຣພິມພ໌ດີດພາ ສາລາວຢູ່ພາຍໃນເຮືອນຂອງສຸພານຸວົງສ໌ຈິງໆ.

ຈົນເຖິງກອ່ນພິທີກາຣເປີດຂົວຂ້ວ ມ້ຳຂອງມິຕຣ໌ພາພລາວໄທຍ ໜອງ ຄາຍ-ທ່າເດື່ອທີ່ຫາກໍສ້າງເສັຈສິ້ນລົງໃໝ່ໆ ປະມານໜຶ່ງອາທິຕຍ໌ຕໍ່ມາ ນາຍ ແພທຍ໌ຄົນວຽຕນາມປະຈຳຕົວຂອງສຸພານຸວົງສ໌ ກໍນຳເຊີນຕົວເຂົ້າໄປ CHECK UP ຮ່າງກາຍໃຍ ໂຮງພຍາບາລບາລ ໂດຍອ້າງວ່າເພື່ອບຳຣຸງຮ່າງກາຍໃຫ້ ແຂງແຮງຢູ່ສເມີ ຈຶ່ງຖືກນາຍແພທຍ໌ວຽຕນາມສີດຢາບຳຣຸງເຂົ້າເສັ້ນເລືອດ ແຕ່ພໍກັບມາເຖິງເຮືອນບໍ່ເຖິງ 24 ຊົ່ວໂມງ ສຸພານຸວົງສ໌ກໍຮູ້ສຶກອ່ອນເພັຍໄປທົ່ວ ຮ່າງກາຍ ຈຶ່ງເຂົ້າໃຈທັນທີວ່າຢາທີ່ນາຍແພທຍ໌ວຽຕນາມເໜືອສີດເຂົ້າໄປໃນ ເສັ້ນເລືອດຂອງຕົນນັ້ນມັນບຳຣຸງສຸດຂນາດ ຈົນບໍ່ສາມາຣຖ໌ອອກກຳລັງກາຍ ໄດ້ເໝືອນເດີມ ສຸພານຸວົງສ໌ຮູ້ເຖິງຜິດຂອງຕົນເອງທີ່ດັນໄປຂຽນບົທວິຈາຣນ໌ ປະນາມໄກສອຣ ພຣົທ໌ມວິທາຣທີ່ສຸພານຸວົງສ໌ເອງເຄັຍເຍາະເຍີ້ຍວ່າເຣັດກາຣ ປະຕິວັຕຣຸ່ນຫລັງຕົນຕັ້ງຫລາຍປີ.

ສຸພານຸວົງສ໌ບໍ່ມີໂອກາສໃນນາມອດີຕປະທານປະເທສ ໄດ້ໄປຣ່ວມໃນພິທີ ເປີດຂົວມິຕຣ໌ພາພລາວໄທຍເພາະຍ່າງບໍ່ໄດ້ ຫລັງພິທີເປີດຂົວມິຕຣ໌ພາພສິ້ນ ສຸດລົງ ກະສັຕຣຍໄທຍກໍແວ່ຢ້ຽມມະຄອຣວຽງຈັນທນ໌ ແລະຕ້ອງກາຣທີ່ຈະພົບ ກັບສຸພານຸວົງສ໌ໃຫ້ໄດ້ ເພື່ອຢັ້ຍງາມຖາມຂ່າວແລະຢາກຮູ້ວ່າເພາະເຫຕຸໃດ ປະ ທານປະເທສຈຶ່ງບໍ່ໄປເປັນກຽຣຕ໌ໃນພິທີ ພວກຜູ້ນຳພັລຣັຖທາທາງຂັດຂວາງ ດ້ວຍເຫັລນິກທາງກາຣເມືອງສຸດຂີດ ເພື່ອບໍ່ໃຫ້ກະສັຕຣຍໄທຍໄດ້ພົບກັບສຸພາ

ນຸວົງສ໌ ແຕ່ໃນທີ່ສຸດກະສັຕຣຍ໌ໂທຍກໍໄປຈົນເຖິງໂພນສະອາດ.

ກະສັຕຣຍ໌ໂທຍໄປຢ້ຽມສຸພານຸວົງສ໌ທີ່ນອນລອ່ຍຢູ່ເຖິງຫ້ອງນອນ ຊຶ່ງພັລ ຣັຖລັກຕິດກ້ອງຖ່າຍຮູປເອົ້າໄວ້ເພື່ອສັງເກຕຸການເຄື່ອນໄຫວຂອງສຸພານຸວົງສ໌ ປະຈຳວັນ ສຸພານຸວົງສ໌ຮ້ອງໃຫ້ໂຮຕ່ຳໜ້າກະສັຕຣຍ໌ໂທຍເພາະຄັ່ວແຄ້ນໃຈທີ່ຖືກ ອຽຕນາມເໝືອເຊື້ອພັຣຍາທີ່ຕົນເອງບູຊາມາແທບຕລອດຊີວິຕຫັກຫລັງຫັ້ງຖືກ ໄກສອຣ ພຣົຫວິຫານຫຳແສບ ສຸພານຸວົງສ໌ໄດ້ເລ່ົາຄວາມຈິງທັ້ງໝົດໃຫ້ກະ ສັຕຣຍ໌ໂທຍຟັງ ທັ້ງອ້ອນວອນໃຫ້ການຸນາຫາທາງຊ່ວຍປົດປ່ອຍເອົ້າປະຊຸາ ຊົນລາວໃຫ້ຫລຸດພົ້ນໄປຈາກອຳນາຈເຖື່ອນຂອງວຽຕນາມເໝືອ ກະສັຕຣຍ໌ພູ ມີພົລຂອງໄທຍກໍຕອບແບບຜູ້ມີນາຣະຍາຕດີບອກວ່າ "ຈະພຍາຍາມໃນສິ່ງທີ່ ເປັນໄປໄດ້".

ພໍກັບໄປເຖິງບາງກອກບໍ່ເທົ່າໃດວັນກະສັຕຣຍ໌ໂທຍກໍລົ້ມປ່ວຍລົງ ໂທຣ ປະຈຳສຳນັກກໍຫ້ອງວ່າ ພຣະອົງຄ໌ຕ້ອງຄຳສາບແຊ່ງຂອງກະສັຕຣຍ໌ລາວໃນ ອດີຕທີ່ເຄີຍແຊ່ງສາບໃຫ້ກະສັຕຣຍ໌ໂທຍໃນອດີຕການທີ່ສິ່ງທຫານຣາເຜົ້າອຽ ຈົນທນ໌ເຖິງສາມຄັ້ງສາມຄາວ່າ "ກະສັຕຣຍ໌ໂທຍອົງຄ໌ກໍຕາມທີ່ປ່ອນຕີນຢຽບ ແຜ່ນດິນລາວ ຂໍໃຫ້ເຈັບປ່ວຍຈົນວັນຕາຍ" ແລະຕ່ຳຈາກນັ້ນມາກໍປາກົຖວ່າ ກະສັຕຣຍ໌ພູມີພົລໄດ້ເຈັບປ່ວຍມາຕລອດ.

ໃນບໍ່ເທົ່າໃດເດືອນຕໍ່ມາ ກະສັຕຣຍ໌ພູມີພົລຂອງໄທຍກໍສົ່ງຣາຊກຸມມາຣີ ເທພຣັຕນະສຸດາມາຢ້ຽມຢາມລາວ ເພື່ອທຳພິທີທາງສາສນາແກ້ສາບແຊ່ງໃຫ້ ພຣະບິດາໂດຍສຣະຊັຍ໌ສອ່ນຕ໊ອສ້າງໂຮງລ້ຽງເດັກກຳພ້າໃຫ້ລາວ ທັ້ງສ້ອມ ແປງພຣະທາຕຸເກ່ົາແກ່ທີ່ວັດສີເມືອງ-ທາຕຸຝຸ່ນ-ທາຕຸຫລວງ ແລະອື່ນໆອີກຈຳ ນວນໜຶ່ງ.

ພາຍຫລັງທີ່ສຸພານຸວົງສ໌ຫລັບຕາຕາຍແລ້ວ ໃນຕົ້ນເດືອນມີກຣາ 1995 ນາຍ ທ໋ກ ໄຊຍລູກຊາຍຄົນທີ 3 ຂອງສຸພານຸວົງສ໌ ທີ່ເປັນຣັຖມົນຕຣີເສຖກິຈ ການຄັ້ງກໍຖືກລູກຊາຍຂອງໄກສອຣ ພຣົຫົມອິຫານນາຍໄຊຍສົມພອຣ ຂົ່ມຂູ່ ດ້ວຍອຳນາຈຈົນບໍ່ສາມາຣຖ໌ທົນຢູ່ໃນປະເທສລາວຕໍ່ໄປອີກໄດ້ ຈຶ່ງໄດ້ເອົ້າຕ໊ອ ຫລົບໜີໄປລີ້ພັຍການເມືອງໃນປະເທສນິວຊີແລນດ໌ດັ່ງທີ່ກ່າວມາແລ້ວ./.

ພົບກັນໃໝ່ໃນ

ໃຜຂ້ໍກະສັຕຣຍ໌ລາວ

ທ້າຍເຫລັ້ມຂອງຜູ້ຂຽນ

ຂພຈ ພຽນພຍາຍາມຄົ້ນຄວ້າຫາປະວັຕິສາສຕຣ໌ຈິງຂອງຊາຕລາວຈາກເອກສານຫັງພາສາລາວ+ໄທຍ+ຝຣັ່ງເສສ+ອັງກລິສທີ່ຂຽນໄວ້ ໃນຊ່ວງ 1960-1975 ນີ້ນານເຖິງສິບປີກອ່ນລົງມືຮຽບຮຽງໃຫ້ເປັນເຫລັ້ມໄດ້ ບົທບັນທຶກລັບຂອງທ່ານນາຍພົລຈັຕະວາທອງຣິທທ໌ ໂຈກເບັ້ງບຸນຍ໌ ທີ່ຂຽນໄວ້ກອ່ນເຖິງແກ່ກັມໃນຝຣັ່ງເສສນັ້ນມີສຳຄັນ ເພາະທ່ານຢູ່ໃນ 3 ເຫຕຸການໃຫ່ຍໆຕັ້ງແຕ່ເປັນນາຍຮ້ອຍເອກຈົນເປັນພັນໂທຄືຢູ່ໃນການກໍ່ຣັຖປະຫານຂອງຮ້ອຍເອກກອງແລໂຮແລັ້ງຄັ້ງວັນທີ 09 ສິງຫາ 1960-ຣັຖປະຫານຂອງນາຍພົລສີໂຫ ລານພຸທທະກູລ 19 ເມສາ 964 ແລະຣັຖປະຫານຂອງພັນເອກບຸນຍ໌ເລີດ ໄຊຍໂກສີຊຶ່ງມີນາຍພົລຕຣີພູມີ ນໍ່ສວຣັຄ໌ຢູ່ເບື້ອງຫລັງຄັ້ງວັນທີ 21 ກຸມພາ 1965.

ບົທຂຽນຄົນຝຣັ່ງເສສ JEAN DEUVE ນາຍທຫານສັງກັດອົງຄ໌ການ໌ຊ່ວຍເຫລືອທາງທຫານແກ່ລາວ MMF (MISSION MILITAIRE FRANCAISE) ປະຈຳນະຄອນຣວງຈັນທນ໌ ຜູ້ກຽ່ວໄດ້ຊ່ວຍຕິດຕັ້ງວິທຍຸສື່ສານໃສ່ຣົຖຈີປທັ້ງຂອງຣັຍເອກກອງແລແລະນາຍພົລສີໂຫ ລານພຸທທະກູລ ເປັນທີ່ປຶກສາປະຈຳທຳນຽບຣັຖບານຣາຊອານາຈັກຣ໌ລາວແຕ່ປີ 1949-1964 ມີໂອກາສໄດ້ເຂົ້າເຖິງແຟ້ມເອກສານລັບແລະບໍ່ລັບຂອງທຳນຽບຣັຖບານລລາວ ຜູ້ກຽ່ວຈາຣະກັມຂ່າວສານສົ່ງໃຫ້ຣັຖບານຝຣັ່ງເສສຮຽບ ກະຕັນຍູຕໍ່ພນະທ່ານອຸ່ນ ຊຸນະນິກອນທີ່ຂຽນເຣື່ອງການຕໍ່ຕ້ານທຫານຝຣັ່ງເສສທັ້ງທີ່ສວັຣຄ໌ນະເຂຕ ແລະໃນສນາມເລືອດທ່ານແຂກໄວ້ໃຫ້ລູກຫລານໄດ້ເຜີຍແຜ່ກັນຕໍ່ໄປອີກ.

ເອກສານສຳຄັນທີ່ຢືນຢັນວ່າກຳລັງທຫານຣວຕນາມເໝືອຫລາຍໝື່ນຄົນຣກຣານແຜ່ນດິນລາວກໍຄືບົທບັນທຶກຂອງເລ່ົາ CIA ທີ່ເຂົ້າມາປະຕິບັຕງານໃນລາວແຕ່ຊ່ວງສົງຄາມລັບປີ 1959-1973 ເຊ່ັນນາຍເອັດການ໌ ບູລ ນາຍເຈມສ໌ ວິລລຽມ ແລຣ ຜູ້ປະກອບອາວຸທໃນແຜນການ໌ MOMENTUM ແກ່ພັນຕຣີວັງປາວໃນປີ 1960 ນາຍໂທນີ ໂພ ຜູ້ບັນຊາການທຫານ SGU 6 ພັນຄົນທີ່ນ້ຳຍູ CIA WINT LAWRENCE ທີ່ປຶກສາທາງທຫານຄົນແຣກຂອງວັງປາວ ກັບນາຍ JERRY DANIEL ທີ່ປຶກສາຄົນສຸດທ້າຍຜູ້ລັກພາຕົວນາຍພົລວັງປາວ ອອກໝີຈາກ SKY HOUSE ໃນລ່ວງແຈ້ງໃຫ້ຣອດຈາກສາຍຕາພວກ HUGGER ຂອງສຸພານຸວົງສ໌ ນອກຈາກນີ້ກໍມີນາຍເຊ້ັລລີ ຫົວໜ້າ CIA ປະຈຳນະຄອນຣວງຈັນທນ໌ ແລະທູຕອາເມຣິກາ 3 ຄົນ ແຕ່ປີ 1960-1973 ອັນມີນາຍເລໂອ

ນາຣ໌ ອັງເກີຣ-ນາຍມິລລຽມ ຊູລລິແວນ-ນາຍກອ໊ຕລິ ແມັກມ໊ອຣ໌ທຣີ ຕ່າງ ກໍຖືກນາຍ ROGER WARNER ນຳເອົາມາຂຽນລົງໄວ້ໃນປຶ້ມເຣື່ອງ THE CIA'S SECRET WAR IN LAOS ຕຣົງກັນໝົດ.

ປຶ້ມເຫລັ້ມນີ້ເໝາະດີທີ່ຖືຊ໋ ຫາກສຸພານຸວົງສ໌ກັບຊາຕມາເກີດ "ເພາະຫາກ ຜູ້ກ່ອເກີດມາໃໝ່ແລະຈື່ຊາຕເກົ່າໄດ້ກໍຈະຮູ້ເຫັນທັນທີວ່າ ແຜ່ນດິນແມ່ພໍ່ຂອງ ສຸພານຸວົງສ໌ເອງກຳລັງຖືກຄົນຕ່າງດ້າວເຂ້ົາຍຶດ ແລະຍາດແຍ່ງອິທທິພົນກັນ ເປັນຂບວນໃຫ່ຍຄ້າຍຄືວ່າເປັນສົມບັຕຣ໌ຂອງພວກເຂ໊ົາເອງ ຈາກຄຳໃຫ້ສັມ ພາສນ໌ແກ່ນັກຂ່າວຊາວອອສເຕຣຍເລັຍນາຍ CHRISTOPHER GREMMER ດັ່ງ ທີ່ຂຽນໄວ້ໃນຕອນ(26) ກອ່ນວັນທີ່ສຸພານຸວົງສ໌ຈະຫລັບຕາຕາຍໃນວັນທີ 09 ມີກຣາ 1995 ນັ້ນ ເປັນຄຳສາຣະພາບຜິດຕໍ່ລູກຫລານລາວທີ່ໄດ້ພາພວກລູກໆ ຫັ້ງ 10 ຄົນຂອງຕົນຫລົ້ງເລ່ຫ໊ົ້ລກາຣເມືອງຂອງວຽຕນາມເໝືອເກືອບ 50 ປີ (1945-1995) ພາພວກລູກເກືອກກ໊ົ້ວຢູ່ກັບວັຕຕະຈັກຣ໌ແຫ່ງຄວາມມືດມົນທ໌ ອົ້ນຂວາຍສ້ົ້າງຣອຍດ່ຳງເປ໊ື້ອນສົກກະປົກໄວ້ໃຫ້ປະວັຕສາສຕຣ໌ຊາຕລາວ ທັນ ຫ້ົ້າວຣັບໃຊ້ແຜນກາຣນ໊ົ້ຮ້ຳຍ ດ້ວຍກາຣເຈຣະຈາຫ້ົ້າວິທີຈັດຕ໊ົ້ງຣັຖບາລປະສົມ ແຕ່ຊ່ວງປີ 1957 ເປັນຕ໊ົ້ນມາ ແລ້ວທຳລາຍຣັຖບາລປະສົມເສັຍຕາມທິສດີ ຂອງລັທທິຄອມມິວນິສ ຍຸຍົ້ງໃຫ້ຝ່ຳຍຂວາກັບຝ່ຳຍກາງຂ້ົ້າກັນເອງເພ່ືອຊ໋ີ ເວລາໃຫ້ຣາໂນ່ຍສ໋ົ່ງທຫາຣຜ່ານດິນລາວລົ້ງໄປວຽຕນາມພາຄໄຕ້ເທ່ົ້ານັ້ນ ສຸ ພານຸວົງສ໌ສ້ົ້າງຣອຍບາບ+ສ້ົ້າງມົລທິນ+ສ້ົ້າງອາຖ໌ຣ໌+ ສ້ົ້າງອຸບາທວ໌ ແລະ ທາຍນະຍົ່ງໃຫ່ຍໄວ້ໃຫ້ຊາຕລາວ ລູກຫລານລາວຈ໋ົ່ງພາກັນສຶກສາຄ້ົ້ນຫາທ່ີ່ໄປ ທ່ີ່ນາທາງປະວັຕສາສຕຣ໌ຈ໋ິງຂອງຊາຕລາວໃຫ້ຄັກແນ່ ເພາະມີກາຣເຜ່ີຍແຜ່ ປະວັຕສາສຕຣ໌ລາວປອມຈາກຜູ້ບ່ໍຫວັງດ໋ີຕໍ່ຊາຕລາວມາແຕ່ຫລາຍທ໋ົ້ສວັສແລ້ວ ຫາກເຊ່ືອປະວັຕສາສຕຣ໌ປອມກໍ໋ຕ໋ິກາຣຍອມຣັບເອ໊ົ້າສ໋ົ່ງທ່ີ່ຜ໋ິດໆນັ້ນເອງ.

ເມ່ືອອ່ານປຶ້ມຫ໊ົ້ວນ້ີ້ຈົບແລ້ວ ກໍ່ຢ່ຳລ໊ືມຕ໋ິດຕາມອ່ານ "ໃຜຂ້ົ້າກະສັຕຣຍ໌ ລາວ?" ທ່ານຈະໄດ້ຮູ້ເບ໊ື້ອງຫລັງແຫ່ງກາຣໂຄ່ນລ້ົ້ມສຖາບັລລ້ານຊ້ົ້າງທ່ີ່ມຂາວ ແລ້ວຈັບກຸມກະສັຕຣຍ໌ລາວພ້ອມມະເຫສ໊ີກັບພຣະຍາຕິວົງສ໌ ສ໋ົ່ງເຂ໊ົ້າໄປກັກຂັ້ງ ໃນສູນຍ໌ມ໊ຣະນະສ໊ົບຣ່ຳວຈົນສ໊ິ້ນພຣະຊົນ໌ທຸກພຣະອົ້ງຄ໌.

ຜູ້ຂຽນແສດງຄວາມຮູ້ບຸນຍ໌ຄຸນແລະຂອບໃຈເພ່ືອນລາວທຸກໆທ່ານ ທ່ີ່ປະ ກອບສ່ວນໃຫ້ຂ້ົ້ມູລຈ໋ິງທາງປະວັ໋ຕ໋ິສາສຕຣ໌ ຈົນສາມາຣຖ໌ຣຽບຣຽງເຕ໋ັ້ມເຫລ້ັ້ມ ແລະສົມບູຣນ໌ແບບດ໋ີ.

ຫາກສຸພາບຸວົງສ໌ກັບຊາຕມາເກີດ

ໃນຖານະທີ່ເປັນເພື່ອນຄູ່ຫູໝູ່ສນິດມາຕັ້ງແຕ່ນ້ອຍຈົນປັຈຸບັນ ເປັນເວລາກວ່າ50 ປີທີ່ຮູ້ຈັກກັບໂມຫນາ ວິລັຍສິທທ໌. ເຂົ້າມີຄວາມຜູກພັນທ໌,ມີນາມະສູງທັງແນວຄິດ ແລະພາກປະຕິບັຕຕໍ່ກາຣຂົດຂຽນ,ເຮັດໃຫ້ ຂພຈ ປັ້ນໃຈກັບຜົລງານທີ່ປ່ຽນລົ້ນໄປດ້ວຍຂໍ້ຫາສາຣະມີຂໍ້ມູລເປັນແກ່ນສານໝັ້ນຄົງເຊື່ອຖືໄດ້. ເນື້ອຫາພາຍໃນປຶ້ມເຫລັ້ມນີ້ ໄດ້ດູດດຶງໃຫ້ຜູ້ອ່ານກະຕືລືລົ້ນຈົດຈ່ໍຢູ່ກັບເຫຕຸກາຣນ໌ຂອງຕອນກາງ-ທ້າຍສະຕະວັສທີ 20 ຊຶ່ງຖົ້ມຣອ່ງຮອຍທາງປະວັຕສາສຕຣ໌ທີ່ສັບສົນອຸ້ນວາຍໃຫ້ຊົນຊາຕລາວຊາວອານາຈັກຣ໊ານຊ້າງ.

ໜັງສືເຣື່ອງ "ຫາກສຸພານຸວົງສ໌ກັບຊາຕມາເກີດ "ທີ່ທ່ານກຳລັງອ່ານຢູ່ໃນຂນະນີ້ ໄດ້ບັນທຶກໃຫ້ເຫັນຜົລສທ້ອນຍ້ອນຍຸຄຍ້ອນສມັຍ ໃຫ້ຜູ້ອ່ານໄດ້ສັມຜັສກັບເຫຕຸກາຣນ໌ຕ່າງໆ ທາງດ້ານກາຣເມືອງ,ກາຣທຫາຣ,ການປົກຄອງ, ດ້ານເສຖກິຈ,ສັງຄົມລາວຄາວອດີຕ ໃຫ້ຮູ້ເຖິງການຍາດແຍ່ງແຂ່ງອຳນາຈດ້ວຍເລ່ທ່ຫລ່ຽມ ແລະໄຫວພິບຂອງນັກປົກຄອງ ຊຶ່ງມີອຸດົມກາຣນ໌ແປກຕ່າງກັນໄປ ໂດຍແຕ່ລະຄົນໄດ້ອ້າງເຫຕຸຜົລເປັນເອກສັນທ໌ວ່າ ກະທຳໄປເພື່ອຊາຕແລະປະຊາຊົນລາວ,ຄວາມຈິງແທ້ແນ່ນອນໄດ້ຖືກເປີດເຜີຍໄວ້ໃນໜັງສືເຫລັ້ມນີ້ ຈຶ່ງຂໍມອບສອ່ນດີທັງແນວຄິດສ້າງສັຣຄໃຫ້ເປັນອະພິນັນທນາກາຣແກ່ຜູ້ອ່ານທຸກທ່ານດ້ວຍຄວາມຈິງໃຈໃນຖານະສອ່ນຕົວ ແລະທັງໃນນາມເພື່ອນສນິດຄົນໜຶ່ງຂອງໂມຫນາ ວິລັຍສິທ ຜູ້ຮຽບຮຽງ.

ບັຣພົຕ ອະພັຍວົງສ໌

ຂ້ອຍຮູ້ຈັກຜູ້ຊາຍຄົນນັ້ນໃນອດີຕ ເພາະເຄີຍຮຽນໜັງສືຮ່ວມມັທຍົມຫ້ວງດຽວກັນ ທີ່ສວັຣຄ໌ນະເຂຕ. ຂ້ອຍຈາກມັທຍົມໄປໂດຍບ່ໄດ້ສົ່ງລາເຂົ້າແມ່ນແຕ່ຄຳໜຶ່ງ,ເໝືອນຄົນບ່ຮູ້ຈັກກັນ, ເໝືອນຄົນຂີ້ອົ່ງ.ພາຍຫລັງມາກໍໄດ້ອ່ານກາພຍ໌ກະວີກັບນິຍາຍຂອງຜູ້ຊາຍໄຊ້ນາມປາກກາ "ທທາຣບົກ "ທາງວາຣະສາຣ. ຂ້ອຍເຄີຍຄິດຕຳນິເຂົ້າວ່າອີ່ຕາທທາຣບົກນີ້ ຂຽນກະວີລົ້ນສາວເກ່ງເນາະ ແຕ່ກໍຫາບົທຂຽນຂອງເຂົ້ານາອ່ານສເມີໆ.

ຂ້ອຍຮຽນຈົບວິຊາຊີພແລ້ວກັບໄປສວັຣຄ໌ນະເຂຕຄືນອີກ. ເພື່ອນພຍາບາລບອກວ່າອີ່ຕາທທາຣບົກແມ່ນໃຜ? ຈຶ່ງໄດ້ຮູ້ວ່າແມ່ນເຂົ້າຄົນເດີມນັ້ນເອງ.ຍິ່ງຄິດຢາກອ່ານກະວີທັງນິຍາຍຂອງເຂົ້າອີກ.ຂ້ອຍໂຊຄດີທີ່ມີເຂົ້າຄົນນັ້ນເປັນອ້າຍໃນວັນນີ້ ແລ້ວກໍສນຸກອ່ານກະວີນິຍາຍ.ອ້າຍມີພອຣສວັຣຄ໌ໃນກາຣຂົດຂຽນ,ມີພາກພຽຣມີທີນະຊຸນິດຍາກຫາຄົນແທນອ້າຍແທ້ງນໜ້າຂຶ້ນນັບຊົ່ດາວໃນຄືນເດືອນດຳເປັນພາສາກະວີ, ປຶ້ມເຫລັ້ມນີ້ອ້າຍຮຽບຮຽງນານປີ ຫລັງທີ່ປຶ້ມເຣື່ອງ "ສຸດສາຍທາງເລຂ 9 " ພາສາຝຣັ່ງເສສຖືກພິມພ໌ຈຳນ່າຍແລ້ວ ອ້າຍໄດ້ໂມຫນາສົມຊື່ຂອງອ້າຍໃຫ້ປຶ້ມປະວັຕິສາສຕຣ໌ຈິງເຫລັ້ມນີ້ເປັນມໍຣະດົກແກ່ຊາຕລາວ,ໃຫ້ລູກຫລານ-ເຫລັນລາວໄດ້ອ່ານຮຽນສືບຕ່ໆກັນໄປ.

ຮຽມ ວິລັຍສິທທ໌

ທາເກສຸພານຸວົງສ໌ກັບຊາຕມາເກີດ

ໃນຖານະທີ່ເປັນເພື່ອນຄູ່ຫູໝູ່ສນິດມາຕັ້ງແຕ່ນ້ອຍຈົນປັຈຸບັນ ເປັນເວລາກວ່າ50 ປີທີ່ຮູ
ຈັກກັບ ໂມຫນາ ວິລັຍສິຫທ໌. ເຂົ້າມີຄວາມຜູກພັນທ໌,ມີນາໍ້ຫົວແນວຄິດ ແລະພາກ
ປະຕິບັຕຕ່ໍກາຣຂີດຂຽນ,ເຮັດໃຫ້ ຂພຈ ປັ້ນໃຈກັບຜົລງານທີ່ປ່ຽນລັ້ນໄປດ້ວຍຂໍ້ຫາສາຣະ
ມີຂໍ້ມູລເປັນແກ່ນສານໜັ້ນຄົງເຊື່ອຖືໄດ້. ເນື້ອຫາພາຍໃນປຶ້ມເຫລັ້ມນີ້ ໄດ້ດູດດຶງໃຫ້ຜູ
ອ່ານກະຕືລືລົ້ນຈົດຈ່ໍຢູ່ກັບເຫຕຸກາຣນ໌ຂອງຕອນກາງຫາທ້າຍສະຕະວັສທີ 20 ທີ່ຖິ້ມຣອ່ວ
ຣອຍທາງປະວັຕສາສຕຣ໌ສັບສົລວ້ນວາຍໃຫ້ຊົນຊາຕລາວຊາວອານາຈັກຣ໌ລ້ານຊ້າງ.

ໜັງສືເຣື່ອງ "ທາກສຸພານຸວົງສ໌ກັບຊາຕມາເກີດ "ທີ່ທ່ານກໍາລັງອ່ານຢູ່ໃນຂນະນີ້ ໄດ້
ບັນທຶກໃຫ້ເຫັນຜົລສທ້ອນຍ້ອນຍຸຄຍ້ອນສມັຍ ໃຫ້ຜູ້ອ່ານໄດ້ສັມຜັສກັບເຫຕຸກາຣນ໌ຕ່າງໆ
ທາງດ້ານກາຣເມືອງ,ກາຣທຫາຣ,ການປົກຄອງ, ດ້ານເສຖກິຈ,ສັງຄົມລາວຄາວອດີຕ
ໃຫ້ຮູ້ເຖິງການຍາດແຍ່ງແຂ່ງອໍານາຈດ້ວຍເລ່ຫ໌ເລ່ຫ໌ອຽມ ແລະໄຫວພິບຂອງນັກປົກຄອງ
ຊຶ່ງມີອຸດົມກາຣນ໌ແປກຕ່າງກັນໄປ ໂດຍແຕ່ລະຄົນອ້າງເຫຕຸຜົລເປັນເອກສັນທ໌ວ່າ ກະ
ທໍາໄປເພື່ອຊາຕແລະປະຊາຊົນລາວ,ຄວາມຈິງແທ້ແນ່ນອນໄດ້ຖືກເປີດເຜີຍໄວ້ໃນໜັງສື
ເຫລັ້ມນີ້ ຈຶ່ງຂໍມອບສ່ວນດີຫົວແນວຄິດສ້າງສັຣຄ໌ໃຫ້ເປັນອະພິນັນທນາກາຣແກ່ຜູ້ອ່ານ
ທຸກທ່ານດ້ວຍຄວາມຈິງໃຈໃນຖານະສ່ວນຕົວ ແລະຫົວໃນນາມເພື່ອນສນິດຄົນໜຶ່ງຂອງ
ໂມຫນາ ວິລັຍສິທ໌ຜູ້ຮຽບຮຽງປຶ້ມເຫລັ້ມນີ້.

ບັຣພົຕ ອະພັຍວົງສ໌

ຂ້ອຍຮູ້ຈັກຜູ້ຊາຍຄົນນັ້ນໃນອດີຕ ເພາະເຄີຍຮຽນໜັງສືຮ່ວມຫ້ອງດຽວກັນໃນມັທຍົມທີ່
ສວັຣຄ໌ນະເຂຕ.ຂ້ອຍຈາກມັທຍົມໄປໂດຍບ່ໄດ້ສົ່ງລາເຂົ້າເລີຍ. ໝູ່ເພື່ອນຄົນທີ່ບ່ເຄີຍຮູ້ຈັກ
ກັນ.ເໝືອນຄົນຂີ້ອົ່ງ.

ພາຍຫລັງມາກໍໄດ້ອ່ານກາພຍ໌ກອຣ໌ກັບນິຍາຍຂອງຜູ້ຊາຍຄົນໜຶ່ງທາງວາຣະສາຣຊຶ່ງ
ມີນາມປາກກາວ່າ "ທຫາຣບົກ.ຂ້ອຍເຄີຍຄິດຕໍານິເຂົ້າວ່າອີ່ຕາທຫາຣບົກນີ້ຂຽນກະວີລົມ
ສາວເກ່ງເນາະ ແຕ່ກໍຫາກະວີນິຍາຍຂອງເຂົ້ານາອ່ານສເມີໆ.

ຂ້ອຍຮຽນຈົບວິຊາຊີພແລ້ວກັບໄປສວັຣຄ໌ນະເຂຕຄືນອີກ. ເພື່ອນພຍາບາລບອກວ່າອີ່
ຕາທຫາຣບົກແມ່ນໃຜ? ຈຶ່ງໄດ້ຮູ້ວ່າແມ່ນເຂົ້າຄົນເດີມນັ້ນເອງ.ຍິ່ງຄິດຢາກອ່ານກະວີຫົວ
ນິຍາຍຂອງເຂົ້າອີກ.ຂ້ອຍ ໂຊຄດີທີ່ມີເຂົ້າຄົນນັ້ນມາເປັນອ້າຍຄົນນີ້ ແລ້ວກໍສນຸກອ່ານກະ
ວີນິຍາຍ.ອ້າຍມີພອຣສວັຣຄ໌ໃນກາຣຂີດຂຽນ,ມີພາກພຽຣແລະທີນະສູງ, ອ້າຍແຫວນ
ໜ້າຂຶ້ນນັບຊຸ່ດາວຍານກາງຄືນເປັນພາສາກະວີ,ປຶ້ມເຫລັ້ມນີ້ອ້າຍຮຽບຮຽງນານປີ ຫລັງ
ທີ່ປຶ້ມເຣື່ອງສຸດສາຍທາງເລ2 9 ພາສາຝຣັ່ງເສສຖືກພິມພ໌ຈໍານ່າຍແລ້ວ. ອ້າຍ ໂມຫນາ
ສົມຊື່ໃຫ້ປຶ້ມເຫລັ້ມນີ້ເປັນມໍຣະດົກແກ່ຊາຕລາວ,ໃຫ້ລູກຫລານລາວໄດ້ອ່ານສືບຕໍ່ກັນໄປ.

ຮຽມ ວິລັຍສິຫທ໌